ຄູ່ມືກ່ຽວກັບ
ການກຳນົດມູນຄ່າແຈ້ງພາສີ
ສຳລັບສິນຄ້ານຳເຂົ້າ

ກົມພາສີ

2012

ຄູ່ມືກ່ຽວກັບ
ການກຳນົດມູນຄ່າແຈ້ງພາສີ
ສຳລັບສິນຄ້ານຳເຂົ້າ

ກົມພາສີ

2012

ສາລະບານ

☞ **ບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນວ່າດ້ວຍການກຳນົດມູນຄ່າແຈ້ງພາສີ ສຳລັບສິນຄ້ານຳເຂົ້າ ສະບັບເລກທີ 1537 ລົງວັນທີ 04 JUN 2012** **1**

ໝວດທີ 1 : **ບົດບັນຍັດທົ່ວໄປ** **1**

ມາດຕາ 1 : ຈຸດປະສົງ 1

ມາດຕາ 2 : ການອະທິບາຍຄຳສັບ 1

ມາດຕາ 3 : ຫຼັກການລວມສຳລັບການນຳໃຊ້ວິທີການກຳນົດມູນຄ່າແຈ້ງພາສີ 3

ໝວດທີ 2 : **ວິທີການກຳນົດມູນຄ່າແຈ້ງພາສີ** **3**

ມາດຕາ 4 : ການກຳນົດມູນຄ່າແຈ້ງພາສີ ດ້ວຍການນຳໃຊ້ມູນຄ່າຊື້-ຂາຍ 3

ມາດຕາ 5 : ການກຳນົດມູນຄ່າແຈ້ງພາສີດ້ວຍການນຳໃຊ້ ມູນຄ່າຊື້ຂາຍສິນຄ້າທີ່ຄືກັນ 4

ມາດຕາ 6 : ການກຳນົດມູນຄ່າແຈ້ງພາສີດ້ວຍການນຳໃຊ້ ມູນຄ່າຊື້ຂາຍສິນຄ້າທີ່ຄ້າຍຄືກັນ 5

ມາດຕາ 7 : ການກຳນົດມູນຄ່າແຈ້ງພາສີດ້ວຍ ວິທີຫັກລົບມູນຄ່າ 6

ມາດຕາ 8 : ການກຳນົດມູນຄ່າແຈ້ງພາສີດ້ວຍ ວິທີຄຳນວນ 6

ມາດຕາ 9 : ການກຳນົດມູນຄ່າແຈ້ງພາສີດ້ວຍ ວິທີຍ້ອນຄືນທີ່ສົມເຫດສົມຜົນ 7

ມາດຕາ 10 : ການດັດປັບ 8

ໝວດທີ 3 : **ບົດບັນຍັດອື່ນໆ** **9**

ມາດຕາ 11 : ອັດຕາແລກປ່ຽນເງິນຕາ 9

ມາດຕາ 12 : ການຮັກສາຄວາມລັບ 9

ມາດຕາ 13 : ການສະເໜີຄືນ ກ່ຽວກັບ ການກຳນົດມູນຄ່າແຈ້ງພາສີ 9

ມາດຕາ 14 : ການເຜີຍແຜ່ນິຕິກຳ 9

ມາດຕາ 15 : ການເອົາສິນຄ້າອອກຈາກດ່ານ ຫຼື ສາງພາສີ ກ່ອນການກຳນົດມູນຄ່າແຈ້ງພາສີ 9

ມາດຕາ 16 : ສິດໃນການໄດ້ຮັບການອະທິບາຍກ່ຽວກັບການກຳນົດມູນຄ່າແຈ້ງພາສີ 10

ໝວດທີ 4 : **ບົດບັນຍັດສຸດທ້າຍ** **10**

ມາດຕາ 17 : ການຈັດຕັ້ງປະຕິບັດ 10

ມາດຕາ 18 : ຜົນສັກສິດ 10

☞ **ບົດແນະນຳຂອງຫົວໜ້າກົມພາສີ ວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີ ສຳລັບສິນຄ້ານຳເຂົ້າ ສະບັບເລກທີ 11589 ລົງວັນທີ 24 JUL 2012** **11**

1. ຈຸດປະສົງ 11

2. ຄຳອະທິບາຍລວມ 11

3. ຄຳອະທິບາຍສຳລັບມາດຕາ 2 13

4. ຄຳອະທິບາຍສຳລັບມາດຕາ 4..... 13
5. ຄຳອະທິບາຍສຳລັບມາດຕາ 5..... 16
6. ຄຳອະທິບາຍສຳລັບມາດຕາ 6..... 17
7. ຄຳອະທິບາຍສຳລັບມາດຕາ 7..... 18
8. ຄຳອະທິບາຍສຳລັບມາດຕາ 8..... 20
9. ຄຳອະທິບາຍສຳລັບມາດຕາ 9..... 22
10. ຄຳອະທິບາຍສຳລັບມາດຕາ 10..... 23
11. ຄຳອະທິບາຍສຳລັບມາດຕາ 11..... 25
12. ຄຳອະທິບາຍສຳລັບມາດຕາ 13..... 25
13. ການອະທິບາຍເພີ່ມເຕີມ..... 25
14. ການຈັດຕັ້ງປະຕິບັດ..... 26
15. ຜົນສັກສິດ..... 26

☞ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ວ່າດ້ວຍການນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີ ສຳລັບສິນຄ້ານຳເຂົ້າເສຍພາສີ-ອາກອນ ສະບັບເລກທີ 2095 ລົງວັນທີ 26 SEP 2011..... 27

ມາດຕາ 1 : ເຫັນດີໃຫ້ນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ..... 27
ມາດຕາ 2 : ການນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ..... 28
ມາດຕາ 3 : ຜົນສັກສິດ..... 28

☞ ບົດແນະນຳກ່ຽວກັບການປະກອບໃບແຈ້ງມູນຄ່າພາສີຂາເຂົ້າ ສະບັບເລກທີ 00266 ລົງວັນທີ 04 NOV 2011..... 29

ມາດຕາ 1 : ຈຸດປະສົງ..... 29
ມາດຕາ 2 : ອະທິບາຍຄຳສັບ..... 29
ມາດຕາ 3 : ລັກສະນະທາງດ້ານນິຕິກຳຂອງໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ..... 30
ມາດຕາ 4 : ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ..... 30
ມາດຕາ 5 : ຫຼັກການລວມໃນການປະກອບຂໍ້ມູນ..... 31
ມາດຕາ 6 : ການປະກອບຂໍ້ມູນລົງໃນໃບແຈ້ງຕາມຫຼັກການຊື້-ຂາຍສິນຄ້າຕົວຈິງ..... 31
ມາດຕາ 7 : ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີຕາມຫຼັກການລາຄາຊື້-ຂາຍ ສິນຄ້າຄືກັນ ແລະ ຄ້າຍຄືກັນ..... 34
ມາດຕາ 8 : ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີ ຕາມຫຼັກການຫັກລົບລາຄາສິນຄ້າ..... 36
ມາດຕາ 9 : ການປະກອບຂໍ້ມູນລົງໃນໃບແຈ້ງຕາມຫຼັກການຄຳນວນລາຄາສິນຄ້າ..... 36

ມາດຕາ 10 : ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີຕາມຫຼັກການຍ້ອນຄືນ ທີ່ສົມເຫດສົມຜົນ..... 37
ມາດຕາ 11 : ຄວາມຮັບຜິດຊອບຂອງເຈົ້າໜ້າທີ່ພາສີ ຢູ່ດ່ານພາສີ..... 38
ມາດຕາ 12 : ການຈັດຕັ້ງຜັນຂະຫຍາຍ..... 38
ມາດຕາ 13 : ຜົນສັກສິດ..... 39
ໃບແຈ້ງມູນຄ່າພາສີຂາເຂົ້າ..... 40
ແຈ້ງການ..... 49
ແຈ້ງການ..... 51
ບົດແນະນຳເພີ່ມເຕີມ..... 53
ແຈ້ງການແນະນຳຂອງຫົວໜ້າກົມພາສີວ່າດ້ວຍການກຳນົດມູນຄ່າແຈ້ງພາສີຂາເຂົ້າ ຕາມລະບອບ ໃບແຈ້ງພາສີ ບ42 ແລະ 43..... 55
ໃບຢັ້ງຢືນການຊຳລະສະສາງ ໂດຍຜ່ານທະນາຄານຂອງ ສປປ ລາວ..... 57

☞ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດມາດຕາ VII ຂອງຂໍ້ຕົກລົງທົ່ວໄປວ່າດ້ວຍພາສີ ແລະ ການຄ້າ ປີ 1994..... 58
ບົດອະທິບາຍເບື້ອງຕົ້ນ..... 59

ພາກທີ I : ຫລັກການຂອງການກຳນົດມູນຄ່າແຈ້ງພາສີ..... 63
ມາດຕາ 1 : 63
ມາດຕາ 2 : 65
ມາດຕາ 3 : 65
ມາດຕາ 4 : 66
ມາດຕາ 5 : 66
ມາດຕາ 6 : 68
ມາດຕາ 7 : 68
ມາດຕາ 8 : 69
ມາດຕາ 9 : 70
ມາດຕາ 10 : 71
ມາດຕາ 11 : 71
ມາດຕາ 12 : 72
ມາດຕາ 13 : 72
ມາດຕາ 14 : 72

ມາດຕາ 15 : 72
ມາດຕາ 16 : 74
ມາດຕາ 17 : 74

ພາກທີ II : ການບໍລິຫານ, ການປົກສາຫາລື ແລະ ການແກ້ໄຂຂໍ້ຂັດແຍ້ງ..... 75
ມາດຕາ 18 : ສະຖານັນ..... 75
ມາດຕາ 19 : ການປົກສາຫາລືກັນ ແລະ ການແກ້ໄຂຂໍ້ຂັດແຍ້ງ..... 75

ພາກທີ III : ການປະຕິບັດເປັນພິເສດ ແລະ ການປະຕິບັດທີ່ແຕກຕ່າງກັນອອກໄປ..... 76
ມາດຕາ 20 : 76

ພາກທີ IV : ຂໍ້ກຳນົດສຸດທ້າຍ..... 77
ມາດຕາ 21 : ການສະຫງວນ..... 77
ມາດຕາ 22 : ລະບຽບກົດໝາຍຂອງປະເທດ..... 77
ມາດຕາ 23 : ການທວນຄືນ..... 78
ມາດຕາ 24 : ກອງເລຂາ..... 78

ເອກະສານຊ້ອນທ້າຍ I : ໝາຍເຫດການຕີຄວາມໝາຍ..... 78
ລຳດັບການນຳໃຊ້ວິທີການກຳນົດມູນຄ່າແຈ້ງພາສີ..... 78
ການນຳໃຊ້ຫຼັກການບັນຊີທີ່ຍອມຮັບກັນທົ່ວໄປ..... 79
ໝາຍເຫດຂອງມາດຕາ I..... 80
ລາຄາທີ່ໄດ້ຈ່າຍ ຫຼື ທີ່ຈະຕ້ອງໄດ້ຈ່າຍຕົວຈິງ..... 80
ໝາຍເຫດຂອງມາດຕາ II..... 83
ໝາຍເຫດຂອງມາດຕາ III..... 85
ໝາຍເຫດຂອງມາດຕາ V..... 86
ໝາຍເຫດຂອງມາດຕາ VI..... 89
ໝາຍເຫດຂອງມາດຕາ VII..... 91
ໝາຍເຫດຂອງມາດຕາ VIII..... 92
ໝາຍເຫດຂອງມາດຕາ IX..... 96
ໝາຍເຫດຂອງມາດຕາ XI..... 96
ໝາຍເຫດຂອງມາດຕາ XV..... 96

ເອກະສານຊ້ອນທ້າຍ II : ຄະນະກຳມະການເຕັກນິກການກຳນົດມູນຄ່າແຈ້ງພາສີ..... 97
ເອກະສານຊ້ອນທ້າຍ III :..... 102

AGREEMENT ON IMPLEMENTATION OF ARTICLE VII OF THE GENERAL AGREEMENT ON TARIFFS AND TRADE 1994..... 104
GENERAL INTRODUCTORY COMMENTARY..... 105

PART I: RULES ON CUSTOMS VALUATION..... 106
Article 1 :..... 106
Article 2 :..... 107
Article 3 :..... 107
Article 4 :..... 108
Article 5 :..... 108
Article 6 :..... 109
Article 7 :..... 109
Article 8 :..... 110
Article 9 :..... 111
Article 10 :..... 111
Article 11 :..... 111
Article 12 :..... 112
Article 13 :..... 112
Article 14 :..... 112
Article 15 :..... 112
Article 16 :..... 113
Article 17 :..... 113

PART II : ADMINISTRATION, CONSULTATIONS AND DISPUTE SETTLEMENT..... 113
Article 18 : Institutions..... 114
Article 19 : Consultations and Dispute Settlement..... 114

PART III : SPECIAL AND DIFFERENTIAL TREATMENT..... 115
Article 20 :..... 115

PART IV : FINAL PROVISIONS **115**

Article 21 : Reservations 115

Article 22 : National Legislation 115

Article 23 : Review 115

Article 24 : Secretariat 116

ANNEX I : INTERPRETATIVE NOTES **116**

Sequential Application of Valuation Methods 116

Note to Article 1 : 117

Price Actually Paid or Payable 117

Note to Article 2 : 119

Note to Article 3 : 120

Note to Article 5 : 121

Note to Article 6 : 123

Note to Article 7 : 124

Note to Article 8 : 124

Note to Article 9 : 126

Note to Article 11 : 126

Note to Article 15 : 127

ANNEX II : TECHNICAL COMMITTEE ON CUSTOMS VALUATION **127**

ANNEX III : **130**

☞ ບັນດາແຈ້ງການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດສັນຍາຫຸດຜ່ອນອັດຕາພາສີສິນຄ້າ
ຂອງ ສປປ ລາວ ໃນກອບຮ່ວມມືດ້ານການຄ້າເສລີອາຊຽນ 132

ກົມພາສີ
ເລກທີ 07937
ວັນທີ 04 JUN

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1537----

ກະຊວງການເງິນ

ເລກທີ ...../ກງ
ນະຄອນຫຼວງວຽງຈັນ, ວັນທີ 04 JUN 2012

ບົດແນະນຳ
ຂອງລັດຖະມົນຕີວ່າການກະຊວງການເງິນ
ວ່າດ້ວຍການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

****

- ອີງຕາມ ກົດໝາຍວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011 ໝວດ 2, ມາດຕາ 13 ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ; ແລະ

ລັດຖະມົນຕີວ່າການກະຊວງການເງິນອອກບົດແນະນຳດັ່ງນີ້:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ບົດແນະນຳສະບັບນີ້ ກຳນົດບັນດາຫຼັກການ ແລະ ວິທີການການກຳນົດມູນຄ່າແຈ້ງພາສີ ເພື່ອເປັນພື້ນຖານ ໃນການຄິດໄລ່ຄ່າພາສີແລະ ພັນທະອື່ນໆ ຕໍ່ສິນຄ້ານຳເຂົ້າ ໃຫ້ມີຄວາມເປັນ ເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ ຮັບປະກັນການເກັບລາຍຮັບເຂົ້າງົບປະມານແຫ່ງລັດ ໃຫ້ມີປະສິດທິຜົນ.

ມາດຕາ 2. ການອະທິບາຍຄຳສັບ

ບັນດາຄຳສັບ ທີ່ໃຊ້ໃນບົດແນະນຳສະບັບນີ້ ມີຄວາມໝາຍດັ່ງຕໍ່ໄປນີ້:

1. **ສິນຄ້າ** ໝາຍເຖິງສິນຄ້າເຄື່ອງຂອງ ຕາມທີ່ນຳໃຊ້ ໃນກົດໝາຍວ່າດ້ວຍພາສີ;
2. **ສິນຄ້ານຳເຂົ້າ** ໝາຍເຖິງ ສິນຄ້າທີ່ນຳເຂົ້າມາຍັງ ສປປ ລາວ;

3. **ມູນຄ່າແຈ້ງພາສີສິນຄ້ານຳເຂົ້າ** ໝາຍເຖິງມູນຄ່າຂອງສິນຄ້າ ເພື່ອນຳໃຊ້ເປັນພື້ນຖານຄິດໄລ່ຄ່າພາສີ ແລະ ພັນທະອື່ນໆ ຕໍ່ສິນຄ້ານຳເຂົ້າ;
4. ຄຳວ່າ "**ຜະລິດ**" ແມ່ນລວມເຖິງ ການປູກ, ຜະລິດ ແລະ ຂຸດຄົ້ນ;
5. **ສິນຄ້າທີ່ຄືກັນ** ໝາຍເຖິງສິນຄ້າທີ່ຄືກັນທຸກຢ່າງລວມທັງລັກສະນະຮູບຮ່າງ, ຄຸນນະພາບ ແລະຊື່ສຽງຂອງສິນຄ້າ. ສິນຄ້າ ທີ່ມີຄວາມແຕກຕ່າງກັນເລັກນ້ອຍແບບຜິວເຜີນ ກໍ່ຍັງຖືວ່າເປັນສິນຄ້າທີ່ຄືກັນ. ຈະບໍ່ຖືວ່າເປັນ "ສິນຄ້າທີ່ຄືກັນ" ຖ້າວ່າ ສິນຄ້າດັ່ງກ່າວ ບໍ່ໄດ້ຜະລິດ ຢູ່ໃນປະເທດດຽວກັນ ກັບສິນຄ້າທີ່ກຳລັງປະເມີນມູນຄ່າຢູ່. ສິນຄ້າທີ່ຄືກັນຈະບໍ່ລວມເອົາງານວິສາວະກຳ, ການພັດທະນາ, ງານສິນລະປະ, ວຽກອອກແບບ ແລະ ແຜນຜັງ, ແລະ ຮູບແຕ້ມ ຊຶ່ງບໍ່ໄດ້ມີການດັດປັບຕາມທີ່ກຳນົດໄວ້ຕາມມາດຕາ 10.1.2.iv ເນື່ອງຈາກອົງປະກອບດັ່ງກ່າວແມ່ນໄດ້ດຳເນີນການຢູ່ ສປປ ລາວ. ສິນຄ້າທີ່ຜະລິດໂດຍຜູ້ຜະລິດຕ່າງກັນ ຈະຖືກນຳມາພິຈາລະນາໄດ້ ກໍ່ຕໍ່ເມື່ອ ບໍ່ມີສິນຄ້າທີ່ຄືກັນ ທີ່ຜະລິດໂດຍຜູ້ດຽວກັນກັບຜູ້ທີ່ຜະລິດສິນຄ້າ ທີ່ກຳລັງປະເມີນມູນຄ່າຢູ່;
6. **ສິນຄ້າທີ່ຄ້າຍຄືກັນ** ໝາຍເຖິງສິນຄ້າທີ່ບໍ່ຄືກັນໝົດທຸກຢ່າງແຕ່ມີລັກສະນະ ແລະ ວັດຖຸປະກອບທີ່ຄືກັນຊຶ່ງສາມາດເຮັດໜ້າທີ່ດຽວກັນໄດ້ ແລະປ່ຽນແທນກັນໄດ້ໃນທາງການຄ້າ. ຄຸນນະພາບ, ຊື່ສຽງ ແລະ ເຄື່ອງໝາຍທາງການຄ້າກໍ່ແມ່ນປັດໃຈໜຶ່ງ ເພື່ອກຳນົດວ່າສິນຄ້າດັ່ງກ່າວແມ່ນສິນຄ້າທີ່ຄ້າຍຄືກັນ. ສິນຄ້າ ຈະບໍ່ຖືວ່າເປັນ "ສິນຄ້າທີ່ຄ້າຍຄືກັນ" ຖ້າວ່າ ສິນຄ້າດັ່ງກ່າວບໍ່ໄດ້ຜະລິດ ຢູ່ໃນປະເທດດຽວກັນກັບສິນຄ້າທີ່ກຳລັງປະເມີນມູນຄ່າຢູ່. ສິນຄ້າທີ່ຄ້າຍຄືກັນຈະບໍ່ລວມເອົາງານວິສາວະກຳ, ການພັດທະນາ, ງານສິນລະປະ, ວຽກອອກແບບ ແລະ ແຜນຜັງ, ແລະ ຮູບແຕ້ມ ຊຶ່ງບໍ່ໄດ້ມີການດັດປັບຕາມທີ່ກຳນົດໄວ້ຕາມມາດຕາ 10.1.2.iv ເນື່ອງຈາກອົງປະກອບດັ່ງກ່າວແມ່ນໄດ້ດຳເນີນການຢູ່ ສປປ ລາວ. ສິນຄ້າທີ່ຜະລິດໂດຍຜູ້ຜະລິດຕ່າງກັນ ຈະຖືກນຳມາພິຈາລະນາໄດ້ ກໍ່ຕໍ່ເມື່ອ ບໍ່ມີສິນຄ້າທີ່ຄ້າຍຄືກັນ ທີ່ຜະລິດໂດຍຜູ້ດຽວກັນກັບຜູ້ທີ່ຜະລິດສິນຄ້າ ທີ່ກຳລັງປະເມີນມູນຄ່າຢູ່.
7. **ສິນຄ້າໝວດດຽວກັນຫລືຊະນິດດຽວກັນ** ໝາຍເຖິງສິນຄ້າ ໃນກຸ່ມດຽວກັນຫຼື ໃນລະດັບດຽວກັນ ຊຶ່ງຜະລິດໂດຍອຸດສາຫະກຳສະເພາະ ຫຼື ຂະແໜງໃດໜຶ່ງ ແລະ ສິນຄ້າດັ່ງກ່າວ ລວມເອົາທັງສິນຄ້າທີ່ຄືກັນ ຫຼື ຄ້າຍຄືກັນ.
8. **ຜູ້ກ່ຽວຂ້ອງ** ໝາຍເຖິງ ຜູ້ທີ່ມີການກ່ຽວຂ້ອງກັນ ໃນການຊື້ຂາຍສິນຄ້າ. ບັນດາບຸກຄົນ ຈະຖືວ່າເປັນ ຜູ້ກ່ຽວຂ້ອງ ຖ້າວ່າ:
   8.1. ບຸກຄົນເຫຼົ່ານັ້ນເປັນ ຜູ້ອຳນວຍການ ຫຼື ເປັນ ພະນັກງານ ໃນທຸລະກິດຂອງ ອີກຝ່າຍໜຶ່ງ;
   8.2. ບຸກຄົນເຫຼົ່ານັ້ນເປັນຮຸ້ນສ່ວນທຸລະກິດນຳກັນ ຕາມກົດໝາຍ;
   8.3. ບຸກຄົນເຫຼົ່ານັ້ນເປັນນາຍຈ້າງ ແລະ ລູກຈ້າງ;
   8.4. ບຸກຄົນໃດໜຶ່ງເປັນເຈົ້າຂອງ, ຄວບຄຸມ ຫຼື ຖືຢ່າງນ້ອຍ 5% ຂອງ ຮຸ້ນທີ່ໃຫ້ສິດອອກສຽງ ຂອງ ບຸກຄົນເຫຼົ່ານັ້ນ ບໍ່ວ່າທາງກົງ ຫຼື ທາງອ້ອມ;
   8.5. ຝ່າຍໜຶ່ງ ຂອງ ບຸກຄົນເຫຼົ່ານັ້ນ ຄວບຄຸມອີກຝ່າຍນຶ່ງ ໂດຍທາງກົງ ຫຼື ທາງອ້ອມ;
   8.6. ທັງສອງຖືກຄວບຄຸມຈາກບຸກຄົນທີສາມ ໂດຍທາງກົງ ຫຼື ທາງອ້ອມ;

8.7. ບຸກຄົນເຫຼົ່ານັ້ນຮ່ວມກັນຄວບຄຸມບຸກຄົນທີສາມໂດຍທາງກົງ ຫຼື ທາງອ້ອມ; ຫຼື

8.8. ບຸກຄົນເຫຼົ່ານັ້ນເປັນສະມາຊິກຄອບຄົວດຽວກັນ.

ບັນດາບຸກຄົນທີ່ເປັນຄູ່ຮ່ວມທຸລະກິດກັນ ໂດຍທີ່ ຝ່າຍໜຶ່ງ ເປັນຕົວແທນ, ຜູ້ຈຳໜ່າຍ ຫຼື ຜູ້ໄດ້ສິດພຽງຜູ້ດຽວ ຂອງອີກຝ່າຍໜຶ່ງ, ດ້ວຍວິທີໃດກໍຕາມ, ຈະຖືວ່າເປັນ ຜູ້ກ່ຽວຂ້ອງ ຖ້າຕົກຢູ່ໃນເງື່ອນໄຂໃດໜຶ່ງ ໃນຂໍ້ 8 ນີ້.

ມາດຕາ 3. ຫຼັກການລວມສຳລັບການນຳໃຊ້ວິທີການກຳນົດມູນຄ່າແຈ້ງພາສີ

ການກຳນົດມູນຄ່າແຈ້ງພາສີສິນຄ້ານຳເຂົ້າ ແມ່ນໃຫ້ປະຕິບັດຕາມລຳດັບວິທີທີ່ກຳນົດໄວ້ ໃນ ມາດຕາ 4 ຫາ ມາດຕາ 9 ຂອງ ບົດແນະນຳສະບັບນີ້.

ຖ້າບໍ່ສາມາດກຳນົດມູນຄ່າແຈ້ງພາສີສິນຄ້ານຳເຂົ້າໄດ້ ພາຍໃຕ້ ບົດບັນຍັດ ຂອງ ມາດຕາ 4, 5 ແລະ 6 ຂອງ ບົດແນະນຳສະບັບນີ້, ໃຫ້ກຳນົດ ມູນຄ່າແຈ້ງພາສີ ພາຍໃຕ້ ບົດບັນຍັດ ຂອງ ມາດຕາ 7, ຫຼື ຖ້າບໍ່ສາມາດກຳນົດມູນຄ່າແຈ້ງພາສີໄດ້ ພາຍໃຕ້ ມາດຕາດັ່ງກ່າວ, ແມ່ນໃຫ້ກຳນົດ ມູນຄ່າແຈ້ງພາສີ ພາຍໃຕ້ ມາດຕາ 8. ຜູ້ນຳເຂົ້າ ມີສິດຮ້ອງຂໍ ໃຫ້ມີການນຳໃຊ້ ສະຫຼັບກັນໄດ້ ລະ ຫວ່າງ ວິທີການກຳນົດໃນມາດຕາ 7 ແລະ ມາດຕາ 8 ຂອງ ບົດແນະນຳ ສະບັບນີ້.

ໝວດທີ 2
ວິທີການກຳນົດມູນຄ່າແຈ້ງພາສີ

ມາດຕາ 4. ການກຳນົດມູນຄ່າແຈ້ງພາສີ ດ້ວຍການນຳໃຊ້ມູນຄ່າຊື້-ຂາຍ

1. ມູນຄ່າແຈ້ງພາສີ ຂອງສິນຄ້ານຳເຂົ້າ ຕ້ອງແມ່ນ ມູນຄ່າຊື້-ຂາຍ ຊຶ່ງແມ່ນລາຄາທີ່ໄດ້ຊຳລະຕົວຈິງ ຫຼື ທີ່ຈະຊຳລະ ສຳລັບສິນຄ້າ ຊຶ່ງໃນເວລາທີ່ໄດ້ຂາຍເພື່ອນຳເຂົ້າມາຍັງ ສປປ ລາວ ນັ້ນ ໄດ້ມີການດັດປັບ ຕາມ ມາດຕາ 10 ຂອງ ບົດແນະນຳສະບັບນີ້, ໂດຍມີເງື່ອນໄຂວ່າ:
   1.1. ບໍ່ມີຂໍ້ຈຳກັດ ຕໍ່ ຜູ້ຊື້ ໃນການກຳຈັດ ຫຼື ນຳໃຊ້ ສິນຄ້າ, ນອກຈາກ ຂໍ້ຈຳກັດທີ່:
      i. ວາງອອກ ຫຼື ກຳນົດໂດຍລະບຽບກົດໝາຍ ຂອງ ສປປ ລາວ;
      ii. ຈຳກັດເຂດພູມີສາດ ບ່ອນທີ່ ສາມາດຂາຍສິນຄ້າຕໍ່ໄດ້; ຫຼື
      iii. ບໍ່ມີຜົນກະທົບຢ່າງຫຼວງຫຼາຍຕໍ່ມູນຄ່າຂອງສິນຄ້າ;
   1.2. ການຂາຍ ຫຼື ລາຄາ ບໍ່ຂຶ້ນກັບເງື່ອນໄຂ ຫຼື ການພິຈາລະນາໃດໜຶ່ງ ທີ່ພາໃຫ້ບໍ່ສາມາດກຳນົດມູນຄ່າ ຂອງສິນຄ້າທີ່ກຳລັງປະເມີນມູນຄ່າຢູ່;
   1.3. ຜູ້ຂາຍຈະຕ້ອງບໍ່ມີລາຍຮັບ ບໍ່ວ່າທາງກົງ ຫຼື ທາງອ້ອມ ຈາກສ່ວນໃດໜຶ່ງຂອງເງິນທີ່ໄດ້ ຈາກການຂາຍຕໍ່, ການກຳຈັດ ຫຼື ການນຳໃຊ້ສິນຄ້າ ໃນພາຍຫຼັງ ຂອງຜູ້ຊື້, ເວັ້ນແຕ່ ສາມາດມີການດັບປັບທີ່ເໝາະສົມ ຕາມບົດບັນຍັດ ຂອງມາດຕາ 10; ແລະ
   1.4. ຜູ້ຊື້ ແລະ ຜູ້ຂາຍ ບໍ່ກ່ຽວຂ້ອງກັນ, ຫຼື ໃນກໍລະນີທີ່ ຜູ້ຊື້ ແລະ ຜູ້ຂາຍ ກ່ຽວຂ້ອງກັນ, ມູນຄ່າຊື້-ຂາຍຕົວຈິງ ສາມາດຮັບໄດ້ ສຳລັບການແຈ້ງພາສີ ພາຍໃຕ້ ຂໍ້ 2 ຂອງມາດຕານີ້.

2. ເພື່ອກຳນົດວ່າມູນຄ່າຊື້-ຂາຍ ເປັນທີ່ຮັບໄດ້ຫຼືບໍ່ ຕາມຈຸດປະສົງຂອງ ວັກ 1 ຂອງມາດຕານີ້, ໃຫ້ປະຕິບັດດັ່ງນີ້:

2.1. ການທີ່ຜູ້ຊື້ ແລະ ຜູ້ຂາຍ ກ່ຽວຂ້ອງກັນ ຕາມບົດບັນຍັດ ຂອງມາດຕາ 2.8 ຂອງບົດແນະນຳສະບັບນີ້ ໃນຕົວມັນເອງ ຈະບໍ່ຖືເປັນພື້ນຖານໃຫ້ແກ່ການບໍ່ຍອມຮັບເອົາມູນຄ່າຊື້-ຂາຍໄດ້. ໃນກໍລະນີທີ່ກ່ຽວຂ້ອງກັນດັ່ງກ່າວ, ລັດຖະການພາສີຕ້ອງກວດສອບ ສະຖານະການ ກ່ຽວກັບການຂາຍ ແລະ ໃຫ້ຮັບເອົາ ມູນຄ່າຊື້-ຂາຍ ຖ້າວ່າ ຄວາມກ່ຽວ ຂ້ອງກັນ ນັ້ນບໍ່ມີຜົນກະທົບຕໍ່ລາຄາ. ຖ້າວ່າ, ອີງຕາມຂໍ້ມູນທີ່ ຜູ້ນຳເຂົ້າສະໜອງໃຫ້ ຫຼື ຂໍ້ມູນທີ່ມີຢູ່, ລັດຖະການພາສີ ມີຫຼັກຖານວ່າ ຄວາມກ່ຽວຂ້ອງກັນນັ້ນ ສົ່ງຜົນກະທົບຕໍ່ລາຄາ, ລັດຖະການພາສີຕ້ອງແຈ້ງຫຼັກຖານນັ້ນໃຫ້ແກ່ ຜູ້ນຳເຂົ້າ ແລະ ໃຫ້ໂອກາດທີ່ສົມເຫດສົມຜົນ ແກ່ຜູ້ນຳເຂົ້າ ເພື່ອຕອບ. ຖ້າ ຜູ້ນຳເຂົ້າຮ້ອງຂໍ, ການແຈ້ງການກ່ຽວກັບຫຼັກຖານດັ່ງກ່າວ ຕ້ອງເປັນລາຍລັກອັກສອນ.

2.2. ໃນການຂາຍລະຫວ່າງບຸກຄົນທີ່ກ່ຽວຂ້ອງກັນ, ໃຫ້ຮັບເອົາ ມູນຄ່າຊື້-ຂາຍ ແລະ ໃຫ້ປະເມີນມູນຄ່າສິນຄ້າ ຕາມບົດບັນຍັດ ຂອງຂໍ້ 1, ຖ້າວ່າ ຜູ້ນຳເຂົ້າ ສາມາດສະແດງໃຫ້ເຫັນວ່າມູນຄ່າດັ່ງກ່າວແມ່ນໃກ້ຄຽງທີ່ສຸດກັບມູນຄ່າຊື້-ຂາຍລຸ່ມນີ້ທີ່ເກີດຂຶ້ນ ໃນເວລາດຽວກັນ ຫຼື ໃກ້ຄຽງ:

i. ມູນຄ່າຊື້ຂາຍ ສິນຄ້າທີ່ຄືກັນ ຫຼື ທີ່ຄ້າຍຄືກັນ ທີ່ຂາຍໃຫ້ແກ່ຜູ້ຊື້ທີ່ບໍ່ກ່ຽວຂ້ອງກັນ ເພື່ອນຳເຂົ້າມາຍັງ ສປປ ລາວ;

ii. ມູນຄ່າແຈ້ງພາສີຂອງສິນຄ້າທີ່ຄືກັນ ຫຼື ທີ່ຄ້າຍຄືກັນດັ່ງທີ່ກຳນົດໄວ້ໃນ ບົດບັນຍັດ ຂອງ ມາດຕາ 7;

iii. ມູນຄ່າແຈ້ງພາສີ ຂອງສິນຄ້າທີ່ຄືກັນ ຫຼື ທີ່ຄ້າຍຄືກັນດັ່ງທີ່ກຳນົດໄວ້ໃນ ບົດບັນຍັດ ຂອງ ມາດຕາ 8;

ໃນການນຳໃຊ້ມູນຄ່າກວດສອບທີ່ກ່າວມາຂ້າງເທິງ, ຕ້ອງຄຳນຶງເຖິງຄວາມແຕກຕ່າງ ຂອງ ລະດັບການຄ້າ, ລະດັບຈຳນວນ ແລະ ບັນດາອົງປະກອບ ຕາມທີ່ກຳນົດໄວ້ ໃນ ມາດຕາ 10, ແລະ ຄ່າໃຊ້ຈ່າຍ ໃນການຂາຍ ຂອງ ຜູ້ຊື້ ແລະ ຜູ້ຂາຍທີ່ບໍ່ກ່ຽວຂ້ອງກັນ ແລະ ບໍ່ມີຄ່າໃຊ້ຈ່າຍ ໃນການຂາຍ ຂອງຜູ້ຊື້ ແລະ ຜູ້ຂາຍ ທີ່ກ່ຽວຂ້ອງກັນ.

2.3. ມູນຄ່າກວດສອບ ຕາມທີ່ກຳນົດໄວ້ ໃນວັກ 2.2 ຂ້າງເທິງ ແມ່ນຖືກນຳໃຊ້ ໃນເວລາຜູ້ນຳເຂົ້າແຈ້ງໃນເບື້ອງຕົ້ນ ແລະ ນຳໃຊ້ເພື່ອຈຸດປະສົງໃນການສົມທຽບເທົ່ານັ້ນ ແລະ ບໍ່ສາມາດກຳນົດມູນຄ່າປ່ຽນແທນໄດ້ ຕາມເນື້ອໃນ ຂອງວັກ 2.2.

ມາດຕາ 5. ການກຳນົດມູນຄ່າແຈ້ງພາສີດ້ວຍການນຳໃຊ້ ມູນຄ່າຊື້ຂາຍສິນຄ້າທີ່ຄືກັນ

1. ຖ້າວ່າມູນຄ່າແຈ້ງພາສີ ບໍ່ສາມາດກຳນົດໄດ້ຕາມເນື້ອໃນຂອງ ມາດຕາ 4, ໃຫ້ນຳເອົາມູນຄ່າຊື້ຂາຍສິນຄ້າທີ່ຄືກັນ ທີ່ຂາຍເພື່ອນຳເຂົ້າມາຍັງ ສປປ ລາວ ໃນເວລາດຽວກັນຫຼືໃກ້ຄຽງກັນ ກັບສິນຄ້າທີ່ກຳລັງປະເມີນມູນຄ່າຢູ່.

ໃນການນຳໃຊ້ມາດຕານີ້, ໃຫ້ນຳໃຊ້ມູນຄ່າຊື້-ຂາຍ ຂອງສິນຄ້າທີ່ຄືກັນ ທີ່ຂາຍໃນລະດັບການຄ້າດຽວກັນ ແລະ ໃນຈຳນວນໃກ້ຄຽງກັນກັບສິນຄ້າທີ່ກຳລັງປະເມີນມູນຄ່າຢູ່ ເພື່ອກຳນົດມູນຄ່າແຈ້ງພາສີ. ໃນກໍລະນີທີ່ ບໍ່ມີການຂາຍດັ່ງກ່າວ, ໃຫ້ນຳໃຊ້ມູນຄ່າຊື້ຂາຍ ສິນຄ້າທີ່ຄືກັນ ໃນລະດັບການຄ້າ ແລະ/ຫຼື ໃນຈຳນວນຕ່າງກັນ ໂດຍໄດ້ມີການດັດປັບ ຕາມຄວາມແຕກຕ່າງຂອງລະດັບການຄ້າ ແລະ/ຫຼື ຈຳນວນ ໂດຍມີເງື່ອນໄຂວ່າ ການດັດປັບດັ່ງກ່າວ ສາມາດເຮັດໄດ້ ຕາມຫຼັກຖານ ທີ່ສາມາດຢັ້ງຢືນໄດ້ຢ່າງຈະແຈ້ງ ເຫດຜົນ ແລະ ຄວາມຖືກຕ້ອງ ຂອງການດັດປັບດັ່ງກ່າວ, ເຖິງວ່າຈະເຮັດໃຫ້ມູນຄ່າເພີ່ມຂຶ້ນ ຫຼື ຫຼຸດລົງກໍຕາມ.

2. ໃນກໍລະນີທີ່ ຕົ້ນທຶນ ແລະ ຄ່າຕ່າງໆ ທີ່ອ້າງເຖິງໃນ ມາດຕາ 10.1.5 ຂອງ ບົດແນະນຳສະບັບນີ້ ຖືກລວມເຂົ້າໃນມູນຄ່າຊື້ຂາຍ, ຕ້ອງມີການດັດປັບ ຕາມຄວາມແຕກຕ່າງກັນ**ຢ່າງຫຼວງຫຼາຍ** ຂອງຕົ້ນທຶນ ແລະ ຄ່າຕ່າງໆ ລະຫວ່າງສິນຄ້ານຳເຂົ້າ ແລະ ສິນຄ້າທີ່ຄືກັນດັ່ງກ່າວ, ຊຶ່ງຄວາມແຕກຕ່າງດັ່ງກ່າວ ແມ່ນເກີດຈາກຄວາມແຕກຕ່າງທາງດ້ານ ໄລຍະທາງ ແລະ ຮູບແບບຂອງການຂົນສົ່ງ.
3. ຖ້າວ່າ ໃນການນຳໃຊ້ມາດຕານີ້, ຫາກພົບເຫັນວ່າ ມີຫຼາຍມູນຄ່າຊື້ຂາຍ ຂອງສິນຄ້າທີ່ຄືກັນ, ໃຫ້ເລືອກເອົາມູນຄ່າຕ່ຳສຸດ ເພື່ອກຳນົດມູນຄ່າແຈ້ງພາສີ ຂອງສິນຄ້າທີ່ນຳເຂົ້າ.

ມາດຕາ 6. ການກຳນົດມູນຄ່າແຈ້ງພາສີດ້ວຍການນຳໃຊ້ ມູນຄ່າຊື້ຂາຍສິນຄ້າທີ່ຄ້າຍຄືກັນ

1. ຖ້າວ່າມູນຄ່າແຈ້ງພາສີສິນຄ້ານຳເຂົ້າ ບໍ່ສາມາດກຳນົດໄດ້ ຕາມເນື້ອໃນຂອງມາດຕາ 4 ແລະ ມາດຕາ 5 ຂອງບົດແນະນຳສະບັບນີ້, ມູນຄ່າແຈ້ງພາສີ ຕ້ອງແມ່ນມູນຄ່າຊື້ຂາຍ ຂອງສິນຄ້າທີ່ຄ້າຍຄືກັນ ທີ່ຂາຍ ເພື່ອນຳເຂົ້າມາຍັງ ສປປ ລາວ ໃນເວລາດຽວກັນ ຫຼື ໃນເວລາໃກ້ຄຽງກັນກັບສິນຄ້າທີ່ກຳລັງປະເມີນມູນຄ່າຢູ່.

ໃນການນຳໃຊ້ມາດຕານີ້, ໃຫ້ນຳໃຊ້ ມູນຄ່າຊື້-ຂາຍ ຂອງສິນຄ້າທີ່ຄ້າຍຄືກັນ ທີ່ຂາຍໃນລະດັບການຄ້າຄືກັນ ແລະ ໃນຈຳນວນໃກ້ຄຽງກັນກັບສິນຄ້າທີ່ກຳລັງປະເມີນມູນຄ່າຢູ່ ເພື່ອກຳນົດມູນຄ່າແຈ້ງພາສີ. ໃນກໍລະນີທີ່ ບໍ່ມີການຂາຍດັ່ງກ່າວ, ໃຫ້ນຳໃຊ້ມູນຄ່າຊື້ຂາຍ ສິນຄ້າທີ່ຄ້າຍຄືກັນ ໃນລະດັບການຄ້າ ແລະ/ຫຼື ໃນຈຳນວນຕ່າງກັນ ໂດຍໄດ້ມີການດັດປັບ ຕາມຄວາມແຕກຕ່າງຂອງລະດັບການຄ້າ ແລະ/ຫຼື ຈຳນວນ ໂດຍມີເງື່ອນໄຂວ່າ ການດັດປັບດັ່ງກ່າວ ສາມາດເຮັດໄດ້ ຕາມຫຼັກຖານ ທີ່ສາມາດຢັ້ງຢືນໄດ້ຢ່າງຈະແຈ້ງ ເຫດຜົນ ແລະ ຄວາມຖືກຕ້ອງ ຂອງການດັດປັບດັ່ງກ່າວ, ເຖິງວ່າຈະເຮັດໃຫ້ມູນຄ່າເພີ່ມຂຶ້ນ ຫຼື ຫຼຸດລົງກໍຕາມ.

2. ໃນກໍລະນີທີ່ ຕົ້ນທຶນ ແລະ ຄ່າຕ່າງໆ ທີ່ອ້າງເຖິງໃນ ມາດຕາ 10.1.5 ຂອງ ບົດແນະນຳສະບັບນີ້ ຖືກລວມເຂົ້າໃນມູນຄ່າຊື້ຂາຍ, ຕ້ອງມີການດັດປັບ ຕາມຄວາມແຕກຕ່າງກັນ **ຢ່າງຫຼວງຫຼາຍ** ຂອງຕົ້ນທຶນ ແລະ ຄ່າຕ່າງໆ ລະຫວ່າງສິນຄ້ານຳເຂົ້າ ແລະ ສິນຄ້າທີ່ຄ້າຍຄືກັນດັ່ງກ່າວ, ຊຶ່ງຄວາມແຕກຕ່າງດັ່ງກ່າວ ແມ່ນເກີດຈາກຄວາມແຕກຕ່າງທາງດ້ານໄລຍະທາງ ແລະ ຮູບແບບຂອງການຂົນສົ່ງ.

3. ຖ້າວ່າ ໃນການນຳໃຊ້ມາດຕານີ້, ຫາກພົບເຫັນວ່າ ມີຫຼາຍມູນຄ່າຊື້ຂາຍ ຂອງສິນຄ້າທີ່ຄ້າຍຄືກັນ, ໃຫ້ເລືອກເອົາມູນຄ່າຕ່ຳສຸດ ເພື່ອກຳນົດມູນຄ່າແຈ້ງພາສີ ຂອງສິນຄ້າທີ່ນຳເຂົ້າ.

ມາດຕາ 7. ການກຳນົດມູນຄ່າແຈ້ງພາສີດ້ວຍ ວິທີຫັກລົບມູນຄ່າ

1. ຖ້າວ່າ ສິນຄ້ານຳເຂົ້າຫຼືສິນຄ້າທີ່ຄືກັນ ຫຼື ທີ່ຄ້າຍຄືກັນ ຖືກຂາຍ ຢູ່ ສປປ ລາວ ໃນຖານະເປັນ ສິນຄ້ານຳເຂົ້າ, ມູນຄ່າແຈ້ງພາສີສິນຄ້ານຳເຂົ້າ ພາຍໃຕ້ມາດຕານີ້ ຕ້ອງອີງໃສ່ລາຄາຫົວໜ່ວຍ ທີ່ ສິນຄ້ານຳເຂົ້າ ຫຼື ສິນຄ້າທີ່ຄືກັນ ຫຼື ທີ່ຄ້າຍຄືກັນ ຂາຍໃນຈຳນວນຫຼາຍທີ່ສຸດ, ໃນເວລາດຽວກັນ ຫຼື ໃນເວລາໃກ້ຄຽງກັນ ກັບ ການນຳເຂົ້າສິນຄ້າທີ່ກຳລັງປະເມີນມູນຄ່າຢູ່, ໃຫ້ແກ່ບຸກຄົນທີ່ບໍ່ກ່ຽວຂ້ອງກັນກັບຜູ້ຂາຍສິນຄ້າດັ່ງກ່າວ, ໂດຍມີການຫັກລົບຄ່າຕ່າງໆດັ່ງລຸ່ມນີ້:
   1.1. ຄ່ານາຍໜ້າ ທີ່ຕາມປົກກະຕິ ຈະຊຳລະ ຫຼື ຕົກລົງທີ່ຈະຊຳລະ ຫຼື ຈຳນວນທີ່ຕາມປົກກະຕິ ຈະຕື່ມໃສ່ເປັນກຳໄລ ແລະ ຄ່າໃຊ້ຈ່າຍຕ່າງໆ ທີ່ກ່ຽວກັບການຂາຍສິນຄ້າປະເພດດຽວກັນ ຫຼື ຊະນິດດຽວກັນ ຢູ່ ສປປ ລາວ;
   1.2. ຄ່າຂົນສົ່ງ, ຄ່າປະກັນໄພ ແລະ ຄ່າອື່ນໆທີ່ກ່ຽວຂ້ອງ ທີ່ຕາມປົກກະຕິ ຕ້ອງຈ່າຍພາຍໃນ ສປປ ລາວ;
   1.3. ຕົ້ນທຶນ ແລະ ຄ່າຕ່າງໆ ທີ່ອ້າງເຖິງໃນ ມາດຕາ 10.1.5, ໃນກໍລະນີທີ່ເໝາະສົມ; ແລະ
   1.4. ຄ່າພາສີ ແລະ ພັນທະອື່ນໆ ທີ່ໄດ້ຊຳລະຢູ່ ສປປ ລາວ ເນື່ອງຈາກການນຳເຂົ້າ ຫຼື ການຂາຍສິນຄ້າດັ່ງກ່າວ.

   ຖ້າວ່າ ສິນຄ້ານຳເຂົ້າ ຫຼື ສິນຄ້າທີ່ຄືກັນ ຫຼື ທີ່ຄ້າຍຄືກັນ ບໍ່ມີຂາຍໃນເວລາດຽວກັນ ຫຼື ໃກ້ຄຽງກັນກັບເວລານຳເຂົ້າສິນຄ້າທີ່ກຳລັງປະເມີນມູນຄ່າຢູ່, ມູນຄ່າແຈ້ງພາສີຕ້ອງອີງໃສ່ລາຄາ ຫົວໜ່ວຍສິນຄ້ານຳເຂົ້າ ຫຼື ສິນຄ້າທີ່ຄືກັນ ຫຼື ຄ້າຍຄືກັນ ທີ່ຂາຍ ຢູ່ ສປປ ລາວ ໃນຖານະເປັນ ສິນຄ້ານຳເຂົ້າ, ໃນເວລາໃກ້ຄຽງສຸດ ກັບການນຳເຂົ້າ ສິນຄ້າທີ່ກຳລັງປະເມີນມູນຄ່າຢູ່ ແລະ ຕ້ອງບໍ່ເກີນເກົ້າສິບວັນ ຫຼັງຈາກການນຳເຂົ້າດັ່ງກ່າວ.
2. ຖ້າວ່າສິນຄ້ານຳເຂົ້າ ຫຼື ສິນຄ້າທີ່ຄືກັນ ຫຼື ຄ້າຍຄືກັນ ບໍ່ມີຂາຍຢູ່ ສປປ ລາວ ໃນຖານະເປັນ ສິນຄ້ານຳເຂົ້າ, ແລະ ຖ້າມີການຮ້ອງຂໍ ຂອງຜູ້ນຳເຂົ້າ, ມູນຄ່າແຈ້ງພາສີ ຕ້ອງອີງໃສ່ລາຄາຫົວໜ່ວຍ ທີ່ສິນຄ້ານຳເຂົ້າແລ້ວປຸງແຕ່ງເພີ່ມເຕີມ ຂາຍໃນຈຳນວນຫຼາຍທີ່ສຸດ ໃຫ້ແກ່ບຸກຄົນ ທີ່ຢູ່ ສປປ ລາວ ແລະ ທີ່ບໍ່ກ່ຽວຂ້ອງກັບຜູ້ຂາຍສິນຄ້າດັ່ງກ່າວ, ໂດຍມີການຫັກຄ່າທີ່ເພີ່ມຂຶ້ນຈາກການປຸງແຕ່ງເພີ່ມເຕີມດັ່ງກ່າວ ແລະ ການຫັກລົບຕາມທີ່ກຳນົດໄວ້ຢູ່ໃນຂໍ້ 1 ຂອງມາດຕານີ້.

ມາດຕາ 8. ການກຳນົດມູນຄ່າແຈ້ງພາສີດ້ວຍ ວິທີຄຳນວນ

1. ມູນຄ່າແຈ້ງພາສີຂອງສິນຄ້ານຳເຂົ້າ ພາຍໃຕ້ບົດບັນຍັດ ຂອງມາດຕານີ້ ຕ້ອງອີງໃສ່ມູນຄ່າທີ່ໄດ້ມາຈາກການຄຳນວນ ຊຶ່ງຕ້ອງປະກອບດ້ວຍ ຜົນບວກລວມ ຂອງຄ່າລຸ່ມນີ້:
   1.1. ຕົ້ນທຶນ ຫຼື ມູນຄ່າຂອງວັດສະດຸ ແລະ ການຜະລິດ ຫຼື ການປຸງແຕ່ງອື່ນໆ ທີ່ໃຊ້ເຂົ້າໃນການຜະລິດສິນຄ້ານຳເຂົ້າ;

1.2. ຈຳນວນກຳໄລ ແລະ ລາຍຈ່າຍທົ່ວໄປ ຊຶ່ງຕ້ອງເທົ່າກັບຈຳນວນກຳໄລ ແລະ ລາຍຈ່າຍທົ່ວໄປທີ່ຕາມປົກກະຕິຈະລວມໃສ່ໃນລາຄາຂາຍ ສິນຄ້າປະເພດດຽວກັນ ຫຼື ຊະນິດດຽວກັນກັບສິນຄ້າທີ່ກຳລັງປະເມີນມູນຄ່າຢູ່ ຊຶ່ງເຮັດຂຶ້ນໂດຍ ຜູ້ຜະລິດຢູ່ປະເທດສົ່ງອອກ ເພື່ອນຳເຂົ້າມາຍັງ ສປປ ລາວ;

1.3. ຄ່າຂົນສົ່ງຂົນ-ລົງ ແລະ ຄ່າໃຊ້ຈ່າຍອື່ນໆທີ່ ກ່ຽວຂ້ອງກັບການຂົນສົ່ງ ສິນຄ້ານຳເຂົ້າມາຍັງ ດ່ານນຳເຂົ້າ ຂອງ ສປປ ລາວ ແລະ ຄ່າປະກັນໄພ.

2. ລັດຖະການພາສີ ບໍ່ສາມາດຮຽກຮ້ອງ ຫຼື ບັງຄັບໃຫ້ບຸກຄົນໃດໜຶ່ງທີ່ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສະໜອງ ຫຼື ອະນຸຍາດໃຫ້ເຂົ້າເຖິງ ບັນຊີ ຫຼື ການບັນທຶກອື່ນໆ ເພື່ອກວດກາ ສຳລັບການກຳນົດມູນຄ່າແຈ້ງພາສີດ້ວຍວິທີຄຳນວນ. ຂໍ້ມູນທີ່ຜູ້ຜະລິດສິນຄ້າສະໜອງໃຫ້ເພື່ອຈຸດປະສົງຂອງການກຳນົດມູນຄ່າແຈ້ງພາສີ ພາຍໃຕ້ມາດຕານີ້ ສາມາດຖືກກວດສອບໄດ້ຢູ່ອີກປະເທດໜຶ່ງ ໂດຍລັດຖະການພາສີ ໂດຍການຕົກລົງເຫັນດີຂອງຜູ້ຜະລິດ ແລະ ມີການແຈ້ງລ່ວງໜ້າໃນໄລຍະເວລາທີ່ພຽງພໍ ເຖິງລັດຖະບານຂອງປະເທດກ່ຽວຂ້ອງ ແລະ ລັດຖະບານຂອງປະເທດດັ່ງກ່າວ ກໍບໍ່ໄດ້ຂັດຂ້ອງຕໍ່ການສອບສວນ.

ມາດຕາ 9. ການກຳນົດມູນຄ່າແຈ້ງພາສີດ້ວຍ ວິທີຍ້ອນຄືນທີ່ສົມເຫດສົມຜົນ

1. ຖ້າບໍ່ສາມາດກຳນົດມູນຄ່າແຈ້ງພາສີສິນຄ້ານຳເຂົ້າ ພາຍໃຕ້ເນື້ອໃນຂອງມາດຕາ 4, 5, 6, 7 ແລະ 8 ເທິງນີ້ ຕາມລຳດັບ, ໃຫ້ກຳນົດມູນຄ່າແຈ້ງພາສີ ດ້ວຍວິທີຍ້ອນຄືນທີ່ສົມເຫດສົມຜົນ ໂດຍສອດຄ່ອງກັບຫຼັກການ ແລະ ບົດບັນຍັດທົ່ວໄປຂອງ ຂອງບົດແນະນຳສະບັບນີ້ ແລະ ບົນພື້ນຖານຂໍ້ມູນທີ່ມີຢູ່ໃນ ສປປ ລາວ.

2. ພາຍໃຕ້ເນື້ອໃນຂອງມາດຕານີ້, ມູນຄ່າແຈ້ງພາສີບໍ່ສາມາດຖືກກຳນົດ ບົນພື້ນຖານຂອງ:

2.1. ລາຄາຂາຍ ຢູ່ ສປປ ລາວ ຂອງ ສິນຄ້າ ທີ່ຜະລິດຢູ່ ສປປ ລາວ;

2.2. ລະບົບທີ່ກຳນົດໃຫ້ມີການຮັບເອົາມູນຄ່າແຈ້ງພາສີທີ່ສູງກວ່າ ລະຫວ່າງສອງມູນຄ່າສົມທຽບ;

2.3. ລາຄາສິນຄ້າ ທີ່ຂາຍຢູ່ຕະຫຼາດພາຍໃນ ຂອງປະເທດສົ່ງອອກ;

2.4. ຕົ້ນທຶນການຜະລິດທີ່ບໍ່ແມ່ນມູນຄ່າຄຳນວນທີ່ໄດ້ຖືກກຳນົດ ສຳລັບສິນຄ້າທີ່ຄືກັນ ຫຼື ທີ່ຄ້າຍຄືກັນ ຕາມບົດບັນຍັດ ຂອງມາດຕາ 8;

2.5. ລາຄາສິນຄ້າ ເພື່ອສົ່ງອອກໄປຍັງປະເທດອື່ນ ທີ່ບໍ່ແມ່ນ ສປປ ລາວ;

2.6. ລາຄາກາງ; ຫຼື

2.7. ມູນຄ່າທີ່ກຳນົດຂຶ້ນຕາມລຳພັງໃຈ ຫຼື ທີ່ບໍ່ມີຈິງ.

3. ຖ້າຜູ້ນຳເຂົ້າ ຮ້ອງຂໍ, ລັດຖະການພາສີ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ນຳເຂົ້າຊາບ ກ່ຽວກັບມູນຄ່າແຈ້ງພາສີ ທີ່ໄດ້ກຳນົດພາຍໃຕ້ບົດບັນຍັດ ຂອງມາດຕານີ້ ແລະ ວິທີທີ່ນຳໃຊ້ ໃນການກຳນົດມູນຄ່າດັ່ງກ່າວ. ເພື່ອຂໍຄຳອະທິບາຍ ກ່ຽວກັບວິທີການປະເມີນມູນຄ່າແຈ້ງພາສີສິນຄ້າ, ເຄື່ອງຂອງຂອງຕົນ.

ມາດຕາ 10. ການດັດປັບ

1. ໃນການກຳນົດມູນຄ່າແຈ້ງພາສີ ພາຍໃຕ້ບົດບັນຍັດ ຂອງມາດຕາ 4 ຂອງບົດແນະນຳສະບັບນີ້, ໃຫ້ບວກຄ່າຕໍ່ໄປນີ້ ເຂົ້າໃນລາຄາທີ່ໄດ້ຊຳລະຕົວຈິງ ຫຼື ທີ່ຈະຊຳລະ ສຳລັບສິນຄ້ານຳເຂົ້າ:
   1.1. ຄ່າດັ່ງຕໍ່ໄປນີ້ ຊຶ່ງຜູ້ຊື້ໄດ້ຈ່າຍໄປແລ້ວແຕ່ບໍ່ທັນໄດ້ບວກເຂົ້າກັບລາຄາທີ່ໄດ້ຊຳລະຕົວຈິງ ຫຼື ຈະຊຳລະ ສຳລັບສິນຄ້ານຳເຂົ້າ:
      i. ຄ່ານາຍໜ້າ ແລະ ຄ່າຄົນກາງ, ຍົກເວັ້ນຄ່ານາຍໜ້າສຳລັບການຊື້;
      ii. ຄ່າພາຊະນະບັນຈຸສິນຄ້າ ຊຶ່ງຖືວ່າເປັນອັນດຽວກັນກັບສິນຄ້າດັ່ງກ່າວ ເພື່ອຈຸດປະສົງໃນການແຈ້ງພາສີ;
      iii. ຄ່າຫຸ້ມຫໍ່ສິນຄ້າ ບໍ່ວ່າຈະເປັນຄ່າແຮງງານ ຫຼື ຄ່າວັດຖຸ;
   1.2. ມູນຄ່າທີ່ມີການແບ່ງຊັດສ່ວນທີ່ເໝາະສົມ ຂອງສິນຄ້າ ແລະ ການບໍລິການດັ່ງຕໍ່ໄປນີ້ ຊຶ່ງຜູ້ຊື້ ສະໜອງໃຫ້ ໂດຍບໍ່ໄດ້ຄິດຄ່າ ຫຼື ສະໜອງໃຫ້ໃນລາຄາຫຼຸດຜ່ອນ ບໍ່ວ່າທາງກົງ ຫຼື ທາງອ້ອມ ເພື່ອຮັບໃຊ້ການຜະລິດ ແລະ ການຂາຍສິນຄ້າເພື່ອນຳເຂົ້າມາຍັງ ສປປ ລາວ ຖ້າວ່າມູນຄ່າດັ່ງກ່າວ ຍັງບໍ່ໄດ້ລວມເຂົ້າໃນ ລາຄາທີ່ໄດ້ຊຳລະຕົວຈິງ ຫຼື ທີ່ຈະຊຳລະ:
      i. ວັດຖຸ, ສ່ວນປະກອບ, ສິ້ນສ່ວນ ແລະ ສິ່ງທີ່ຄ້າຍຄືກັນ ທີ່ປະກອບເຂົ້າໃນສິນຄ້ານຳເຂົ້າ;
      ii. ເຄື່ອງມື, ແມ່ພິມ, ເບົ້າຫຼໍ່ ຫຼື ສິ່ງທີ່ຄ້າຍຄືກັນ ທີ່ໄດ້ນຳໃຊ້ເຂົ້າໃນການຜະລິດສິນຄ້ານຳເຂົ້າ;
      iii. ວັດຖຸທີ່ນຳໃຊ້ແລ້ວໝົດໄປ ສຳລັບການຜະລິດສິນຄ້ານຳເຂົ້າ;
      iv. ວຽກວິສະວະກຳ, ວຽກພັດທະນາ, ວຽກສິລະປະ, ວຽກອອກແບບ, ແຜນຜັງ ແລະ ຮູບແຕ້ມ ເຮັດຢູ່ບ່ອນໃດນຶ່ງ ທີ່ບໍ່ແມ່ນຢູ່ ສປປ ລາວ ແລະ ຈຳເປັນສຳລັບໃຊ້ເຂົ້າ ໃນການຜະລິດສິນຄ້ານຳເຂົ້າ;
   1.3. ຄ່າລິຂະສິດ ແລະ ຄ່າທຳນຽມໃບອະນຸຍາດ ທີ່ກ່ຽວກັບສິນຄ້າທີ່ກຳລັງປະເມີນມູນຄ່າຢູ່ ທີ່ຜູ້ຊື້ ຕ້ອງຈ່າຍ, ບໍ່ວ່າທາງກົງ ຫຼື ທາງອ້ອມ, ຊຶ່ງເປັນເງື່ອນໄຂ ຂອງການຂາຍສິນຄ້າທີ່ກຳລັງປະເມີນມູນຄ່າຢູ່, ຖ້າວ່າ ຄ່າລິຂະສິດ ແລະ ຄ່າທຳນຽມໃບອະນຸຍາດດັ່ງກ່າວ ບໍ່ໄດ້ລວມເຂົ້າໃນລາຄາທີ່ໄດ້ຊຳລະຕົວຈິງ ຫຼື ທີ່ຈະຊຳລະ;
   1.4. ມູນຄ່າສ່ວນໃດໜຶ່ງຂອງຈຳນວນເງິນທີ່ຜູ້ຂາຍໄດ້ຮັບ ບໍ່ວ່າທາງກົງ ຫຼື ທາງອ້ອມ ຈາກການຂາຍຕໍ່, ການກຳຈັດ ຫຼື ການນຳໃຊ້ໃນພາຍຫຼັງ ຂອງສິນຄ້ານຳເຂົ້າ;
   1.5. ຄ່າຂົນສົ່ງສິນຄ້າຂຶ້ນ-ລົງ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງກັບການຂົນສົ່ງ ສິນຄ້ານຳເຂົ້າ ມາຍັງດ່ານນຳເຂົ້າ ຂອງ ສປປ ລາວ ແລະ ຄ່າປະກັນໄພ, ຖ້າບໍ່ໄດ້ບວກເຂົ້າກັບລາຄາທີ່ໄດ້ຊຳລະຕົວຈິງ ຫຼື ທີ່ຈະຊຳລະ.
2. ການບວກເພີ່ມໃສ່ ລາຄາທີ່ໄດ້ຊຳລະຕົວຈິງ ຫຼື ທີ່ຈະຊຳລະ ຕ້ອງປະຕິບັດ ພາຍໃຕ້ ມາດຕານີ້ ບົນພື້ນຖານຂອງຂໍ້ມູນທີ່ເປັນຈິງ ແລະ ສາມາດກຳນົດຈຳນວນໄດ້ ເທົ່ານັ້ນ.

3. ເວັ້ນເສຍແຕ່ຄ່າຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້, ບໍ່ໃຫ້ມີການບວກເພີ່ມຢ່າງອື່ນໃສ່ ລາຄາ ທີ່ໄດ້ຊຳລະຕົວຈິງ ຫຼື ທີ່ຈະຊຳລະ ໃນການກຳນົດມູນຄ່າແຈ້ງພາສີ.

ໝວດທີ 3
ບົດບັນຍັດອື່ນໆ

ມາດຕາ 11. ອັດຕາແລກປ່ຽນເງິນຕາ

ອັດຕາແລກປ່ຽນເງິນຕາຕ່າງປະເທດເປັນເງິນກີບ ໃຫ້ອີງຕາມອັດຕາຂາຍ ຂອງທະນາຄານ ທີ່ນຳໃຊ້ໃນເວລານຳເຂົ້າສິນຄ້າ ຊຶ່ງໃຫ້ຖືເອົາເວລາຍື່ນໃບແຈ້ງພາສີເປັນລາຍລະອຽດ ຕໍ່ລັດຖະການພາສີ.

ມາດຕາ 12. ການຮັກສາຄວາມລັບ

ທຸກຂໍ້ມູນລັບ ຫຼື ທີ່ສະໜອງໃຫ້ຢ່າງເປັນຄວາມລັບ ເພື່ອຈຸດປະສົງໃນການປະເມີນມູນຄ່າ ແຈ້ງພາສີ ຕ້ອງຖືກປົກປ້ອງເປັນຄວາມລັບຢ່າງເຄັ່ງຄັດ ໂດຍລັດຖະການພາສີ ຊຶ່ງບໍ່ສາມາດເປີດ ເຜີຍຂໍ້ມູນດັ່ງກ່າວໄດ້ ຖ້າບໍ່ໄດ້ຮັບອະນຸຍາດເປັນລາຍລັກອັກສອນ ຈາກຜູ້ທີ່ສະໜອງຂໍ້ມູນທີ່ກ່ຽວ ຂ້ອງດັ່ງກ່າວ, ເວັ້ນແຕ່ໃນກໍລະນີທີ່ຈຳເປັນ ຕ້ອງເປີດເຜີຍໃນຂະບວນການ ພິຈາລະນາຂອງສານ.

ມາດຕາ 13. ການສະເໜີຄືນ ກ່ຽວກັບ ການກຳນົດມູນຄ່າແຈ້ງພາສີ

ຜູ້ນຳເຂົ້າ ຫຼື ຜູ້ທີ່ຮັບຜິດຊອບເສຍຄ່າພາສີແລະພັນທະອື່ນໆ ມີສິດສະເໜີຄືນ ກ່ຽວ ກັບການກຳນົດມູນຄ່າແຈ້ງພາສີ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍພາສີ ສະບັບ ເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011. ຂໍ້ຕົກລົງ ຕໍ່ກັບການສະເໜີຄືນດັ່ງກ່າວ ຕ້ອງ ແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ແກ່ຜູ້ສະເໜີ ພ້ອມທັງແຈ້ງສິດອຸທອນ ຂອງ ຜູ້ກ່ຽວ.

ມາດຕາ 14. ການເຜີຍແຜ່ນິຕິກຳ

ບັນດາກົດໝາຍ, ລະບຽບການ, ຄຳຕັດສິນ ຂອງສານ ແລະ ການຢັ້ງຢືນຮັບຮອງ ລ່ວງໜ້າ ທີ່ມີຜົນບັງຄັບທົ່ວໄປ ກ່ຽວກັບ ການກຳນົດມູນຄ່າແຈ້ງພາສີ ຕ້ອງໄດ້ພິມເຜີຍແຜ່ໃຫ້ ສັງຄົມໄດ້ຮັບຊາບ ໂດຍສອດຄ່ອງກັບ ມາດຕາ X ຂອງຂໍ້ຕົກລົງທົ່ວໄປວ່າ ດ້ວຍອັດຕາພາສີ ແລະ ການຄ້າ (GATT) 1994 ຂອງອົງການການຄ້າໂລກ.

ມາດຕາ 15. ການເອົາສິນຄ້າອອກຈາກດ່ານ ຫຼື ສາງພາສີ ກ່ອນການກຳນົດມູນຄ່າແຈ້ງພາສີ

ຖ້າວ່າ ການກຳນົດມູນຄ່າແຈ້ງພາສີ ຂອງສິນຄ້ານຳເຂົ້າມີຄວາມຈຳເປັນຕ້ອງຊັກຊ້າ, ຜູ້ນຳເຂົ້າສິນຄ້າ ສາມາດນຳເອົາສິນຄ້າອອກຈາກດ່ານ ຫຼື ສາງພາສີໄດ້ ແຕ່ຕ້ອງມີການວາງເງິນ ຄ້ຳປະກັນ ຕາມລະ ບຽບການຄ້ຳປະກັນ ທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011.

ມາດຕາ 16. ສິດໃນການໄດ້ຮັບການອະທິບາຍກ່ຽວກັບການກຳນົດມູນຄ່າແຈ້ງພາສີ

ຜູ້ນຳເຂົ້າ ມີສິດ ຂໍຄຳອະທິບາຍເປັນລາຍລັກອັກສອນ ຈາກລັດຖະການພາສີ ກ່ຽວກັບ ການກຳນົດມູນຄ່າແຈ້ງພາສີສິນຄ້າຂອງຕົນ ໂດຍເຮັດໃບຄຳຮ້ອງຂໍເປັນລາຍລັກອັກສອນ ຕໍ່ລັດຖະ ການພາສີ ຊຶ່ງຕ້ອງແຈ້ງຕອບເປັນລາຍລັກອັກສອນໃຫ້ ຜູ້ກ່ຽວພາຍໃນ ສາມສິບວັນ (30 ວັນ) ນັບຕັ້ງແຕ່ວັນໄດ້ຮັບຄຳຮ້ອງສະບັບດັ່ງກ່າວ.

ໝວດທີ 4
ບົດບັນຍັດສຸດທ້າຍ

ມາດຕາ 17. ການຈັດຕັ້ງປະຕິບັດ

ມອບໃຫ້ກົມພາສີ ເປັນຜູ້ອອກບົດແນະນຳລະອຽດກ່ຽວກັບ ການຈັດຕັ້ງປະຕິບັດການ ກຳນົດມູນຄ່າແຈ້ງພາສີ ໂດຍໃຫ້ສອດຄ່ອງກັບ ບົດແນະນຳສະບັບນີ້.

ມາດຕາ 18. ຜົນສັກສິດ

ບົດແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ບົດ ແນະນຳສະ ບັບເລກທີ 1398/ກງ, ລົງວັນທີ 16 ມິຖຸນາ 2010.

ລັດຖະມົນຕີວ່າການກະຊວງການເງິນ

ພູເພັດ ຄຳພູນວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 1158 9/ກພສ
ນະຄອນຫຼວງວຽງຈັນ, ວັນທີ 24 JUL 2012

ບົດແນະນຳ
ຂອງຫົວໜ້າກົມພາສີ
ວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

- ອີງຕາມ ກົດໝາຍວ່າດ້ວຍພາສີ ເລກທີ 04/ສພຊ, ລົງວັນທີ 26 ທັນວາ 2011 ໝວດ 2, ມາດຕາ 13 ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ; ແລະ
- ອີງຕາມບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ວ່າດ້ວຍການກຳນົດມູນຄ່າ ແຈ້ງພາສີ ສຳລັບສິນຄ້ານຳເຂົ້າ ສະບັບເລກທີ: 1537/ກງ, ລົງວັນທີ: 04 ມິຖຸນາ 2012,

ຫົວໜ້າກົມພາສີ ອອກບົດແນະນຳດັ່ງນີ້:

1. ຈຸດປະສົງ:

ບົດແນະນຳສະບັບນີ້ ວາງອອກເພື່ອອະທິບາຍເພີ່ມເຕີມ ກ່ຽວກັບບັນດາຫຼັກການ ແລະ ວິທີການການກຳນົດມູນຄ່າແຈ້ງພາສີ ຕາມທີ່ໄດ້ກຳນົດໄວ້ໃນບົດແນະນຳຂອງ ລັດຖະມົນຕີວ່າການກະຊວງການເງິນ ວ່າດ້ວຍການກຳນົດມູນຄ່າແຈ້ງພາສີ ສຳລັບສິນຄ້ານຳເຂົ້າ ສະບັບເລກທີ: 1537/ກງ, ລົງວັນທີ 04 ມິຖຸນາ 2012 (ຕໍ່ໄປນີ້ ເອີ້ນວ່າ: "**ບົດແນະນຳລັດຖະມົນຕີ**"), ເພື່ອຮັບປະກັນ ການຈັດຕັ້ງປະຕິບັດການກຳນົດມູນຄ່າແຈ້ງພາສີ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ບັນດາມາດຕາທີ່ອ້າງເຖິງໃນບົດແນະນຳສະບັບນີ້ ໝາຍເຖິງມາດຕາຂອງບົດແນະນຳລັດຖະມົນຕີ. ບັນດາຄຳສັບ ທີ່ນິຍາມໃນບົດແນະນຳລັດຖະມົນຕີ ມີຄວາມໝາຍດຽວກັບ ຄຳສັບທີ່ນຳໃຊ້ໃນບົດແນະນຳສະບັບນີ້.

2. ຄຳອະທິບາຍລວມ

2.1. ການນຳໃຊ້ວິທີການສຳລັບການກຳນົດມູນຄ່າ ຕາມລຳດັບ.

2.1.1. ມາດຕາ 4 ເຖິງ 9 ໄດ້ນິຍາມເຖິງວິທີການກຳນົດມູນຄ່າແຈ້ງພາສີ ຂອງສິນຄ້ານຳເຂົ້າ ພາຍໃຕ້ບົດແນະນຳລັດຖະມົນຕີ. ວິທີການກຳນົດມູນຄ່າແຈ້ງພາສີ ໄດ້ຈັດລຽງໄວ້ຕາມລຳດັບຂອງການນຳໃຊ້. ວິທີທີ 1

ຂອງການກຳນົດມູນຄ່າແຈ້ງພາສີນັ້ນ ໄດ້ກຳນົດໄວ້ໃນມາດຕາ 4 ແລະ ສິນຄ້ານຳເຂົ້າຈະໄດ້ ຮັບການກຳນົດ ມູນຄ່າແຈ້ງພາສີ ຕາມຂໍ້ກຳນົດຂອງມາດຕານີ້ ເມື່ອມີເງື່ອນໄຂຄົບຖ້ວນຕາມຂໍ້ກຳນົດຂອງມາດຕາດັ່ງກ່າວ.

2.1.2. ໃນກໍລະນີທີ່ມູນຄ່າແຈ້ງພາສີບໍ່ສາມາດກຳນົດໄດ້ພາຍໃຕ້ຂໍ້ກຳນົດຂອງມາດຕາ 4, ໃຫ້ໃຊ້ມາດຕາທີ່ ຖັດກັນຕາມລຳດັບ ຈົນເຖິງມາດຕາທີ່ມູນຄ່າແຈ້ງພາສີສາມາດກຳນົດຂຶ້ນໄດ້. ເວັ້ນເສຍແຕ່ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 3, ເມື່ອມູນຄ່າແຈ້ງພາສີບໍ່ສາມາດກຳນົດໄດ້ຕາມຂໍ້ກຳນົດຂອງມາດຕານັ້ນໆ ຈຶ່ງສາມາດນຳເອົາຂໍ້ ກຳນົດຂອງມາດຕາຖັດໄປ ມານຳໃຊ້ໃນການກຳນົດມູນຄ່າແຈ້ງພາສີ.

ນອກຈາກນີ້, ໃນກໍລະນີທີ່ມູນຄ່າແຈ້ງພາສີບໍ່ສາມາດກຳນົດໄດ້ຕາມມາດຕາ 4, ຕາມປົກກະຕິ ຕ້ອງ ໄດ້ດຳເນີນຂັ້ນຕອນຂອງການປຶກສາຫາລື ລະຫ່ວ່າງ ລັດຖະການພາສີ ແລະ ຜູ້ນຳເຂົ້າສິນຄ້າ ບົນພື້ນຖານ ຂອງມູນຄ່າແຈ້ງພາສີ ທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຫຼື 6. ຕົວຢ່າງ: ຜູ້ນຳເຂົ້າສິນຄ້າ ມີຂໍ້ມູນກ່ຽວກັບ ມູນຄ່າແຈ້ງພາສີ ສຳລັບການນຳເຂົ້າສິນຄ້າທີ່ຄືກັນ ຫຼື ສິນຄ້າທີ່ຄ້າຍຄືກັນ ຊຶ່ງບໍ່ສາມາດຈັດຫາມາໄດ້ທັນທີ ໂດຍລັດ ຖະການພາສີທີ່ດ່ານນຳເຂົ້າ. ໃນທາງກົງກັນຂ້າມ, ລັດຖະການພາສີ ອາດມີຂໍ້ມູນກ່ຽວກັບ ມູນຄ່າແຈ້ງພາສີ ການນຳເຂົ້າຂອງສິນຄ້າທີ່ຄືກັນ ຫຼື ຄ້າຍຄືກັນ ຊຶ່ງບໍ່ສາມາດຈັດຫາມາໄດ້ທັນທີໂດຍຜູ້ນຳເຂົ້າ. ຂະບວນການປຶກ ສາຫາລື ລະຫ່ວ່າງ 2 ຝ່າຍ ຈະຊ່ວຍໃຫ້ມີການແລກປ່ຽນຂໍ້ມູນ ເພື່ອກຳນົດພື້ນຖານການ ຄິດໄລ່ມູນຄ່າແຈ້ຈພາ ສີຢ່າງເໝາະສົມ, ແຕ່ການແລກປ່ຽນຂໍ້ມູນ ຕ້ອງໄດ້ຢູ່ພາຍໃຕ້ເງື່ອນໄຂການຮັກສາ ຄວາມລັບທາງດ້ານການຄ້າ.

2.1.3. ຖ້າຜູ້ນຳເຂົ້າບໍ່ຂໍໃຫ້ນຳໃຊ້ສະຫຼັບກັນລະຫວ່າງມາດຕາ 7 ແລະ ມາດຕາ 8, ກໍ່ໃຫ້ນຳໃຊ້ວິທີ ຕາມ ລຳດັບປົກກະຕິ. ຖ້າຜູ້ນຳເຂົ້າຂໍໃຫ້ນຳໃຊ້ສະຫຼັບກັນ ລະຫວ່າງມາດຕາທີ່ກ່າວມາໃນວັກນີ້, ແຕ່ຫຼັງຈາກນັ້ນ ພິສູດໄດ້ວ່າບໍ່ສາມາດ ກຳນົດມູນຄ່າແຈ້ງພາສີ ພາຍໃຕ້ມາດຕາ 8, ໃຫ້ກຳນົດມູນຄ່າແຈ້ງພາສີ ພາຍໃຕ້ມາດຕາ 7 ຖ້າກຳນົດໄດ້.

2.1.4. ເມື່ອມູນຄ່າແຈ້ງເສຍພາສີບໍ່ສາມາດ ກຳນົດໄດ້ຕາມ ມາດຕາ 4 ຫາ ມາດຕາ 8, ໃຫ້ກຳນົດ ຕາມ ມາດຕາ 9.

2.1.5. ເຈົ້າໜ້າທີ່ພາສີ ເປັນຜູ້ດຳເນີນການກຳນົດມູນຄ່າແຈ້ງພາສີ ຕາມລຳດັບ.

2.2. ການນຳໃຊ້ຫຼັກການບັນຊີທີ່ຍອມຮັບກັນທົ່ວໄປ:

2.2.1. "ຫຼັກການບັນຊີທີ່ຍອມຮັບກັນທົ່ວໄປ" ໝາຍເຖິງຄວາມເຫັນສອດຄ່ອງກັນທີ່ຖືກຮັບຮູ້ແລ້ວ ຫຼື ທີ່ມີການ ສະໜັບສະໜູນຈາກ ອົງການທີ່ມີສິດອຳນາດກ່ຽວຂ້ອງ ຂອງລັດ ໃນຊ່ວງເວລາໜຶ່ງຊຶ່ງຊັບພະຍາກອນທາງດ້ານ ເສດຖະກິດ ແລະ ຂໍ້ຜູກມັດອັນໃດຄວນໄດ້ຮັບການບັນທຶກໄວ້ໃນຖານະເປັນຊັບສິນ ແລະ ໜີ້ສິນ, ການປ່ຽນ ແປງອັນໃດຂອງຊັບສິນ ແລະ ໜີ້ສິນ ຄວນໄດ້ຮັບການບັນທຶກໄວ້, ຊັບສິນ ແລະ ໜີ້ສິນ ແລະ ການປ່ຽນແປງ ຂອງຊັບສິນ ແລະ ໜີ້ສິນນັ້ນຄວນຈະປະເມີນຢ່າງໃດ, ຂໍ້ມູນຫຍັງ ແດ່ທີ່ຄວນເປີດເຜີຍ ແລະ ຄວນເປີດເຜີຍຂໍ້ ມູນເຫຼົ່ານັ້ນຄືແນວໃດ ແລະ ບົດລາຍງານການເງິນໃດແດ່ທີ່ຄວນເຮັດຂຶ້ນ. ມາດຕະຖານຕ່າງໆ ເຫຼົ່ານີ້ເປັນພຽງ ບົດແນະນຳລວມ ທີ່ມີຜົນບັງຄັບທົ່ວໄປເຊັ່ນດຽວກັນກັບວິທີການປະຕິບັດ ແລະ ລຳດັບຂັ້ນຕອນຕ່າງໆ ຢ່າງລະ ອຽດ.

2 | ບົດແນະນຳຂອງຫ້ອໜ້າກົມພາສີວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

2.2.2. ຕາມຈຸດປະສົງຂອງບົດແນະນຳລັດຖະມົນຕີ, ລັດຖະການພາສີ ຕ້ອງນຳໃຊ້ຂໍ້ມູນທີ່ໄດ້ກະກຽມ ໂດຍວິທີການທີ່ສອດຄ່ອງກັບຫຼັກການບັນຊີທີ່ຍອມຮັບກັນທົ່ວໄປໃນປະເທດ ຢ່າງເໝາະສົມ ສຳລັບມາດຕາທີ່ກ່ຽວຂ້ອງ, ຕົວຢ່າງເຊັ່ນ: ການກຳນົດກຳໄລຕາມປົກກະຕິ ແລະ ຄ່າໃຊ້ຈ່າຍທົ່ວໄປພາຍໃຕ້ຂໍ້ກຳນົດຂອງມາດຕາ 7 ຄວນດຳເນີນໄປໂດຍນຳໃຊ້ຂໍ້ມູນ ທີ່ໄດ້ກະກຽມມີໄວ້ນັ້ນ ໂດຍວິທີການທີ່ສອດຄ່ອງກັບຫຼັກການບັນຊີທີ່ຍອມຮັບກັນທົ່ວໄປ ໃນປະເທດນຳເຂົ້າສິນຄ້ານັ້ນ. ໃນທາງກົງກັນຂ້າມ ການກຳນົດກຳໄລຕາມປົກກະຕິ ແລະ ຄ່າໃຊ້ຈ່າຍທົ່ວໄປພາຍໃຕ້ຂໍ້ກຳນົດຂອງມາດຕາ 8 ຄວນດຳເນີນໄປໂດຍນຳໃຊ້ຂໍ້ມູນທີ່ໄດ້ກະກຽມມາແລ້ວ ໂດຍວິທີການທີ່ສອດຄ່ອງກັບຫຼັກການບັນຊີທີ່ຍອມຮັບກັນທົ່ວໄປຂອງປະເທດຜະລິດ. ອີກຕົວຢ່າງໜຶ່ງ, ການກຳນົດອົງປະກອບຕາມທີ່ໄດ້ກຳນົດໄວ້ໃນ ວັກທີ 1.2 (ii) ຂອງມາດຕາ 10 ທີ່ໄດ້ເຮັດຂຶ້ນໃນ ສປປ ລາວ ຄວນດຳເນີນການໂດຍນຳໃຊ້ຂໍ້ມູນທີ່ສອດຄ່ອງກັບຫຼັກການບັນຊີທີ່ຍອມຮັບກັນທົ່ວໄປ ຂອງ ສປປ ລາວ.

3. ຄຳອະທິບາຍສຳລັບມາດຕາ 2

"ບຸກຄົນ" ແມ່ນລວມເຖິງນິຕິບຸກຄົນເມື່ອເຫັນວ່າເໝາະສົມ.

ບຸກຄົນໜຶ່ງຈະຖືວ່າຄວບຄຸມອີກບຸກຄົນໜຶ່ງເມື່ອບຸກຄົນໜຶ່ງມີຄວາມສາມາດທາງດ້ານກົດໝາຍ ຫຼື ທາງພາກປະຕິບັດ ຢັບຢັ້ງ ຫຼື ຊີ້ນຳ ບຸກຄົນທີສອງນັ້ນໄດ້.

4. ຄຳອະທິບາຍສຳລັບມາດຕາ 4

ລາຄາທີ່ໄດ້ຊຳລະຕົວຈິງ ຫຼື ທີ່ຈະຊຳລະ

1. ລາຄາທີ່ໄດ້ຊຳລະຕົວຈິງ ຫຼື ລາຄາທີ່ຈະຊຳລະ ແມ່ນການຊຳລະລາຄາທັງໝົດ ທີ່ໄດ້ຈ່າຍໄປແລ້ວ ຫຼື ທີ່ຈະຕ້ອງໄດ້ຈ່າຍໂດຍຜູ້ຊື້ໃຫ້ຜູ້ຂາຍ ຫຼື ເພື່ອຜົນປະໂຫຍດຂອງຜູ້ຂາຍ ສຳລັບສິນຄ້າທີ່ນຳເຂົ້າ. ການຊຳລະລາຄານີ້ ບໍ່ມີຄວາມຈຳເປັນຕ້ອງຢູ່ໃນຮູບຂອງການໂອນເງິນໃຫ້ກັນເທົ່ານັ້ນ. ການຊຳລະລາຄາອາດຈະດຳເນີນໄປໂດຍວິທີ ໃຫ້ທະນາຄານອອກໜັງສືສິນເຊື່ອ ຫຼື ໂດຍວິທີການທີ່ສາມາດເຈລະຈາໄດ້. ການຊຳລະລາຄາອາດຈະດຳເນີນໄປໂດຍທາງກົງ ຫຼື ທາງອ້ອມ. ຕົວຢ່າງ: ການຈ່າຍກັນໂດຍທາງອ້ອມ ໄດ້ແກ່ການຕົກລົງຊຳລະໜີ້ຂອງຜູ້ຂາຍໂດຍຜູ້ຊື້ ບໍ່ວ່າຈະເປັນການຊຳລະໜີ້ທັງໝົດ ຫຼື ບາງສ່ວນກໍ່ຕາມ.

ລາຄາທີ່ໄດ້ຊຳລະຕົວຈິງ ຫຼື ລາຄາທີ່ຈະຊຳລະ ລວມເອົາການຊຳລະທັງໝົດ ທີ່ໄດ້ຈ່າຍໄປແລ້ວ ຫຼື ທີ່ຈະຕ້ອງໄດ້ຈ່າຍ ເປັນເງື່ອນໄຂການຂາຍຂອງສິນຄ້ານຳເຂົ້າ ໂດຍຜູ້ຊື້ ໃຫ້ແກ່ຜູ້ຂາຍ ຫຼື ໂດຍຜູ້ຂາຍ ໃຫ້ແກ່ບຸກຄົນທີ່ສາມ ເພື່ອປະຕິບັດພັນທະດັ່ງກ່າວ.

2. ການດຳເນີນການໃດໆ ໂດຍຜູ້ຊື້ ແລະ ດ້ວຍຄວາມຮັບຜິດຊອບຂອງຜູ້ຊື້ເອງ, ນອກຈາການດຳເນີນການທີ່ມີການດັດປັບຕາມທີ່ລະບຸໄວ້ໃນ ມາດຕາ 10, ຈະບໍ່ຖືວ່າເປັນການຊຳລະແບບທາງອ້ອມໃຫ້ແກ່ຜູ້ຂາຍ ເຖິງແມ່ນວ່າມັນເປັນການຊຳລະເພື່ອຜົນປະໂຫຍດຂອງຜູ້ຂາຍກໍ່ຕາມ. ດັ່ງນັ້ນ, ຄ່າໃຊ້ຈ່າຍຂອງການດຳເນີນການດັ່ງກ່າວ ຕ້ອງບໍ່ບວກເຂົ້າໃນລາຄາທີ່ໄດ້ຊຳລະຕົວຈິງ ຫຼື ລາຄາທີ່ຈະຊຳລະໃນການກຳນົດມູນຄ່າແຈ້ງພາສີ.

3. ມູນຄ່າແຈ້ງພາສີຈະບໍ່ລວມເອົາຄ່າໃຊ້ຈ່າຍ ຫຼື ຕົ້ນທຶນດັ່ງຕໍ່ໄປນີ້, ຖ້າຄ່າໃຊ້ຈ່າຍ ຫຼື ຕົ້ນທຶນເຫຼົ່ານັ້ນ ແຍກອອກຈາກລາຄາ ທີ່ໄດ້ຊຳລະຕົວຈິງ ຫຼື ທີ່ຈະຊຳລະສຳລັບສິນຄ້ານຳເຂົ້ານັ້ນ:

(1) ຄ່າໃຊ້ຈ່າຍໃນການກໍ່ສ້າງ, ການຕິດຕັ້ງ, ການປະກອບ, ການບຳລຸງຮັກສາ ຫຼື ການຊ່ວຍເຫຼືອດ້ານເຕັກນິກ ຊຶ່ງເກີດຂຶ້ນຫຼັງຈາການນຳເຂົ້າ ຂອງສິນຄ້ານຳເຂົ້າ ເຊັ່ນ: ໂຮງງານອຸດສະຫະກຳ, ເຄື່ອງຈັກ ຫຼື ເຄື່ອງມື;

(2) ຄ່າຂົນສົ່ງຫຼັງການນຳເຂົ້າ;

3 ບົດແນະນຳຂອງຫ້ອງການພາສີວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

(3) ຄ່າພາສີ ແລະພັນທະອື່ນ ຂອງ ສປປ ລາວ.

4. ລາຄາທີ່ໄດ້ຊຳລະຕົວຈິງ ຫຼື ລາຄາທີ່ຈະຊຳລະ ໝາຍເຖິງລາຄາຂອງສິນຄ້ານຳເຂົ້າ. ດ້ວຍເຫດນັ້ນ ເງິນປັນຜົນ ຫຼື ລາຍຈ່າຍອື່ນໆ ຈາກຜູ້ຊື້ໃຫ້ແກ່ຜູ້ຂາຍ ທີ່ບໍ່ກ່ຽວຂ້ອງກັບສິນຄ້ານຳເຂົ້າ ຈະບໍ່ຖືວ່າເປັນສ່ວນໜຶ່ງຂອງມູນຄ່າແຈ້ງພາສີ.

ວັກ1.1.iii

ໃນບັນດາຂໍ້ຈຳກັດ ທີ່ບໍ່ເຮັດໃຫ້ລາຄາທີ່ໄດ້ຊຳລະຕົວຈິງ ຫຼື ລາຄາທີ່ຈະຊຳລະ ຮັບບໍ່ໄດ້ນັ້ນ ໄດ້ແກ່ຂໍ້ຈຳກັດ ທີ່ບໍ່ມີຜົນກະທົບຫຼາຍຕໍ່ລາຄາຂອງສິນຄ້າ. ຕົວຢ່າງຂອງຂໍ້ຈຳກັດດັ່ງກ່າວໄດ້ແກ່ : ກໍລະນີທີ່ຜູ້ຂາຍ ຕັ້ງຂໍ້ກຳນົດຕໍ່ຜູ້ຊື້ພາກທະນະວ່າ ຫ້າມຂາຍພາກທະນະ ຫຼື ນຳເອົາພາກທະນະອອກວາງສະແດງ ກ່ອນວັນທີ່ກຳນົດເອົາໄວ້ ຊຶ່ງເປັນວັນທີເລີ່ມຕົ້ນຂອງພາກທະນະລຸ້ນປີນັ້ນ.

ວັກ1.2

1. ຫາກການຂາຍ ຫຼື ລາຄາຂາຍຂຶ້ນຢູ່ກັບເງື່ອນໄຂ ຫຼື ການພິຈາລະນາໃດໜຶ່ງ ທີ່ເຮັດໃຫ້ບໍ່ສາມາດກຳນົດມູນຄ່າແຈ້ງພາສີ ຂອງສິນຄ້າທີ່ກຳລັງປະເມີນມູນຄ່າຢູ່ນັ້ນໄດ້, ມູນຄ່າຊື້-ຂາຍນັ້ນກໍ່ຈະຮັບເອົາບໍ່ໄດ້ ສຳລັບຈຸດປະສົງທາງພາສີ. ຕົວຢ່າງເຊັ່ນ:

(ກ) ຜູ້ຂາຍຕັ້ງລາຄາ ສຳລັບສິນຄ້ານຳເຂົ້າ ໂດຍມີເງື່ອນໄຂວ່າ ຜູ້ຊື້ຈະຕ້ອງຊື້ສິນຄ້າຢ່າງອື່ນ ຕາມຈຳນວນທີ່ໄດ້ລະບຸໄວ້ດ້ວຍ.

(ຂ) ລາຄາຂອງສິນຄ້ານຳເຂົ້າຂຶ້ນຢູ່ກັບລາຄາດຽວ ຫຼື ຫຼາຍລາຄາ ຊຶ່ງຜູ້ຊື້ສິນຄ້ານຳເຂົ້ານັ້ນຂາຍສິນຄ້າຢ່າງ ອື່ນ ໃຫ້ກັບຜູ້ຂາຍສິນຄ້ານຳເຂົ້ານັ້ນ.

(ຄ) ລາຄາທີ່ຕັ້ງຂຶ້ນບົນພື້ນຖານຂອງການຊຳລະລາຄາ ທີ່ບໍ່ກ່ຽວຂ້ອງກັບສິນຄ້ານຳເຂົ້າ, ເຊັ່ນ: ໃນກໍລະນີ ທີ່ສິນຄ້ານຳເຂົ້າເປັນສິນຄ້າເຄື່ອງສຳເລັດຮູບ ຊຶ່ງຜູ້ຂາຍໄດ້ຕອບສະໜອງໃຫ້ນັ້ນ ບົນເງື່ອນໄຂທີ່ວ່າ ຜູ້ຂາຍຈະຕ້ອງໄດ້ຮັບຄືນສິນຄ້າສຳເລັດຮູບຕາມຈຳນວນທີ່ກຳນົດໄວ້ນັ້ນ.

2. ເຖິງຢ່າງໃດກໍ່ຕາມ ເງື່ອນໄຂ ຫຼື ການພິຈາລະນາ ກ່ຽວກັບການຜະລິດ ຫຼື ການຕະຫຼາດຂອງສິນຄ້ານຳເຂົ້າ ຈະບໍ່ແມ່ນມູນຄ່າຊື້-ຂາຍສິນຄ້ານຳເຂົ້າ. ຕົວຢ່າງ: ຜູ້ຊື້ສະໜອງໃຫ້ຜູ້ຂາຍກ່ຽວກັບວຽກວິສະວະກຳ ແລະ ແບບການຜະລິດ ເຊິ່ງສ້າງຂຶ້ນຢູ່ປະເທດນຳເຂົ້າສິນຄ້າ ຈະບໍ່ແມ່ນລາຄາຊື້-ຂາຍສິນຄ້ານຳເຂົ້າຕາມມາດຕາ 4, ຖ້າວ່າຜູ້ຊື້ດຳເນີນການດ້ວຍທຶນຂອງຜູ້ຊື້ເອງ ຫຼື ດ້ວຍການຕົກລົງກັບຜູ້ຂາຍ ກ່ຽວກັບການເຄື່ອນໄຫວຕ່າງໆທີ່ກ່ຽວຂ້ອງກັບການຕະຫຼາດຂອງສິນຄ້ານຳເຂົ້າ, ລາຍຈ່າຍຂອງການເຄື່ອນໄຫວດັ່ງກ່າວນີ້ ບໍ່ແມ່ນສ່ວນໜຶ່ງຂອງມູນຄ່າແຈ້ງພາສີ ແລະ ການເຄື່ອນໄຫວນັ້ນ ກໍ່ບໍ່ແມ່ນມູນຄ່າຊື້-ຂາຍສິນຄ້ານຳເຂົ້າ.

ວັກ2.

1. ເນື້ອໃນວັກ 2.1 ແລະ 2.2 ຂອງມາດຕາ 4 ໄດ້ກຳນົດວິທີການທີ່ແຕກຕ່າງກັນໃນການວາງຫຼັກການຮັບເອົາມູນຄ່າຊື້ຂາຍສິນຄ້ານຳເຂົ້າ.

2. ເນື້ອໃນວັກ 2.1 ກຳນົດໄວ້ວ່າໃນກໍລະນີທີ່ຜູ້ຊື້ ແລະ ຜູ້ຂາຍມີຄວາມກ່ຽວຂ້ອງກັນ, ຈະຕ້ອງກວດກາເງື່ອນໄຂໃນການຂາຍສິນຄ້ານັ້ນ ແລະ ມູນຄ່າຊື້-ຂາຍ ຈະກຳນົດເປັນມູນຄ່າແຈ້ງພາສີໄດ້ ຖ້າຫາກວ່າ

4 ບົດແນະນຳຂອງອົງການພາສີວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

ຄວາມກ່ຽວຂ້ອງນັ້ນບໍ່ມີຜົນກະທົບຕໍ່ລາຄາ. ແຕ່ທັງນີ້ກໍ່ບໍ່ໄດ້ໝາຍຄວາມວ່າຈະຕ້ອງມີການກວດກາ ໃນທຸກໆກໍລະນີທີ່ຜູ້ຊື້ ແລະ ຜູ້ຂາຍມີຄວາມກ່ຽວຂ້ອງກັນ. ການກວດກາເຊັ່ນນີ້ ຈະຕ້ອງດຳເນີນໃນກໍລະນີ ທີ່ມີຂໍ້ສົງໃສ ກ່ຽວກັບການຮັບເອົາມູນຄ່າຊື້-ຂາຍ. ໃນກໍລະນີທີ່ລັດຖະການພາສີບໍ່ມີຂໍ້ສົງໃສໃດໆ ກ່ຽວກັບການຮັບເອົາມູນຄ່າ ຊື້-ຂາຍ, ລັດຖະການພາສີ ຈະຮັບເອົາລາຄາໂດຍບໍ່ຕ້ອງຮຽກຮ້ອງຂໍ້ມູນຈາກຜູ້ນຳເຂົ້າເພີ່ມເຕີມອີກ. ຕົວຢ່າງ: ລັດຖະການພາສີອາດຈະເຄີຍກວດກາຄວາມກ່ຽວຂ້ອງນັ້ນມາກ່ອນແລ້ວ ຫຼື ລັດຖະການພາສີອາດຈະມີຂໍ້ມູນທີ່ ລະອຽດຢູ່ແລ້ວກ່ຽວກັບຜູ້ຊື້ ແລະ ຜູ້ຂາຍ ແລະ ອາດຈະພໍໃຈຈາກການກວດກາ ຫຼື ຈາກຂໍ້ມູນເຫຼົ່ານັ້ນແລ້ວວ່າ ຄວາມກ່ຽວຂ້ອງກັນນັ້ນບໍ່ມີຜົນກະທົບຕໍ່ລາຄາ.

3. ໃນກໍລະນີ ທີ່ລັດຖະການພາສີ ບໍ່ສາມາດຮັບເອົາມູນຄ່າຊື້-ຂາຍໄດ້ ໂດຍບໍ່ມີການສອບຖາມເພີ່ມເຕີມແລ້ວ, ລັດຖະການພາສີ ຄວນໃຫ້ໂອກາດຜູ້ນຳເຂົ້າ ໃນການຊອກຫາຂໍ້ມູນທີ່ລະອຽດເທົ່າທີ່ຈຳເປັນເພີ່ມເຕີມ ເພື່ອໃຫ້ ລັດຖະການພາສີສາມາດກວດກາຄືນການຂາຍນັ້ນໄດ້. ໃນກໍລະນີນີ້, ລັດຖະການພາສີຄວນກະກຽມໃນການກວດ ກາແງ່ມຸມຕ່າງໆ ທີ່ກ່ຽວຂ້ອງກັບການຊື້-ຂາຍ ລວມເຖິງວິທີການທີ່ຜູ້ຊື້ ແລະ ຜູ້ຂາຍ ກໍ່ຕັ້ງຄວາມກ່ຽວຂ້ອງທາງ ການຄ້າຂອງທັງສອງຝ່າຍຂຶ້ນມາ ແລະ ວິທີການທີ່ໄດ້ມາຊຶ່ງລາຄາທີ່ເປັນບັນຫານັ້ນ ທັງນີ້ເພື່ອກຳນົດວ່າຄວາມ ກ່ຽວຂ້ອງກັນດັ່ງກ່າວ ມີຜົນກະທົບຕໍ່ລາຄາ ຫຼືບໍ່. ໃນກໍລະນີ ທີ່ສາມາດສະແດງໃຫ້ເຫັນໄດ້ວ່າ ຜູ້ຊື້ ແລະ ຜູ້ ຂາຍ ຊຶ່ງເຖິງວ່າຈະມີຄວາມກ່ຽວຂ້ອງກັນພາຍໃຕ້ຂໍ້ກຳນົດຂອງມາດຕາ 2 ກໍ່ຕາມ ມີການຊື້ມາ ແລະ ຂາຍໄປ ລະຫວ່າງກັນ ໂດຍທີ່ວ່າທັງສອງຝ່າຍບໍ່ມີຄວາມກ່ຽວຂ້ອງກັນເລີຍ ເຊັ່ນນີ້ຍ່ອມສະແດງໃຫ້ເຫັນໄດ້ວ່າ ລາຄານັ້ນ ບໍ່ໄດ້ຮັບຜົນກະທົບຈາກຄວາມກ່ຽວຂ້ອງກັນ. ຕົວຢ່າງ: ຫາກລາຄານັ້ນໄດ້ຕົກລົງກັນໃນລັກສະນະທີ່ສອດຄ່ອງ ກັບການປະຕິບັດຕາມປົກກະຕິໃນການກຳນົດລາຄາຂອງອຸດສາຫະກຳປະເພດນັ້ນ ຫຼື ໂດຍວິທີການທີ່ຜູ້ຂາຍຕົກ ລົງລາຄາເພື່ອຂາຍໃຫ້ກັບຜູ້ຊື້ຫຼາຍໆຄົນ ຊຶ່ງບໍ່ມີຄວາມກ່ຽວຂ້ອງກັບຜູ້ຂາຍ ເມື່ອເປັນເຊັ່ນນີ້ ຍ່ອມສະແດງໃຫ້ ເຫັນໄດ້ວ່າ ລາຄາບໍ່ໄດ້ຮັບຜົນກະທົບຈາກຄວາມກ່ຽວຂ້ອງກັນ. ຕົວຢ່າງ: ໃນກໍລະນີທີ່ສາມາດສະແດງໃຫ້ເຫັນ ໄດ້ວ່າລາຄານັ້ນເທົ່າກັບມູນຄ່າຕ່າງໆທັງໝົດບວກກັບກຳໄລ ຊຶ່ງເປັນຕົວແທນຂອງກຳໄລທັງໝົດຂອງກິດຈະ ການນັ້ນ ໃນຊ່ວງໄລຍະເວລາໃດໜຶ່ງ (ຕົວຢ່າງ: ເປັນປະຈຳປີ) ໃນການຂາຍສິນຄ້າປະເພດ ຫຼື ຊະນິດດຽວກັນ ນັ້ນ, ເຊັ່ນນີ້ຍ່ອມສະແດງໃຫ້ເຫັນວ່າ ລາຄານັ້ນບໍ່ໄດ້ຮັບຜົນກະທົບຈາກຄວາມກ່ຽວຂ້ອງກັນ.

4. ເນື້ອໃນ ອັກ 2.2 ໃຫ້ໂອກາດແກ່ຜູ້ນຳເຂົ້າ ໄດ້ຊີ້ແຈງໃຫ້ເຫັນວ່າ ລາຄາຕົກລົງຊື້ຂາຍນັ້ນມີຄວາມໃກ້ຄຽງ ກັນຫຼາຍກັບ "ມູນຄ່າກວດສອບ" ຊຶ່ງລັດຖະການພາສີໄດ້ເຄີຍຮັບຮອງມາກ່ອນແລ້ວ ແລະ ການຮັບຮອງດັ່ງ ກ່າວ ແມ່ນພາຍໃຕ້ຂໍ້ກຳນົດຂອງມາດຕາ 4. ໃນກໍລະນີລາຄາຊື້ຂາຍນັ້ນ ໃກ້ຄຽງກັບລາຄາກວດສອບ ຕາມອັກ 2.1 , ບໍ່ມີຄວາມຈຳເປັນ ຕ້ອງກວດສອບຄວາມສຳພັນ ຕາມເນື້ອໃນ ອັກ 2.1. ຖ້າວ່າລັດຖະການພາສີ ຫາກມີຂໍ້ ມູນພຽງພໍແລ້ວ, ການບໍ່ຮຽກຮ້ອງເອົາຂໍ້ມູນເພີ່ມຕື່ມອີກ ຊຶ່ງບັນຫາໜຶ່ງ ແມ່ນຍ້ອນມີລາຄາກວດສອບ ຕາມທີ່ລະບຸ ໄວ້ໃນ ອັກ 2.2 ກໍບໍ່ມີເຫດຜົນຫຍັງ ທີ່ຈະຮຽກຮ້ອງໃຫ້ຜູ້ນຳເຂົ້າ ຊີ້ແຈງກ່ຽວກັບການກວດສອບນັ້ນອີກ. ໃນອັກ 2.2 ຄຳວ່າ "ຜູ້ຊື້ທີ່ບໍ່ກ່ຽວຂ້ອງກັນ" ໝາຍເຖິງ ຜູ້ຊື້ ຊຶ່ງບໍ່ມີຄວາມກ່ຽວຂ້ອງກັບຜູ້ຂາຍ ບໍ່ວ່າໃນກໍລະນີໃດກໍຕາມ.

ອັກ2.2.

ມີປັດໃຈຫຼາຍຢ່າງ ທີ່ຈະຕ້ອງນຳມາພິຈາລະນາໃນການກຳນົດວ່າ ລາຄາໃດໜຶ່ງຈະ "ໃກ້ຄຽງທີ່ສຸດ" ກັບອີກມູນຄ່າໜຶ່ງ ຫຼື ບໍ່. ປັດໃຈເຫຼົ່ານັ້ນລວມເຖິງປະເພດຂອງສິນຄ້ານຳເຂົ້າ, ປະເພດຂອງອຸດສາຫະກຳນັ້ນ ເອງ, ລະດູການທີ່ສິນຄ້ານັ້ນນຳເຂົ້າມາ ແລະ ໃນການກຳນົດວ່າມູນຄ່າມີຄວາມແຕກຕ່າງກັນທາງການຄ້າ ຫຼາຍ ຫຼືບໍ່. ເນື່ອງຈາກວ່າປັດໃຈເຫຼົ່ານີ້ ອາດແຕກຕ່າງກັນໄດ້ເປັນແຕ່ລະກໍລະນີ, ຈຶ່ງເປັນໄປບໍ່ໄດ້ທີ່ຈະໃຊ້ມາດ

ຕະຖານ ດຽວກັນເຊັ່ນ: ອັດຕາສ່ວນຮ້ອຍຢ່າງຕາຍຕົວ ໃນແຕ່ລະກໍລະນີ. ຕົວຢ່າງ: ມູນຄ່າທີ່ມີຄວາມແຕກຕ່າງກັນເລັກນ້ອຍ ໃນກໍລະນີທີ່ກ່ຽວຂ້ອງກັບສິນຄ້າປະເພດໜຶ່ງອາດຈະຮັບເອົາບໍ່ໄດ້ ໃນຂະນະທີ່ມູນຄ່າ ທີ່ມີຄວາມແຕກຕ່າງກັນຫຼາຍ ໃນກໍລະນີທີ່ກ່ຽວຂ້ອງກັບສິນຄ້າອີກປະເພດໜຶ່ງ ອາດຈະຮັບເອົາໄດ້ ໃນການກຳນົດ ວ່າ ມູນຄ່າຊື້ຂາຍນັ້ນໃກ້ຄຽງທີ່ສຸດກັບລາຄາທີ່ໃຊ້ໃນ " ມູນຄ່າກວດສອບ " ຕາມທີ່ໄດ້ກຳນົດໄວ້ໃນ ວັກ 2.2 ຂອງມາດຕາ 4.

5. ຄຳອະທິບາຍສຳລັບມາດຕາ 5

1.ໃນການນຳໃຊ້ມາດຕາ 5, ຖ້າຫາກເປັນໄປໄດ້ລັດຖະການພາສີ ຈະຕ້ອງໃຊ້ການຂາຍຂອງສິນຄ້າ ທີ່ຄືກັນໃນ ລະດັບການຄ້າດຽວກັນ ແລະໃນປະລິມານໃກ້ຄຽງ ກັບສິນຄ້າທີ່ກຳລັງກຳນົດມູນຄ່າແຈ້ງພາສີ. ໃນກໍລະນີທີ່ບໍ່ມີ ການຂາຍສິນຄ້າດັ່ງກ່າວ, ສາມາດໃຊ້ການຂາຍສິນຄ້າທີ່ຄືກັນ ຊຶ່ງເກີດຂຶ້ນພາຍໃຕ້ເງື່ອນໄຂຂໍ້ໃດຂໍ້ໜຶ່ງ ໃນສາມ ຂໍ້ ດັ່ງຕໍ່ໄປນີ້:

(ກ) ການຂາຍໃນລະດັບການຄ້າດຽວກັນ ແຕ່ໃນປະລິມານຕ່າງກັນ;

(ຂ) ການຂາຍໃນລະດັບການຄ້າຕ່າງກັນ ແຕ່ໃນປະລິມານໃກ້ຄຽງກັນ; ຫຼື

(ຄ) ການຂາຍໃນລະດັບການຄ້າຕ່າງກັນ ແລະໃນປະລິມານຕ່າງກັນ.

2. ໃນກໍລະນີທີ່ພົບວ່າມີການຂາຍຕາມເງື່ອນໄຂຂໍ້ໃດຂໍ້ໜຶ່ງໃນສາມຂໍ້ນັ້ນ ການດັດປັບ ຈະເຮັດຂຶ້ນຕາມແຕ່ລະກໍລະນີ ສຳລັບ:

(ກ) ປັດໃຈດ້ານປະລິມານເທົ່ານັ້ນ;

(ຂ) ປັດໃຈດ້ານລະດັບການຄ້າເທົ່ານັ້ນ; ຫຼື

(ຄ) ທັງປັດໃຈດ້ານລະດັບການຄ້າ ແລະປະລິມານ.

3. ຄຳວ່າ "ແລະ/ຫຼື" ໃຫ້ຄວາມຍືດຢຸ່ນຢ່າງສົມເຫດສົມຜົນ ໃນການນຳໃຊ້ການຂາຍ ແລະເພື່ອເຮັດການດັດປັບ ທີ່ຈຳເປັນ ໃນເງື່ອນໄຂຂໍ້ໃດຂໍ້ໜຶ່ງໃນສາມຂໍ້ຂ້າງເທິງນັ້ນ.

4. ຕາມຈຸດປະສົງຂອງມາດຕາ 5, ມູນຄ່າຊື້-ຂາຍຂອງສິນຄ້ານຳເຂົ້າທີ່ຄືກັນ ໝາຍເຖິງມູນຄ່າແຈ້ງພາສີທີ່ໄດ້ມີ ການດັດປັບ ຕາມທີ່ໄດ້ກຳນົດໄວ້ໃນ ວັກ 1 ວັກຍ່ອຍ 2 ແລະ ວັກ 2, ຊຶ່ງໄດ້ຮັບເອົາແລ້ວພາຍໃຕ້ມາດຕາ 4.

5. ເງື່ອນໄຂຂອງການດັດປັບ ອັນເນື່ອງມາຈາກລະດັບການຄ້າທີ່ແຕກຕ່າງກັນ ຫຼື ປະລິມານທີ່ແຕກຕ່າງກັນ ແມ່ນເງື່ອນໄຂທີ່ວ່າ ການດັດປັບນັ້ນ ບໍ່ວ່າຈະເຮັດໃຫ້ມູນຄ່າເພີ່ມຂຶ້ນ ຫຼື ຫຼຸດລົງກໍ່ຕາມ, ຕ້ອງເຮັດບົນພື້ນ ຖານຂອງຫຼັກຖານທີ່ສະແດງໃຫ້ເຫັນຢ່າງຈະແຈ້ງ ຄວາມສົມເຫດສົມຜົນ ແລະ ຄວາມຖືກຕ້ອງຂອງການດັດປັບ , ຕົວຢ່າງ: ບັນຊີແຈ້ງລາຄາສິນຄ້າ ທີ່ໃຊ້ໄດ້ ຊຶ່ງປະກອບດ້ວຍລາຄາຕ່າງໆ ທີ່ອ້າງອີງເຖິງລະດັບການຄ້າທີ່ ແຕກຕ່າງກັນ ຫຼື ປະລິມານທີ່ແຕກຕ່າງກັນ. ຕົວຢ່າງໃນເລື່ອງນີ້ ຫາກສິນຄ້ານຳເຂົ້າ ທີ່ກຳລັງກຳນົດມູນຄ່າແຈ້ງ ພາສີ ເປັນເຄື່ອງຂອງຈຳນວນ 10 ໜ່ວຍ ແລະ ສິນຄ້ານຳເຂົ້າທີ່ຄືກັນນັ້ນ ຊຶ່ງມີມູນຄ່າຊື້-ຂາຍກັນຢູ່ແລ້ວ ເປັນ ການຂາຍໃນຈຳນວນ 500 ໜ່ວຍ ແລະ ເປັນທີ່ຮັບຮູ້ວ່າ ຜູ້ຂາຍໃຫ້ສ່ວນຫຼຸດດ້ານປະລິມານ, ການດັດປັບທີ່ຈະ ຕ້ອງປະຕິບັດອາດເຮັດໃຫ້ສຳເລັດໄດ້ ໂດຍອີງໃສ່ບັນຊີແຈ້ງລາຄາສິນຄ້າຂອງຜູ້ຂາຍ ແລະ ໃຊ້ລາຄານັ້ນສຳລັບ ການຂາຍໃນຈຳນວນ 10 ໜ່ວຍ. ແຕ່ທັງນີ້ບໍ່ໄດ້ກຳນົດວ່າ ຈະຕ້ອງເຄີຍມີການຂາຍໃນຈຳນວນ 10 ໜ່ວຍ ຕາບໃດທີ່ບັນຊີແຈ້ງລາຄາສິນຄ້ານັ້ນ ຫາກຖືວ່າສຸດຈະລຶດ ຜ່ານການຂາຍໃນປະລິມານອື່ນໆ. ເຖິງຢ່າງໃດກໍ່

6 ຍົດແນະນຳຂອງອົງການການຄ້າໂລກວ່າດ້ວຍການປະເມີນລາຄາສິນຄ້າເພື່ອຈຸດປະສົງທາງພາສີ ຍົດແນະນຳຂອງຫ້ອງພ້າກົນພາສີວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

ຕາມ, ໃນກໍລະນີ ທີ່ບໍ່ມີມາດຕະການທີ່ຢຶດຖືຂໍ້ມູນຄວາມຈິງເຊັ່ນນີ້ແລ້ວ, ການກຳນົດມູນຄ່າແຈ້ງພາສີ ພາຍໃຕ້ຂໍ້ກຳນົດຂອງມາດຕາ 5 ແມ່ນບໍ່ເໝາະສົມ.

6. ຄຳອະທິບາຍສຳລັບມາດຕາ 6

1. ໃນການນຳໃຊ້ມາດຕາ 6, ຖ້າຫາກເປັນໄປໄດ້ ລັດຖະການພາສີ ຈະຕ້ອງໃຊ້ການຂາຍສິນຄ້າ ທີ່ຄ້າຍຄືກັນ ໃນລະດັບການຄ້າດຽວກັນ ແລະ ໃນປະລິມານໃກ້ຄຽງກັບສິນຄ້າທີ່ກຳລັງກຳນົດມູນຄ່າແຈ້ງພາສີ. ໃນກໍລະນີ ທີ່ບໍ່ມີການຂາຍສິນຄ້າດັ່ງກ່າວ, ສາມາດໃຊ້ການຂາຍສິນຄ້າທີ່ຄ້າຍຄືກັນ ຊຶ່ງເກີດຂຶ້ນພາຍໃຕ້ເງື່ອນໄຂຂໍ້ໃດຂໍ້ໜຶ່ງ ໃນສາມຂໍ້ ດັ່ງຕໍ່ໄປນີ້:

(ກ) ການຂາຍໃນລະດັບການຄ້າດຽວກັນ ແຕ່ໃນປະລິມານຕ່າງກັນ;

(ຂ) ການຂາຍໃນລະດັບການຄ້າຕ່າງກັນ ແຕ່ໃນປະລິມານໃກ້ຄຽງກັນ; ຫລື

(ຄ) ການຂາຍໃນລະດັບການຄ້າຕ່າງກັນ ແລະໃນປະລິມານຕ່າງກັນ.

2. ຖ້າພົບວ່າມີການຂາຍຕາມເງື່ອນໄຂຂໍ້ໃດຂໍ້ໜຶ່ງໃນສາມຂໍ້ນັ້ນ ການດັດປັບຈະຕ້ອງໄດ້ເຮັດຂຶ້ນຕາມແຕ່ລະກໍລະນີ ສຳລັບ:

(ກ) ປັດໃຈດ້ານປະລິມານເທົ່ານັ້ນ;

(ຂ) ປັດໃຈດ້ານລະດັບການຄ້າເທົ່ານັ້ນ; ຫລື

(ຄ) ທັງປັດໃຈດ້ານລະດັບການຄ້າ ແລະປະລິມານ.

3. ຄຳວ່າ "ແລະ/ຫຼື" ໃຫ້ຄວາມຢືດຢຸ່ນຢ່າງສົມເຫດສົມຜົນໃນການນຳໃຊ້ການຂາຍ ແລະ ເພື່ອເຮັດການດັດປັບທີ່ຈຳເປັນໃນເງື່ອນໄຂຂໍ້ໃດຂໍ້ໜຶ່ງໃນສາມຂໍ້ຂ້າງເທິງນັ້ນ.

4. ຕາມຈຸດປະສົງຂອງມາດຕາ 6, ມູນຄ່າຊື້ຂາຍຂອງສິນຄ້ານຳເຂົ້າທີ່ຄ້າຍຄືກັນ ໝາຍເຖິງມູນຄ່າແຈ້ງພາສີທີ່ໄດ້ມີການດັດປັບ ຕາມທີ່ໄດ້ກຳນົດໄວ້ໃນ ວັກ 1 ວັກຍ່ອຍ 2 ແລະ ວັກ 2, ຊຶ່ງໄດ້ຮັບເອົາແລ້ວ ພາຍໃຕ້ມາດຕາ 4.

5. ເງື່ອນໄຂຂອງການດັດປັບ ໃດໜຶ່ງອັນເນື່ອງມາຈາກລະດັບການຄ້າທີ່ແຕກຕ່າງກັນ ຫຼື ປະລິມານ ທີ່ແຕກຕ່າງກັນແມ່ນເງື່ອນໄຂທີ່ວ່າການດັດປັບ ບໍ່ວ່າຈະເຮັດໃຫ້ມູນຄ່າເພີ່ມຂຶ້ນ ຫຼື ຫຼຸດລົງກໍ່ຕາມ, ຕ້ອງເຮັດບົນພື້ນຖານຂອງຫຼັກຖານທີ່ສະແດງໃຫ້ເຫັນຢ່າງຈະແຈ້ງ ຄວາມສົມເຫດສົມຜົນ ແລະ ຄວາມຖືກຕ້ອງຂອງການປັບລາຄາເທົ່ານັ້ນ, ຕົວຢ່າງ: ບັນຊີແຈ້ງລາຄາສິນຄ້າ ທີ່ໃຊ້ໄດ້ ຊຶ່ງປະກອບດ້ວຍລາຄາຕ່າງໆ ທີ່ອ້າງອີງເຖິງລະດັບການຄ້າທີ່ແຕກຕ່າງກັນ ຫຼື ປະລິມານທີ່ແຕກຕ່າງກັນ. ຕົວຢ່າງໃນເລື່ອງນີ້ ຖ້າວ່າສິນຄ້ານຳເຂົ້າ ທີ່ກຳລັງກຳນົດມູນຄ່າແຈ້ງພາສີ ເປັນເຄື່ອງຂອງຈຳນວນ 10 ໜ່ວຍ ແລະສິນຄ້ານຳເຂົ້າທີ່ຄ້າຍຄືກັນນັ້ນ ຊຶ່ງມີມູນຄ່າຊື້-ຂາຍກັນຢູ່ແລ້ວ ເປັນການຂາຍໃນຈຳນວນ 500 ໜ່ວຍ ແລະເປັນທີ່ຮັບຮູ້ວ່າຜູ້ຂາຍໃຫ້ສ່ວນຫຼຸດດ້ານປະລິມານ, ການດັດປັບທີ່ຈະຕ້ອງປະຕິບັດອາດເຮັດໃຫ້ສຳເລັດໄດ້ ໂດຍອີງໃສ່ບັນຊີແຈ້ງລາຄາສິນຄ້າ ຂອງຜູ້ຂາຍ ແລະ ໃຊ້ລາຄານັ້ນສຳລັບການຂາຍໃນຈຳນວນ 10 ໜ່ວຍ. ແຕ່ທັງນີ້ ບໍ່ໄດ້ໝາຍຄວາມວ່າຈະຕ້ອງເຄີຍມີການຂາຍໃນຈຳນວນ 10 ໜ່ວຍ ຕາບໃດທີ່ບັນຊີແຈ້ງລາຄາສິນຄ້າ ຫາກຖືວ່າສຸດຈະລິດ ຜ່ານການຂາຍໃນປະລິມານອື່ນໆ. ເຖິງຢ່າງໃດກໍ່ຕາມ, ໃນກໍລະນີທີ່ບໍ່ມີມາດຕະການທີ່ຢຶດຖືຂໍ້ມູນຄວາມຈິງເຊັ່ນນີ້ແລ້ວ, ການກຳນົດມູນຄ່າແຈ້ງພາສີພາຍໃຕ້ຂໍ້ກຳນົດຂອງມາດຕາ 6 ແມ່ນບໍ່ເໝາະສົມ.

7 | ບົດແນະນຳຂອງອົງການການຄ້າໂລກວ່າດ້ວຍການປະຕິບັດມາດຕາ 7 ຂໍ້ 1 ຂອງສັນຍາວ່າດ້ວຍການປະຕິບັດມາດຕາ VII ຂອງສັນຍາທົ່ວໄປວ່າດ້ວຍພາສີສຸລະກາກອນ ແລະ ການຄ້າ ປີ 1994 ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

7. ຄຳອະທິບາຍສຳລັບມາດຕາ 7

1. ຄຳວ່າ "ລາຄາຫົວໜ່ວຍ ທີ່ສິນຄ້າ ... ຂາຍໃນຈຳນວນຫຼາຍທີ່ສຸດ" ນັ້ນໝາຍເຖິງລາຄາທີ່ປະລິມານຫົວໜ່ວຍຫຼາຍທີ່ສຸດ ໄດ້ຂາຍໄປໃຫ້ກັບບຸກຄົນທີ່ບໍ່ມີຄວາມກ່ຽວຂ້ອງກັນກັບບຸກຄົນ ທີ່ຜູ້ນັ້ນໄດ້ຊື້ສິນຄ້ານັ້ນມາ ໃນລະດັບການຄ້າຄັ້ງທຳອິດ ຫຼັງຈາກການນຳເຂົ້າສິນຄ້າ ຊຶ່ງການຂາຍນັ້ນເກີດຂຶ້ນ.

2. ຕົວຢ່າງຂອງເລື່ອງນີ້ ໄດ້ແກ່ສິນຄ້າ ຊຶ່ງຂາຍຕາມບັນຊີແຈ້ງລາຄາສິນຄ້າ ທີ່ມີລາຄາຕໍ່ຫົວໜ່ວຍທີ່ຫຼຸດໃຫ້ ສຳລັບການຊື້ສິນຄ້າໃນປະລິມານຫຼາຍກ່ວ່າ.

ປະລິມານການຂາຍ	ລາຄາຫົວໜ່ວຍ	ຈຳນວນການຂາຍ	ຈຳນວນທັງໝົດທີ່ຂາຍໃນແຕ່ລະລາຄາ
1-10	100	ການຂາຍ 5 ຫົວໜ່ວຍ 10 ຄັ້ງ ການຂາຍ3 ຫົວໜ່ວຍ 5 ຄັ້ງ	65
11-25	95	ການຂາຍ 11 ຫົວໜ່ວຍ 5 ຄັ້ງ	55
25 ຂຶ້ນໄປ	90	ການຂາຍ 30 ຫົວໜ່ວຍ 1 ຄັ້ງ ການຂາຍ 50 ຫົວໜ່ວຍ 1 ຄັ້ງ	80

ຈຳນວນຫົວໜ່ວຍຂາຍອອກຫຼາຍທີ່ສຸດ ແມ່ນ 80, ສະນັ້ນ ລາຄາຫົວໜ່ວຍຂອງຈຳນວນລວມຫຼາຍສຸດ ແມ່ນ 90.

3. ອີກຕົວຢ່າງໜຶ່ງຂອງບັນຫານີ້ໄດ້ແກ່: ມີການຂາຍເກີດຂຶ້ນ 2 ຄັ້ງ, ການຂາຍຄັ້ງທຳອິດ ເປັນການຂາຍໃນຈຳນວນ 500 ໜ່ວຍໃນລາຄາໜ່ວຍລະ 95 ໜ່ວຍສະກຸນເງິນ, ການຂາຍຄັ້ງທີສອງ ເປັນການຂາຍຈຳນວນ 400 ໜ່ວຍ ໃນລາຄາໜ່ວຍລະ 90 ໜ່ວຍສະກຸນເງິນ. ໃນຕົວຢ່າງນີ້ຈຳນວນຫົວໜ່ວຍທີ່ຫຼາຍທີ່ສຸດ ທີ່ໄດ້ຂາຍໄປໃນລາຄາໜຶ່ງຄື 500. ດັ່ງນັ້ນລາຄ່າຕໍ່ຫົວໜ່ວຍຂອງສິນຄ້າປະລິມານລວມທີ່ຫຼາຍທີ່ສຸດຄື95.

4. ຕົວຢ່າງທີສາມ ແມ່ນການຂາຍໃນຈຳນວນ ແລະ ລາຄາຂາຍແຕກຕ່າງກັນ.

ການຂາຍ	
ປະລິມານການຂາຍ	ລາຄາຫົວໜ່ວຍ
40 ຫົວໜ່ວຍ	100
30 ຫົວໜ່ວຍ	90
15 ຫົວໜ່ວຍ	100
50 ຫົວໜ່ວຍ	95
25 ຫົວໜ່ວຍ	105
35 ຫົວໜ່ວຍ	90
5 ຫົວໜ່ວຍ	100

8 ∣ ບົດແນະນຳຂອງຫົວໜ້າກົມພາສີວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

ລວມທັງໝົດ	
ປະລິມານຂາຍທັງໝົດ	ລາຄາຫົວໜ່ວຍ
65	90
50	95
60	100
25	105

. ໃນຕົວຢ່າງຂ້າງເທິງນີ້, ຈຳນວນຫົວໜ່ວຍຂາຍອອກຫຼາຍທີ່ສຸດແມ່ນ 65, ສະນັ້ນ ລາຄາຫົວໜ່ວຍຂອງ ຈຳນວນຂາຍອອກຫຼາຍສຸດ ແມ່ນລາຄາ 90.

5. ການຂາຍໃດໆ ໃນປະເທດນຳເຂົ້າສິນຄ້າ ຕາມທີ່ໄດ້ອະທິບາຍໃນ ວັກ 1 ຂ້າງເທິງນັ້ນ ທີ່ເປັນການຂາຍ ໃຫ້ກັບບຸກຄົນ ຊຶ່ງເປັນຜູ້ສະໜອງອົງປະກອບໃດໆ ຕາມວັກ 1.2 ຂອງມາດຕາ 10 ບໍ່ວ່າໂດຍທາງກົງ ຫຼື ທາງອ້ອມ ໂດຍບໍ່ໄດ້ຄິດລາຄາ ຫຼື ໃນລາຄາທີ່ຫຼຸດໃຫ້ແລ້ວ ເພື່ອໃຊ້ປະກອບເຂົ້າ ກັບການຜະລິດ ແລະ ການຂາຍເພື່ອສົ່ງອອກ ສຳລັບສິນຄ້ານຳເຂົ້ານັ້ນ ບໍ່ຄວນນຳມາໃຊ້ພິຈາລະນາ ໃນການກຳນົດລາຄາຕໍ່ຫົວໜ່ວຍ ຕາມຈຸດປະສົງຂອງ ມາດຕາ 7.

6. ໃຫ້ເຂົ້າໃຈວ່າ "ກຳໄລ ແລະລາຍຈ່າຍທົ່ວໄປ" ຕາມທີ່ກ່າວໄວ້ໃນ ວັກ1 ຂອງມາດຕາ 7 ຄວນຈະຖືເປັນ ທັງໝົດ. ຕົວເລກທີ່ນຳມາໃຊ້ ເພື່ອການຫັກອອກນີ້ ຄວນພິຈາລະນາບົນພື້ນຖານຂອງຂໍ້ມູນ ທີ່ສະໜອງໃຫ້ໂດຍ ຜູ້ນຳເຂົ້າ ຫຼື ໃນນາມຂອງຜູ້ນຳເຂົ້າ ເວັ້ນເສຍແຕ່ຕົວເລກເຫຼົ່ານັ້ນຂອງຜູ້ນຳເຂົ້າ ບໍ່ສອດຄ່ອງກັບຕົວເລກ ທີ່ໄດ້ ຮັບຈາກການຂາຍໃນປະເທດນຳເຂົ້າຂອງສິນຄ້ານຳເຂົ້າປະເພດ ຫຼື ຊະນິດດຽວກັນ. ໃນກໍລະນີທີ່ຕົວເລກຂອງ ຜູ້ນຳເຂົ້າບໍ່ສອດຄ່ອງກັບຕົວເລກດັ່ງກ່າວ, ຈຳນວນກຳໄລ ແລະລາຍຈ່າຍທົ່ວໄປ ສາມາດອີງຕາມຂໍ້ມູນ ທີ່ກ່ຽວຂ້ອງ ທີ່ນອກເໜືອໄປຈາກຂໍ້ມູນທີ່ສະໜອງໃຫ້ໂດຍຜູ້ນຳເຂົ້າ ຫຼື ໃນນາມຂອງຜູ້ນຳເຂົ້າສິນຄ້າ.

7. ຄຳວ່າ "ລາຍຈ່າຍທົ່ວໄປ "ໝາຍເຖິງຕົ້ນທຶນທາງກົງ ແລະ ທາງອ້ອມໃນການຂາຍສິນຄ້ານັ້ນ.

8. ຄ່າອາກອນພາຍໃນປະເທດທີ່ຈະຕ້ອງຊຳລະ ເນື່ອງຈາກການຂາຍສິນຄ້ານັ້ນ ທີ່ບໍ່ອາດຫັກອອກໄດ້ ພາຍໃຕ້ ຂໍ້ກຳນົດຂອງ ວັກ 1.4 ຂອງມາດຕາ 7 ນັ້ນ ໃຫ້ນຳມາຫັກອອກໄດ້ພາຍໃຕ້ຂໍ້ກຳນົດຂອງວັກ 1.1 ຂອງ ມາດຕາ 7.

9. ໃນການກຳນົດຄ່ານາຍໜ້າ ຫຼື ກຳໄລຕາມປົກກະຕິ ແລະ ຄ່າໃຊ້ຈ່າຍທົ່ວໄປຢ່າງໃດຢ່າງໜຶ່ງ ພາຍໃຕ້ ຂໍ້ກຳນົດຂອງ ວັກ 1 ຂອງມາດຕາ 7 ນັ້ນ ບັນຫາທີ່ວ່າສິນຄ້າຢ່າງໜຶ່ງຈະເປັນສິນຄ້າ " ປະເພດ ຫຼື ຊະນິດ ດຽວກັນ" ກັບສິນຄ້າອື່ນ ຫຼື ບໍ່ນັ້ນ ຈະຕ້ອງກຳນົດເປັນແຕ່ລະກໍລະນີໄປໂດຍຄຳນຶງເຖິງສະພາບການຕ່າງໆ ທີ່ກ່ຽວຂ້ອງດ້ວຍ. ການຂາຍສິນຄ້າໃນກຸ່ມ ຫຼືໝວດໝູ່ທີ່ໃກ້ຄຽງກັນຫຼາຍທີ່ສຸດຂອງສິນຄ້າເຂົ້າໃນປະເພດ ຫຼື ຊະນິດດຽວກັນໃນປະເທດນຳເຂົ້າ ຊຶ່ງລວມເຖິງສິນຄ້າທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຊຶ່ງສາມາດຈັດຫາຂໍ້ມູນ ທີ່ຈຳເປັນມາໃຫ້ໄດ້ ຄວນນຳມາກວດສອບດ້ວຍ ຕາມຈຸດປະສົງຂອງມາດຕາ 7. ຄຳວ່າ "ສິນຄ້າປະເພດ ຫຼື ຊະນິດດຽວກັນ" ລວມເຖິງສິນຄ້ານຳເຂົ້າຈາກປະເທດດຽວກັນກັບສິນຄ້າທີ່ກຳລັງກຳນົດມູນຄ່າແຈ້ງພາສີ ແລະ

9 ບົດແນະນຳຂອງອົງການການຄ້າໂລກວ່າດ້ວຍການປະຕິບັດ ມາດຕາ VII ຂອງຂໍ້ຕົກລົງທົ່ວໄປວ່າດ້ວຍພາສີສຸລະກາກອນ ແລະ ການຄ້າ ປີ 1994

ສິນຄ້າທີ່ນຳເຂົ້າຈາກປະເທດອື່ນໆດ້ວຍ.

10. ຕາມຈຸດປະສົງຂອງ ວັກ 2 ຂອງມາດຕາ 7 ຄຳວ່າ "ວັນທີ່ໃກ້ສຸດ" ຈະຕ້ອງເປັນວັນ ທີ່ມີການຂາຍ ສິນຄ້ານຳເຂົ້າ ຫຼື ສິນຄ້ານຳເຂົ້າທີ່ຄືກັນ ຫຼື ສິນຄ້ານຳເຂົ້າທີ່ຄ້າຍຄືກັນໃນປະລິມານພຽງພໍ ທີ່ຈະກຳນົດລາຄາຕໍ່ ຫົວໜ່ວຍໄດ້.

11. ໃນກໍລະນີທີ່ໃຊ້ວິທີການໃນ ວັກ 2 ຂອງມາດຕາ 7, ການຫັກອອກ ສຳລັບມູນຄ່າທີ່ເພີ່ມຂຶ້ນ ເນື່ອງຈາກ ການຜ່ານກຳມະວິທີເພີ່ມເຕີມມາແລ້ວນັ້ນ ຈະຕ້ອງຢູ່ບົນພື້ນຖານຂອງ ຂໍ້ມູນທີ່ເປັນຈິງ ແລະທີ່ວັດປະລິມານໄດ້ ຊຶ່ງກ່ຽວຂ້ອງກັບຕົ້ນທຶນຂອງວຽກນັ້ນ. ສູດການຜະລິດທາງອຸດສະຫະກຳ, ສ່ວນປະສົມ, ວິທີການກໍ່ສ້າງ ແລະ ວິທີປະຕິບັດທາງອຸດສະຫະກຳອື່ນໆ ອັນເປັນທີ່ຮັບຮູ້ແລ້ວ ອາດຈະນຳມາໃຊ້ເປັນພື້ນຖານໃນການຄິດໄລ່ໄດ້.

12. ເປັນທີ່ຍອມຮັບວ່າ ວິທີການກຳນົດມູນຄ່າແຈ້ງພາສີ ຕາມທີ່ກຳນົດໄວ້ໃນ ວັກ 2 ຂອງມາດຕາ 7 ນັ້ນ ບໍ່ອາດນຳມາໃຊ້ຕາມປົກກະຕິໄດ້. ຖ້າຫາກວ່າສິນຄ້ານຳເຂົ້ານັ້ນ ໄດ້ສູນເສຍເອກະລັກຂອງມັນນັ້ນໄປ ອັນເປັນ ຜົນມາຈາກການຜ່ານກຳມະວິທີເພີ່ມເຕີມ. ເຖິງຢ່າງໃດກໍຕາມ, ອາດມີບາງກໍລະນີ ທີ່ວ່າເອກະລັກຂອງສິນຄ້າ ນຳເຂົ້າໄດ້ ສູນເສຍໄປແລ້ວ, ແຕ່ມູນຄ່າທີ່ເພີ່ມຂຶ້ນຈາກຂະບວນການນັ້ນຍັງສາມາດກຳນົດໄດ້ຢ່າງແນ່ນອນໂດຍ ບໍ່ມີຄວາມ ຫຍຸ້ງຍາກຈົນເກີນໄປ. ໃນທາງກົງກັນຂ້າມ, ອາດມີບາງກໍລະນີເຊັ່ນກັນ ທີ່ສິນຄ້ານຳເຂົ້າ ຍັງຄົງຮັກສາເອກະ ລັກ ຂອງມັນເອົາໄວ້, ແຕ່ສິນຄ້ານັ້ນ ກໍ່ຮູບຂຶ້ນເປັນພຽງແຕ່ອົງປະກອບສ່ວນນ້ອຍໃນຕົວຂອງສິນຄ້າ ທີ່ຂາຍໃນ ປະເທດນຳເຂົ້າ ຈົນເຮັດໃຫ້ການໃຊ້ວິທີການກຳນົດມູນຄ່ານີ້ ເປັນເລື່ອງທີ່ບໍ່ມີເຫດຜົນພຽງພໍ. ດ້ວຍເຫດດັ່ງກ່າວ ມາຂ້າງເທິງ ແຕ່ລະສະຖານະການໃນລັກສະນະນີ້ ຈະຕ້ອງໄດ້ຮັບການພິຈາລະນາ ເປັນແຕ່ລະກໍລະນີໄປ.

8. ຄຳອະທິບາຍສຳລັບມາດຕາ 8

1. ໂດຍປົກກະຕິແລ້ວ ພາຍໃຕ້ບົດແນະນຳລັດຖະມົນຕີ, ມູນຄ່າແຈ້ງພາສີ ຈະຖືກກຳນົດຂຶ້ນບົນພື້ນຖານຂອງ ຂໍ້ມູນ ທີ່ມີຢູ່ແລ້ວ ໃນປະເທດນຳເຂົ້າ. ເຖິງຢ່າງໃດກໍ່ຕາມ,ໃນການກຳນົດມູນຄ່າຄຳນວນ ອາດມີຄວາມຈຳເປັນ ຕ້ອງກວດສອບຕົ້ນທຶນ ຂອງການຜະລິດສິນຄ້າທີ່ກຳລັງກຳນົດມູນຄ່າແຈ້ງພາສີຢູ່ ແລະ ຂໍ້ມູນອື່ນໆ ຊຶ່ງຕ້ອງ ໄດ້ຮັບຈາກນອກປະເທດນຳເຂົ້າ, ນອກນັ້ນ ສ່ວນໃຫຍ່ຜູ້ຜະລິດສິນຄ້າ ຈະເປັນຜູ້ທີ່ຢູ່ນອກເຂດອຳນາດ ຂອງເຈົ້າໜ້າທີ່ຂອງປະເທດນຳເຂົ້າ. ວິທີຄຳນວນ ໂດຍທົ່ວໄປຈະຖືກນຳໃຊ້ສະເພາະໃນກໍລະນີທີ່ຜູ້ຊື້ ແລະ ຜູ້ຂາຍມີຄວາມກ່ຽວຂ້ອງກັນ ແລະ ຜູ້ຜະລິດພ້ອມທີ່ຈະສະໜອງຂໍ້ມູນ ໃຫ້ເຈົ້າໜ້າທີ່ຂອງປະເທດນຳເຂົ້າ ໄດ້ຮັບຊາບ ເຖິງຕົ້ນທຶນຕ່າງໆທີ່ຈຳເປັນ ແລະ ອຳນວຍຄວາມສະດວກຕ່າງໆ ໃຫ້ໃນການກວດສອບ, ພິສູດ, ຢັ້ງຢືນ ໃນພາຍຫຼັງ ທີ່ອາດຈຳເປັນ.

2. ຄຳວ່າ "ຕົ້ນທຶນ ຫຼື ມູນຄ່າ" ຕາມທີ່ໄດ້ລະບຸໄວ້ໃນ ວັກ 1.1 ຂອງມາດຕາ 8 ຈະຕ້ອງຖືກກຳນົດ ຂຶ້ນບົນພື້ນຖານຂອງຂໍ້ມູນທີ່ກ່ຽວຂ້ອງກັບການຜະລິດຂອງສິນຄ້າທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຊຶ່ງໄດ້ສະໜອງ ໃຫ້ໂດຍຜູ້ຜະລິດ ຫຼື ໃນນາມຂອງຜູ້ຜະລິດ. ຕົ້ນທຶນ ຫຼື ມູນຄ່າດັ່ງກ່າວ ຕ້ອງອີງໃສ່ບັນຊີທາງການຄ້າຂອງ ຜູ້ຜະລິດ ຊຶ່ງມີເງື່ອນໄຂວ່າ ບັນຊີນັ້ນ ຕ້ອງສອດຄ່ອງກັບຫຼັກການບັນຊີ ທີ່ຍອມຮັບກັນໂດຍທົ່ວໄປ ຊຶ່ງໃຊ້ໃນ ປະເທດຜະລິດສິນຄ້ານັ້ນ.

10 ‖ ບົດແນະນຳຂອງຫົວໜ້າກົມພາສີວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

3. ຄຳວ່າ "ຕົ້ນທຶນ ຫຼື ມູນຄ່າ" ຕ້ອງລວມເອົາຕົ້ນທຶນຂອງ ອົງປະກອບຕ່າງໆ ຕາມທີ່ກຳນົດໄວ້ໃນ ວັກ (1.1) (ii) ແລະ (iii) ຂອງມາດຕາ 10 ແລະ ຍັງລວມເຖິງມູນຄ່າ, ຊຶ່ງໄດ້ຮັບການແບ່ງສ່ວນຢ່າງເໝາະສົມ ພາຍໃຕ້ຄຳອະທິບາຍ ສຳລັບມາດຕາ 10, ຂອງອົງປະກອບ ຕາມທີ່ກຳນົດໄວ້ໃນ ວັກ 1.2 (iv) ຂອງມາດຕາ 10 ຊຶ່ງຜູ້ຊື້ສະໜອງໃຫ້ໂດຍທາງກົງ ຫຼື ທາງອ້ອມ ເພື່ອໃຊ້ໃນການຜະລິດຂອງສິນຄ້ານຳເຂົ້າ. ມູນຄ່າຂອງອົງປະກອບ ຕາມທີ່ກຳນົດໄວ້ໃນ ວັກ1.2(iv) ຂອງມາດຕາ 10 ຊຶ່ງໄດ້ເຮັດ ແລະ ສະໜອງ ໃຫ້ປະເທດນຳເຂົ້າ ຈະນຳມາລວມໄດ້ພາຍໃນຂອບເຂດ ຊຶ່ງອົງປະກອບເຫຼົ່ານັ້ນເປັນພາລະ ຂອງຜູ້ຜະລິດ. ໃຫ້ເຂົ້າໃຈວ່າຕົ້ນທຶນ ຫຼື ມູນຄ່າຂອງອົງປະກອບຕ່າງໆ ຕາມທີ່ກ່າວໄວ້ໃນວັກນີ້ ຕ້ອງບໍ່ຖືກຄິດໄລ່ຊ້ຳກັນ ສອງຄັ້ງໃນການກຳນົດມູນຄ່າ ແຈ້ງພາສີ ດ້ວຍວິທີຄຳນວນ.

4. ຄຳວ່າ "ຈຳນວນຂອງກຳໄລ ແລະ ລາຍຈ່າຍທົ່ວໄປ" ຕາມທີ່ກ່າວໄວ້ໃນ ວັກ1.2 ຂອງມາດຕາ 8 ຈະຕ້ອງກຳນົດຂຶ້ນບົນພື້ນຖານຂອງຂໍ້ມູນ ທີ່ສະໜອງໃຫ້ໂດຍຜູ້ຜະລິດ ຫຼື ໃນນາມຂອງຜູ້ຜະລິດ ເວັ້ນເສຍແຕ່ ຕົວເລກຂອງຜູ້ຜະລິດນັ້ນ ບໍ່ສອດຄ່ອງກັບຕົວເລກທີ່ຄິດໄລ່ລວມຢູ່ ຕາມປົກກະຕິໃນການຂາຍສິນຄ້າປະເພດ ຫຼື ຊະນິດດຽວກັນກັບສິນຄ້າ ທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຊຶ່ງເຮັດຂຶ້ນໂດຍຜູ້ຜະລິດຄົນອື່ນໆ ໃນປະເທດ ສົ່ງອອກ ເພື່ອສົ່ງອອກໄປຍັງປະເທດນຳເຂົ້າ.

5. ຄວນຮັບຊາບໃນເນື້ອຫານີ້ ຄຳວ່າ "ຈຳນວນຂອງກຳໄລ ແລະ ລາຍຈ່າຍທົ່ວໄປ" ຈະຕ້ອງໄດ້ນຳມາ ລວມກັນທັງໝົດ. ດັ່ງນັ້ນ, ຖ້າວ່າ ໃນກໍລະນີສະເພາະໃດໜຶ່ງ ຕົວເລກສະແດງຜົນກຳໄລຂອງຜູ້ຜະລິດຕ່ຳ ແລະ ຕົວເລກສະແດງລາຍຈ່າຍທົ່ວໄປຂອງ ຜູ້ຜະລິດສູງ, ກຳໄລ ແລະ ລາຍຈ່າຍທົ່ວໄປ ທີ່ລວມກັນ ອາດຈະ ສອດຄ່ອງກັບຕົວເລກ ທີ່ລວມຢູ່ຕາມປົກກະຕິໃນການຂາຍສິນຄ້າປະເພດ ຫຼື ຊະນິດດຽວກັນນັ້ນ. ສະຖານະການດັ່ງກ່າວ ອາດຈະເກີດຂຶ້ນໄດ້. ຕົວຢ່າງ: ຖ້າມີຜະລິດຕະພັນຊະນິດໜຶ່ງ ກຳລັງຈະເປີດຕະຫຼາດ ໃນປະເທດນຳເຂົ້າ ແລະ ຜູ້ຜະລິດ ຮັບທີ່ຈະບໍ່ຄິດກຳໄລ ຫຼື ຄິດກຳໄລຕ່ຳ ເພື່ອເປັນການຊົດເຊີຍ ຄ່າໃຊ້ຈ່າຍທົ່ວໄປ ທີ່ກ່ຽວຂ້ອງກັບການເປີດຕະຫຼາດຊຶ່ງສູງຫຼາຍ. ໃນກໍລະນີທີ່ຜູ້ຜະລິດ ສາມາດສະແດງ ຜົນກຳໄລຕ່ຳ ໃນການຂາຍສິນຄ້ານຳເຂົ້າ ເນື່ອງຈາກສະພາບການແວດລ້ອມທາງການຄ້າສະເພາະກໍລະນີ ເຊັ່ນນີ້ແລ້ວ ຈະຕ້ອງໄດ້ນຳເອົາຕົວເລກທີ່ສະແດງເຖິງຜົນກຳໄລອັນແທ້ຈິງຂອງຜູ້ຜະລິດ ມາພິຈາລະນາ ພາຍໃຕ້ເງື່ອນໄຂທີ່ວ່າ ຜູ້ຜະລິດມີເຫດຜົນທາງການຄ້າ ທີ່ສາມາດຮັບຟັງໄດ້ ໃນການພິຈາລະນາ ຕົວເລກ ເຫຼົ່ານັ້ນ ແລະ ນະໂຍບາຍໃນການກຳນົດລາຄາຂອງຜູ້ຜະລິດ ສ່ອງແສງໃຫ້ເຫັນເຖິງນະໂຍບາຍການກຳນົດ ລາຄາຕາມປົກກະຕິ ຂອງກຸ່ມອຸດສະຫະກຳທີ່ກ່ຽວຂ້ອງ. ສະຖານະການດັ່ງກ່າວ ອາດເກີດຂຶ້ນໄດ້, ຕົວຢ່າງ: ໃນກໍລະນີທີ່ຜູ້ຜະລິດ ຖືກບັງຄັບໃຫ້ຫຼຸດລາຄາລົງມາເປັນການຊົ່ວຄາວ ເນື່ອງຈາກຄວາມຕ້ອງການຂອງຕະຫຼາດ ຫຼຸດລົງ ໂດຍທີ່ບໍ່ສາມາດຄາດການລ່ວງໜ້າໄດ້ ຫຼື ໃນກໍລະນີທີ່ຜູ້ຜະລິດໄດ້ຂາຍສິນຄ້າ ເພື່ອໄປເສີມກັບສິນຄ້າ ໃນໝວດໝູ່ດຽວກັນກັບສິນຄ້າທີ່ຜະລິດໃນປະເທດນຳເຂົ້າ ແລະ ຜູ້ຜະລິດຍອມຮັບຜົນກຳໄລຕ່ຳ ເພື່ອຮັກສາ ການແຂ່ງຂັນ ທາງການຄ້າເອົາໄວ້. ໃນກໍລະນີທີ່ຕົວເລກສະແດງຜົນກຳໄລ ແລະ ລາຍຈ່າຍທົ່ວໄປຂອງ ຜູ້ຜະລິດ ບໍ່ສອດຄ່ອງກັບຕົວເລກ ທີ່ຫາກໍ່ຄິດໄລ່ລວມຢູ່ ຕາມປົກກະຕິໃນການຂາຍສິນຄ້າປະເພດ ຫຼື ຊະນິດ ດຽວກັນກັບສິນຄ້າ ທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຊຶ່ງເຮັດຂຶ້ນໂດຍຜູ້ຜະລິດຄົນອື່ນໆ ໃນປະເທດຜູ້ສົ່ງອອກ ເພື່ອສົ່ງອອກໄປຍັງປະເທດນຳເຂົ້າ ເຊັ່ນນີ້ແລ້ວຈຳນວນກຳໄລ ແລະ ລາຍຈ່າຍທົ່ວໄປ ກໍ່ອາດຫາໄດ້ຈາກຂໍ້ມູນ ທີ່ກ່ຽວຂ້ອງ ທີ່ນອກເໜືອໄປຈາກຂໍ້ມູນ ທີ່ສະໜອງໃຫ້ໂດຍຜູ້ຜະລິດສິນຄ້ານັ້ນ ຫຼື ໃນນາມຂອງຜູ້ຜະລິດ ສິນຄ້ານັ້ນ.

11 | ບົດແນະນຳຂອງຫ້ອງການພາສີວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

6. ໃນກໍລະນີ ທີ່ໃຊ້ຂໍ້ມູນນອກເໜືອໄປຈາກຂໍ້ມູນ ທີ່ສະໜອງໃຫ້ໂດຍຜູ້ຜະລິດ ຫຼື ໃນນາມຂອງຜູ້ຜະລິດ ເພື່ອຈຸດປະສົງໃນການກຳນົດມູນຄ່າແຈ້ງພາສີ ຕາມວິທີຄຳນວນ, ຫາກວ່າຜູ້ນຳເຂົ້າຮ້ອງຂໍຕໍ່ເຈົ້າໜ້າທີ່ ຂອງ ປະເທດນຳເຂົ້າ ຈະຕ້ອງແຈ້ງໃຫ້ຜູ້ນຳເຂົ້າຊາບ ເຖິງແຫຼ່ງທີ່ມາຂອງຂໍ້ມູນເຫຼົ່ານັ້ນ ຂໍ້ມູນດິບທີ່ໃຊ້ ແລະ ການຄິດໄລ່ບົນພື້ນຖານຂອງຂໍ້ມູນດິບນັ້ນ ພາຍໃຕ້ຂໍ້ກຳນົດຂອງມາດຕາ 16.

7. "ລາຍຈ່າຍທົ່ວໄປ" ທີ່ລະບຸໃນຂໍ້1.2 ຂອງມາດຕາ 8 ກວມເອົາຄ່າໃຊ້ຈ່າຍທາງກົງ ແລະ ທາງອ້ອມ ໃນການຜະລິດ ແລະ ໃນການຂາຍສິນຄ້າສຳລັບສົ່ງອອກ ຊຶ່ງບໍ່ໄດ້ລວມໃນວັກ1.1 ຂອງມາດຕາ 8.

8. ສິນຄ້າຢ່າງໜຶ່ງຈະເປັນ "ສິນຄ້າປະເພດ ຫຼື ຊະນິດດຽວກັນ" ກັບສິນຄ້າຢ່າງອື່ນ ຫຼື ບໍ່ນັ້ນ ຈະຕ້ອງກຳນົດ ເປັນແຕ່ລະກໍລະນີໄປ ໂດຍຄຳນຶງເຖິງສະພາບການຕ່າງໆ ທີ່ກ່ຽວຂ້ອງດ້ວຍ. ໃນການກຳນົດກຳໄລຕາມປົກກະ ຕິ ແລະ ລາຍຈ່າຍທົ່ວໄປ ພາຍໃຕ້ຂໍ້ກຳນົດຂອງ ມາດຕາ 8 ນັ້ນ ຄວນກວດສອບເຖິງການຂາຍ ເພື່ອສົ່ງອອກ ໄປຍັງປະເທດນຳເຂົ້າສິນຄ້າ ຂອງສິນຄ້າໃນກຸ່ມ ຫຼື ໝວດໝູ່ທີ່ໃກ້ຄຽງກັນຫຼາຍທີ່ສຸດ ຊຶ່ງລວມເຖິງສິນຄ້າ ທີ່ກຳລັງກຳນົດມູນຄ່າແຈ້ງພາສີດ້ວຍ ຊຶ່ງສາມາດສະໜອງຂໍ້ມູນ ທີ່ຈຳເປັນມາໃຫ້ໄດ້. ຕາມຈຸດປະສົງຂອງ ມາດຕາ 8 ຄຳວ່າ " ສິນຄ້າໃນປະເພດ ຫຼື ຊະນິດດຽວກັນ " ຈະຕ້ອງເປັນສິນຄ້າ ທີ່ມາຈາກປະເທດດຽວກັນ ກັບສິນຄ້າ ທີ່ກຳລັງກຳນົດມູນຄ່າແຈ້ງພາສີ.

9. ຄຳອະທິບາຍສຳລັບມາດຕາ 9

1. ມູນຄ່າແຈ້ງພາສີ ທີ່ກຳນົດຂຶ້ນ ພາຍໃຕ້ຂໍ້ກຳນົດຂອງ ມາດຕາ 9 ຄວນຢູ່ບົນພື້ນຖານຂອງມູນຄ່າແຈ້ງພາສີ ທີ່ເຄີຍໄດ້ກຳນົດໄວ້ກ່ອນໜ້າແລ້ວ ເທົ່າທີ່ຈະເປັນໄປໄດ້.

2. ວິທີການກຳນົດມູນຄ່າແຈ້ງພາສີ ທີ່ຈະນຳມາໃຊ້ ພາຍໃຕ້ຂໍ້ກຳນົດຂອງ ມາດຕາ 9 ຄວນເປັນວິທີການຕ່າງໆ ທີ່ໄດ້ກຳນົດໄວ້ແລ້ວໃນມາດຕາ 4 ເຖິງ ມາດຕາ 8 ແຕ່ໃຫ້ນຳໃຊ້ວິທີການດັ່ງກ່າວ ດ້ວຍຄວາມຢືດຢຸ່ນ ແບບສົມເຫດສົມຜົນ ຈຶ່ງຈະເປັນການສອດຄ່ອງກັບເປົ້າໝາຍ ແລະ ຂໍ້ກຳນົດຂອງມາດຕາ 9.

3. ບາງຕົວຢ່າງຂອງວິທີການຢືດຢຸ່ນແບບສົມເຫດສົມຜົນ ມີດັ່ງຕໍ່ໄປນີ້ :

3.1. ສິນຄ້າທີ່ຄືກັນ: ຂໍ້ກຳນົດວ່າດ້ວຍ ສິນຄ້າທີ່ຄືກັນ ຄວນສົ່ງອອກໃນເວລາດຽວກັນ ຫຼື ໃນເວລາທີ່ໃກ້ຄຽງ ກັນກັບສິນຄ້າ ທີ່ກຳລັງກຳນົດມູນຄ່າແຈ້ງພາສີຢູ່ນັ້ນ ສາມາດຕີຄວາມໝາຍຢ່າງຢືດຢຸ່ນໄດ້. ສິນຄ້ານຳເຂົ້າ ທີ່ຄືກັນ ທີ່ຜະລິດຂຶ້ນໃນປະເທດອື່ນ ທີ່ບໍ່ແມ່ນປະເທດສົ່ງອອກຂອງສິນຄ້າ ທີ່ກຳລັງກຳນົດມູນຄ່າແຈ້ງພາສີ ສາມາດນຳມາໃຊ້ເປັນຖານຂໍ້ມູນ ໃນການກຳນົດມູນຄ່າແຈ້ງພາສີໄດ້. ມູນຄ່າແຈ້ງພາສີຂອງສິນຄ້ານຳເຂົ້າທີ່ຄືກັນ ທີ່ໄດ້ກຳນົດຂຶ້ນໄວ້ ພາຍໃຕ້ຂໍ້ກຳນົດຂອງ ມາດຕາ 7 ແລະ 8 ສາມາດນຳໃຊ້ໄດ້.

3.2. ສິນຄ້າທີ່ຄ້າຍຄືກັນ: ຂໍ້ກຳນົດທີ່ວ່າ ສິນຄ້າທີ່ຄ້າຍຄືກັນ ຄວນສົ່ງອອກໃນເວລາດຽວກັນ ຫຼື ໃນເວລາທີ່ ໃກ້ຄຽງກັນກັບສິນຄ້າ ທີ່ກຳລັງກຳນົດມູນຄ່າແຈ້ງພາສີຢູ່ນັ້ນ ສາມາດຕີຄວາມໝາຍຢ່າງຢືດຢຸ່ນໄດ້. ສິນຄ້ານຳເຂົ້າທີ່ຄ້າຍຄືກັນ ທີ່ຜະລິດຂຶ້ນໃນປະເທດອື່ນ ທີ່ບໍ່ແມ່ນປະເທດສົ່ງອອກສິນຄ້າ ທີ່ກຳລັງກຳນົດມູນຄ່າແຈ້ງ ພາສີ ສາມາດນຳມາໃຊ້ເປັນຖານຂໍ້ມູນ ໃນການກຳນົດມູນຄ່າແຈ້ງພາສີໄດ້. ມູນຄ່າແຈ້ງພາສີຂອງສິນຄ້ານຳເຂົ້າ ທີ່ຄ້າຍຄືກັນ ທີ່ໄດ້ກຳນົດຂຶ້ນໄວ້ແລ້ວ ພາຍໃຕ້ຂໍ້ກຳນົດຂອງມາດຕາ 7 ແລະ 8 ສາມາດນຳມາໃຊ້ໄດ້.

12 | ບົດແນະນຳຂອງຫ້ວໜ້າທີມພາສີວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

3.3. ວິທີທັກລົບມູນຄ່າ: ຂໍ້ກຳນົດທີ່ວ່າ ສິນຄ້າຈະຕ້ອງຂາຍໄປໃນ "ໃນຖານະເປັນສິນຄ້ານຳເຂົ້າ" ຕາມທີ່ລະບຸໃນວັກ 1 ຂອງມາດຕາ 7 ສາມາດຕີຄວາມໝາຍຢ່າງຍືດຢຸ່ນໄດ້. ຂໍ້ກຳນົດເວລາ " 90 ວັນ" ສາມາດນຳໃຊ້ຢ່າງຍືດຢຸ່ນໄດ້.

10. ຄຳອະທິບາຍສຳລັບມາດຕາ 10

ວັກ1.1(i)

ຄຳວ່າ "ຄ່ານາຍໜ້າສຳລັບການຊື້" ໝາຍເຖິງ ຄ່າທຳນຽມ ທີ່ຜູ້ນຳເຂົ້າສິນຄ້າ ຈ່າຍໃຫ້ກັບຕົວແທນຂອງຕົນ ເພື່ອເປັນຄ່າບໍລິການສຳລັບການເປັນຕົວແທນຂອງຜູ້ນຳເຂົ້າໃນຕ່າງປະເທດ ໃນການຊື້ສິນຄ້າທີ່ກຳລັງກຳນົດມູນຄ່າແຈ້ງພາສີ.

1. ໃນການແບ່ງສ່ວນຂອງອົງປະກອບຕ່າງໆ ຕາມທີ່ລະບຸໄວ້ໃນ ວັກ1.2(ii) ຂອງມາດຕາ 10 ນັ້ນ ມີສອງປັດໃຈກ່ຽວຂ້ອງ, ຄື: ມູນຄ່າຂອງອົງປະກອບນັ້ນເອງ ແລະ ວິທີການທີ່ມູນຄ່າຂອງອົງປະກອບນັ້ນ ຈະແບ່ງ ສ່ວນໄປລວມກັນກັບສິນຄ້ານຳເຂົ້າ. ການແບ່ງສ່ວນຂອງອົງປະກອບເຫຼົ່ານີ້ ຄວນເຮັດຂຶ້ນໂດຍ ວິທີທີ່ມີເຫດຜົນ ເໝາະສົມກັບສະພາບການ ແລະ ເປັນໄປຕາມຫຼັກການບັນຊີທີ່ຍອມຮັບກັນໂດຍທົ່ວໄປ.

2. ໃນກໍລະນີຂອງມູນຄ່າຂອງອົງປະກອບ, ຫາກຜູ້ນຳເຂົ້າສິນຄ້າ ໄດ້ອົງປະກອບນັ້ນມາຈາກຜູ້ຂາຍ ຊຶ່ງບໍ່ມີຄວາມກ່ຽວຂ້ອງກັນກັບຜູ້ນຳເຂົ້າສິນຄ້າ ໃນຕົ້ນທຶນຈຳນວນໜຶ່ງ. ມູນຄ່າຂອງອົງປະກອບນັ້ນກໍຄືຕົ້ນທຶນ ຫາກອົງປະກອບນັ້ນຜະລິດຂຶ້ນໂດຍຜູ້ນຳເຂົ້າ ຫຼື ໂດຍບຸກຄົນຊຶ່ງມີຄວາມກ່ຽວຂ້ອງກັນກັບຜູ້ນຳເຂົ້າ. ມູນຄ່າຂອງອົງປະກອບນັ້ນ ກໍຄືຕົ້ນທຶນຂອງການຜະລິດອົງປະກອບນັ້ນເອງ. ຫາກອົງປະກອບນັ້ນເປັນສິນຄ້າທີ່ຜູ້ນຳເຂົ້າເຄີຍໃຊ້ມາແລ້ວ ໂດຍບໍ່ໄດ້ຄຳນຶງວ່າ ອົງປະກອບນັ້ນໄດ້ມາ ຫຼື ຜະລິດຂຶ້ນໂດຍຜູ້ນຳເຂົ້າສິນຄ້າ. ຕົ້ນທຶນເດີມຂອງການໄດ້ມາ ຫຼື ການຜະລິດ ຄວນຈະຕ້ອງປັບລາຄາຫຼຸດລົງມາ ເພື່ອສ່ອງແສງໃຫ້ເຫັນເຖິງການໃຊ້ອົງປະກອບນັ້ນ ເພື່ອໃຫ້ໄດ້ມູນຄ່າຂອງອົງປະກອບດັ່ງກ່າວ.

3. ເມື່ອມູນຄ່າຂອງອົງປະກອບໄດ້ຖືກກຳນົດຂຶ້ນແລ້ວ ກໍເປັນສິ່ງຈຳເປັນທີ່ຈະຕ້ອງແບ່ງສ່ວນມູນຄ່ານັ້ນໄປລວມກັບສິນຄ້ານຳເຂົ້າ ມີຄວາມເປັນໄປໄດ້ຫຼາຍປະການ, ຕົວຢ່າງ: ມູນຄ່ານັ້ນອາດແບ່ງສ່ວນໄປລວມກັບ ການຂົນສົ່ງຄັ້ງທຳອິດ ຫາກຜູ້ນຳເຂົ້າສິນຄ້າຕ້ອງການທີ່ຈະຊຳລະຄ່າພາສີ ແລະພັນທະອື່ນ ຂອງມູນຄ່າທັງໝົດໃນຄັ້ງດຽວເລີຍ. ອີກຕົວຢ່າງໜຶ່ງຄື ຜູ້ນຳເຂົ້າສິນຄ້າ ອາດຮ້ອງຂໍໃຫ້ແບ່ງສ່ວນມູນຄ່ານັ້ນ ຕາມຈຳນວນ ຫົວໜ່ວຍຂອງສິນຄ້າ ທີ່ຜະລິດຂຶ້ນ ຈົນເຖິງເວລາທີ່ນຳເຂົ້າຖ້ຽວທຳອິດ. ຕົວຢ່າງຕໍ່ໄປອີກຄື: ຜູ້ນຳເຂົ້າສິນຄ້າ ອາດຈະຮ້ອງຂໍໃຫ້ແບ່ງສ່ວນມູນຄ່ານັ້ນ ຕາມຈຳນວນການຜະລິດທັງໝົດ ທີ່ມີການຄາດການໄວ້ລ່ວງໜ້າ ຊຶ່ງມີສັນຍາ ຫຼື ຂໍ້ຜູກມັດທີ່ແນ່ນອນປະກົດຢູ່ສຳລັບການຜະລິດນັ້ນ. ວິທີການແບ່ງສ່ວນທີ່ໃຊ້ ຈະຂຶ້ນຢູ່ກັບເອກະສານທີ່ຜູ້ນຳເຂົ້າສິນຄ້າຈັດຫາມາໃຫ້.

ດັ່ງທີ່ໄດ້ສະແດງຂ້າງເທິງນີ້, ຜູ້ນຳເຂົ້າໄດ້ຈັດຫາເບົ້າໝໍ້ ໃຫ້ຜູ້ຜະລິດ ເພື່ອນຳໃຊ້ເຂົ້າໃນການຜະລິດສິນຄ້ານຳເຂົ້າດັ່ງກ່າວ ແລະ ພ້ອມທັງເຮັດສັນຍາກັບຜູ້ຜະລິດ ວ່າຈະຊື້ສິນຄ້າ ຈຳນວນ 10.000 ຫົວໜ່ວຍ. ເມື່ອການຂົນສົ່ງສິນຄ້າຈຳນວນ 1.000 ຫົວໜ່ວຍ ງວດທຳອິດມາຮອດ, ຜູ້ຜະລິດ ກໍ່ສາມາດຜະລິດສິນຄ້າໄດ້ແລ້ວ ຈຳນວນ 4.000 ຫົວໜ່ວຍ. ຜູ້ນຳເຂົ້າ ສາມາດຮ້ອງຂໍລັດຖະການພາສີ ເພື່ອຈັດແບ່ງມູນຄ່າຂອງເບົ້າໝໍ້ ຂອງສິນຄ້າອອກເປັນ 1.000 ຫົວໜ່ວຍ, 4.000 ຫົວໜ່ວຍ ຫຼື 10.000 ຫົວໜ່ວຍ.

ວັກ1.2(iv)

1. ການບວກເພີ່ມສຳລັບອົງປະກອບຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນ ວັກ1.2(iv) ຂອງມາດຕາ 10 ນັ້ນ ຄວນອີງໃສ່ຂໍ້ມູນທີ່ເປັນຈິງ ແລະ ສາມາດວັດປະລິມານໄດ້. ເພື່ອເປັນການຫຼຸດພາລະຂອງຜູ້ນຳເຂົ້າສິນຄ້າ ແລະ ລັດຖະການພາສີ ໃນການກຳນົດມູນຄ່າທີ່ຈະເພີ່ມເຂົ້າ. ຂໍ້ມູນທີ່ມີຢູ່ແລ້ວ ໃນລະບົບການບັນທຶກທາງການຄ້າຂອງ ຜູ້ຊື້ ຄວນນຳມາໃຊ້ເທົ່າທີ່ຈະເປັນໄປໄດ້.

2. ສຳລັບອົງປະກອບຕ່າງໆ ທັງຫຼາຍທີ່ຈັດຫາມາໃຫ້ໂດຍຜູ້ຊື້ ຊຶ່ງອົງປະກອບເຫຼົ່ານັ້ນໄດ້ຊື້ ຫຼື ເຊົ່າມາໂດຍຜູ້ຊື້. ການບວກເພີ່ມເຂົ້າໄປຄວນເປັນຕົ້ນທຶນຂອງການຊື້ ຫຼື ການເຊົ່ານັ້ນ. ອົງປະກອບຕ່າງໆທັງຫຼາຍ ທີ່ສາມາດ ຈັດຫາມາໄດ້ຈາກສາທາລະນະ ຈະຕ້ອງບໍ່ນຳມາບວກເພີ່ມ. ເວັ້ນເສຍແຕ່ຕົ້ນທຶນ ທີ່ໄດ້ຈາກການສຳເນົາແບບ ເຫຼົ່ານັ້ນ.

3. ຄວາມຕ້ອງການໃຫ້ມີຄວາມງ່າຍດາຍ ໃນການຄິດໄລ່ມູນຄ່າ ທີ່ບວກເພີ່ມຈະຂຶ້ນຢູ່ກັບໂຄງສ້າງ ແລະ ວິທີການຈັດການ ຂອງແຕ່ລະກິດຈະການ ຂຶ້ນກັບກັບວິທີການທາງບັນຊີຂອງບໍລິສັດນັ້ນ.

4. ຕົວຢ່າງ: ເປັນໄປໄດ້ວ່າ ບໍລິສັດໜຶ່ງ ຊຶ່ງສົ່ງຜະລິດຕະພັນຫຼາຍຊະນິດຈາກຫຼາຍໆປະເທດ ຮັກສາໄວ້ໃນ ບັນທຶກຫ້ອງສູນອອກແບບຕົ້ນ ຜູ້ທີ່ຢູ່ນອກປະເທດນຳເຂົ້າສິນຄ້າ. ໃນລັກສະນະທີ່ສະແດງໃຫ້ເຫັນ ຢ່າງຖືກຕ້ອງວ່າ ເປັນຕົ້ນທຶນຂອງແຕ່ລະຜະລິດຕະພັນ. ໃນກໍລະນີເຊັ່ນນີ້ ການປັບລາຄາໂດຍກົງ ອາດຈະເຮັດ ໄດ້ຢ່າງເໝາະສົມ ພາຍໃຕ້ຂໍ້ກຳນົດຂອງມາດຕາ 10.

5. ໃນອີກກໍລະນີໜຶ່ງ, ບໍລິສັດໜຶ່ງອາດຮັບເອົາຕົ້ນທຶນຂອງສູນອອກແບບ ທີ່ຢູ່ນອກປະເທດນຳເຂົ້າສິນຄ້າ ເປັນຄ່າໃຊ້ຈ່າຍທົ່ວໄປ ໂດຍບໍ່ໄດ້ຈັດສັນໄວ້ໃນຜະລິດຕະພັນນັ້ນໆ ໃນກໍລະນີເຊັ່ນນີ້ ການປັບລາຄາຢ່າງເໝາະ ສົມ ຂອງສິນຄ້ານຳເຂົ້າ ສາມາດເຮັດໄດ້ພາຍໃຕ້ຂໍ້ກຳນົດຂອງ ມາດຕາ 10 ໂດຍການແບ່ງສ່ວນຕົ້ນທຶນທັງໝົດ ຂອງສູນອອກແບບ ຕາມຈຳນວນຜະລິດທັງໝົດ ທີ່ໄດ້ຮັບຜົນປະໂຫຍດຈາກສູນອອກແບບນີ້ ແລະ ນຳຕົ້ນທຶນ ທີ່ໄດ້ຮັບສ່ວນແບ່ງແລ້ວ ຕໍ່ໜຶ່ງຫົວໜ່ວຍບວກເພີ່ມເຂົ້າໄປໃນສິນຄ້ານຳເຂົ້າ.

6. ເປັນທີ່ແນ່ນອນແລ້ວວ່າ, ການປ່ຽນແປງໄປ ຂອງສະພາບການທີ່ກ່າວມາຂ້າງເທິງ ຈຳເປັນຕ້ອງໄດ້ພິຈາລະ ນາເຖິງປັດໃຈຕ່າງໆ ທີ່ແຕກຕ່າງກັນ ໃນການກຳນົດວິທີການຈັດສັນທີ່ເໝາະສົມ.

7. ໃນກໍລະນີທີ່ການຜະລິດອົງປະກອບດັ່ງກ່າວ ກ່ຽວຂ້ອງກັບຫຼາຍປະເທດ ແລະ ກ່ຽວຂ້ອງກັບຊ່ວງເວລາ ການດັດປັບ ຄວນຈະຈຳກັດຢູ່ສະເພາະມູນຄ່າຕົວຈິງ ທີ່ໄດ້ບວກເພີ່ມເຂົ້າໃນອົງປະກອບ ພາຍນອກປະເທດ ນຳເຂົ້າສິນຄ້າ.

ວັກ 1.3

1. ຄ່າລິຂະສິດ ແລະ ຄ່າທຳນຽມອະນຸຍາດຕາມທີ່ໄດ້ກ່າວໄວ້ໃນ ວັກ1.3 ຂອງມາດຕາ 10 ຊຶ່ງນອກເໜືອ ໄປຈາກສິ່ງອື່ນໆແລ້ວ, ການຊຳລະ ຍັງລວມເອົາຄ່າສິດທິບັດ, ຄ່າເຄື່ອງໝາຍການຄ້າ ແລະຄ່າທຳນຽມ ອື່ນໆ. ເຖິງຢ່າງໃດກໍຕາມ, ການເກັບຄ່າສິດດັ່ງກ່າວ ໃນການຜະລິດຊ້ຳຂອງສິນຄ້ານຳເຂົ້າໃນປະເທດນຳເຂົ້າ ຈະຕ້ອງ ບໍ່ໄດ້ນຳມາບວກເພີ່ມກັບລາຄາທີ່ໄດ້ຊຳລະຕົວຈິງ ຫຼື ລາຄາທີ່ຈະຊຳລະ ສຳລັບສິນຄ້ານຳເຂົ້າ ໃນການກຳນົດມູນຄ່າແຈ້ງພາສີ.

2. ການຊຳລະ ໂດຍຜູ້ຊື້ ໃນການຈຳໜ່າຍ ຫຼື ການຂາຍຕໍ່ຂອງສິນຄ້ານຳເຂົ້າ ຈະຕ້ອງບໍ່ນຳໄປບວກເພີ່ມກັບ ລາຄາທີ່ໄດ້ຊຳລະຕົວຈິງ ຫຼື ລາຄາທີ່ຈະຊຳລະ ສຳລັບສິນຄ້ານຳເຂົ້ານັ້ນ. ຫາກວ່າການຊຳລະນັ້ນ ບໍ່ແມ່ນ ເງື່ອນໄຂຂອງການຂາຍ ເພື່ອສົ່ງອອກມາຍັງປະເທດນຳເຂົ້າສິນຄ້າ.

ວັກ 2

ໃນກໍລະນີ ບໍ່ມີຂໍ້ມູນຈິງ ແລະ ທີ່ວັດປະລິມານໄດ້ ທີ່ຈະບວກເພີ່ມກັບລາຄາ ຊຶ່ງຈະຕ້ອງກຳນົດຂຶ້ນ ພາຍໃຕ້ຂໍ້ກຳນົດຂອງ ມາດຕາ 10 ແລ້ວ ມູນຄ່າຊື້-ຂາຍຍ່ອມບໍ່ອາດກຳນົດຂຶ້ນໄດ້ ພາຍໃຕ້ຂໍ້ກຳນົດຂອງ ມາດຕາ 4 ຄືດັ່ງທີ່ໄດ້ສະແດງໃຫ້ເຫັນດັ່ງນີ້, ເຊັ່ນ : ຄ່າລິຂະສິດ ທີ່ໄດ້ຊຳລະບົນພື້ນຖານຂອງ ລາຄາຂາຍຕໍ່ ເປັນຫົວໜ່ວຍລິດ ໃນປະເທດນຳເຂົ້າ ຂອງຜະລິດຕະພັນຊະນິດໜຶ່ງ ຊຶ່ງນຳເຂົ້າເປັນຫົວໜ່ວຍກິໂລກຣາມ ແລະ ຖືກເຮັດໃຫ້ເປັນສານລະລາຍ ພາຍຫຼັງຈາກການນຳເຂົ້າ. ຫາກຄ່າລິຂະສິດບາງສ່ວນຂຶ້ນຢູ່ກັບສິນຄ້ານຳເຂົ້າ ແລະ ບາງສ່ວນຂຶ້ນກັບປັດໃຈຢ່າງອື່ນ ຊຶ່ງບໍ່ມີສ່ວນກ່ຽວຂ້ອງກັບສິນຄ້ານຳເຂົ້າ (ເຊັ່ນ: ໃນກໍລະນີທີ່ສິນຄ້ານຳເຂົ້າ ຖືກນຳມາປະສົມກັນກັບສ່ວນປະສົມພາຍໃນປະເທດ ຈົນບໍ່ສາມາດແຍກອອກຈາກກັນໄດ້ອີກຕໍ່ໄປແລ້ວ ຫຼື ໃນກໍລະນີ ທີ່ຄ່າລິຂະສິດ ບໍ່ອາດແຍກໃຫ້ເຫັນໄດ້ຢ່າງຊັດເຈນ ຈາກຂໍ້ຕົກລົງທາງການເງິນແບບພິເສດ ລະຫວ່າງຜູ້ຊື້ ແລະ ຜູ້ຂາຍ) ຈຶ່ງເປັນການບໍ່ເໝາະສົມ ທີ່ຈະພະຍາຍາມບວກຄ່າລິຂະສິດເຂົ້າເພີ່ມ. ເຖິງຢ່າງໃດ ກໍ່ຕາມ, ຫາກຈຳນວນຄ່າລິຂະສິດນີ້ ຂຶ້ນຢູ່ກັບສິນຄ້ານຳເຂົ້າພຽງຢ່າງດຽວ ແລະ ສາມາດນັບຈຳນວນໄດ້ທັນທີ. ການບວກເພີ່ມເຂົ້າໄປໃນລາຄາ ທີ່ໄດ້ຊຳລະຕົວຈິງ ຫຼື ລາຄາທີ່ຈະຊຳລະ ກໍສາມາດເຮັດໄດ້.

11. ຄຳອະທິບາຍສຳລັບມາດຕາ 11

ສຳລັບຈຸດປະສົງຂອງມາດຕາ 11 "ເວລານຳສິນຄ້າເຂົ້າ" ອາດລວມເຖິງ ເວລາທີ່ນຳເຂົ້າສິນຄ້າ ເຂົ້າມາສຳລັບ ຈຸດປະສົງທາງພາສີ.

12. ຄຳອະທິບາຍສຳລັບມາດຕາ 13

ມາດຕາ 13 ກຳນົດໃຫ້ຜູ້ນຳເຂົ້າ ຫຼື ຜູ້ທີ່ຮັບຜິດຊອບເສຍຄ່າພາສີແລະພັນທະອື່ນໆ ມີສິດທີ່ຈະສະເໜີຄືນ ກ່ຽວກັບການກຳນົດມູນຄ່າແຈ້ງພາສີໂດຍລັດຖະການພາສີ ສຳລັບສິນຄ້າທີ່ກຳລັງປະເມີນມູນຄ່າແຈ້ງພາສີ. ການ ສະ ເໜີຄືນໃນຂັ້ນທຳອິດ ສາມາດຍື່ນຕໍ່ລັດຖະການພາສີຂັ້ນເທິງຖັດໄປ, ແຕ່ວ່າຜູ້ນຳເຂົ້າ ຈະມີສິດໃນການຍື່ນ ຄຳຮ້ອງຟ້ອງຕໍ່ສານປະຊາຊົນ ໄດ້ໃນຂັ້ນສຸດທ້າຍ.

ຜູ້ນຳເຂົ້າສິນຄ້າ ຫຼື ຜູ້ທີ່ຮັບຜິດຊອບເສຍຄ່າພາສີແລະພັນທະອື່ນໆ ຈະບໍ່ຖືກລົງໂທດດ້ວຍການປັບໃໝ ຫຼື ຖືກນາບຊູ່ຈະປັບໃໝ ດ້ວຍເຫດຜົນທີ່ວ່າຜູ້ນຳເຂົ້າ ຫຼື ຜູ້ທີ່ຮັບຜິດຊອບເສຍຄ່າພາສີແລະພັນທະອື່ນໆ ເລືອກ ທີ່ຈະໃຊ້ສິດທິໃນການສະເໜີຄືນ. ສຳລັບການເສຍຄ່າຂຶ້ນສານກັບຄ່າຈ້າງທະນາຍຄວາມ ຈະບໍ່ຖືກຕັດສິນວ່າເປັນ ການປັບໃໝ.

13. ການອະທິບາຍເພີ່ມເຕີມ

1.ໃນມາດຕາ 2 ຂໍ້ 3 ຂອງຂໍ້ຕົກລົງລັດຖະມົນຕີ ສະບັບເລກທີ 2095/ກງ, ລົງວັນທີ 26 ກັນຍາ 2011, ໃຫ້ ເຂົ້າໃຈວ່າ: ຜູ້ນຳເຂົ້າສິນຄ້າ ຫຼື ຜູ້ແຈ້ງພາສີ ມີໜ້າທີ່ແຈ້ງມູນຄ່າແຈ້ງພາສີ ໂດຍສອດຄ່ອງກັບ ບົດແນະນຳ ຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 1537/ກງ, ລົງວັນທີ 04 ມີຖຸນາ 2012 ວ່າດ້ວຍການ ກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ; ແລະ ຮັບຜິດຊອບຕໍ່ໜ້າກົດໝາຍພາສີ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ ຕໍ່ກັບຂໍ້ມູນເນື້ອໃນທີ່ຕີນໄດ້ແຈ້ງລົງໃນໃບແຈ້ງພາສີ.

15 | ບົດແນະນຳຂອງຫ້ອງໜ້າກົມພາສີວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ

2. ໃນມາດຕາ 11 ຂີດໜ້າທີ 3 ບົດແນະນຳຂອງກົມພາສີ ສະບັບເລກທີ 0266/ກງ, ລົງວັນທີ 04 ພະຈິກ 2011, ໃຫ້ເຂົ້າໃຈວ່າ: ເຈົ້າໜ້າທີ່ພາສີ ນຳໃຊ້ຖານຂໍ້ມູນລາຄາເພື່ອການຄຸ້ມຄອງຄວາມສ່ຽງເທົ່ານັ້ນ ແລະ ຈະບໍ່ນຳໃຊ້ຖານຂໍ້ມູນດັ່ງກ່າວເປັນມູນຄ່າແຈ້ງພາສີຕ່ຳສຸດ (ລາຄາກາງ).

14. ການຈັດຕັ້ງປະຕິບັດ

ມອບໃຫ້ພະແນກອ້ອມຂ້າງກົມພາສີ, ພາສີປະຈຳເຂດ, ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ, ທຸກພາກ ສ່ວນ ທີ່ກ່ຽວຂ້ອງ, ບຸກຄົນ ແລະ ນິຕິບຸກຄົນ ທີ່ດຳເນີນການນຳເຂົ້າສິນຄ້າ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ບົດແນະນຳສະບັບນີ້ ຕາມໜ້າທີ່ຂອງໃຜລາວ ຢ່າງເຂັ້ມງວດ.

15. ຜົນສັກສິດ

ບົດແນະນຳສັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນບົດແນະນຳ ສະບັບ ເລກທີ 2401/ກພສ, ລົງວັນທີ: 29 ກັນຍາ 2010.

ຫົວໜ້າກົມພາສີ,

ອາດສະພັ້ງທອງ ສີພັນດອນ
Athsaphangthong SIPHANDON

ນຳສົ່ງ :

- ລັດຖະມົນຕີວ່າການກະຊວງການເງິນ 1 ສະບັບ "ລາຍງານເພື່ອຊາບ"
- ຫ້ອງການກະຊວງອຸດສະຫະກຳ-ການຄ້າ 1 ສະບັບ "ເພື່ອຊາບ"
- ສະພາອຸດສະຫະກຳ-ການຄ້າ 1 ສະບັບ "ເພື່ອຊາບ"
- ພະແນກການກົມພາສີ, ພາສີປະຈຳເຂດ, ດ່ານພາສີ ບ່ອນລະ1 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ເກັບມ້ຽນສຳເນົາ 1 ສະບັບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

ກະຊວງການເງິນ

ເລກທີ 2095 /ກງ
ນະຄອນຫລວງວຽງຈັນ, ລົງວັນທີ 26 SEP 2011

ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ
ວ່າດ້ວຍການນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີ ສຳລັບສິນຄ້ານຳເຂົ້າເສຍພາສີ-ອາກອນ

****

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005.
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ ລົງວັນທີ 19 ຕຸລາ 2007.
- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 1398/ກງ ລົງວັນທີ 16 ມີຖຸນາ 2010 ວ່າດ້ວຍມູນຄ່າແຈ້ງພາສີສິນຄ້າຂາເຂົ້າ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານມູນຄ່າແຈ້ງພາສີ ໃຫ້ສອດຄ່ອງກັບຂໍ້ຕົກລົງທົ່ວໄປວ່າດ້ວຍພາສີ ແລະ ການຄ້າ ຂອງອົງການໆຄ້າໂລກ 1994 (GATT/WTO) ຫຼື ຂໍ້ຕົກລົງວ່າດ້ວຍການກຳນົດມູນຄ່າແຈ້ງພາສີຂອງອົງການໆຄ້າໂລກ (CVA), ທັງເປັນການສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ແກ່ການຄ້າ

ລັດຖະມົນຕີວ່າການກະຊວງການເງິນ ຕົກລົງ:

ມາດຕາ 1: ເຫັນດີໃຫ້ນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ, ປະກອບມີ 6 ແບບຟອມ, ຄື :

1. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ນຳໃຊ້ມູນຄ່າຊື້ຂາຍສິນຄ້າ, ລະຫັດ GATT/ກພສ-01 ແລະ ໃບຊ້ອນທ້າຍໃບແຈ້ງມູນຄ່າແຈ້ງພາສີ ລະຫັດ GATT/ກພສ-01/01;
2. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ນຳໃຊ້ມູນຄ່າຊື້ຂາຍສິນຄ້າຄືກັນ, ລະຫັດ GATT/ກພສ-02;

3. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ນຳໃຊ້ມູນຄ່າຊື້ຂາຍສິນຄ້າຄ້າຍຄືກັນ,ລະຫັດGATT/ກພສ-03;
4. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ນຳໃຊ້ການຫັກລົບມູນຄ່າສິນຄ້າ, ລະຫັດ GATT/ກພສ-04;
5. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ນຳໃຊ້ການຄຳນວນມູນຄ່າສິນຄ້າ, ລະຫັດ GATT/ກພສ-05;
6. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ນຳໃຊ້ວິທີສົມເຫດສົມຜົນ, ລະຫັດ GATT/ກພສ-06.

ມາດຕາ 2: ການນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ

ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ແມ່ນເອກະສານປະກອບ ໃບແຈ້ງພາສີເປັນລາຍລະອຽດ ນຳໃຊ້ສະເພາະການນຳເຂົ້າສິນຄ້າເຄື່ອງຂອງເຂົ້າມາສປປລາວ ໃນລະບອບເສຍພາສີ-ອາກອນ.

2. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ຈະບໍ່ຖືກນຳໃຊ້ສຳລັບສິນຄ້າສົ່ງອອກ; ສິນຄ້ານຳເຂົ້າຍົກເວັ້ນ, ຫລຸດຜ່ອນ, ງົດເກັບຄ່າພາສີ-ອາກອນ; ສິນຄ້າຜ່ານແດນສາກົນ; ສິນຄ້ານຳເຂົ້າເສຍພາສີ-ອາກອນ ທີ່ມີມູນຄ່າຕ່ຳກ່ວາ 5 ລ້ານກີບ ຕໍ່ການຂົນສົ່ງຕໍ່ຖ້ຽວ ແລະ ເຄື່ອງຂອງຕິດຕົວຜູ້ໂດຍສານ.

3. ຜູ້ນຳເຂົ້າເປັນຜູ້ພິຈາລະນາ ເລືອກນຳໃຊ້ວິທີການກຳນົດມູນຄ່າແຈ້ງພາສີ ນຶ່ງໃນຈຳນວນ 6 ວິທີການຕາມລຳດັບ ແລະ ປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີ ຕາມວິທີທີ່ໄດ້ເລືອກນຳໃຊ້ ແລະ ຄັດຕິດໃບແຈ້ງພາສີເປັນລາຍລະອຽດ ຍື່ນຕໍ່ເຈົ້າໜ້າທີ່ພາສີ ເພື່ອກວດສອບ.

4. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ປະກອບມີ 3 ສະບັບ, 01 ສະບັບ ສຳລັບ ຜູ້ນຳເຂົ້າ, 02 ສະບັບ ສຳລັບລັດຖະການພາສີ.

5. ມອບໃຫ້ກົມພາສີ ອອກບົດແນະນຳ ໃນການປະກອບຂໍ້ມູນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ແລະ ຈັດພິມໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ເພື່ອຈຳໜ່າຍແຈກຢາຍໃຫ້ແກ່ຜູ້ປະກອບການ. ພ້ອມນັ້ນ ກໍ່ໃຫ້ເອົາໃຈໃສ່ຈັດຕັ້ງເຜີຍແຜ່ລະບຽບການນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ໃຫ້ແກ່ເຈົ້າໜ້າທີ່ພາສີ ແລະ ພາກສ່ວນທຸລະກິດ ຢ່າງທົ່ວເຖິງ.

ມາດຕາ 3: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ແລະ ລັດຖະມົນຕີຊ່ວຍການກະຊວງການເງິນ,

ດຣ ນ.ວຽງທອງ ສີພັນດອນ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 00966/ກພສ
ນະຄອນຫຼວງວຽງຈັນ, ວັນທີ 04 NOV 2011

ບົດແນະນຳ
ກ່ຽວກັບການປະກອບໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ

- ອີງຕາມ ກົດໝາຍວ່າດ້ວຍພາສີ ເລກທີ 05/ສພຊ ລົງວັນທີ 20 ພຶດສະພາ 2005, ໝວດ 2, ມາດຕາ 13 ກ່ຽວກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້ານຳເຂົ້າ.
- ອີງຕາມບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 1398/ກງ, ລົງວັນທີ 16 ມີຖຸນາ 2010, ວ່າດ້ວຍມູນຄ່າແຈ້ງພາສີສິນຄ້າຂາເຂົ້າ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 2095/ກງ, ລົງວັນທີ 26/9/2011,ວ່າດ້ວຍການນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີ ສຳລັບສິນຄ້ານຳເຂົ້າເສຍພາສີ-ອາກອນ.
- ອີງຕາມ ບົດແນະນຳກົມພາສີ ສະບັບເລກທີ 2401/ກພສ ລົງວັນທີ 29/09/2010 ວ່າດ້ວຍການກຳນົດມູນຄ່າແຈ້ງພາສີ ສຳລັບສິນຄ້າເຄື່ອງຂອງນຳເຂົ້າ.

ກົມພາສີ ອອກບົດແນະນຳ, ຄື :

ມາດຕາ 1. ຈຸດປະສົງ

ບົດແນະນຳສະບັບນີ້ ແມ່ນເພື່ອແນະນຳການປະກອບຂໍ້ມູນລາຄາສິນຄ້າ, ເຄື່ອງຂອງ ລົງໃນໃບແຈ້ງມູນຄ່າແຈ້ງພາສີ ຊຶ່ງຕິດພັນກັບການປະກອບໃບແຈ້ງພາສີເປັນລາຍລະອຽດ ສຳລັບສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າເສຍພາສີ-ອາກອນ ຕາມລະບຽບກົດໝາຍ. ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ໃຫ້ຖືກຕ້ອງຕາມແບບພິມທີ່ກຳນົດໄວ້ ແລະ ສອດຄ່ອງກັບ ຫຼັກການປະເມີນມູນຄ່າແຈ້ງພາສີຂາເຂົ້າ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ບົດແນະນຳຂອງກົມພາສີ.

ມາດຕາ 2 . ອະທິບາຍຄຳສັບ.

ປະໂຫຍກ ຫລື ຄຳສັບທີ່ໃຊ້ໃນບົດແນະນຳ ສະບັບນີ້ ແມ່ນຜັນຂະຫຍາຍຈາກລະບຽບການຂອງສາກົນ ຊຶ່ງເອີ້ນວ່າ: ຂໍ້ຕົກລົງທົ່ວໄປວ່າດ້ວຍພາສີ ແລະ ການຄ້າ, ຊຶ່ງເປັນອັກສອນຫຍໍ້ " ຂວພຄ

" ເປັນພາສາສາກົນເອີ້ນວ່າ: THE GENERAL AGREEMENT ON TARIFFS AND TRADE 1994 ຂຽນຫຍໍ້ເປັນອັກສອນສາກົນ (GATT 1994).

ມາດຕາ 3 . ລັກສະນະທາງດ້ານນິຕິກຳຂອງໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ .

1. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ແມ່ນອົງປະກອບໜຶ່ງ ໃນການແຈ້ງພາສີເປັນລາຍລະອຽດ ສຳລັບການນຳເຂົ້າເສຍພາສີ-ອາກອນ ຊຶ່ງຕ້ອງໄດ້ຄັດຕິດໃສ່ໃບແຈ້ງພາສີເປັນລາຍລະອຽດ ທຸກຄັ້ງໃນເວລາ ແຈ້ງພາສີ.
2. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ຕ້ອງປະກອບເປັນ 3 ສະບັບ, 02 ສະບັບ ສຳລັບລັດຖະການພາສີ, 01 ສະບັບ ສຳລັບຜູ້ແຈ້ງພາສີ.
3. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ຖືກເກັບຮັກສາໄວ້ນຳໃບແຈ້ງພາສີເປັນລາຍລະອຽດ ພາຍໃນກຳນົດ 03 ປີ ຕາມລະບຽບກົດໝາຍພາສີ.
4. ຜູ້ແຈ້ງພາສີ ມີໜ້າທີ່ແຈ້ງບັນດາຂໍ້ມູນຕ່າງໆ ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ໃຫ້ຖືກຕ້ອງຄົບຖ້ວນ, ຮັບຜິດຊອບຕໍ່ໜ້າກົດໝາຍກ່ຽວກັບທຸກເນື້ອໃນທີ່ໄດ້ແຈ້ງ ແລະ ເປັນຜູ້ພິຈາລະນາດ້ວຍຕົນເອງ ໃນການແຈ້ງມູນຄ່າສິນຄ້າລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າໃນແບບພິມໃດໜຶ່ງໃຫ້ຖືກຕ້ອງຕາມຫຼັກການທີ່ໄດ້ນຳໃຊ້ ໂດຍສອດຄ່ອງກັບລະບຽບກົດໝາຍ ແລະຍົດແນະນຳຂອງກົມພາສີ.

ມາດຕາ 4 . ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.

ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ປະກອບມີ 6 ປະເພດ, ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ, ລະອຽດດັ່ງນີ້:

1. ໃບແຈ້ງມູນຄ່າແຈ້ງພາສີສິນຄ້າຂາເຂົ້າ ລະຫັດ GATT/ພສ-01 ແລະ ໃບຊ້ອນທ້າຍ ລະຫັດ GATT/ພສ-01/01 ນຳໃຊ້ສຳລັບການປະເມີນມູນຄ່າສິນຄ້ານຳເຂົ້າ ຕາມຫຼັກການມູນຄ່າຊື້-ຂາຍສິນຄ້າຕົວຈິງ.
2. ໃບແຈ້ງມູນຄ່າແຈ້ງພາສີສິນຄ້າຂາເຂົ້າ ລະຫັດ GATT/ພສ-02, ນຳໃຊ້ສຳລັບການປະເມີນມູນຄ່າສິນຄ້ານຳເຂົ້າ ຕາມຫຼັກການ ລາຄາຊື້-ຂາຍສິນຄ້າຄືກັນ.
3. ໃບແຈ້ງມູນຄ່າແຈ້ງພາສີສິນຄ້າຂາເຂົ້າ ລະຫັດ GATT/ພສ-03, ນຳໃຊ້ສຳລັບການປະເມີນມູນຄ່າສິນຄ້ານຳເຂົ້າ ຕາມຫຼັກການລາຄາຊື້-ຂາຍສິນຄ້າທີ່ຄ້າຍຄືກັນ.
4. ໃບແຈ້ງມູນຄ່າແຈ້ງພາສີສິນຄ້າຂາເຂົ້າ ລະຫັດ GATT/ພສ-04, ນຳໃຊ້ສຳລັບການປະເມີນມູນຄ່າສິນຄ້ານຳເຂົ້າ ຕາມຫຼັກການຫັກລົບລາຄາສິນຄ້າ.
5. ໃບແຈ້ງມູນຄ່າແຈ້ງພາສີສິນຄ້າຂາເຂົ້າ ລະຫັດ GATT/ພສ-05, ນຳໃຊ້ສຳລັບການປະເມີນມູນຄ່າສິນຄ້ານຳເຂົ້າ ຕາມຫຼັກການຄຳນວນລາຄາສິນຄ້າ.
6. ໃບແຈ້ງມູນຄ່າແຈ້ງພາສີສິນຄ້າຂາເຂົ້າ ລະຫັດ GATT/ພສ-06, ນຳໃຊ້ສຳລັບການປະເມີນມູນຄ່າສິນຄ້ານຳເຂົ້າ ຕາມຫຼັກການຍ້ອນຄືນທີ່ສົມເຫດສົມຜົນ.

ມາດຕາ 5. ຫຼັກການລວມໃນການປະກອບຂໍ້ມູນ.

1. ມູນຄ່າສິນຄ້າ ທີ່ແຈ້ງລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ແມ່ນເປັນພື້ນຖານຄິດໄລ່ຄ່າພາສີ ແລະ ພັນທະອື່ນໆ ຂອງໜຶ່ງຫົວໜ່ວຍສິນຄ້ານຳເຂົ້າ.
2. ໃນກໍລະນີ ການນຳໃຊ້ແບບພິມໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ຕາມຫຼັກການ 2,3,4,5,6 ບໍ່ພຽງພໍ ໃນການໃຫ້ເຫດຜົນ ຫລື ຄຳອະທິບາຍ, ຜູ້ແຈ້ງພາສີ ສາມາດພິມຄຳອະທິບາຍເພີ່ມເຕີມ ລົງໃນໃບ ເຈ້ຍຕ່າງຫາກ.
3. ຂໍ້ມູນໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ຕ້ອງສອດຄ່ອງ ແລະ ກົມກຽວກັບຂໍ້ມູນ ທີ່ໄດ້ແຈ້ງໃນໃບ ແຈ້ງພາສີເປັນລາຍລະອຽດ ຕາມລຳດັບຂອງລາຍການສິນຄ້າ.

   ຕົວຢ່າງ:

   - ລາຍການສິນຄ້າ ລຳດັບທີ 1 ຢູ່ໃບແຈ້ງພາສີເປັນລາຍລະອຽດ ແມ່ນກ້ຽງ.
   - ເລກລຳດັບສິນຄ້າ ທີ່ຕ້ອງລະບຸຢູ່ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ແມ່ນເລກລຳດັບທີ 1 ຄືກັນ (ບໍ່ຕ້ອງລະບຸລາຍການສິນຄ້າ).
4. ອັດຕາແລກປ່ຽນທີ່ໃຊ້ຄິດໄລ່ມູນຄ່າແຈ້ງພາສີເປັນເງິນຕາ ມາເປັນເງິນກີບ ແມ່ນໃຫ້ປະຕິບັດເປັນ ເອກະພາບກັບໃບແຈ້ງພາສີເປັນລາຍລະອຽດ ໃນຫ້ອງທີ 23.

ມາດຕາ 6. ການປະກອບຂໍ້ມູນລົງໃນໃບແຈ້ງຕາມຫຼັກການລາຄາຊື້-ຂາຍສິນຄ້າຕົວຈິງ (GATT/ພສ-01).

ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ລະຫັດ GATT/ພສ-01 ສາມາດແຈ້ງໄດ້ສູງສຸດ 10 ລາຍການ. ກໍລະນີ ສິນຄ້ານຳເຂົ້າມີຫຼາຍກວ່າ 10 ລາຍການ ແມ່ນໃຫ້ນຳໃຊ້ແບບພິມໃບຊ້ອນທ້າຍ ລະຫັດGATT/ພສ-01/01

ຫ້ອງຂໍ້ມູນ	ວິທີການປະກອບຂໍ້ມູນ
▪ **ຂໍ້ມູນສະເພາະສຳລັບຜູ້ແຈ້ງພາສີ**	
- ຄັດຕິດໃບແຈ້ງພາສີເປັນ ລາຍລະອຽດ, - ດ່ານພາສີ -ຈຳນວນລາຍການສິນຄ້າ - ຈຳນວນໃບຊ້ອນທ້າຍ	- ຂຽນເລກທີ, ວັນທີ ຂອງໃບແຈ້ງພາສີເປັນລາຍລະອຽດ. - ຂຽນຊື່ດ່ານບ່ອນສິນຄ້ານຳເຂົ້າ. - ຂຽນຈຳນວນລວມລາຍການສິນຄ້າ ທີ່ກຳນົດມູນຄ່າແຈ້ງພາສີ. - ຂຽນຈຳນວນໃບຊ້ອນທ້າຍ ຂອງໃບແຈ້ງມູນຄ່າແຈ້ງພາສີ.
ຫ້ອງທີ 1	- ຂຽນວັນທີ, ເດືອນ, ປີ ຂອງໃບຂົນສົ່ງສິນຄ້າ. - ເງື່ອນໄຂການສົ່ງມອບສິນຄ້າ ແມ່ນໃຫ້ກຳນົດຕາມສັນຍາຊື້-ຂາຍ ຫຼື ໃບ ອິນວອຍ .
ຫ້ອງທີ 2	- ຖ້າແຈ້ງວ່າ**"ແມ່ນ"** ໝາຍເຖິງຜູ້ຊື້ມີສິດນຳໃຊ້ສິນຄ້າ ພາຍຫລັງການນຳເຂົ້າ. - ຖ້າແຈ້ງວ່າ**"ບໍ່ແມ່ນ"** ໝາຍເຖິງຜູ້ຊື້ບໍ່ມີສິດນຳໃຊ້ສິນຄ້າ ພາຍຫລັງການນຳ ເຂົ້າ.

ຫ້ອງທີ 3	- ແຈ້ງວ່າ"**ແມ່ນ**" ໝາຍເຖິງການຂາຍສິນຄ້າ ຫຼື ລາຄາສິນຄ້າ ໄດ້ຂຶ້ນກັບເງື່ອນ ໄຂໃດໜຶ່ງ ທີ່ເຮັດໃຫ້ບໍ່ສາມາດປະເມີນມູນຄ່າແຈ້ງພາສີ ຂອງສິນຄ້ານຳເຂົ້າ. ຕົວຢ່າງ: ປຶ້ມ ແລະ ບັກ ຖືກຫຸ້ມຫໍ່ລວມກັນເພື່ອຂາຍຍ່ອຍ, ຜູ້ຊື້ ແລະ ຜູ້ຂາຍ ໄດ້ຕົກລົງລາຄາເປັນແຕ່ລະຫໍ່ເພື່ອຂາຍຍ່ອຍ, ສະນັ້ນ ຈະບໍ່ສາມາດກຳນົດລາຄາຫົວໜ່ວຍຂອງປຶ້ມ ແລະ ບັກ ໄດ້. - ຖ້າແຈ້ງວ່າ "**ບໍ່ແມ່ນ**" ໝາຍເຖິງການຂາຍສິນຄ້າ ຫຼື ລາຄາສິນຄ້າ ບໍ່ຂຶ້ນກັບເງື່ອນໄຂໃດໆ.
ຫ້ອງທີ 4	- ຖ້າແຈ້ງວ່າ "**ແມ່ນ**" ໝາຍເຖິງພາຍຫລັງການຂາຍ ຜູ້ຊື້ຕ້ອງໄດ້ຈ່າຍເງິນຕື່ມ ຕາມຈຳນວນເງິນໃດໜຶ່ງ ເຊິ່ງແມ່ນລາຍໄດ້ຈາກການຂາຍຕໍ່ ທີ່ເພີ່ມລາຍໄດ້ໃຫ້ແກ່ຜູ້ຂາຍ ໂດຍທາງກົງ ຫຼື ທາງອ້ອມ. ໃນກໍລະນີດັ່ງກ່າວແມ່ນໃຫ້ແຈ້ງຕໍ່ໄປວ່າ ແມ່ນຄ່າໃຊ້ຈ່າຍທີ່ລະບຸ ໃນຫ້ອງທີ 15 ຫຼື ບໍ່?. + ຖ້າຕອບວ່າ "**ບໍ່ແມ່ນ**" ຜູ້ແຈ້ງພາສີ ຕ້ອງນຳໃຊ້ຫຼັກການປະເມີນມູນຄ່າແຈ້ງພາສີຕາມຫຼັກການອື່ນ ເພື່ອກຳນົດມູນຄ່າແຈ້ງພາສີ. + ຖ້າຕອບວ່າ "**ແມ່ນ**" ຜູ້ແຈ້ງພາສີ ສືບຕໍ່ແຈ້ງໃນໃບແຈ້ງມູນຄ່ານີ້. - ຖ້າແຈ້ງວ່າ "**ບໍ່ແມ່ນ**" ໃຫ້ສືບຕໍ່ແຈ້ງໃນໃບແຈ້ງມູນຄ່ານີ້.
ຫ້ອງທີ 5	- ຖ້າແຈ້ງວ່າ "**ມີ**" ການພົວພັນແບບພິເສດ ລະຫ່ວາງ ຜູ້ຊື້ ແລະ ຜູ້ຂາຍ ແມ່ນໜຶ່ງໃນບັນດາກໍລະນີພົວພັນ ທີ່ໄດ້ກຳນົດ ຢູ່ໃນອັກ8 ມາດຕາ 2 ຂອງ ບົດແນະນຳລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1398/ກງ ລົງວັນທີ 16/06/2010. ກໍລະນີສາຍພົວພັນແບບພິເສດ ມີຜົນກະທົບເຖິງ ລາຄາ, ຜູ້ແຈ້ງພາສີ ໃຫ້ນຳໃຊ້ຫຼັກການ ຕໍ່ໄປຕາມລຳດັບ ໃນການກຳນົດມູນຄ່າແຈ້ງພາສີ. - ຖ້າແຈ້ງວ່າ "**ບໍ່ມີ**" ກໍລະນີສາຍພົວພັນລະຫ່ວາງຜູ້ຊື້ແລະຜູ້ຂາຍ ບໍ່ນອນໃນເງື່ອນໄຂ ອັກ8 ມາດຕາ 2 ຂອງບົດແນະນຳລັດຖະມົນຕີກະຊວງການເງິນ ສະບັບເລກທີ 1398/ກງ ລົງວັນທີ 16/6/2010 ໃຫ້ສືບຕໍ່ແຈ້ງໃນໃບແຈ້ງມູນຄ່ານີ້.
ຫ້ອງທີ 6	ຫ້າມແຈ້ງຊື່ສິນຄ້າ, ໃຫ້ຂຽນແຕ່ເລກລຳດັບຂອງແຕ່ລະລາຍການສິນຄ້າ ຕາມເລກລຳດັບທີ່ໄດ້ແຈ້ງໃນໃບແຈ້ງພາສີເປັນລາຍລະອຽດ.
ຫ້ອງທີ 7	- ໃຫ້ແຈ້ງຕາມລາຄາໃນອິນວອຍ ຕົວຢ່າງ1: ໃບອິນວອຍສະແດງ: + ລາຄາໃນອິນວອຍ: 1000 USD/ຊຸດ CIF ຂົວມິດຕະພາບ I, ແມ່ນແຈ້ງຢູ່ຫ້ອງທີ 7. + ຄ່າທຳນຽມໃບອະນຸຍາດ: 20 USD/ຊຸດ ແຈ້ງຢູ່ຫ້ອງທີ 14. ຕົວຢ່າງ2: ໃບອິນວອຍສະແດງ: + ລາຄາໃນອິນວອຍ: 1000USD/ຊຸດ FOB ດ່ານໜອງຄາຍ(ໄທ),

	ແມ່ນແຈ້ງຢູ່ຫ້ອງທີ 7 + ຄ່າຂົນສົ່ງ (F): 100 USD/ຊຸດ, ແຈ້ງຢູ່ຫ້ອງທີ 16 + ຄ່າປະກັນໄພ (I): 7 USD/ຊຸດ ແຈ້ງຢູ່ຫ້ອງທີ 17. - ໃນຕົວຢ່າງທີ1 ຖ້າລາຄາທີ່ລະບຸໃນອິນວອຍ ໄດ້ລວມທັງຄ່າຂົນສົ່ງ ແລະ ຄ່າປະກັນໄພ(CIF)ແລ້ວ ແມ່ນບໍ່ຈຳເປັນຕ້ອງແຍກບັນດາຄ່າໃຊ້ຈ່າຍນີ້ອອກຈາກກັນ ເພື່ອແຈ້ງເຂົ້າໃນຫ້ອງທີ 16 ແລະ ຫ້ອງທີ 17.
ຫ້ອງທີ 8	- ແຈ້ງບັນດາຄ່າໃຊ້ຈ່າຍທາງອ້ອມ ທີ່ຍັງບໍ່ໄດ້ລວມໃນລາຄາອິນວອຍ (ຫ້ອງທີ 7). - ກໍລະນີການຊື້-ຂາຍສິນຄ້າ ຫຼື ລາຄາຂອງສິນຄ້າ ຂຶ້ນກັບເງື່ອນໄຂໃດໜຶ່ງ ທີ່ໄດ້ແຈ້ງຢູ່ຂໍ້ທີ 3, ແຕ່ຜູ້ຊື້ ມີເອກະສານປະກອບອ້າງອີງ ທີ່ເຊື່ອຖືໄດ້ ເພື່ອກຳນົດລະດັບຜົນກະທົບເປັນຈຳນວນເງິນຂອງເງື່ອນໄຂທີ່ຂຶ້ນກັບນັ້ນ, ຜູ້ແຈ້ງພາສີ ໃຫ້ແຈ້ງບ້ວງເງິນ ທີ່ໄດ້ຫຼຸດຍ້ອນຜົນກະທົບນັ້ນ ລົງໃນຫ້ອງນີ້. ຕົວຢ່າງ: ຜູ້ສົ່ງອອກຕົກລົງຂາຍ ໜໍ້ທຸ່ງເຂົ້າໄຟຟ້າ ໃຫ້ຜູ້ນຳເຂົ້າ ຈຳນວນ 5.000 ໜ່ວຍ, ແລະຈະໄດ້ຮັບສ່ວນຫຼຸດ 1000 USD ໃນຈຳນວນມູນຄ່າລວມ, ຖ້າຜູ້ນຳເຂົ້າ ຍອມຊື້ຕື່ມ ຖາດວາງຈານ ຈາກຜູ້ຂາຍຈຳນວນ 100 ຊຸດ. ມູນຄ່າສ່ວນຫລຸດ 1000 USD ຈະຕ້ອງໄດ້ແຈ້ງຢູ່ໃນຫ້ອງທີ 8, ພາຍຫລັງໄດ້ໄລ່ລ່ຽງສ່ວນຫຼຸດ(1.000 USD) ກັບຈຳນວນໜໍ້ທຸ່ງເຂົ້າໄຟຟ້າ (5.000 ໜ່ວຍ) ຕໍ່ໜຶ່ງຫົວໜ່ວຍສິນຄ້າ.
ຫ້ອງທີ 9	ແຈ້ງບັນດາລາຍຈ່າຍລ່ວງໜ້າ, ເງິນມັດຈຳລ່ວງໜ້າ ທີ່ພົວພັນເຖິງການຊື້ສິນຄ້ານຳເຂົ້າ, ຖ້າຍັງບໍ່ທັນໄດ້ລວມໃນລາຄາຊື້ ທີ່ລະບຸໃນອິນວອຍ (ຫ້ອງທີ 7).
ຫ້ອງທີ 10 ເຖິງ ຫ້ອງທີ 17	ແມ່ນບັນດາຄ່າໃຊ້ຈ່າຍ ທີ່ຕ້ອງບວກເຂົ້າໃນມູນຄ່າແຈ້ງພາສີ ຊຶ່ງຜູ້ຊື້ເປັນຜູ້ຈ່າຍ ທີ່ກ່ຽວພັນກັບສິນຄ້ານຳເຂົ້າ ແລະ ຍັງບໍ່ທັນໄດ້ລວມໃນລາຄາຊື້-ຂາຍໃນອິນວອຍ (ຫ້ອງທີ 7).
ຫ້ອງທີ 14	ໃນກໍລະນີ ມີຄ່າລິຂະສິດ ຫລື ຄ່າທຳນຽມໃບອະນຸຍາດ ແຕ່ໃນໄລຍະເວລາແຈ້ງພາສີເປັນລາຍລະອຽດ ຜູ້ແຈ້ງພາສີບໍ່ສາມາດກຳນົດໄດ້ ຄ່າລິຂະສິດ ຫຼື ຄ່າທຳນຽມໃບອະນຸຍາດດັ່ງກ່າວ ເພື່ອແຈ້ງຕໍ່ລັດຖະການພາສີ, ຜູ້ແຈ້ງພາສີ ຕ້ອງໄດ້ລະບຸລົງໃນໃບແຈ້ງມູນຄ່າແຈ້ງພາສີວ່າ **"ຈະແຈ້ງຕາມພາຍຫລັງ"**.
ຫ້ອງທີ 18 ເຖິງ ຫ້ອງທີ 22	ແມ່ນບັນດາຄ່າໃຊ້ຈ່າຍທີ່ສາມາດລົບອອກໄດ້ຈາກລາຄາສິນຄ້າ ຖ້າໄດ້ລວມຢູ່ໃນມູນຄ່າຊື້ຂາຍ (ຫ້ອງທີ 7, 8, 9).
ຫ້ອງທີ 22	- ຄ່າສ່ວນຫຼຸດ ທີ່ອະນຸຍາດໃຫ້ລົບອອກລາຄາສິນຄ້າໄດ້ ກໍ່ຕໍ່ເມື່ອສິນຄ້າເຄື່ອງຂອງໄດ້ຖືກຈັດແຈງຂຶ້ນພາຫະນະຂົນສົ່ງຢູ່ປະເທດສົ່ງອອກແລ້ວ ແລະ ຕ້ອງມີເອກະສານຢັ້ງຢືນຈາກຜູ້ຂາຍ ຢູ່ປະເທດສົ່ງອອກສິນຄ້າ ເພື່ອຄັດຕິດໃບແຈ້ງພາສີເປັນລາຍລະອຽດ.

	- ຜູ້ແຈ້ງພາສີ ຕ້ອງຮັບຜິດຊອບຕໍ່ຄ່າສ່ວນຫຼຸດ ທີ່ໄດ້ແຈ້ງລົງໃນໃບແຈ້ງມູນຄ່າແຈ້ງພາສີ.
ຫ້ອງທີ 23	ມູນຄ່າແຈ້ງພາສີເປັນເງິນຕາຕ່າງປະເທດ ຂອງໜຶ່ງຫົວໜ່ວຍສິນຄ້າ ເພື່ອຄິດໄລ່ພາສີ-ອາກອນ ເທົ່າກັບຈຳນວນລວມຂອງບັນດາຫ້ອງທີ 7 ເຖິງ 17 ແລະ ລົບອອກບັນດາຫ້ອງທີ 18 ເຖິງ 22.
ຫ້ອງທີ 24	ແມ່ນມູນຄ່າແຈ້ງພາສີເປັນເງິນກີບ ຂອງໜຶ່ງຫົວໜ່ວຍສິນຄ້າ ໂດຍນຳໃຊ້ອັດຕາແລກ ປ່ຽນ ໃນຫ້ອງທີ 23 ຂອງໃບແຈ້ງພາສີເປັນລາຍລະອຽດ.
ຫ້ອງທີ 25	ຊຽນວັນເດືອນປີ ຂອງວັນທີ່ຍື່ນໃບແຈ້ງພາສີເປັນລາຍລະອຽດ, ລົງລາຍເຊັນ ແລະ ຊຽນຊື່ນາມສະກຸນ, ຖານະຜູ້ແຈ້ງ, ປະທັບກາຂອງບໍລິສັດ.
▪ **ຂໍ້ມູນສະເພາະສຳລັບເຈົ້າໜ້າທີ່ພາສີ**	
ຫ້ອງທີ 26	- ເຈົ້າໜ້າທີ່ພາສີຜູ້ຮັບເອກະສານໃບແຈ້ງມູນຄ່າແຈ້ງພາສີ ກວດກາບັນດາເນື້ອໃນຂໍ້ມູນ ທີ່ໄດ້ແຈ້ງລົງໃນໃບແຈ້ງມູນຄ່າແຈ້ງພາສີ ໃຫ້ຄົບຖ້ວນ, ບໍ່ໃຫ້ມີຮອຍຂີດຂ້າ ຫລື ເປີເປື້ອນ. ຈາກນັ້ນໃຫ້ລົງລາຍເຊັນ ແລະ ຊື່ນາມສະກຸນ, ຈັດສົ່ງເອກະສານໃຫ້ເຈົ້າໜ້າທີ່ພາສີ ຜູ້ຮັບຜິດຊອບກວດກາມູນຄ່າແຈ້ງພາສີ. - ໃນກໍລະນີມີໃບຊ້ອນທ້າຍ, ເຈົ້າໜ້າທີ່ພາສີ ຜູ້ຮັບເອກະສານ ກໍ່ຕ້ອງໄດ້ກວດກາ ແລະ ເຊັນຢັ້ງຢືນໃຫ້ຄົບຖ້ວນ.
ຫ້ອງທີ 27	- ເຈົ້າໜ້າທີ່ພາສີຜູ້ກວດກາມູນຄ່າແຈ້ງພາສີ ຊຽນຄຳເຫັນກ່ຽວກັບຜົນຂອງການກວດກາມູນຄ່າແຈ້ງພາສີ ລົງໃນໃບແຈ້ງມູນຄ່າແຈ້ງພາສີ ສະບັບສຳເນົາຂອງລັດຖະການພາສີ, ສ່ວນສະບັບຂອງຜູ້ແຈ້ງພາສີ ໃຫ້ລົງລາຍເຊັນ, ຊື່ແລະນາມສະກຸນເທົ່ານັ້ນ. - ການຊຽນຄຳເຫັນດ້ານວິຊາການໃຫ້ປະຕິບັດຕາມເນື້ອໃນດັ່ງລຸ່ມນີ້: + ຮັບຮອງເບື້ອງຕົ້ນ ຕໍ່ມູນຄ່າແຈ້ງພາສີ ຂອງຜູ້ແຈ້ງພາສີ. + ບໍ່ຍອມຮັບມູນຄ່າແຈ້ງພາສີ ໃນຫຼັກການທີ1, ປະເມີນຄືນມູນຄ່າແຈ້ງພາສີ ໂດຍໃຫ້ຊຽນລະອຽດຫຼັກການປະເມີນທີ່ຄວນຈະນຳໃຊ້ ຕາມລະບຽບການ. + ສະເໜີຮ້ອງໃຫ້ຜູ້ປະກອບການ ເຂົ້າມາໃຫ້ຂໍ້ມູນເພີ່ມເຕີມ. + ສະເໜີຮ້ອງໃຫ້ມີການກວດສອບຄືນການແຈ້ງພາສີ, ພ້ອມດ້ວຍໃຫ້ເຫດຜົນ. + ບັນດາເນື້ອໃນທີ່ຕ້ອງໄດ້ສືບຕໍ່ກວດກາ. + ຄຳເຫັນດ້ານວິຊາການອື່ນໆ.

ມາດຕາ 7. **ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີ ຕາມຫຼັກການລາຄາຊື້-ຂາຍສິນຄ້າຄືກັນ ແລະ ຄ້າຍຄືກັນ (GATT/ພສ-02 ແລະ GATT/ພສ-03).**

ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີ ຕາມຫຼັກການລາຄາຊື້-ຂາຍສິນຄ້າຄືກັນ ແລະ ຄ້າຍຄືກັນ ແມ່ນມີຫຼັກການລວມໃນການປະກອບຂໍ້ມູນອັນດຽວກັນ ແລະ ປະຕິບັດດັ່ງນີ້:

- ຄັດຕິດໃບແຈ້ງພາສີເປັນລາຍລະອຽດ : ໃຫ້ແຈ້ງເລກທີ, ວັນເດືອນປີ ແລະ ດ່ານນຳເຂົ້າ ຂອງໃບແຈ້ງພາສີເປັນລາຍລະອຽດ ທີ່ຄັດຕິດ ໃຫ້ຖືກຕ້ອງຄົບຖ້ວນ.
- ລຳດັບໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ: ໃນກໍລະນີມີ 1 ລາຍການ ໃຫ້ 1/1; ໃນກໍລະນີມີ 2 ລາຍການ ໃຫ້ໝາຍໃສ່ໃບທີ1/2, ໃບທີ2 ໃຫ້ໝາຍ 2/2, ...
- ເຫດຜົນທີ່ບໍ່ນຳໃຊ້ຫຼັກການປະເມີນມູນຄ່າແຈ້ງພາສີກ່ອນໜ້ານັ້ນ (ຫຼັກການທີ1 ແລະ ຫຼັກການທີ2 ຕາມແຕ່ລະກໍລະນີ): ຜູ້ແຈ້ງພາສີ ຕ້ອງໃຫ້ເຫດຜົນ.
- ຊື່ສິນຄ້າທີ່ຕ້ອງການປະເມີນມູນຄ່າແຈ້ງພາສີ: ໃຫ້ແຈ້ງລະອຽດ ຊື່ສິນຄ້າ, ຂະໜາດ, ຄຸນລັກສະນະ ຂອງສິນຄ້າ ໂດຍໃຫ້ສອດຄ່ອງກັບສັນຍາຊື້-ຂາຍ.
  + ຂຽນເລກລຳດັບລາຍການສິນຄ້າ ໃນໃບແຈ້ງພາສີເປັນລາຍລະອຽດ (ສິນຄ້າທີ່ຕ້ອງການປະເມີນມູນຄ່າແຈ້ງພາສີ) ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.
  + ວັນສົ່ງອອກ: ຂຽນວັນທີ,ເດືອນ,ປີ ຂອງໃບຂົນສົ່ງສິນຄ້າ ທີ່ກຳລັງປະເມີນມູນຄ່າແຈ້ງພາສີ.
- ຊື່ສິນຄ້ານຳເຂົ້າທີ່ຄືກັນ/ຄ້າຍຄືກັນ: ຕ້ອງເປັນສິນຄ້າທີ່ໄດ້ນຳເຂົ້າມາ ແລະ ໄດ້ຜ່ານການແຈ້ງພາສີເປັນລາຍລະອຽດ ໃນຫຼັກການທີ1 ຈຶ່ງສາມາດນຳມາສົມທຽບດ້ານມູນຄ່າແຈ້ງພາສີໄດ້.
  + ຂຽນເລກລຳດັບລາຍການສິນຄ້າໃນໃບແຈ້ງພາສີເປັນລາຍລະອຽດ (ສິນຄ້ານຳເຂົ້າຄືກັນ/ຄ້າຍຄືກັນທີ່ນຳມາອ້າງອີງ) ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.
  + ຂຽນເລກທີ...ວັນ ເດືອນ ປີ ໃບແຈ້ງພາສີເປັນລາຍລະອຽດ (ສິນຄ້ານຳເຂົ້າຄືກັນ/ຄ້າຍຄືກັນ ທີ່ນຳມາອ້າງອີງ); ພ້ອມທັງລະບຸດ່ານນຳເຂົ້າ.
  + ວັນສົ່ງອອກ: ຂຽນວັນທີ,ເດືອນ,ປີ ຂອງໃບຂົນສົ່ງຂອງສິນຄ້າ ຄືກັນ/ຄ້າຍຄືກັນ ທີ່ນຳມາອ້າງອີງ.
- ມູນຄ່າແຈ້ງພາສີຂອງສິນຄ້ານຳເຂົ້າຄືກັນ/ຄ້າຍຄືກັນ: ແມ່ນມູນຄ່າແຈ້ງພາສີ ເປັນເງິນຕາຕໍ່ໜຶ່ງຫົວໜ່ວຍສິນຄ້າທີ່ກຳນົດໃນຫ້ອງ 23 ຂອງໃບແຈ້ງມູນຄ່າແຈ້ງພາສີ ທີ່ນຳມາສົມທຽບ.
- ບັນດາຄ່າດັດປັບ: ກໍລະນີສິນຄ້ານຳເຂົ້າທີ່ຄືກັນ /ຄ້າຍຄືກັນ ມີເງື່ອນໄຂທາງດ້ານການຄ້າ , ການຂົນສົ່ງ ແລະ ອື່ນໆ ຄືກັນກັບສິນຄ້າທີ່ກຳລັງປະເມີນມູນຄ່າແຈ້ງພາສີນັ້ນ ຜູ້ແຈ້ງພາສີ ຕ້ອງກຳນົດ ບັນດາຄ່າດັດປັບ, ຖ້າຄ່າດັດປັບເພີ່ມຂຶ້ນ ແມ່ນໃຫ້ໝາຍສັນຍາລັກບວກ (+), ຖ້າຄ່າດັດປັບຫລຸດລົງ ແມ່ນໃຫ້ໝາຍສັນຍາລັກລົບ (-) ໃສ່ດ້ານໜ້າຂອງຄ່າດັດປັບນັ້ນ ແລະ ຂຽນໃສ່ຫ້ອງເງິນຕາຕ່າງປະເທດ.
- ມູນຄ່າແຈ້ງພາສີສິນຄ້າທີ່ກຳລັງປະເມີນ ພາຍຫລັງມີການດັດປັບ: ແມ່ນມູນຄ່າແຈ້ງພາສີສິນຄ້າຄືກັນ/ຄ້າຍຄືກັນ ທີ່ນຳມາສົມທຽບ ບວກ ຫຼື ລົບ ກັບບັນດາຄ່າດັດປັບ.
- ອະທິບາຍບັນດາຄ່າດັດປັບ: ຜູ້ແຈ້ງພາສີ ຕ້ອງອະທິບາຍລາຍລະອຽດ ວິທີກຳນົດ ບັນດາຄ່າດັດປັບ.
- ເອກະສານອ້າງອີງຄັດຕິດ: ໃຫ້ສະແດງບັນດາເອກະສານອ້າງອີງ ເພື່ອເປັນບ່ອນອີງໃນການປະເມີນມູນຄ່າແຈ້ງພາສີຂາເຂົ້າ ຕາມລະບຽບກົດໝາຍ ແລະ ບົດແນະນຳກົມພາສີ ພ້ອມທັງຄັດຕິດໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.
- ການຢັ້ງຢືນຂອງຜູ້ແຈ້ງພາສີ: ຂຽນວັນເດືອນປີ ແລະ ລົງລາຍເຊັນ, ຊື່ແລະນາມສະກຸນ, ຖານະຂອງຜູ້ແຈ້ງ, ປະທັບການບໍລິສັດ ລົງໃນໃບແຈ້ງມູນຄ່າແຈ້ງພາສີ.

ມາດຕາ 8. ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີ ຕາມຫຼັກການຫັບລົບລາຄາສິນຄ້າ (GATT/ພສ-04)

ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີ ຕາມຫຼັກການຫັກລົບລາຄາສິນຄ້າ ແມ່ນ ປະຕິບັດດັ່ງນີ້:

- ຄັດຕິດໃບແຈ້ງພາສີເປັນລາຍລະອຽດ : ໃຫ້ແຈ້ງເລກທີ, ວັນເດືອນປີ ແລະ ດ່ານນຳເຂົ້າ ຂອງໃບ ແຈ້ງພາສີເປັນລາຍລະອຽດ ທີ່ຄັດຕິດ ໃຫ້ຖືກຕ້ອງຄົບຖ້ວນ.
- ລຳດັບໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ : ໃນກໍລະນີມີ 1 ລາຍການ ໃຫ້ 1/1, ໃນກໍລະນີມີ 2 ລາຍການ ໃຫ້ໝາຍໃສ່ໃບທີ1/2, ໃບທີ2 ໃຫ້ໝາຍ 2/2.
- ເຫດຜົນທີ່ບໍ່ນຳໃຊ້ຫຼັກການປະເມີນມູນຄ່າແຈ້ງພາສີ ກ່ອນໜ້ານັ້ນ : ຜູ້ແຈ້ງພາສີ ຕ້ອງໃຫ້ເຫດຜົນ.
- ຊື່ສິນຄ້າທີ່ຕ້ອງການປະເມີນມູນຄ່າແຈ້ງພາສີ: ໃຫ້ແຈ້ງລະອຽດຊື່ສິນຄ້າ, ຂະໜາດ, ຄຸນລັກສະນະ ຂອງສິນຄ້າ ໂດຍໃຫ້ສອດຄ່ອງກັບສັນຍາຊື້-ຂາຍ.
  + ຂຽນເລກລຳດັບລາຍການສິນຄ້າໃນໃບແຈ້ງພາສີເປັນລາຍລະອຽດ (ສິນຄ້າທີ່ຕ້ອງການປະເມີນ ມູນຄ່າແຈ້ງພາສີ) ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.
- ຊື່ສິນຄ້ານຳເຂົ້າ ທີ່ໄດ້ຂາຍຢູ່ພາຍໃນ ສປປ ລາວ ຖືກຄັດເລືອກເພື່ອຫັກລົບລາຄາສິນຄ້າ: ຕ້ອງ ເປັນສິນຄ້ານຳເຂົ້າ ຊະນິດດຽວກັນ ແລະ ໄດ້ຜ່ານການແຈ້ງພາສີເປັນລາຍລະອຽດ.
- ລາຄາຂາຍພາຍໃນຕະຫຼາດ ສປປລາວ: ແມ່ນລາຄາຫົວໜ່ວຍຂອງສິນຄ້ານຳເຂົ້າ ທີ່ຄືກັນ ຫຼື ຄ້າຍ ຄືກັນ ຊຶ່ງຂາຍໃຫ້ບຸກຄົນ ທີ່ບໍ່ມີຄວາມສຳພັນກັບຜູ້ຂາຍຢູ່ ສປປລາວ ໃນຈຳນວນຫົວໜ່ວຍຂາຍ ອອກຫຼາຍທີ່ສຸດ ໃນໄລຍະເວລາບໍ່ເກີນ 90 ວັນ ຫຼັງຈາກການນຳເຂົ້າສິນຄ້າດັ່ງກ່າວ.
  + ບັນດາມູນຄ່າທີ່ສາມາດຫັກອອກໄດ້ (ຄິດໄລ່ຕໍ່ໜຶ່ງຫົວໜ່ວຍສິນຄ້າ): ຜູ້ແຈ້ງພາສີ ຕ້ອງອີງໃສ່ ລະບຽບກົດໝາຍພາສີ ແລະ ບົດແນະນຳຂອງກົມພາສີ.
  + ບ້ວງເງິນກຳໄລ ແລະ ລາຍຈ່າຍຄຸ້ມຄອງລວມ : ຜູ້ແຈ້ງພາສີ ຕ້ອງຄິດໄລ່ ອັດຕາສ່ວນຮ້ອຍ ທຽບໃສ່ລາຄາຂາຍ ແລະ ແຈ້ງລົງໃນໜ້ອງ ອັດຕາສ່ວນຮ້ອຍ ທຽບໃສ່ລາຄາຂາຍ.
- ມູນຄ່າແຈ້ງພາສີ ສິນຄ້າທີ່ກຳລັງປະເມີນ ພາຍຫລັງມີການຫັກລົບ ເປັນເງິນກີບ : ແມ່ນລາຄາຂາຍ ພາຍໃນຕະຫຼາດ ສປປລາວ ລົບໃຫ້ບັນດາມູນຄ່າທີ່ສາມາດຫັກອອກໄດ້.
- ອະທິບາຍບັນດາມູນຄ່າທີ່ສາມາດຫັກອອກໄດ້: ແຈ້ງລາຍລະອຽດວິທີການຄິດໄລ່ຫັກລົບ ໃຫ້ສອດ ຄ່ອງກັບລະບຽບກົດໝາຍ, ແຫຼ່ງຂໍ້ມູນທີ່ເປັນຕົວເລກ ໃຊ້ອ້າງອີງ ແລະ ອື່ນໆ.
- ເອກະສານອ້າງອີງຄັດຕິດ: ໃຫ້ແຈ້ງຊື່ບັນດາເອກະສານອ້າງອີງ ທີ່ໄດ້ນຳໃຊ້ເພື່ອປະເມີນມູນຄ່າ ແຈ້ງພາສີຂາເຂົ້າ ແລະ ຄັດຕິດໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.
- ການຢັ້ງຢືນຂອງຜູ້ແຈ້ງພາສີ: ຂຽນວັນເດືອນປີ ແລະ ລົງລາຍເຊັນ, ຊື່ແລະນາມສະກຸນ, ຖານະຂອງ ຜູ້ແຈ້ງ, ປະທັບກາບໍລິສັດ ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.

ມາດຕາ 9. ການປະກອບຂໍ້ມູນລົງໃນໃບແຈ້ງ ຕາມຫຼັກການຄຳນວນລາຄາສິນຄ້າ (GATT/ພສ-05)

ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີ ຕາມຫຼັກການຄຳນວນລາຄາສິນຄ້າ ແມ່ນ ປະຕິບັດດັ່ງນີ້:

- ຄັດຕິດໃບແຈ້ງພາສີເປັນລາຍລະອຽດ : ໃຫ້ແຈ້ງເລກທີ, ວັນເດືອນປີ ແລະ ດ່ານນຳເຂົ້າ ຂອງໃບແຈ້ງພາສີເປັນລາຍລະອຽດທີ່ຄັດຕິດ ໃຫ້ຖືກຕ້ອງຄົບຖ້ວນ.
- ລຳດັບໃບແຈ້ງມູນຄ່າແຈ້ງພາສີ : ໃນກໍລະນີມີ 1 ລາຍການ ໃຫ້ 1/1, ໃນກໍລະນີມີ 2 ລາຍການ ໃຫ້ໝາຍໃສ່ໃບທີ1/2, ໃບທີ2 ໃຫ້ໝາຍ 2/2.
- ເຫດຜົນທີ່ບໍ່ນຳໃຊ້ວິທີການກຳນົດມູນຄ່າແຈ້ງພາສີ ກ່ອນໜ້ານັ້ນ: ຜູ້ແຈ້ງພາສີ ຕ້ອງໃຫ້ເຫດຜົນ.
- ຊື່ສິນຄ້າທີ່ຕ້ອງການກຳນົດມູນຄ່າແຈ້ງພາສີ: ໃຫ້ແຈ້ງຊື່ສິນຄ້າ, ຂະໜາດຕ່າງໆ, ຄຸນລັກສະນະ ສິນຄ້າ ໂດຍໃຫ້ສອດຄ່ອງກັບສັນຍາຊື້ຂາຍ.
  + ຂຽນເລກລຳດັບລາຍການສິນຄ້າໃນໃບແຈ້ງພາສີເປັນລາຍລະອຽດ (ສິນຄ້າທີ່ຕ້ອງການກຳນົດມູນຄ່າແຈ້ງພາສີ) ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.
- ຊື່, ທີ່ຢູ່ຂອງຫົວໜ່ວຍສະໜອງຂໍ້ມູນ ກ່ຽວກັບລາຍຈ່າຍໃນການຜະລິດ: ໃຫ້ແຈ້ງລະອຽດຊື່, ທີ່ຢູ່ ຂອງຜູ້ຜະລິດ ຫລື ຕາງໜ້າຂອງຜູ້ຜະລິດ, ທີ່ໄດ້ສະໜອງຂໍ້ມູນເພື່ອປະເມີນມູນຄ່າແຈ້ງພາສີ.
- ມູນຄ່າແຈ້ງພາສີ ຕາມຫຼັກການຄຳນວນລາຄາສິນຄ້າ: ແມ່ນມູນຄ່າລວມຂອງຕົ້ນທຶນການຜະລິດ ແລະ ຄ່າດັດປັບອື່ນໆ ຕາມລະບຽບກົດໝາຍ ແລະ ບົດແນະນຳຂອງກົມພາສີ.
- ລະບົບບັນຊີທີ່ນຳໃຊ້ ແລະ ບັນດາເອກະສານອ້າງອີງທີ່ນຳໃຊ້: ໃຫ້ແຈ້ງລະອຽດກ່ຽວກັບລະບົບ ບັນຊີ, ເອກະສານອ້າງອີງທີ່ນຳໃຊ້ ເພື່ອປະເມີນມູນຄ່າແຈ້ງພາສີ.
- ການຢັ້ງຢືນຂອງຜູ້ແຈ້ງພາສີ: ຂຽນວັນເດືອນປີ ແລະ ລົງລາຍເຊັນ, ຊື່ແລະນາມສະກຸນ, ຖານະຂອງ ຜູ້ແຈ້ງ, ປະທັບກາບໍລິສັດ ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.

ມາດຕາ 10. ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີ ຕາມຫຼັກການຍ້ອນຄືນທີ່ສົມເຫດສົມຜົນ (GATT/ພສ-06)

ການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີ ຕາມຫຼັກການຍ້ອນຄືນທີ່ສົມເຫດສົມຜົນ ແມ່ນປະຕິບັດດັ່ງນີ້:

- ຄັດຕິດໃບແຈ້ງພາສີເປັນລາຍລະອຽດ : ໃຫ້ແຈ້ງເລກທີ, ວັນເດືອນປີ ແລະ ດ່ານນຳເຂົ້າ ຂອງໃບແຈ້ງພາສີເປັນລາຍລະອຽດທີ່ຄັດຕິດ ໃຫ້ຖືກຕ້ອງຄົບຖ້ວນ.
- ລຳດັບໃບແຈ້ງມູນຄ່າແຈ້ງພາສີ : ໃນກໍລະນີມີ 1 ລາຍການ ໃຫ້ 1/1, ໃນກໍລະນີມີ 2 ລາຍການ ໃຫ້ໝາຍໃສ່ໃບທີ1/2, ໃບທີ2 ໃຫ້ໝາຍ 2/2.
- ເຫດຜົນທີ່ບໍ່ນຳໃຊ້ຫຼັກການປະເມີນມູນຄ່າແຈ້ງພາສີ ກ່ອນໜ້ານັ້ນ: ຜູ້ແຈ້ງພາສີ ຕ້ອງໃຫ້ເຫດຜົນ.
- ຊື່ສິນຄ້າທີ່ຕ້ອງການປະເມີນມູນຄ່າແຈ້ງພາສີ: ໃຫ້ແຈ້ງຊື່ສິນຄ້າ, ຂະໜາດ, ຄຸນລັກສະນະ ສິນຄ້າ ໂດຍໃຫ້ສອດຄ່ອງກັບສັນຍາຊື້-ຂາຍ.
  + ຂຽນເລກລຳດັບລາຍການສິນຄ້າໃນໃບແຈ້ງພາສີເປັນລາຍລະອຽດ (ສິນຄ້າທີ່ຕ້ອງການປະເມີນມູນຄ່າແຈ້ງພາສີ) ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.
  + ບັນດາຂໍ້ມູນຖືກນຳໃຊ້ ເພື່ອປະເມີນມູນຄ່າແຈ້ງພາສີ : ໃຫ້ແຈ້ງລະອຽດແຫລ່ງທີ່ມາຂອງຂໍ້ມູນ ເພື່ອໃຊ້ໃນການປະເມີນມູນຄ່າແຈ້ງພາສີ.

+ ເອກະສານຢັ້ງຢືນຄັດຕິດ : ໃຫ້ແຈ້ງລະອຽດເອກະສານທີ່ນຳມາອ້າງອີງ ເພື່ອປະເມີນມູນຄ່າແຈ້ງພາສີ, ເຊັ່ນ : ໃບແຈ້ງພາສີເປັນລາຍລະອຽດ ທີ່ໄດ້ຜ່ານການປະເມີນມູນຄ່າແຈ້ງພາສີ ແຕ່ຫຼັກການທີ1-5; ໃບບິນຂາຍສິນຄ້າຢູ່ພາຍໃນ ສປປລາວ,ຂໍ້ມູນທີ່ໄດ້ຈາກຜູ້ຜະລິດ ແລະ ອື່ນໆ.

– ເລືອກຫຼັກການປະເມີນມູນຄ່າແຈ້ງພາສີ : ຜູ້ແຈ້ງພາສີ ຕ້ອງໄດ້ພິຈາລະນາເລືອກຫຼັກການປະເມີນມູນຄ່າແຈ້ງພາສີ ແຕ່ຫຼັກການທີ 1 ເຖິງ 5 ຢ່າງສົມເຫດສົມຜົນ ໂດຍສອດຄ່ອງກັບ ລະບຽບກົດໝາຍ ແລະ ບົດແນະນຳຂອງກົມພາສີ.
– ອະທິບາຍ: ໃຫ້ອະທິບາຍລະອຽດ ເຫດຜົນໃນການເລືອກຫຼັກການປະເມີນມູນຄ່າແຈ້ງພາສີ.
– ການຢັ້ງຢືນຂອງຜູ້ແຈ້ງພາສີ: ຊ່ຽນວັນເດືອນປີ ແລະ ລົງລາຍເຊັນ, ຊື່ແລະນາມສະກຸນ, ຖານະຂອງຜູ້ແຈ້ງ, ປະທັບການບໍລິສັດ ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ.

ມາດຕາ 11. ຄວາມຮັບຜິດຊອບຂອງເຈົ້າໜ້າທີ່ພາສີ ຢູ່ດ່ານພາສີ

– ເຈົ້າໜ້າທີ່ພາສີປະຈຳດ່ານ ມີໜ້າທີ່ໃນການໃຫ້ຄຳແນະນຳແກ່ຜູ້ແຈ້ງພາສີ ໃນການປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າແຈ້ງພາສີ, ຄຸ້ມຄອງກວດກາ ມູນຄ່າແຈ້ງພາສີ ທີ່ຜູ້ແຈ້ງພາສີ ໄດ້ແຈ້ງລົງໃນແບບພິມ GATT/ພສ-02 ເຖິງ ແບບພິມGATT/ພສ-06.
– ເຈົ້າໜ້າທີ່ພາສີຜູ້ຮັບເອກະສານ : ກວດກາບັນດາເນື້ອໃນຂໍ້ມູນ ທີ່ໄດ້ແຈ້ງລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ໃຫ້ຄົບຖ້ວນ, ບໍ່ໃຫ້ມີຮອຍຂີດຂ້າ ຫລື ເປິເປື້ອນ. ຈາກນັ້ນໃຫ້ລົງລາຍເຊັນ ແລະ ຊື່ ນາມສະກຸນ, ຈັດສົ່ງເອກະສານໃຫ້ເຈົ້າໜ້າທີ່ພາສີ ຜູ້ຮັບຜິດຊອບກວດກາມູນຄ່າແຈ້ງ.
– ເຈົ້າໜ້າທີ່ພາສີຜູ້ກວດກາມູນຄ່າແຈ້ງພາສີ: ກວດກາມູນຄ່າແຈ້ງພາສີ ໂດຍສົມທຽບກັບຖານຂໍ້ມູນ ແລະ ລະບຽບກົດໝາຍ, ແລ້ວຊຽນຄຳເຫັນກົງກັບຜົນການກວດກາມູນຄ່າແຈ້ງພາສີ ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ສະບັບສຳເນົາຂອງລັດຖະການພາສີ, ສ່ວນສະບັບຂອງຜູ້ແຈ້ງພາສີ ໃຫ້ລົງລາຍເຊັນ, ຊື່ ແລະ ນາມ ສະກຸນເທົ່ານັ້ນ.
– ການຊຽນຄຳເຫັນດ້ານວິຊາການໃຫ້ປະຕິບັດຕາມເນື້ອໃນລະອຽດ ດັ່ງ :
  + ຮັບຮອງເບື້ອງຕົ້ນຕໍ່ມູນຄ່າແຈ້ງພາສີ ຂອງຜູ້ນຳເຂົ້າ.
  + ບໍ່ຍອມຮັບມູນຄ່າແຈ້ງພາສີ ທີ່ຜູ້ນຳເຂົ້າໄດ້ແຈ້ງ, ຕ້ອງປະເມີນຄືນມູນຄ່າແຈ້ງພາສີ ໂດຍໃຫ້ຊຽນລະອຽດຫຼັກການປະເມີນທີ່ຄວນຈະນຳໃຊ້ ຕາມລະບຽບການ.
  + ຮຽກຮ້ອງໃຫ້ມີການກວດສອບຄືນການແຈ້ງພາສີ, ພ້ອມດ້ວຍໃຫ້ເຫດຜົນ.
  + ບັນດາເນື້ອໃນທີ່ຕ້ອງໄດ້ສືບຕໍ່ກວດກາ.
  + ຊຽນຄຳເຫັນວິຊາການອື່ນໆ.
  + ລົງລາຍເຊັນ ແລະ ຊື່ນາມສະກຸນ.

ມາດຕາ 12. ການຈັດຕັ້ງຜັນຂະຫຍາຍ

ມອບໃຫ້ພະແນກຈັດຕັ້ງ, ບໍລິຫານ ແລະ ສູນຝຶກ ເປັນຜູ້ຈັດພິມແຈກຢາຍໃບແຈ້ງມູນຄ່າແຈ້ງພາສີ ໃນໄລຍະປະຕິບັດເບື້ອງຕົ້ນ ເພື່ອເປັນການແນະນຳ ແລະ ໃນຕໍ່ໜ້າຈະສ້າງເປັນລະຫັດເພື່ອມອບໃຫ້ຜູ້ປະກອບການຈັດພິມເອງ.

ມອບໃຫ້ບັນດາພະແນກການ ອ້ອມຂ້າງ ກົມພາສີ,ພາສີປະຈຳເຂດ, ດ່ານພາສີຊາຍແດນ ໃນ ຂອບເຂດທົ່ວປະເທດ ຈັດຕັ້ງຜັນຂະຫຍາຍ ບົດແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ, ພ້ອມທັງເອົາໃຈໃສ່ ຈັດຕັ້ງ ຝຶກອົບຮົມເຜີຍແຜ່ໃຫ້ພະນັກງານພາສີ ແລະ ຜູ້ປະກອບໃຫ້ເຂົ້າໃຈເຊື່ອມຊຶມບົດແນະນຳ ສະບັບນີ້ ເພື່ອພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນຕາມລະດັບຄາດໝາຍ.

ມາດຕາ 13. ຜົນສັກສິດ

ບົດແນະນຳສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມພາສີ,

ສົນຕິພາບ ພິມວິຫານ

ใบแจ้งมูนค่าแจ้งพาสิຂาเข้า

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກະຊວງການເງິນ

ກົມພາສີ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

GATT/ภพส-01

ຫຼັກການລາຄາຊື້-ຂາຍສິນຄ້າຕົວຈິງ

ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ

ຄັດຕິດໃບແຈ້ງພາສີເປັນລາຍລະອຽດ ເລກທີ.....ລົງວັນທີ.....ດ່ານພາສີ.....

ລາຍການສິນຄ້າ .....ລາຍການ, ຈຳນວນໃບຊ້ອນທ້າຍ.....ໃບ

1. ອ.ດ.ປ ສົ່ງອອກ:....., ສະຖານທີ່ສົ່ງອອກ.....ເງື່ອນໄຂການສົ່ງມອບສິນຄ້າ.....						
ເງື່ອນໄຂການນຳໃຊ້ມູນຄ່າຊື້ຂາຍສິນຄ້າ						
2. ຜູ້ຊື້ມີສິດນຳໃຊ້ສິນຄ້າພາຍຫຼັງການນຳເຂົ້າ.					☐ ແມ່ນ	☐ ບໍ່ແມ່ນ
3. ການຂາຍສິນຄ້າຫຼືລາຄາສິນຄ້າໄດ້ຂຶ້ນກັບເງື່ອນໄຂໃດໜຶ່ງ ທີ່ເຮັດໃຫ້ບໍ່ສາມາດປະເມີນມູນຄ່າແຈ້ງພາສີຂອງສິນຄ້ານຳເຂົ້າ.					☐ ແມ່ນ	☐ ບໍ່ແມ່ນ
4. ຜູ້ຊື້ໄດ້ຈ່າຍເງິນຕື່ມຕາມຈຳນວນເງິນໃດໜຶ່ງ ຊຶ່ງແມ່ນລາຍໄດ້ຈາກການຂາຍຕໍ່ ທີ່ເພີ່ມລາຍໄດ້ໃຫ້ແກ່ຜູ້ຂາຍ ໂດຍທາງກົງ ຫຼື ທາງອ້ອມ. - ຖ້າມີ, ແມ່ນມູນຄ່າທີ່ໄດ້ແຈ້ງຢູ່ໃນຫ້ອງ 15 ບໍ?					☐ ແມ່ນ ☐ ແມ່ນ	☐ ບໍ່ແມ່ນ ☐ ບໍ່ແມ່ນ
5. ຜູ້ຊື້ ແລະຜູ້ຂາຍມີສາຍພົວພັນພິເສດ ຫຼື ບໍ? ຖ້າມີໃຫ້ເວົ້າລະອຽດສາຍພົວພັນດັ່ງກ່າວ: .... - ສາຍພົວພັນແບບພິເສດ ມີຜົນກະທົບຕໍ່ລາຄາຫຼື ບໍ່?					☐ ມີ ☐ ມີ	☐ ບໍ່ມີ ☐ ບໍ່ມີ
ຂໍ້ມູນການປະເມີນມູນຄ່າແຈ້ງພາສີ						
6. ເລກລຳດັບສິນຄ້າຕາມໃບແຈ້ງພາສີເປັນລາຍລະອຽດ (ช40)		ສິນຄ້າທີ..... HS.....	ສິນຄ້າທີ..... HS.....	ສິນຄ້າທີ..... HS.....	ສິນຄ້າທີ..... HS.....	ສິນຄ້າທີ..... HS.....
I. ມູນຄ່າພື້ນຖານ	7.ລາຄາໃນອິນວອຍ					
	8. ບ້ວງທີ່ຈ່າຍທາງອ້ອມ					
	9.ບ້ວງເງິນທີ່ໄດ້ຈ່າຍລ່ວງໜ້າ,ເງິນມັດຈຳລ່ວງໜ້າ					
II.ບັນດາຄ່າໃຊ້ຈ່າຍທີ່ຜ້ອງໄດ້ບວກເຂົ້າໃນມູນຄ່າແຈ້ງພາສີ	10.ຄ່າຕົວແທນຂາຍສິນຄ້າ/ຄ່າຄົນກາງ					
	11.ຄ່າຫຸ້ມຫໍ່ທີ່ຕິດພັນກັບສິນຄ້າ					
	12.ຄ່າຫຸ້ມຫໍ່ສິນຄ້າ					
	13.ບັນດາບ້ວງເງິນຊ່ວຍເຫຼືອ ທີ່ຜູ້ຊື້ສະໜອງໃຫ້ໂດຍບໍ່ຄິດຄ່າ ຫຼື ຫຼຸດລາຄາ :					
	ກ.ວັດສະດຸສິ້ນສ່ວນປະກອບ,ອາໄຫ່ແລະອາໄຫ່ຍ່ອຍ					
	ຂ.ວັດຖຸດິບ,ເຊື້ອເພີງ,ພະລັງງານທີ່ເສຍໄປ					
	ຄ. ເຄື່ອງມື,ອຸປະກອນ,ໂຄງຫລໍ່,ໂຄງແບບ					
	ງ.ຮູບແບບການອອກແບບ/ເຕັກນິກ/ສັນຂະຫຍາຍ/ ອອກແບບ,ສິນລະປະກຳຫັດຖະກຳ/ແບບຜະລິດຕະພັນ ແລະການບໍລິການທີ່ຄ້າຍຄື					
	14. ຄ່າລິຂະສິດ,ຄ່າທຳນຽມໃບອະນຸຍາດ					
	15.ເງິນທີ່ໄດ້ຈາກການຂາຍຕໍ່ ທີ່ຜູ້ຊື້ຈ່າຍເພີ່ມໃຫ້ຜູ້ຂາຍ					
	16.ຄ່າຂົນສົ່ງ, ຄ່ຽນຖ່າຍສິນຄ້າ					
	17. ຄ່າປະກັນໄພ					
III.ຄ່າໃຊ້ຈ່າຍທີ່ຜ້ອງໄດ້ຫັກອອກ	18.ຄ່າປະກັນໄພ,ຄ່າຂົນສົ່ງ,ຄ່າຄ່ຽນຖ່າຍສິນຄ້າພາຍໃນ ປະເທດ					
	19.ລາຍຈ່າຍຕ່າງໆທີ່ເກີດຂຶ້ນພາຍຫຼັງນຳເຂົ້າ					
	20.ດອກເບ້ຍໃນການຊຳລະເງິນຊື້ສິນຄ້າ					
	21. ຄ່າພາສີ-ອາກອນ, ຄ່າທຳນຽມ ພາຍຫຼັງການນຳເຂົ້າ					
	22. ຄ່າສ່ວນຫຼຸດລາຄາ					
IV. ມູນຄ່າຄິດໄລ່ ຄ່າພາສີ-ອາກອນ	23. ມູນຄ່າຄິດໄລ່ຄ່າພາສີ-ອາກອນເປັນເງິນ ตา = (7+8...+17) – (18+19+.....22)					
	24. ມູນຄ່າຄິດໄລ່ພາສີ-ອາກອນເປັນເງິນກີບ					

ຂໍ້ມູນທາງບວກເປັນມູນຄ່າແຈ້ງພາສີ						
6. ເລກລຳດັບສິນຄ້າຕາມໃບແຈ້ງພາສີເປັນລາຍລະອຽດ (ບ40)		ສິນຄ້າທີ..... HS.....	ສິນຄ້າທີ..... HS.....	ສິນຄ້າທີ..... HS.....	ສິນຄ້າທີ..... HS.....	ສິນຄ້າທີ..... HS.....
I. ມູນຄ່າພື້ນຖານ	7.ລາຄາໃນອິນວອຍ					
	8. ບ້ວງທີ່ຈ່າຍທາງອ້ອມ					
	9.ບ້ວງເງິນທີ່ໄດ້ຈ່າຍລ່ວງໜ້າ,ເງິນມັດຈຳລ່ວງໜ້າ					
II.ມັນລວມຄ່າໃຊ້ຈ່າຍທີ່ຜູ້ຊື້ໄດ້ບວກເຂົ້າໃນມູນຄ່າແຈ້ງພາສີ	10.ຄ່າຕົວແທນຂາຍສິນຄ້າ/ຄ່າຄົມມາໆ					
	11.ຄ່າຫຸ້ມຫໍ່ທີ່ຕິດພັນກັບສິນຄ້າ					
	12.ຄ່າຫຸ້ມຫໍ່ສິນຄ້າ					
	13.ບັນດາບ້ວງເງິນຊ່ວຍເຫຼືອ ທີ່ຜູ້ຊື້ສະໜອງໃຫ້ໂດຍບໍ່ຄິດຄ່າ ຫຼື ຫຼຸດລາຄາ :					
	ກ.ວັດສະດຸສິ້ນສ່ວນປະກອບ,ອາໄຫ່ແລະອາໄຫ່ຍ່ອຍ					
	ຂ.ວັດຖຸດິບ,ເຊື້ອເພີງ,ພະລັງງານທີ່ເສຍໄປ					
	ຄ. ເຄື່ອງມື,ອຸປະກອນ,ໂຄງຫລໍ່,ໂຄງແບບ					
	ງ.ຮູບແບບການອອກແບບ/ເຕັກນິກ/ຄັນຂະຫຍາຍ/ ອອກແບບ,ສິນລະປະກຳທັດຖະກຳ/ແບບຜະລິດຕະພັນ ແລະການບໍລິການທີ່ຄ້າຍຄື					
	14. ຄ່າລິຂະສິດ,ຄ່າທຳນຽມໃບອະນຸຍາດ					
	15.ເງິນທີ່ໄດ້ຈາກການຂາຍຕໍ່ ທີ່ຜູ້ຊື້ຈ່າຍເພີ່ມໃຫ້ຜູ້ຂາຍ					
	16.ຄ່າຂົນສົ່ງ, ຄຸ່ມຖ່າຍສິນຄ້າ					
	17. ຄ່າປະກັນໄພ					
III.ຄ່າໃຊ້ຈ່າຍບ້ວງໄດ້ຫັກອອກ	18.ຄ່າປະກັນໄພ,ຄ່າຂົນສົ່ງ,ຄ່າຄຸ່ມຖ່າຍສິນຄ້າພາຍໃນ ປະເທດ					
	19.ລາຍຈ່າຍຕ່າງໆທີ່ເກີດຂຶ້ນພາຍຫຼັງນຳເຂົ້າ					
	20.ດອກເບ້ຍໃນການຊຳລະເງິນຊື້ສິນຄ້າ					
	21. ຄ່າພາສີ-ອາກອນ, ຄ່າທຳນຽມ ພາຍຫຼັງການນຳເຂົ້າ					
	22. ຄ່າສ່ວນຫຼຸດລາຄາ					
IV. ມູນຄ່າຄິດໄລ່ ຄ່າພາສີ-ອາກອນ	23. ມູນຄ່າຄິດໄລ່ຄ່າພາສີ-ອາກອນເປັນເງິນ ຕໆ = (7+8...+17) – (18+19+.....22)					
	24. ມູນຄ່າຄິດໄລ່ພາສີ-ອາກອນເປັນເງິນກີບ					

25. ຂ້າພະເຈົ້າ ຂໍຢັ້ງຢືນແລະຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບທຸກຂໍ້ມູນ ທີ່ໄດ້ແຈ້ງໃນໃບແຈ້ງມູນຄ່າແຈ້ງພາສີ ສະບັບນີ້ ແມ່ນຖືກ ຕ້ອງ ຕາມຄວາມເປັນຈິງທຸກປະການ.

ວັນ,ເດືອນ,ປີ : .....

ຜູ້ແຈ້ງພາສີ

(ຊື່ແລະນາມສະກຸນ,ລາຍເຊັນແລະປະທັບຕາ)

ຖານະຜູ້ແຈ້ງ : .....

.....

ສະເພາະເຈົ້າໜ້າທີ່ພາສີ

26. ຜູ້ຮັບເອກະສານ

(ລາຍເຊັນ,ຊື່ແລະນາມສະກຸນ)

27. ຜູ້ກວດກາມູນຄ່າແຈ້ງພາສີ

(ລາຍເຊັນ,ຊື່ແລະນາມສະກຸນ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

GATT/ภพส-01/01

ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ຕາມຫຼັກການລາຄາຊື້-ຂາຍສິນຄ້າຕົວຈິງ
(ໃບຊ້ອນທ້າຍ)

ໃບຊ້ອນທ້າຍທີ .....ໃບ.....

ຄັດຕິດໃບແຈ້ງພາສີເປັນລາຍລະອຽດ (ບ40) ເລກທີ.....ລົງວັນທີ....., ຜ່ານດ່ານ.....

ລ/ດ	ລຳດັບສິນຄ້າ	ມູນຄ່າພື້ນຖານ			ບັນດາຄ່າໃຊ້ຈ່າຍ ທີ່ຕ້ອງບວກເຂົ້າມູນຄ່າແຈ້ງພາສີ.								ຄ່າໃຊ້ຈ່າຍ ຕ້ອງໄດ້ລົບອອກ					ມູນຄ່າຄິດໄລ່ພາສີ-ອາກອນ (ເປັນເງິນຕາ)	ມູນຄ່າຄິດໄລ່ພາສີ-ອາກອນ (ເປັນເງິນກີບ)
	6	7	8	9	10	11	12	13	14	15	16	17	18	19	20	21	22	23	24

ຂ້າພະເຈົ້າ ຂໍຢັ້ງຢືນແລະຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບທຸກຂໍ້ມູນ ທີ່ໄດ້ແຈ້ງໃນໃບແຈ້ງມູນຄ່າແຈ້ງພາສີ
ສະບັບນີ້ ແມ່ນຖືກ ຕ້ອງ ຕາມຄວາມເປັນຈິງທຸກປະການ.

ຜູ້ແຈ້ງພາສີ

ຖານະຜູ້ແຈ້ງ:.....

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກະຊວງການເງິນ
ກົມພາສີ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

GATT/ກພສ-02
ຫຼັກການລາຄາຊື້-ຂາຍສິນຄ້າຄືກັນ

ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ

ຄັດຕິດໃບແຈ້ງພາສີເປັນລາຍລະອຽດ ເລກທີ.....ວັນທີ.....ດ່ານພາສີ.....

ລຳດັບໃບແຈ້ງມູນຄ່າແຈ້ງພາສີ...../.....

I. ເຫດຜົນທີ່ບໍ່ນຳໃຊ້ຫຼັກການທີ 1 : .....

II. **ຊື່ສິນຄ້າ ທີ່ຕ້ອງການປະເມີນມູນຄ່າແຈ້ງພາສີ:**....., ເລກລະຫັດສິນຄ້າ:.....

- ເລກລຳດັບລາຍການສິນຄ້າໃນໃບແຈ້ງພາສີເປັນລາຍລະອຽດ:..... ວັນທີ,ເດືອນ,ປີ ສົ່ງອອກ:.....

III. **ຊື່ສິນຄ້ານຳເຂົ້າຄ້າຍຄືກັນ:** .....

- ເລກລຳດັບລາຍການສິນຄ້າໃນໃບແຈ້ງພາສີເປັນລາຍລະອຽດ:....., ເລກລະຫັດສິນຄ້າ: .....
- ໃບແຈ້ງພາສີເປັນລາຍລະອຽດ ເລກທີ .. .. ວັນທີ .. .. .. ເດືອນ.. .. .. ປີ .. . .
- ນຳເຂົ້າຜ່ານດ່ານພາສີ.. .. .. ວັນທີ,ເດືອນ,ປີ ສົ່ງອອກ:.. .. ..

IV. **ການປະເມີນມູນຄ່າແຈ້ງພາສີ ແລະ ອະທິບາຍ:**

	ເປັນເງິນຕາຕ່າງປະເທດ USD
1. **ມູນຄ່າແຈ້ງພາສີຂອງສິນຄ້ານຳເຂົ້າ ຄືກັນ:**	
2. **ບັນດາຄ່າດັດປັບ (+/-) :**	
(ກ) ດັດປັບກ່ຽວກັບລະດັບການຄ້າ:	
(ຂ) ດັດປັບກ່ຽວກັບຈຳນວນ :	
(ຄ) ດັດປັບກ່ຽວກັບບັນດາສ່ວນຫລຸດລາຄາອື່ນໆ :	
(ງ) ດັດປັບກ່ຽວກັບຄ່າຂົນສົ່ງ :	
(ຈ) ດັດປັບກ່ຽວກັບຄ່າປະກັນໄພ :	
3. **ມູນຄ່າແຈ້ງພາສີ ສິນຄ້າທີ່ກຳລັງປະເມີນພາຍຫຼັງການດັດປັບ ເປັນເງິນຕາ =** (1) +/- (2)	

4. **ມູນຄ່າແຈ້ງພາສີ ສິນຄ້າທີ່ກຳລັງປະເມີນພາຍຫຼັງການດັດປັບ ເປັນເງິນກີບ =**

- **ອະທິບາຍ ບັນດາຄ່າດັດປັບ :** .....

.....

- **ເອກະສານຢັ້ງຢືນຄັດຕິດ:**.....

.....

ຂ້າພະເຈົ້າ ຂໍຢັ້ງຢືນແລະຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບທຸກຂໍ້ມູນ ທີ່ໄດ້ແຈ້ງໃນໃບແຈ້ງມູນຄ່າແຈ້ງພາສີ ສະບັບນີ້ ແມ່ນຖືກ ຕ້ອງ ຕາມຄວາມເປັນຈິງທຸກປະການ.

ວັນ,ເດືອນ,ປີ : .....

ຜູ້ແຈ້ງພາສີ

(ຊື່ແລະນາມສະກຸນ,ລາຍເຊັ້ນແລະປະທັບກາ)

ຖານະຜູ້ແຈ້ງ : .....

.....

ສະເພາະເຈົ້າໜ້າທີ່ພາສີ

ຜູ້ຮັບເອກະສານ	ຜູ້ກວດກາມູນຄ່າແຈ້ງພາສີ.
(ລາຍເຊັ້ນ,ຊື່ແລະນາມສະກຸນ)	(ລາຍເຊັ້ນ,ຊື່ແລະນາມສະກຸນ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

GATT/ภาพส-03
ຫ້ອງການຊື້-ຂາຍສິນຄ້າຄ້າຍຄືກັນ

ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ

ຄັດຕິດໃບແຈ້ງພາສີເປັນລາຍລະອຽດ ເລກທີ....., ວັນທີ.....ດ່ານພາສີ.....
ລຳດັບໃບແຈ້ງມູນຄ່າແຈ້ງພາສີ...../.....

I. ເຫດຜົນທີ່ບໍ່ນຳໃຊ້ຫ້ອງການປະເມີນມູນຄ່າແຈ້ງພາສີ ກ່ອນໜ້ານັ້ນ : .....
II. **ຊື່ສິນຄ້າ ທີ່ຕ້ອງການປະເມີນມູນຄ່າແຈ້ງພາສີ:**....., ເລກລະຫັດສິນຄ້າ:..... - ເລກລຳດັບລາຍການສິນຄ້າໃນໃບແຈ້ງພາສີເປັນລາຍລະອຽດ:..... ວັນທີ,ເດືອນ,ປີ ສົ່ງອອກ:.....
III. **ຊື່ສິນຄ້ານຳເຂົ້າຄ້າຍຄືກັນ:** ..... - ເລກລຳດັບລາຍການສິນຄ້າໃນໃບແຈ້ງພາສີເປັນລາຍລະອຽດ:....., ເລກລະຫັດສິນຄ້າ: ..... - ໃບແຈ້ງພາສີເປັນລາຍລະອຽດ ເລກທີ .. .. ວັນທີ .. .. .. ເດືອນ.. .. .. ປີ .. . . - ນຳເຂົ້າຜ່ານດ່ານພາສີ.. .. .. ວັນທີ,ເດືອນ,ປີ ສົ່ງອອກ:.. .. ..
IV. **ການປະເມີນມູນຄ່າແຈ້ງພາສີ ແລະ ອະທິບາຍ:**

	ເປັນເງິນຕາຕ່າງປະເທດ USD
1. ມູນຄ່າແຈ້ງພາສີຂອງສິນຄ້ານຳເຂົ້າ ຄືກັນ:	
2. ບັນດາຄ່າດັດປັບ (+/-) :	
(ກ) ດັດປັບກ່ຽວກັບລະດັບການຄ້າ:	
(ຂ) ດັດປັບກ່ຽວກັບຈຳນວນ :	
(ຄ) ດັດປັບກ່ຽວກັບບັນດາສ່ວນຫລຸດລາຄາອື່ນໆ :	
(ງ) ດັດປັບກ່ຽວກັບຄ່າຂົນສົ່ງ :	
(ຈ) ດັດປັບກ່ຽວກັບຄ່າປະກັນໄພ :	
3. ມູນຄ່າແຈ້ງພາສີ ສິນຄ້າທີ່ກຳລັງປະເມີນພາຍຫຼັງການດັດປັບ ເປັນເງິນຕາ = (1) +/- (2)	
4. ມູນຄ່າແຈ້ງພາສີ ສິນຄ້າທີ່ກຳລັງປະເມີນພາຍຫຼັງການດັດປັບ ເປັນເງິນກີບ =	

- **ອະທິບາຍ ບັນດາຄ່າດັດປັບ :** .....
.....
- **ເອກະສານຢັ້ງຢືນຄັດຕິດ:**.....
.....

ຂ້າພະເຈົ້າ ຂໍຢັ້ງຢືນແລະຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບທຸກຂໍ້ມູນ ທີ່ໄດ້ແຈ້ງໃນໃບແຈ້ງມູນຄ່າແຈ້ງພາສີ ສະບັບນີ້ ແມ່ນຖືກ ຕ້ອງ ຕາມຄວາມເປັນຈິງທຸກປະການ. ວັນ,ເດືອນ,ປີ : ..... **ຜູ້ແຈ້ງພາສີ** (ຊື່ແລະນາມສະກຸນ,ລາຍເຊັນແລະປະທັບກາ) ຖານະຜູ້ແຈ້ງ :	**ສະເພາະເຈົ້າໜ້າທີ່ພາສີ**	
	ຜູ້ຮັບເອກະສານ	ຜູ້ກວດກາມູນຄ່າແຈ້ງພາສີ.
	(ລາຍເຊັນ,ຊື່ແລະນາມສະກຸນ)	(ລາຍເຊັນ,ຊື່ແລະນາມສະກຸນ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

GATT/ภาพส-04
ຫຼັກການຫັກລົບລາຄາສິນຄ້າ

ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ

ຄັດຕິດໃບແຈ້ງພາສີເປັນລາຍລະອຽດ ເລກທີ.....ວັນທີ.....ດ່ານພາສີ.....
ລຳດັບໃບແຈ້ງມູນຄ່າແຈ້ງພາສີ...../.....

I. ເຫດຜົນທີ່ບໍ່ນຳໃຊ້ຫຼັກການປະເມີນມູນຄ່າແຈ້ງພາສີ ກ່ອນໜ້ານັ້ນ :.....

II. ຊື່ສິນຄ້າ ທີ່ຕ້ອງການປະເມີນມູນຄ່າແຈ້ງພາສີ: .....
- ເລກລຳດັບລາຍການສິນຄ້າໃນໃບແຈ້ງພາສີເປັນລາຍລະອຽດ: ....., ເລກລະຫັດສິນຄ້າ .....

III. ຊື່ສິນຄ້ານຳເຂົ້າ ທີ່ໄດ້ຂາຍຢູ່ພາຍໃນ ສປປລາວ ເຊິ່ງຖືກເລືອກມາເພື່ອຫັກລົບລາຄາສິນຄ້າ:.....
.....
.....
.....

IV. ການປະເມີນມູນຄ່າແຈ້ງພາສີ ແລະ ອະທິບາຍ:

	ເປັນເງິນກີບ	ອັດຕາສ່ວນ(%) ເມື່ອທຽບໃສ່ລາຄາຂາຍ
1. ລາຄາຂາຍໃນຕະຫລາດ ສປປລາວ :		
2. ບັນດາມູນຄ່າທີ່ສາມາດຫັກອອກໄດ້ (ຄິດໄລ່ຕໍ່1ຫົວໜ່ວຍສິນຄ້າ) :		
(ກ). ຄ່ານາຍໜ້າ (ຫລືຄ່າຕົວແທນ) :		
(ຂ). ກຳໄລ ແລະ ລາຍຈ່າຍຄຸ້ມຄອງລວມ :		
(ຄ). ຄ່າຂົນສົ່ງ, ຫຸ້ມຫໍ່,ເຄື່ອຍ້າຍສິນຄ້າພາຍໃນປະເທດ :		
(ງ). ຄ່າປະກັນໄພພາຍໃນປະເທດ :		
(ຈ). ຄ່າພາສີ,ອາກອນ ແລະ ຄ່າຫຳນຽມຕ່າງໆ ພາຍຫຼັງການນຳເຂົ້າ:		
3. ມູນຄ່າແຈ້ງພາສີ ສິນຄ້າທີ່ກຳລັງປະເມີນ ພາຍຫຼັງການຫັກລົບ ເປັນເງິນກີບ = (1) - (2)		

- ອະທິບາຍ ບັນດາຄ່າດັດປັບ : .....
.....
- ເອກະສານຢັ້ງຢືນຄັດຕິດ:.....
.....

ຂ້າພະເຈົ້າ ຂໍຢັ້ງຢືນແລະຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບທຸກຂໍ້ມູນ ທີ່ໄດ້ແຈ້ງໃນໃບແຈ້ງມູນຄ່າແຈ້ງພາສີ ສະບັບນີ້ ແມ່ນຖືກຕ້ອງ ຕາມຄວາມເປັນຈິງທຸກປະການ.

ວັນ,ເດືອນ,ປີ : .....

ຜູ້ແຈ້ງພາສີ

(ຊື່ແລະນາມສະກຸນ,ລາຍເຊັນແລະປະທັບກາ)

ຖານະຜູ້ແຈ້ງ : .....
.....

ສະເພາະເຈົ້າໜ້າທີ່ພາສີ

ຜູ້ຮັບເອກະສານ	ຜູ້ກວດກາມູນຄ່າແຈ້ງພາສີ.
(ລາຍເຊັນ,ຊື່ແລະນາມສະກຸນ)	(ລາຍເຊັນ,ຊື່ແລະນາມສະກຸນ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

GATT/ภาคผนวก-05
ຫຼັກການຄຳນວນລາຄາສິນຄ້າ

ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ

ຄັດຕິດໃບແຈ້ງພາສີເປັນລາຍລະອຽດ ເລກທີ.....ລົງວັນທີ.....ດ່ານພາສີ.....
ລຳດັບໃບແຈ້ງມູນຄ່າແຈ້ງພາສີ...../.....

I. ເຫດຜົນທີ່ບໍ່ນຳໃຊ້ຫຼັກການປະເມີນມູນຄ່າແຈ້ງພາສີ ກ່ອນໜ້ານັ້ນ :	
II. ຊື່ສິນຄ້າ ທີ່ຕ້ອງການປະເມີນມູນຄ່າແຈ້ງພາສີ: ....., ເລກລະຫັດສິນຄ້າ : ..... - ເລກລຳດັບໃບແຈ້ງພາສີເປັນລາຍລະອຽດ:	
III. ຊື້, ສະຖານທີ່ຫົວໜ່ວຍສະໜອງຂໍ້ມູນກ່ຽວກັບຄ່າໃຊ້ຈ່າຍໃນການຜະລິດ:.....	
IV. ການປະເມີນມູນຄ່າແຈ້ງພາສີ ແລະ ອະທິບາຍ:	
	ມູນຄ່າເປັນເງິນຕາຕ່າງປະເທດ
1. ມູນຄ່າຕົ້ນທຶນຂອງຜະລິດຕະພັນ :	
2. ບັນດາຄ່າຕ້ອງດັດປັບ :	
(ກ). ຄ່າຕົວແທນການຂາຍ ແລະ ຄ່າຄົມນາໆ (ຄ່ານາຍໜ້າ) :	
(ຂ). ຄ່າຫຸ້ມຫໍ່ທີ່ຕິດພັນກັບສິນຄ້າ :	
(ຄ). ຄ່າຫຸ້ມຫໍ່ສິນຄ້າ :	
(ງ). ບ້ວງເງິນຊ່ວຍເຫລືອ ທີ່ຜູ້ຊື້ສະໜອງໃຫ້ ຜູ້ຂາຍ/ຜູ້ຜະລິດ :	
(ຈ). ຄ່າລິຂະສິດ, ຄ່າທຳນຽມໃບອະນຸຍາດ :	
(ສ). ລາຍໄດ້ຈາກການຂາຍຕໍ່ :	
(ຊ). ຄ່າຂົນສົ່ງ, ເຄື່ອນຍ້າຍ, ຍົກສິນຄ້າຂຶ້ນລົງ :	
(ຍ). ຄ່າປະກັນໄພສິນຄ້າ :	
3. ກຳໄລ ແລະ ລາຍຈ່າຍລວມ :	
4. ຄ່າທຳນຽມ, ອາກອນ ຢູ່ປະເທດຜະລິດສິນຄ້າ (ທີ່ບໍ່ໄດ້ສົ່ງຄືນ) :	
5. ມູນຄ່າແຈ້ງພາສີ ສິນຄ້າກຳລັງປະເມີນ ເປັນເງິນຕາ = (1) + (2) + (3) + (4)	
6. ມູນຄ່າແຈ້ງພາສີ ສິນຄ້າທີ່ກຳລັງປະເມີນ ເປັນເງິນກີບ =	
IV. ລະບຽບບັນຊີທີ່ນຳໃຊ້ ແລະ ບັນດາເອກະສານອ້າງອີງທີ່ນຳໃຊ້:	

ຂ້າພະເຈົ້າ ຂໍຢັ້ງຢືນແລະຮັບຮັບຊອບຕໍ່ໜ້າກົດໝາຍ ກ່ຽວກັບທຸກຂໍ້ມູນ ທີ່ໄດ້ແຈ້ງໃນໃບແຈ້ງມູນຄ່າແຈ້ງພາສີ ສະບັບນີ້ ແມ່ນຖືກຕ້ອງ ຕາມຄວາມເປັນຈິງທຸກປະການ. ວັນ,ເດືອນ,ປີ : ..... **ຜູ້ແຈ້ງພາສີ** (ຊື່ແລະນາມສະກຸນ,ລາຍເຊັນແລະປະທັບກາ) ຖານະຜູ້ແຈ້ງ :	**ສະເພາະເຈົ້າໜ້າທີ່ພາສີ**	
	ຜູ້ຮັບເອກະສານ	ຜູ້ກວດກາມູນຄ່າແຈ້ງພາສີ.
	(ລາຍເຊັນ,ຊື່ແລະນາມສະກຸນ)	(ລາຍເຊັນ,ຊື່ແລະນາມສະກຸນ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

GATT/ภาพส-06
ຫຼັກການຍ້ອນຄືນທີ່ສົມເຫດສົມຜົນ

ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ

ຄັດຕິດໃບແຈ້ງພາສີເປັນລາຍລະອຽດ ເລກທີ.....ລົງວັນທີ.....ດ່ານພາສີ.....
ລຳດັບໃບແຈ້ງມູນຄ່າແຈ້ງພາສີ...../.....

I. ເຫດຜົນທີ່ບໍ່ນຳໃຊ້ຫຼັກການປະເມີນມູນຄ່າແຈ້ງພາສີ ກ່ອນໜ້ານັ້ນ :.....

II. ຊື່ສິນຄ້າ ທີ່ຕ້ອງການປະເມີນມູນຄ່າແຈ້ງພາສີ:....., ເລກລະຫັດສິນຄ້າ: .....

- ເລກລຳດັບໃບແຈ້ງພາສີເປັນລາຍລະອຽດ: .....
- ບັນດາຂໍ້ມູນຖືກນຳໃຊ້ເພື່ອກຳນົດມູນຄ່າແຈ້ງພາສີ :

.....

.....

.....

.....

.....

- ເອກະສານຢັ້ງຢືນຄັດຕິດ:

.....

.....

III. ການປະເມີນມູນຄ່າແຈ້ງພາສີ ແລະ ອະທິບາຍ:

1.ເລືອກຫຼັກການປະເມີນມູນຄ່າແຈ້ງພາສີ : .....

2. ອະທິບາຍ: .....

.....

.....

3. ມູນຄ່າແຈ້ງພາສີ ສິນຄ້າທີ່ກຳລັງປະເມີນ ເປັນເງິນຕາ : .....

4. ມູນຄ່າແຈ້ງພາສີ ທີ່ກຳລັງປະເມີນ ເປັນເງິນກີບ = ...

ຂ້າພະເຈົ້າ ຂໍຢັ້ງຢືນແລະຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບທຸກຂໍ້ມູນ ທີ່ໄດ້ແຈ້ງໃນໃບແຈ້ງມູນຄ່າແຈ້ງພາສີ ສະບັບນີ້ ແມ່ນຖືກຕ້ອງ ຕາມຄວາມເປັນຈິງທຸກປະການ.

ວັນ,ເດືອນ,ປີ : .....

ຜູ້ແຈ້ງພາສີ

(ຊື່ແລະນາມສະກຸນ,ລາຍເຊັນແລະປະທັບກາ)

ຖານະຜູ້ແຈ້ງ : .....
.....

ສະເພາະເຈົ້າໜ້າທີ່ພາສີ

ຜູ້ຮັບເອກະສານ	ຜູ້ກວດກາມູນຄ່າແຈ້ງພາສີ.
(ລາຍເຊັນ,ຊື່ແລະນາມສະກຸນ)	(ລາຍເຊັນ,ຊື່ແລະນາມສະກຸນ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 2718 /ກພສ
ນະຄອນຫລວງວຽງຈັນ, ວັນທີ 23 ມັງ 2012

ແຈ້ງການ

ເຖິງ : - ຫົວໜ້າພາສີປະຈຳເຂດ I,II,III,IV ແລະ ເຂດ V
- ຫົວໜ້າດ່ານພາສີສາກົນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີ ຕາມ 06 ຫຼັກການຂອງGATT ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ ລົງວັນທີ 20 ພຶດສະພາ 2005 .
- ອີງຕາມ ບົດແນະນຳຂອງລັດຖະມົນຕີ ວ່າການກະຊວງການເງິນ ສະບັບເລກທີ 1398/ກງ, ລົງວັນທີ 16.06.2010 ວ່າດ້ວຍການກຳນົດມູນຄ່າແຈ້ງພາສີຂາເຂົ້າ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 2095/ກງ, ລົງວັນທີ 26/09/2011, ວ່າດ້ວຍ ການນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີ ສຳລັບສິນຄ້ານຳເຂົ້າເສຍພາສີ ອາກອນ.
- ອີງຕາມບົດບັນທຶກກອງປະຊຸມກົມພາສີ ສະບັບເລກທີ 2359/ກພສ ລົງວັນທີ 17/01/2012

ກົມພາສີ ແຈ້ງມາຍັງບັນດາທ່ານຊາບ ກ່ຽວກັບການຈັດຕັ້ງຜັນຂະຫຍາຍວຽກງານມູນຄ່າແຈ້ງພາສີ ແບບແກັດ ຊຶ່ງໄດ້ກຳນົດໃນຂໍ້ 13 ຂອງບົດບັນທຶກກອງປະຊຸມກົມພາສີ ສະບັບເລກທີ 2359/ກພສ ລົງວັນທີ 17/01/2012, ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ສຳເລັດຜົນຕາມຄາດໝາຍ, ກົມ ພາສີ ມອບຄວາມຮັບຜິດຊອບໃຫ້ຫົວໜ້າພາສີປະຈຳເຂດ ແລະ ດ່ານພາສີສາກົນ ເອົາໃຈໃສ່ບາງບັນຫາ, ຄື :

1 ການນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ຕາມ 06 ຫຼັກການຂອງ GATT ຄັດຕິດໃບແຈ້ງພາສີເປັນ ລາຍລະອຽດ ຊຶ່ງໄດ້ເປັນເອກະພາບກັນ ໃຫ້ໄດ້ເລີ່ມຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ ນັບແຕ່ວັນທີ 03/01/2012 ເປັນຕົ້ນມາ, ສະນັ້ນ ພາສີປະຈຳເຂດ ແລະ ບັນດາດ່ານພາສີສາກົນ ຕ້ອງເປັນເຈົ້າການ ໃນການແນະນຳ ບັນດາລະບຽບການ ກ່ຽວກັບມູນຄ່າແຈ້ງພາສີແບບ GATT ແລະ ການປະກອບຂໍ້ມູນ ລົງໃນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ໃຫ້ແກ່ເຈົ້າໜ້າທີ່ພາສີ ແລະ ຜູ້ປະກອບການຊາບ ແລະ ພ້ອມກັນ ຈັດຕັ້ງປະຕິບັດ.

2 ແບບພິມໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ຕາມ06 ຫຼັກການຂອງGATT ແມ່ນໃຫ້ຈຳໜ່າຍຢູ່ດ່ານພາສີ ສາກົນ ແລະ ຫ້ອງການພາສີປະຈຳເຂດ ຕາມຄວາມເໝາະສົມ.

3. ມອບໃຫ້ບັນດາດ່ານພາສີສາກົນ ສັງລວມບັນດາລາຍການສິນຄ້ານຳເຂົ້າເປັນປົກະຕິ ແລະ ເປັນສິນຄ້າ ຕົ້ນຕໍໃນການຈັດເກັບລາຍຮັບ ຈຳນວນ 20 ລາຍການສິນຄ້າ (ຍົກເວັ້ນນ້ຳມັນເຊື້ອໄຟ ແລະ ພາຫະນະ) ສົ່ງໃຫ້ພາສີປະຈຳເຂດ ແລະ ພະແນກຄຸ້ມຄອງການສົ່ງອອກ-ນຳເຂົ້າ, ກົມພາສີ ບໍ່ໃຫ້ກາຍວັນທີ 25

ຂອງແຕ່ລະເດືອນ ເພື່ອເປັນພື້ນຖານໃນການເກັບກຳສັງລວມສ້າງຖານຂໍ້ມູນລາຄາ (ຄັດຕິດຕາຕະລາງດ້ານຫຼັງ).

ການຈັດຕັ້ງປະຕິບັດຕົວຈິງ ຖ້າພົບບັນຫາຫຍຸ້ງຍາກ ໃຫ້ລາຍງານກົມພາສີ ເພື່ອມີທິດຊີ້ນຳໃນການຈັດຕັ້ງປະຕິບັດ

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຮັກສາການຫົວໜ້າກົມພາສີ,

ອາດສະພັງທອງ ສີພັນດອນ
Athsaphangthong SIPHANDONE

ຄັດຕິດ :

- ຕາຕະລາງສັງລວມລາຄາຫົວໜ່ວຍສິນຄ້ານຳເຂົ້າ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

ກະຊວງການເງິນ
ກົມພາສີ

ເລກທີ 2040/ກພສ
ນະຄອນຫຼວງວຽງຈັນ,ວັນທີ 05 JUL 2011

ແຈ້ງການ

ເຖິງ: ບັນດາອົງການຈັດຕັ້ງຂອງລັດ,ອົງການຈັດຕັ້ງສາກົນ,ລັດວິສາຫະກິດ,ບຸກຄົນ,ນິຕິບຸກຄົນ ຫ້ວໜ່ວຍທຸລະກິດຂາອອກ-ຂາເຂົ້າພາຍໃນ ແລະຕ່າງປະເທດ.

ເລື່ອງ: ການກຳນົດມູນຄ່າແຈ້ງພາສີຕາມລາຄາຊື້-ຂາຍຕົວຈິງ ສຳລັບການນຳເຂົ້າສິນຄ້າ,ເຄື່ອງຂອງໃຊ້ສ່ວຍທົ່ວໄປ.

- ອີງໃສ່ ກົດໝາຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 25 ພຶດສະພາ 2005.
- ອີງໃສ່ ດຳລັດ362/ນຍ,ລົງວັນທີ19ຕຸລາ2007ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ພາສີ.
- ອີງໃສ່ບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນສະບັບເລກທີ1398/ກງລົງວັນທີ16/06/2010 ວ່າດ້ວຍການກຳນົດມູນຄ່າແຈ້ງພາສີຂາເຂົ້າ.

ເພື່ອເຮັດໃຫ້ການຄຸ້ມຄອງແລະການຈັດຕັ້ງປະຕິບັດມູນຄ່າແຈ້ງພາສີສອດຄ່ອງກັບລະບຽບກົດໝາຍວ່າດ້ວຍພາສີ ແລະລະບຽບການຂອງອົງການ ການຄ້າໂລກກຳນົດໄວ້.

ກົມພາສີອອກແຈ້ງການ

1. ເຫັນດີໃຫ້ຈັດຕັ້ງປະຕິບັດການກຳນົດມູນຄ່າແຈ້ງພາສີຕາມລາຄາຊື້-ຂາຍຕົວຈິງ ສຳລັບການນຳເຂົ້າສິນຄ້າ,ເຄື່ອງຂອງໃຊ້ສ່ວຍທົ່ວໄປ ຕາມທີ່ກຳນົດໄວ້ຢູ່ໃນມາດຕາ 13 ຂອງກົດໝາຍພາສີ ສະບັບເລກທີ 05/ສພຊ ລົງວັນທີ 20/05/2005 ຢ່າງເຂັ້ມງວດ.

2. ເຫັນດີໃຫ້ລົບລ້າງແລະຢຸດຕິການນຳໃຊ້ບັນດານິຕິກຳທີ່ກ່ຽວຂ້ອງກັບການກຳນົດລາຄາຕ່ຳສຸດສຳລັບການແຈ້ງພາສີນຳເຂົ້າສິນຄ້າ,ເຄື່ອງຂອງໃຊ້ສ່ວຍທົ່ວໄປທີ່ອະນຸມັດຈາກກົມພາສີ ໃນໄລຍະຜ່ານມາທຸກສະບັບ ແລະໃຫ້ປະຕິບັດມູນຄ່າແຈ້ງພາສີຕາມລາຄາຊື້ - ຂາຍຕົວຈິງ.

3. ມອບໃຫ້ບັນດາພະແນກອ້ມຂ້າງກົມພາສີ, ພາສີປະຈຳເຂດ, ດ່ານພາສີຊາຍແດນ ໃນຂອບເຂດທ້ອງຖິ່ນ ຈັດຕັ້ງປະຕິບັດເຜີຍແຜ່ແຈ້ງການສະບັບນີ້ ໃຫ້ບັນດາອົງການຈັດຕັ້ງຂອງລັດ,ອົງການຈັດຕັ້ງສາກົນ ລັດວິສາຫະກິດ, ບຸກຄົນ, ນິຕິບຸກຄົນ,ທ້ອງຖິ່ນ ຮ່ວມມືໃນການປະຕິບັດ ແລະ ເຂົ້າໃຈຕໍ່ລະບຽບການດັ່ງກ່າວ ເພື່ອຮ່ວມມືໃນການປະຕິບັດຢ່າງຮັດກຸມ.

4. ແຈ້ງການສະບັບນີ້ມີຜົນສັກສິດ ແລະ ໃຫ້ເລີ້ມຈັດຕັ້ງປະຕິບັດນັບແຕ່ວັນທີ 01ສິງຫາ ປີ2011ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຮັບຊາບ ແລະ ຮ່ວມມືໃນການປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມພາສີ

ສັນຕິພາບ ພົມວິຫານ

ບ່ອນສົ່ງ: ທ່ານ ລັດຖະມົນຕີວ່າການກະຊວງການເງິນ ເພື່ອລາຍງານ
- ກົມນະໂຍບາຍການຄ້າຕ່າງປະເທດ ເພື່ອຊາບ
- ກົມນຳເຂົ້າ-ສົ່ງອອກ ເພື່ອຊາບ
- ກົມສ່ວຍສາ ອາກອນ ເພື່ອຊາບ
- ອົງການຈັດຕັ້ງຂອງລັດທຸກພາກສ່ວນ ເພື່ອຊາບ
- ພະແນກອ້ມຂ້າງກົມພາສີ ເພື່ອປະຕິບັດ
- ພາສີປະຈຳເຂດ I,II,III,IV,V ເພື່ອປະຕິບັດ
- ດ່ານພາສີຊາຍແດນທ້ອງຖິ່ນ ເພື່ອປະຕິບັດ
- ອື່ນໆທີ່ກ່ຽວຂ້ອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

ກະຊວງການເງິນ
ກົມພາສີ

ເລກທີ 2337/ກພສ
ນະຄອນຫຼວງວຽງຈັນ, ວັນທີ 10 AUG 2011

ບົດແນະນຳເພີ່ມເຕີມ

ເຖິງ : ພະແນກອ້ອມຂ້າງກົມພາສີ, ພາສີປະຈຳເຂດ ແລະ ດ່ານພາສີຊາຍແດນ ໃນທົ່ວປະເທດ.

ເລື່ອງ : ການຈັດຕັ້ງປະຕິບັດແຈ້ງການເລກທີ 2040/ກພສ ລົງວັນທີ 05/07/2011.

- ອີງໃສ່ ກົດໝາຍພາສີສະບັບເລກທີ 05/ສພຊ ລົງວັນທີ 20/5/2005.
- ອີງຕາມ ບົດແນະນຳຂອງກົມພາສີສະບັບເລກທີ 2401/ກພສ ລົງວັນທີ 29/09/2010 ວ່າດ້ວຍການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້າ,ເຄື່ອຂອງນຳເຂົ້າ.
- ອີງຕາມ ແຈ້ງການຂອງກົມພາສີສະບັບເລກທີ 2040/ກພສ ລົງວັນທີ 05/7/2011.

ກົມພາສີອອກບົດແນະນຳເພີ່ມເຕີມດັ່ງລຸ່ມນີ້:

1. ການກຳນົດມູນຄ່າແຈ້ງພາສີຕາມລາຄາ ຊື້-ຂາຍ ຕົວຈິງສຳລັບການນຳເຂົ້າສິນຄ້າເຄື່ອງຂອງໃຊ້ສອຍທົ່ວໄປ ໝາຍເຖິງສິນຄ້າເຄື່ອງຂອງທຸກປະເພດ ຍົກເວັ້ນປະເພດພາຫະນະ, ນ້ຳມັນເຊື້ອໄຟ ແລະ ສິນຄ້າຊັ້ນສູງ ຟຸ່ມເຟືອຍບາງຊະນິດທີ່ກຳນົດໄວ້ ໃບລັດຖະບັນຍັດເລກທີ 03/ປທທ ລົງວັນທີ 18 ພະຈິກ 2009.
2. ມອບໃຫ້ດ່ານພາສີບ່ອນນຳເຂົ້າສິນຄ້າ ເອົາໃຈໃສ່ກວດກາບັນດາເອກະສານປະກອບ ໃນໃບແຈ້ງພາສີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ບົດແນະນຳສະບັບເລກທີ 0491/ກງ ລົງວັນທີ 12/3/2009. ກ່ຽວກັບການປະກອບເອກະສານໃນໃບແຈ້ງພາສີ ເປັນລາຍລະອຽດເຊັ່ນ:
   + ໃບສັນຍາການ ຊື້-ຂາຍ.(ຕ້ອງລະບຸເງື່ອນໄຂການມອບ-ຮັບສິນຄ້າ, ຮູບແບບການຊຳລະສະສາງ ແລະ ອື່ນໆ).
   + ໃບຢັ້ງຢືນການຊຳລະສະສາງ ໂດຍຜ່ານທະນາຄານຢູ່ ສ.ປ.ປ.ລາວ. (ມີແບບຟອມໄດ້ຄັດຕິດມາພ້ອມນີ້)
   + ໃບຮັບປະກັນກ່ຽວກັບການແຈ້ງຂໍ້ມູນລົງໃນໃບແຈ້ງພາສີເປັນລາຍລະອຽດ. (ມີແບບຟອມໄດ້ຄັດຕິດມາພ້ອມນີ້)
   + ເອກະສານອື່ນໆທີ່ຈຳເປັນ.
3. ກ່ອນທີ່ດ່ານພາສີ ບ່ອນນຳເຂົ້າສິນຄ້າຈະຮັບຮອງເອົາ ໃບແຈ້ງພາສີເປັນລາຍລະອຽດ (ໂດຍສະເພາະລາຄາແຈ້ງພາສີ) ແມ່ນໃຫ້ສົມທຽບໃສ່ສະຖິຕິ ລາຄາແຈ້ງເສຍພາສີ

ໃນໄລຍະຜ່ານມາເປັນບ່ອນອີງ,ຖ້າຫາກລາຄາດັ່ງກ່າວຕ່ຳກ່ວາກໍ່ສາມາດປະຕິເສດໄດ້(ບໍ່ສາມາດ ຮັບເອົາໃບແຈ້ງພາສີເປັນລາຍລະອຽດ) ແຕ່ຖ້າມີຫຼັກຖານແລະຂໍ້ມູນພຽງພໍແມ່ນໃຫ້ຖືເອົາລາຄາ ຕາມສັນຍາຊື້-ຂາຍ ແລະ ເອກະສານຢັ້ງຢືນການຊຳລະສະສາງໃນຂໍ້ທີ 2 ຂ້າງເທິງເປັນບ່ອນ ກຳນົດແລ້ວສິ່ງ(ສຳເນົາໃບແຈ້ງພາສີເປັນລາຍລະອຽດພ້ອມເອກະສານທັ້ງໝົດ) ໃຫ້ຫ້ອງການ ກວດຄືນການແຈ້ງພາສີປະຈຳເຂດເປັນຜູ້ກວດສອບ.

4. ມອບໃຫ້ບັນດາພະແນກການອ້ອມຂ້າງກົມ, ພາສີປະຈຳເຂດ, ດ່ານພາສີຊາຍແດນ ໃນຂອບເຂດ ທ້ອງປະເທດ ແນະນຳໃຫ້ເຈົ້າໜ້າທີ່ພາສີ ຜູ້ຮັບຜິດຊອບເອົາໃຈໃສ່ ກວດກາບັນດາເອກະສານ ດັ່ງ ກ່າວໃຫ້ຄົບຖ້ວນ ແລະ ເຜີຍແຜ່ໃຫ້ຜູ້ປະກອບການເພື່ອເຂົ້າໃຈ ແລະ ຮ່ວມມືໃນທາງປະຕິບັດ.

ດັ່ງນັ້ນ, ຈຶ່ງອອກບົດແນະນຳສະບັບດັ່ງກ່າວເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມພາສີ

ບຸນໂຈມ ອຸບົນປະເສີດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ກະຊວງການເງິນ
ກົມພາສີ

ເລກທີ 1940/ກພສ
ນະຄອນຫຼວງວຽງຈັນ,ວັນທີ 21 JUL 2010

ແຈ້ງການແນະນຳ
ຂອງຫົວໜ້າກົມພາສີວ່າດ້ວຍການກຳນົດມູນຄ່າແຈ້ງ ພາສີຂາເຂົ້າ ຕາມລະບຽບໃບແຈ້ງພາສີ ມ42 ແລະ 43

ເຖິງ : - ບັນດາ ທ່ານ ຫົວໜ້າ ພະແນກອ້ອມຂ້າງກົມພາສີ
- ບັນດາ ທ່ານ ຫົວໜ້າ ພາສີປະຈຳເຂດ 1 - 7
- ບັນດາ ທ່ານ ຫົວໜ້າ ດ່ານພາສີ ຊາຍແດນໃນຂອບເຂດທົ່ວປະເທດ

ເລື່ອງ : ການກຳນົດມູນຄ່າແຈ້ງພາສີຂາເຂົ້າໃນການແຈ້ງພາສີເປັນລາຍລະອຽດ ຕາມລະບຽບ 42,43.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ ລົງວັນທີ 20 ພຶດສະພາ 2005 ມາດຕາ 13 ມູນຄ່າແຈ້ງພາສີຂາເຂົ້າ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ ລົງວັນທີ 19.10.2007 ມາດຕາ 4 ມູນຄ່າແຈ້ງພາສີຂາເຂົ້າ.
- ອີງຕາມ ບົດແນະນຳຂອງລັດຖະມົນຕີ ວ່າການກະຊວງການເງິນ ສະບັບເລກທີ 1398/ກງ ລົງວັນທີ 16.06.2010 ວ່າດ້ວຍການກຳນົດມູນຄ່າແຈ້ງພາສີຂາເຂົ້າ.

ເພື່ອເປັນການກະກຽມການປະຕິບັດການກຳນົດມູນຄ່າແຈ້ງພາສີຂອງGATT ແລະ ເປັນການປະຕິບັດໃຫ້ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບລະບຽບກົດໝາຍ ກໍຄືສົນທິສັນຍາພາຄີ ທີ່ ສປປ ລາວ ໄດ້ລົງນາມໄວ້.

ກົມພາສີອອກແຈ້ງການແນະນຳ ດັ່ງນີ້ :

1. ການກຳນົດມູນຄ່າແຈ້ງພາສີຂາເຂົ້າ ສຳລັບການນຳເຂົ້າສິນຄ້າເຄື່ອງຂອງ ພາຍໃຕ້ກອບ AFTA (CEPT Scheme) , ASEAN - CHINA, ASEAN - JAPAN , ASEAN - KOREA ຫຼື FTA ລາວ-ຫວຽດ, ລາວ-ອາເມລິກາ ແມ່ນໃຫ້ເອົາຕາມລາຄາ ຊື້-ຂາຍ ຕົວຈິງ. ທີ່ກຳນົດໄວ້ໃນໃບນຳ ສົ່ງສິນຄ້າ(Invoice) ຫຼືໃບສັນຍາຊື້-ຂາຍຕົວຈິງຊຶ່ງແມ່ນລາຄາທີ່ຜູ້ຊື້ ແລະ ຜູ້ຂາຍໄດ້ຕົກລົງກັນ.
2. ສຳລັບເອກະສານປະກອບເຂົ້າໃນໃບແຈ້ງພາສີເປັນລາຍລະອຽດ ກ່ອນທີ່ຈະໄດ້ຮັບສິດທິພິເສດ ທາງດ້ານອັດຕາພາສີ ຕ້ອງມີເອກະສານດັ່ງຕໍ່ໄປນີ້:

2.1. ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ຊຶ່ງພາຍໃຕ້ກອບຕ່າງໆທີ່ປະເທດສົ່ງອອກເປັນຜູ້ອອກໃຫ້.

2.2. ໃບສັນຍາ ຊື້-ຂາຍ ແລະ ໃບສັ່ງຊື້

2.3. ໃບນຳສົ່ງສິນຄ້າ ຫຼື ໃບແຈ້ງລາຄາ(Invoice)ໃບລາຍການຫຸ້ມຫໍ່ສິນຄ້າ (Packing list)

2.4. ໃບຢັ້ງຢືນການຂົນສົ່ງ ແລະ ປະກັນໄພ

2.5. ໃບຢັ້ງຢືນການຊຳລະສະສາງຜ່ານທະນາຄານ (ຊຶ່ງມີແບບຟອມຄັດຕິດມາພ້ອມນີ້)

3. ຖ້າຜູ້ປະກອບການຫາກບໍ່ມີເອກະສານສະບັບຕົ້ນປະກອບໃດໜຶ່ງຄັດຕິດໃນເວລາແຈ້ງພາສີເປັນລາຍລະອຽດ,ຈະບໍ່ໄດ້ຮັບສິດທິພິເສດ ໃນການນຳເຂົ້າສິນຄ້າດັ່ງກ່າວນີ້ .

4. ບັນດາຂໍ້ມູນເອກະສານທີ່ປະກອບເຂົ້າໃນໃບແຈ້ງພາສີຈະຕ້ອງ ຢູ່ພາຍໃຕ້ການກວດຄືນຂອງລັດຖະການພາສີຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍວ່າດ້ວຍພາສີ ແລະ ມາດຕາ 8 ຂອງ ດຳລັດຈັດຕັ້ງປະຕິບັດ ເລກທີ 362/ນຍ ສະນັ້ນຜູ້ສົ່ງອອກ-ນຳເຂົ້າ ຫຼື ຕົວແທນທີ່ໄດ້ຮັບມອບໝາຍ ເປັນລາຍລັກອັກສອນຕ້ອງເປັນຜູ້ຮັບຜິດຊອບໂດຍກົງຕໍ່ທຸກໆຂໍ້ມູນທີ່ຕົນເອງໄດ້ແຈ້ງລົງໃນໃບແຈ້ງພາສີ.

5. ມອບໃຫ້ ບັນດາຫົວໜ້າພະແນກອ້ອມຂ້າງກົມພາສີ, ບັນດາຫົວໜ້າພາສີປະຈຳເຂດ ແລະ ບັນດາຫົວໜ້າດ່ານພາສີສາກົນ ໃນຂອບເຂດທົ່ວປະເທດຈັດຕັ້ງປະຕິບັດ ແລະ ເຜີຍແຜ່ແນະນຳໃຫ້ຜູ້ປະກອບການຊາບ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

6. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ ວັນທີ 02 ສິງຫາ ປີ 2010 ເປັນຕົ້ນໄປ.

ຫົວໜ້າກົມພາສີ

ບຸນໂຈມ ອຸບົນປະເສີດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ_____

ທະນາຄານ.....

ໂທລະສັບ:.....

ໂທລະສານ.....

ໃບຢັ້ງຢືນການຊຳລະສະສາງ
ໂດຍຜ່ານທະນາຄານຂອງ ສປປ ລາວ

ຂ້າພະເຈົ້າຜູ້ອຳນວຍການ.....ຖືໃບທະບຽນວິສາຫະກິດ
ສະບັບເລກທີ.....ລົງວັນທີ.....,ໃບທະບຽນອາກອນ ເລກທີ.....ລົງວັນທີ.....
ຊຶ່ງມີທີ່ຕັ້ງວິສາຫະກິດຢູ່ .....ຖະໜົນ.....ບ້ານ.....ເມືອງ.....
ແຂວງ.....
ໄດ້ຊຳລະສະສາງສຳລັບການນຳເຂົ້າສິນຄ້າຕາມ Invoice ເລກທີ.....ລົງວັນທີ.....
ໂດຍຜ່ານທະນາຄານ.....ໃນລະບົບ

L/C	☐	Demand DRAFT	☐	Telex/Cable	☐
Cash	☐	T/T	☐	ອື່ນໆ	☐
CHEQUE	☐	SWIFT	☐		

ໃນເລກໝາຍບັນຊີຜູ້ຊື້.....ໄປຍັງເລກໝາຍບັນຊີຜູ້ຂາຍ.....
.....ທະນາຄານ.....
ທີ່ຢູ່.....

ດັ່ງນັ້ນ, ຂ້າພະເຈົ້າຜູ້ອຳນວຍການ.....ຂໍຢັ້ງຢືນວ່າຂໍ້ມູນດັ່ງກ່າວ ແມ່ນຖືກຕ້ອງຕາມຄວາມຈິງທຸກປະການ.ພາຍຫຼັງການຊຳລະສະສາງຂ້າພະເຈົ້າຂໍຮັບຮອງຈະນຳເອົາເອກະສານ ແລະ ຫຼັກຖານທັ້ງໝົດແຈ້ງຕໍ່ເຈົ້າໜ້າທີ່ພາສີ ເພື່ອທຳການກວດກາຕາມລະບຽບກົດໝາຍທຸກປະການ.

ຢັ້ງຢືນຈາກທະນາຄານ.....

ຕຳແໜ່ງ.....

ຜູ້ອຳນວຍການບໍລິສັດ

ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດມາດຕາ VII ຂອງຂໍ້ຕົກລົງທົ່ວໄປວ່າດ້ວຍພາສີ ແລະ ການຄ້າປີ 1994

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະຖາວອນ

ອົງການການຄ້າໂລກ (WTO)

ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດມາດຕາ VII ຂອງຂໍ້ຕົກລົງທົ່ວໄປວ່າດ້ວຍພາສີ ແລະ ການຄ້າປີ 1994

(ໃຊ້ສະເພາະພາສີ)

ໜ່ວຍງານຮ່ວມມືຫຼາຍຝ່າຍ

ພະແນກຮ່ວມມືພາສີສາກົນ, ກົມພາສີ

ສາລະບານ

ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດມາດຕາ VII ຂອງຂໍ້ຕົກລົງທົ່ວໄປວ່າດ້ວຍພາສີ ແລະ ການຄ້າປີ 1994

- *ບົດອະທິບາຍເບື້ອງຕົ້ນໂດຍທົ່ວໄປ*

ພາກທີ I

- *ຫຼັກການຂອງການກຳນົດມູນຄ່າແຈ້ງພາສີ*

ພາກທີ II

- *ການບໍລິຫານ, ການປຶກສາຫາລື ແລະການແກ້ໄຂຂໍ້ແຍ້ງ*

ພາກທີ III

- *ການປະຕິບັດເປັນພິເສດ ແລະການປະຕິບັດທີ່ແຕກຕ່າງກັນອອກໄປ*

ພາກທີ IV

- *ຂໍ້ກຳນົດສຸດທ້າຍ*

ເອກະສານຊ້ອນທ້າຍ

- *ເອກະສານຊ້ອນທ້າຍທີ I: ໝາຍເຫດການຕີຄວາມໝາຍ*
- *ເອກະສານຊ້ອນທ້າຍ II: ຄະນະກຳມະການເຕັກນິກການກຳນົດມູນຄ່າແຈ້ງພາສີ*
- *ເອກະສານຊ້ອນທ້າຍ III:*

ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດມາດຕາ VII ຂອງຂໍ້ຕົກລົງທົ່ວໄປວ່າ ດ້ວຍພາສີ ແລະ ການຄ້າປີ 1994

ບົດອະທິບາຍເບື້ອງຕົ້ນໂດຍທົ່ວໄປ

1. ຫຼັກການພື້ນຖານຂອງມູນຄ່າແຈ້ງພາສີພາຍໃຕ້ຂໍ້ຕົກລົງສະບັບນີ້ຄື: "ລາຄາຕົກລົງຊື້ຂາຍລະຫວ່າງ ຜູ້ຊື້ ແລະຜູ້ຂາຍ" ຕາມທີ່ໄດ້ນິຍາມໄວ້ໃນມາດຕາ 1. ເນື້ອໃນໃນມາດຕາ 1 ນີ້ຈະຕ້ອງໄດ້ອ່ານຄວບຄູ່ໄປ ກັບເນື້ອໃນໃນມາດຕາ 8 ນອກເໜືອໄປຈາກມາດຕາ 1 ແລ້ວ, ມາດຕາ 8 ຍັງໄດ້ລະບຸວິທີການປັບລາຄາ ສຳລັບລາຄາທີ່ໄດ້ຈ່າຍ ຫລືຈະຕ້ອງໄດ້ຈ່າຍຕົວຈິງ ໃນກໍລະນີທີ່ມີການຈ່າຍບາງອັນເຊິ່ງຖືວ່າເປັນສ່ວນ ນຶ່ງຂອງລາຄາຕາມການກຳນົດຂອງເຈົ້າໜ້າທີ່ພາສີ ທີ່ຜູ້ຊື້ຈະຕ້ອງໄດ້ຮັບພາລະໄປ ແຕ່ຍັງບໍ່ທັນໄດ້ນຳ ໄປລວມເຂົ້າກັບລາຄາທີ່ໄດ້ຈ່າຍ ຫລືຈະຕ້ອງໄດ້ຈ່າຍຕົວຈິງສຳລັບສິນຄ້າເຄື່ອງຂອງທີ່ໄດ້ນຳເຂົ້າມານັ້ນ. ໃນມາດຕາ 8 ຍັງໄດ້ກຳນົດລະອຽດກ່ຽວກັບການຕອບແທນບາງຢ່າງ ເຊິ່ງຜູ້ຊື້ຕອບສະໜອງໃຫ້ຜູ້ຂາຍ ໃນຮູບຂອງວັດຖຸ ຫລືຄ່າບໍລິການທີ່ໄດ້ລະບຸໄວ້ນັ້ນ ແທນທີ່ຈະຕອບແທນໃນລັກສະນະເງິນຕາມາລວມ ເຂົ້າໄວ້ໃນລາຄາຊື້ຂາຍອີກດ້ວຍ. ມາດຕາ 2 ເຖິງ 7 ຍັງໄດ້ລະບຸວິທີການກຳນົດມູນຄ່າແຈ້ງພາສີ ຫາກ ເມື່ອໃດມູນຄ່າແຈ້ງພາສີບໍ່ສາມາດກຳນົດໄດ້ພາຍໃຕ້ຂໍ້ກຳນົດຂອງມາດຕາ 7.

2. ໃນກໍລະນີທີ່ມູນຄ່າແຈ້ງພາສີບໍ່ສາມາດກຳນົດໄດ້ພາຍໃຕ້ຂໍ້ກຳນົດຂອງມາດຕາ 1 ແລ້ວ ເຈົ້າໜ້າທີ່ ພາສີຄວນປຶກສາຫາລືກັບຜູ້ນຳເຂົ້າ ເພື່ອໃຫ້ບັນລຸເຖິງມູນຄ່າແຈ້ງພາສີພາຍໃຕ້ຂໍ້ກຳນົດຂອງມາດຕາ 2 ຫຼື 3 ເຊັ່ນ: ມັນອາດເປັນໄປໄດ້ທີ່ຜູ້ນຳເຂົ້າໄດ້ນຳເຂົ້າທີ່ມີຂໍ້ມູນກ່ຽວກັບມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງ ຂອງນຳເຂົ້າທີ່ຄືກັນ ຫລືຄ້າຍຄືກັນກັບສິນຄ້າເຄື່ອງຂອງທີ່ນຳເຂົ້າ ແຕ່ເຈົ້າໜ້າທີ່ພາສີພັດຍັງບໍ່ທັນມີຂໍ້ມູນ ດັ່ງກ່າວ. ອີກປະການນຶ່ງເຈົ້າໜ້າທີ່ພາສີອາດຈະມີຂໍ້ມູນກ່ຽວກັບມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງ ນຳເຂົ້າທີ່ຄືກັນ ຫຼື ຄ້າຍຄືກັນແລ້ວ ແຕ່ຜູ້ນຳເຂົ້າພັດຍັງບໍ່ທັນມີຂໍ້ມູນດັ່ງກ່າວ. ເຈົ້າໜ້າທີ່ພາສີ ແລະຜູ້ນຳ ເຂົ້າຄວນຈະມີການປຶກສາຫາລືກັນ ແລະແລກປ່ຽນຂໍ້ມູນນຳກັນ. ເພື່ອເຮັດໃຫ້ການກຳນົດມູນຄ່າແຈ້ງພາ ສີໃຫ້ເໝາະສົມ ແລະເປັນຈິງຕາມລາຄາຕາມວັດຖຸປະສົງຂອງພາສີ ທັງນີ້ກໍ່ຕ້ອງຢູ່ພາຍໃຕ້ຂໍ້ກຳນົດໃນ ເລື່ອງຂອງຄວາມລັບທາງການຄ້າ.

3. ໃນມາດຕາ 5 ເຖິງ 6 ໄດ້ລະບຸໄວ້ສອງຫລັກການໃນການກຳນົດມູນຄ່າແຈ້ງພາສີ ໃນກໍລະນີທີ່ມູນ ຄ່າແຈ້ງພາສີບໍ່ສາມາດກຳນົດໄດ້ບົນພື້ນຖານຂອງລາຄາຕົກລົງຊື້ຂາຍຂອງສິນຄ້ານຳເຂົ້າ ຫຼື ສິນຄ້າ ເຄື່ອງຂອງນຳເຂົ້າທີ່ຄືກັນ ຫລືຄ້າຍຄືກັນ ພາຍໃຕ້ຂໍ້ກຳນົດຂອງມາດຕາ 5 ວັກທີ 1 ມູນຄ່າແຈ້ງພາສີຄວນ ໄດ້ຮັບການກຳນົດບົນພື້ນຖານຂອງລາຄາ ຊຶ່ງສິນຄ້າເຄື່ອງຂອງດັ່ງກ່າວນັ້ນ ໄດ້ຂາຍໃນຈຳນວນເທົ່າເດີມ ທີ່ນຳເຂົ້າໃຫ້ກັບຜູ້ຊື້ ທີ່ບໍ່ມີຄວາມສຳພັນກັນໃນປະເທດນຳເຂົ້ານັ້ນ. ນອກຈາກນັ້ນຜູ້ນຳເຂົ້າສິນຄ້າເຄື່ອງ ຂອງຍັງມີສິດຈະນຳເອົາສິນຄ້າເຄື່ອງຂອງມີການດັດແປງເສີມແຕ່ງພາຍຫລັງໄດ້ມີການນຳເຂົ້າແລ້ວ ມາ

ໃຊ້ໃນການກຳນົດລາຄາພາຍໃຕ້ຂໍ້ກຳນົດຂອງມາດຕາ 5 ໄດ້ອີກດ້ວຍ, ຖ້າຫາກຜູ້ນຳເຂົ້າມີການຮ້ອງຂໍເຊັ່ນນັ້ນ. ພາຍໃຕ້ຂໍ້ກຳນົດຂອງມາດຕາ 6 ກ່ຽວກັບມູນຄ່າແຈ້ງພາສີຈະໄດ້ຮັບການກຳນົດຂຶ້ນບົນພື້ນຖານຂອງລາຄາທີ່ຄິດໄລ່. ວິທີການທັງສອງນີ້ມີຄວາມຫຍຸ້ງຍາກພໍສົມຄວນ ແລະດ້ວຍເຫດຜົນນີ້ເອງຜູ້ນຳເຂົ້າຈຶ່ງໄດ້ຮັບສິດໃນການທີ່ຈະເລືອກໃຊ້ວິທີການໃດນຶ່ງກ່ອນກ່ໍໄດ້ຈາກວິທີການທັງສອງນີ້ ພາຍໃຕ້ຂໍ້ກຳນົດຂອງມາດຕາ 4.

4. ມາດຕາ 7 ແມ່ນໄດ້ລະບຸເຖິງການກຳນົດມູນຄ່າແຈ້ງພາສີ ໃນກໍລະນີທີ່ມູນຄ່າແຈ້ງພາສີບໍ່ສາມາດກຳນົດໄດ້ພາຍໃຕ້ຂໍ້ກຳນົດຂອງມາດຕາອື່ນໆ ກ່ອນໜ້ານີ້.

ບັນດາປະເທດສະມາຊິກ

ໂດຍຄຳນຶງເຖິງການເຈລະຈາທາງດ້ານການຄ້າຫລາຍຝ່າຍ

ປາດຖະໜາ ເພື່ອຈະເຮັດໃຫ້ການກຳນົດມູນຄ່າແຈ້ງພາສີຂອງ (GATT) 1994 ມີຄວາມຄືບໜ້າ ແລະໄດ້ຮັບປະກັນເຖິງສິດຜົນປະໂຫຍດ ແລະເຮັດໃຫ້ການຄ້າລະຫວ່າງປະເທດກຳລັງພັດທະນາໄດ້ຮັບຜົນດີຂຶ້ນນັ້ນ.

ຍອມຮັບ ເຖິງຄວາມສຳຄັນຂອງຂໍ້ກຳນົດຂອງມາດຕາ 7 ຂອງ (GATT) 1994 ແລະປາດຖະໜາທີ່ຈະວາງຫລັກການຕ່າງໆ ສຳລັບການນຳເອົາຂໍ້ກຳນົດນີ້ໄປໃຊ້ ເພື່ອເຮັດໃຫ້ມີຄວາມເປັນເອກະພາບ ແລະຄວາມແນ່ນອນຍິ່ງຂຶ້ນໃນການນຳໄປປະຕິບັດ.

ຍອມຮັບເຖິງຄວາມຈຳເປັນທີ່ຈະຕ້ອງມີລະບົບການເກັບກຳມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງໆ ເພື່ອໃຫ້ມີຄວາມຍຸດຕິທຳ, ມີຄວາມເປັນເອກະພາບກົມກຽວກັນ ແລະມີຄວາມເປັນກາງ ຊຶ່ງຈະເປັນການປ້ອງກັນບໍ່ໃຫ້ມີການກຳນົດມູນຄ່າແຈ້ງພາສີຂຶ້ນຕາມລຳພັງ ຫລືການສົມໝຸດຂຶ້ນເອງນັ້ນ.

ຍອມຮັບວ່າພື້ນຖານການກຳນົດມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງຕາມລະບຽບການຂອງພາສີນັ້ນ ຕ້ອງເປັນລາຄາຕົກລົງຊື້ຂາຍລະຫວ່າງຜູ້ຊື້ ແລະຜູ້ຂາຍ ຕາມມູນຄ່າທີ່ກຳລັງກຳນົດແຈ້ງພາສີຢູ່ນັ້ນ ເພື່ອເຮັດໃຫ້ການນຳໃຊ້ຫລັກການນີ້ໄດ້ຮັບຜົນດີ ແລະກວ້າງຂວາງຂຶ້ນຫລາຍທີ່ສຸດເທົ່າທີ່ຈະເປັນໄປໄດ້.

ຍອມຮັບວ່າການກຳນົດມູນຄ່າແຈ້ງພາສີຄວນປະຕິບັດຕາມຫລັກການຢ່າງງ່າຍດາຍ ແລະຍຸດຕິທຳ ຊຶ່ງສອດຄ່ອງກັບການປະຕິບັດໃນທາງການຄ້າ ແລະລະບຽບການກຳນົດມູນຄ່າແຈ້ງພາສີຄວນ

ຈະຕ້ອງນຳໃຊ້ໄດ້ໂດຍທົ່ວໄປ ແລະບໍ່ມີຄວາມແຕກຕ່າງທາງດ້ານແຫລ່ງທີ່ມາຂອງສິນຄ້າເຄື່ອງ ຂອງແຕ່ຢ່າງໃດ.

ຍອມຮັບວ່າລະບຽບການກຳນົດມູນຄ່າແຈ້ງພາສີບໍ່ຄວນນຳໄປໃຊ້ໃນກໍລະນີມີການຂາຍຫຸ້ມຕະ ຫລາດ.

ຈຶ່ງໄດ້ພ້ອມ***ກັນຕົກລົງ***ດັ່ງນີ້:

ພາກທີ 1
ຫລັກການຂອງການກຳນົດມູນຄ່າແຈ້ງພາສີ
ມາດຕາ 1

1. ມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງນຳເຂົ້າຈະຕ້ອງເປັນລາຄາຕົກລົງຊື້ຂາຍກັນ ຊຶ່ງແມ່ນລາຄາ ທີ່ໄດ້ຈ່າຍ ຫລືຈະຕ້ອງໄດ້ຈ່າຍຕົວຈິງສຳລັບສິນຄ້າເຄື່ອງຂອງ ເມື່ອໄດ້ມີການຂາຍເພື່ອການສົ່ງອອກໄປ ຍັງປະເທດນຳເຂົ້າ ໂດຍໄດ້ມີການປັບລາຄາຕາມຂໍ້ກຳນົດຂອງມາດຕາ 8 ໂດຍມີເງື່ອນໄຂດັ່ງນີ້:

(ກ) ຕ້ອງບໍ່ມີຂໍ້ຈຳກັດໃນການຈຳໜ່າຍ ຫລືການຊົມໃຊ້ຂອງຜູ້ຊື້ ເວັ້ນເສຍແຕ່ຈະເປັນຂໍ້ຈຳກັດທີ່;
   (1) ບັງຄັບ ຫລືກຳນົດໂດຍກົດໝາຍ ຫລືໂດຍເຈົ້າໜ້າທີ່ຂອງລັດຖະບານໃນປະເທດນຳ ເຂົ້າ;
   (2) ຈຳກັດພື້ນທີ່ທາງພູມີປະເທດທີ່ສິນຄ້າເຄື່ອງຂອງນັ້ນຈະໄປຂາຍຕໍ່ ຫລື;
   (3) ບໍ່ມີຜົນກະທົບຫລາຍຕໍ່ລາຄາສິນຄ້າເຄື່ອງຂອງ.

(ຂ) ການຂາຍ ຫລືລາຄາຂາຍຕ້ອງບໍ່ຂຶ້ນກັບເງື່ອນໄຂ ຫລືຜົນຕອບແທນບາງປະການທີ່ເຮັດໃຫ້ບໍ່ ສາມາດກຳນົດມູນຄ່າແຈ້ງພາສີນັ້ນໄດ້ ຍົກເວັ້ນເງື່ອນໄຂ ຫລືຜົນຕອບແທນທີ່ກ່ຽວຂ້ອງກັບ ການຜະລິດ ຫລືການຕະຫລາດຂອງສິນຄ້າເຄື່ອງຂອງນຳເຂົ້າ;

(ຄ) ຕ້ອງບໍ່ມີສ່ວນໃດໆ ຂອງເງິນທີ່ໄດ້ມາຈາກການຂາຍຕໍ່, ການຈຳໜ່າຍ ຫລືການຊົມໃຊ້ສິນ ຄ້າເຄື່ອງຂອງນັ້ນໂດຍຜູ້ຊື້ ມີຜົນເພີ່ມຂຶ້ນໃຫ້ກັບຜູ້ຂາຍບໍ່ວ່າຈະເປັນທາງກົງ ຫລືທາງອ້ອມ. ເວັ້ນເສຍແຕ່ຈະສາມາດປັບລາຄາໄດ້ໂດຍອີງໃສ່ຂໍ້ກຳນົດຂອງມາດຕາ 8 ແລະ;

(ງ) ຜູ້ຊື້ ແລະຜູ້ຂາຍຕ້ອງບໍ່ມີຄວາມສຳພັນກັນ ຫລືຖ້າຜູ້ຊື້ ແລະຜູ້ຂາຍມີຄວາມສຳພັນກັນ ລາ ຄາຕົກລົງຊື້ຂາຍກໍ່ຮັບເອົາໄດ້ ກໍ່ຕໍ່ເມື່ອວ່າມູນຄ່າແຈ້ງພາສີປະຕິບັດຕາມຂໍ້ກຳນົດຂອງວັກທີ 2 ຂອງມາດຕານີ້.

2. (ກ) ໃນການກຳນົດມູນຄ່າແຈ້ງພາສີ ເຖິງແມ່ນວ່າລາຄາຕົກລົງຊື້ຂາຍກັນຈະຮັບເອົາໄດ້ຕາມເນື້ອໃນຂອງວັກທີ 1 ຂອງມາດຕານີ້. ຄວາມຈິງທີ່ວ່າຜູ້ຊື້ ແລະຜູ້ຂາຍມີຄວາມສຳພັນກັນຕາມເນື້ອໃນທີ່ນິຍາມໄວ້ໃນມາດຕາ 15 ນັ້ນ ຈະຕ້ອງບໍ່ມີການຍົກມາອ້າງອີງວ່າລາຄາຕົກລົງຊື້ຂາຍກັນນັ້ນຮັບບໍ່ໄດ້. ໃນກໍລະນີເຊັ່ນນີ້ບັນດາພຶດຕິກຳທີ່ກ່ຽວຂ້ອງກັບການຂາຍ ຈະຕ້ອງນຳມາກວດກາ ແລະ ລາຄາຕົກລົງຊື້ຂາຍກັນຈະຮັບເອົາໄດ້ກໍ່ຕໍ່ເມື່ອຄວາມສຳພັນກັນຂອງຜູ້ຊື້ ແລະຜູ້ຂາຍຈະບໍ່ສົ່ງຜົນກະທົບຕໍ່ລາຄາແຕ່ຢ່າງໃດ. ຖ້າວ່າມີການສະໜອງຂໍ້ມູນໃຫ້ໂດຍຜູ້ນຳເຂົ້າ ຫລືບໍ່ສະໜອງໃຫ້ອີງການພາສີກໍ່ມີຂໍ້ມູນເພື່ອພິຈາລະນາວ່າຄວາມສຳພັນກັນນັ້ນໄດ້ກະທົບຕໍ່ລາຄາ ຫລືບໍ່, ເຈົ້າໜ້າທີ່ພາສີກໍ່ຈະແຈ້ງຂໍ້ມູນທີ່ເຈົ້າໜ້າທີ່ມີຢູ່ໃຫ້ຜູ້ນຳເຂົ້າສິນຄ້າເຄື່ອງຂອງຮູ້ ແລະຜູ້ນຳເຂົ້າເອງກໍ່ຈະຕ້ອງຕອບຄຳຖາມຂອງເຈົ້າໜ້າທີ່ພາສີຢ່າງສົມເຫດສົມຜົນ. ຖ້າຫາກຜູ້ນຳເຂົ້າຮ້ອງຂໍຕໍ່ລັດຖະການພາສີ ຫຼືເຈົ້າໜ້າທີ່ພາສີ. ເຈົ້າໜ້າທີ່ພາສີຕ້ອງບອກຜົນໃຫ້ຜູ້ນຳເຂົ້າສິນຄ້າເຄື່ອງຂອງຮູ້ ແລະໃຫ້ເຮັດເປັນລາຍລັກອັກສອນຢ່າງຄັກແນ່.

(ຂ) ໃນການຂາຍລະຫວ່າງບຸກຄົນ ທີ່ມີຄວາມສຳພັນກັນລາຄາຕົກລົງຊື້ຂາຍຈະຮັບເອົາໄດ້ ແລະສິນຄ້າເຄື່ອງຂອງໄດ້ກຳນົດມູນຄ່າແຈ້ງພາສີຕາມຂໍ້ກຳນົດຂອງວັກທີ 1 ຂອງມາດຕານີ້ໄດ້ກໍ່ຕໍ່ເມື່ອຜູ້ນຳເຂົ້າສິນຄ້າເຄື່ອງຊີ້ແຈງໃຫ້ເຫັນວ່າມູນຄ່າແຈ້ງພາສີດັ່ງກ່າວ ມີຄວາມໃກ້ຄຽງກັນຫລາຍກັບມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງທີ່ນຳເຂົ້າມາໃນເວລາດຽວກັນ ຫຼື ໃນເວລາໃກ້ຄຽງກັນດັ່ງນີ້:

(1) ລາຄາຕົກລົງຊື້ຂາຍໃນການຂາຍໃຫ້ຜູ້ຊື້ທີ່ບໍ່ມີຄວາມສຳພັນກັນສຳລັບສິນຄ້າເຄື່ອງຂອງທີ່ຄືກັນ ຫລືຄ້າຍຄືກັນ ເພື່ອສົ່ງອອກໄປຍັງປະເທດນຳເຂົ້າດຽວກັນ;

(2) ມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງທີ່ຄືກັນ ຫລືຄ້າຍຄືກັນ ຊຶ່ງກຳນົດມູນຄ່າແຈ້ງພາສີຕາມຂໍ້ກຳນົດຂອງມາດຕາ 5

(3) ມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງທີ່ຄືກັນ ຫຼື ຄ້າຍຄືກັນ ຊຶ່ງກຳນົດມູນຄ່າແຈ້ງພາສີຕາມຂໍ້ກຳນົດຂອງມາດຕາ 6

ກ່ອນຈະນຳໃຊ້ຕາມການກຳນົດມູນຄ່າແຈ້ງພາສີຂ້າງເທິງນີ້, ຈະຕ້ອງໄດ້ຄຳນຶງເຖິງຄວາມແຕກຕ່າງທີ່ສະແດງໃຫ້ເຫັນ ໃນດ້ານລະດັບການຄ້າ, ລະດັບປະລິມານ, ສ່ວນປະກອບຕ່າງໆ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 8 ແລະຄ່າຕ່າງໆ ທີ່ເກີດຂຶ້ນກັບຜູ້ຂາຍໃນການຂາຍ ທີ່ຜູ້ຂາຍ ແລະຜູ້ຊື້ບໍ່ມີຄວາມສຳພັນກັນ ຊຶ່ງຄ່າຕ່າງໆ ທີ່ບໍ່ໄດ້ເກີດຂຶ້ນກັບຜູ້ຂາຍ ໃນການຂາຍທີ່ຜູ້ຂາຍ ແລະຜູ້ຊື້ມີຄວາມສຳພັນກັນ.

(ຄ) ການກຳນົດມູນຄ່າແຈ້ງພາສີໃນວັກທີ 2 (ຂ) ຂອງມາດຕານີ້ ແມ່ນຖືການນຳໃຊ້ເພື່ອເປັນການຊ່ວຍຜູ້ນຳເຂົ້າສິນຄ້າເຄື່ອງຂອງ ແລະຈະໃຊ້ສຳລັບການສົມທຽບເທົ່ານັ້ນ. ລາຄານຳມາປ່ຽນ ນັ້ນອາດຖືກກຳນົດຂຶ້ນຕາມຂໍ້ກຳນົດຂອງວັກທີ 2 (ຂ) ຂອງມາດຕານີ້

ມາດຕາ 2

1. (ກ) ຖ້າຫາກມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງຂາເຂົ້າບໍ່ສາມາດກຳນົດໄດ້ຕາມຂໍ້ກຳນົດຂອງມາດຕາ 1 ມູນຄ່າແຈ້ງພາສີຈະຕ້ອງແມ່ນມູນຄ່າຕົກລົງຊື້ຂາຍກັນ ຂອງສິນຄ້າເຄື່ອງຂອງທີ່ຄືກັນ ຊຶ່ງໄດ້ຂາຍເພື່ອການສົ່ງອອກໄປຍັງປະເທດນຳເຂົ້າດຽວກັນ ແລະໄດ້ສົ່ງອອກໃນເວລາດຽວກັນ ຫຼື ເວລາໃກ້ຄຽງກັນກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີຢູ່.

(ຂ) ໃນການນຳໃຊ້ມາດຕານີ້, ມູນຄ່າຕົກລົງຊື້ຂາຍກັນ ຂອງສິນຄ້າເຄື່ອງຂອງທີ່ຄືກັນໃນການຂາຍທີ່ລະດັບການຄ້າດຽວກັນ ແລະໃນປະລິມານດຽວກັນ ກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຈະຕ້ອງນຳໃຊ້ເພື່ອກຳນົດມູນຄ່າແຈ້ງພາສີ. ໃນກໍລະນີທີ່ບໍ່ມີການຂາຍສິນຄ້າເຄື່ອງຂອງດັ່ງກ່າວ, ມູນຄ່າຕົກລົງຊື້ຂາຍກັນຂອງສິນຄ້າເຄື່ອງຂອງທີ່ຄືກັນ ຊຶ່ງໄດ້ຂາຍໃນລະດັບການຄ້າແຕກຕ່າງກັນ ແລະ/ຫຼື ໃນປະລິມານແຕກຕ່າງກັນ ຊຶ່ງໄດ້ປັບລາຄາແລ້ວ ໂດຍຄຳນຶງເຖິງຄວາມແຕກຕ່າງອັນເນື່ອງມາຈາກລະດັບການຄ້າ ແລະ/ຫຼື ປະລິມານຈະຖືກນຳມາໃຊ້ໃນການກຳນົດມູນຄ່າແຈ້ງພາສີ ການປັບລາຄາເຊັ່ນນັ້ນສາມາດດຳເນີນໄປໄດ້ບົນພື້ນຖານມີຫລັກຖານອ້າງອີງຊັດແຈ້ງຢ່າງຄັກແນ່ ຊຶ່ງການປັບລາຄາຈະຖືກຕ້ອງ ແລະສົມເຫດສົມຜົນບໍ່ວ່າການປັບລາຄານັ້ນ ຈະນຳໄປສູ່ການເພີ່ມຂຶ້ນ ຫຼື ຫຼຸດລົງໃນມູນຄ່າເດີມ ຫຼືບໍ່ກໍ່ຕາມ.

2. ໃນກໍລະນີທີ່ຄ່າໃຊ້ຈ່າຍ ແລະຄ່າສິ້ນເປືອງຕ່າງໆ ຕາມທີ່ໄດ້ລະບຸໄວ້ໃນວັກທີ 2 ຂອງມາດຕາ 8 ໄດ້ລວມຢູ່ໃນລາຄາຕົກລົງຊື້ຂາຍກັນແລ້ວ. ການປັບລາຄາຈະຕ້ອງໄດ້ດຳເນີນໄປໂດຍຄຳນຶງເຖິງຄວາມແຕກຕ່າງເປັນສຳຄັນ ຢູ່ໃນຄ່າໃຊ້ຈ່າຍ ແລະຄ່າສິ້ນເປືອງຕ່າງໆ ລະຫວ່າງສິນຄ້າເຄື່ອງຂອງນຳເຂົ້າ ແລະສິນຄ້າເຄື່ອງຂອງທີ່ຄືກັນ ຊຶ່ງອາດມີຄວາມແຕກຕ່າງກັນທາງດ້ານໄລຍະທາງ ແລະວິທີການຂົນສົ່ງ.

3. ໃນການນຳໃຊ້ມາດຕານີ້, ຖ້າພົບເຫັນວ່າລາຄາຕົກລົງຊື້ຂາຍກັນ ຂອງສິນຄ້າເຄື່ອງຂອງທີ່ຄືກັນມີໜ້ອຍກວ່ານຶ່ງລາຄາແລ້ວ ຈະຕ້ອງໃຊ້ລາຄາຕ່ຳທີ່ສຸດໃນການກຳນົດມູນຄ່າແຈ້ງພາສີຂອງກັບສິນຄ້າເຄື່ອງຂອງ ທີ່ນຳເຂົ້າ.

ມາດຕາ 3

1. (ກ) ຖ້າວ່າມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງຂາເຂົ້າບໍ່ສາມາດກຳນົດຕາມຂໍ້ກຳນົດຂອງມາດຕາ 1 ແລະ 2, ມູນຄ່າແຈ້ງພາສີຕ້ອງເປັນລາຄາຕົກລົງຊື້ຂາຍຂອງສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ ຊຶ່ງໄດ້ຂາຍເພື່ອການສົ່ງອອກໄປຍັງປະເທດນຳເຂົ້າດຽວກັນ ແລະໄດ້ສົ່ງອອກໃນເວລາດຽວກັນ ຫຼືໃນເວລາໃກ້ຄຽງກັນກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີນັ້ນ.

(ຂ) ໃນການນຳໃຊ້ມາດຕານີ້, ມູນຄ່າຕົກລົງຊື້ຂາຍກັນຂອງສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ ໃນການຂາຍທີ່ມີລະດັບການຄ້າດຽວກັນ ແລະໃນປະລິມານດຽວກັນ ກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຈະຕ້ອງນຳໃຊ້ເພື່ອກຳນົດມູນຄ່າແຈ້ງພາສີ. ໃນກໍລະນີທີ່ບໍ່ມີການຂາຍສິນຄ້າເຄື່ອງຂອງດັ່ງກ່າວ, ມູນຄ່າຕົກລົງຊື້ຂາຍກັນຂອງສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ ຊຶ່ງໄດ້ຂາຍໄປໃນລະດັບການຄ້າທີ່ແຕກຕ່າງ ແລະ/ຫລືໃນປະລິມານແຕກຕ່າງກັນຊຶ່ງໄດ້ປັບລາຄາແລ້ວ ໂດຍຄຳນຶງເຖິງຄວາມແຕກຕ່າງ ທີ່ເນື່ອງມາຈາກລະດັບການຄ້າ ແລະ/ຫລືປະລິມານຈະຖືກນຳມາໃຊ້ໃນການກຳນົດມູນຄ່າແຈ້ງພາສີ ການປັບລາຄາເຊັ່ນນັ້ນຈະສາມາດດຳເນີນໄປໄດ້ບົນພື້ນຖານມີຫລັກຖານມາອ້າງອີງຊີ້ແຈງຢ່າງຄັກແນ່ ຊຶ່ງການປັບລາຄາຈະຖືກຕ້ອງ ແລະສົມເຫດສົມຜົນບໍ່ວ່າການປັບລາຄານັ້ນ ຈະນຳໄປສູ່ການເພີ່ມຂຶ້ນ ຫຼືຫຼຸດລົງໃນມູນຄ່າເດີມ ຫຼືບໍ່ກໍ່ຕາມ.

2. ໃນກໍລະນີທີ່ຄ່າໃຊ້ຈ່າຍ ແລະຄ່າສິ້ນເປືອງຕ່າງໆ ຕາມທີ່ໄດ້ລະບຸໄວ້ໃນວັກທີ 2 ຂອງມາດຕາ 8 ໄດ້ລວມຢູ່ໃນລາຄາຕົກລົງຊື້ຂາຍກັນແລ້ວ. ການປັບລາຄາຈະຕ້ອງດຳເນີນໄປໂດຍຄຳນຶງເຖິງຄວາມແຕກຕ່າງເປັນສຳຄັນຢູ່ໃນຄ່າໃຊ້ຈ່າຍ ແລະຄ່າສິ້ນເປືອງຕ່າງໆ ລະຫວ່າງສິນຄ້າເຄື່ອງຂອງນຳເຂົ້າ ແລະສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ ຊຶ່ງອາດມີຄວາມແຕກຕ່າງກັນທາງດ້ານໄລຍະທາງ ແລະວິທີການຂົນສົ່ງ.

3. ໃນການນຳໃຊ້ມາດຕານີ້, ຖ້າພົບເຫັນວ່າລາຄາຕົກລົງຊື້ຂາຍຂອງສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ ຫຼາຍກວ່ານຶ່ງລາຄາແລ້ວ ຈະຕ້ອງໃຊ້ລາຄາຕ່ຳທີ່ສຸດໃນການກຳນົດມູນຄ່າແຈ້ງພາສີຂອງກັບສິນຄ້າເຄື່ອງຂອງທີ່ນຳເຂົ້າມານັ້ນ.

ມາດຕາ 4

ຖ້າວ່າມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງຂາເຂົ້າ ບໍ່ສາມາດກຳນົດໄດ້ຕາມຂໍ້ກຳນົດຂອງມາດຕາ 1, 2 ແລະ 3, ມູນຄ່າແຈ້ງພາສີຈະຕ້ອງໄດ້ກຳນົດຂຶ້ນຕາມຂໍ້ກຳນົດຂອງມາດຕາ 5 ຫລືເມື່ອມູນຄ່າແຈ້ງພາສີຍັງບໍ່ສາມາດກຳນົດຂຶ້ນໄດ້ຕາມມາດຕາ 5. ມູນຄ່າແຈ້ງພາສີຈະຕ້ອງໄດ້ກຳນົດຂຶ້ນຕາມຂໍ້ກຳນົດຂອງມາດຕາ 6 ເວັ້ນເສຍແຕ່ຜູ້ນຳເຂົ້າຮ້ອງຂໍ, ສະນັ້ນລຳດັບຂອງການນຳໃຊ້ມາດຕາ 5 ແລະ 6 ອາດຈະໃຊ້ສະລັບກັນກໍ່ໄດ້.

ມາດຕາ 5

1. (ກ) ຖ້າວ່າສິນຄ້າເຄື່ອງຂອງນຳເຂົ້າ ຫລືສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນ ຫລືຄ້າຍຄືກັນໄດ້ຂາຍໄປຍັງປະເທດນຳເຂົ້າໃນສະພາບເດີມທີ່ນຳເຂົ້າ, ມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງ

ຂາເຂົ້າ ຕາມຂໍ້ກຳນົດຂອງມາດຕານີ້ ຈະຕ້ອງຂຶ້ນຢູ່ກັບລາຄາຕໍ່ຫົວໜ່ວຍຂອງສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນ ຫລືຄ້າຍຄືກັນ ໄດ້ຂາຍໃນປະລິມານລວມຫລາຍທີ່ສຸດ ໃນເວລາດຽວກັນ ຫລືເວລາທີ່ໃກ້ຄຽງກັນກັບການນຳເຂົ້າຂອງສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ, ໃຫ້ກັບບຸກຄົນທີ່ບໍ່ມີຄວາມສຳພັນກັນກັບບຸກຄົນຜູ້ທີ່ຊື້ສິນຄ້າເຄື່ອງຂອງນັ້ນໂດຍໃຫ້ຫັກຄ່າດັ່ງຕໍ່ໄປນີ້ອອກ:

(1) ຄ່ານາຍໜ້າທີ່ໄດ້ຈ່າຍ ຫລືຕົກລົງກັນວ່າຈະຈ່າຍໃຫ້ ຫລືສ່ວນທີ່ບວກເຂົ້າໄປຕາມປົກກະຕິຕໍ່ກັບກຳໄລ ແລະຄ່າໃຊ້ຈ່າຍທົ່ວໄປທີ່ກ່ຽວພັນກັບການຂາຍໃນປະເທດຂອງສິນຄ້າເຄື່ອງຂອງນຳເຂົ້າປະເພດ ຫລືຊະນິດດຽວກັນ;

(2) ຄ່າຂົນສົ່ງ, ຄ່າປະກັນໄພ ແລະຄ່າໃຊ້ຈ່າຍສົ້ມເປື່ອງຕ່າງໆ ທີ່ເກີດຂຶ້ນພາຍໃນປະເທດນຳເຂົ້າສິນຄ້າເຄື່ອງຂອງ;

(3) ຄ່າໃຊ້ຈ່າຍ ແລະຄ່າສົ້ມເປື່ອງຕ່າງໆ ຕາມທີ່ໄດ້ລະບຸໄວ້ໃນວັກທີ 2 ຂອງມາດຕາ 8; ແລະ

(4) ຄ່າພາສີ ແລະອາກອນພາຍໃນອື່ນໆ ທີ່ໄດ້ຈ່າຍໃນປະເທດນຳເຂົ້າ ເນື່ອງຈາກການນຳເຂົ້າສິນຄ້າເຄື່ອງຂອງ ຫລືການຈຳໜ່າຍສິນຄ້າເຄື່ອງຂອງດັ່ງກ່າວນັ້ນ.

(ຂ) ຖ້າວ່າບໍ່ມີການຂາຍສິນຄ້າເຄື່ອງຂອງນຳເຂົ້າ ຫຼື ສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນ ຫຼື ຄ້າຍຄືກັນ ໃນເວລາດຽວກັນ ຫຼື ໃກ້ຄຽງກັນກັບການນຳເຂົ້າຂອງສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີແລ້ວ ພາຍໃຕ້ຂໍ້ກຳນົດຂອງວັກທີ 1 (ກ) ຂອງມາດຕານີ້ ມູນຄ່າແຈ້ງພາສີຈະຕ້ອງຂຶ້ນຢູ່ກັບລາຄາຕໍ່ຫົວໜ່ວຍຂອງສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນ ຫຼື ຄ້າຍຄືກັນ ໄດ້ຂາຍໃນປະເທດນຳເຂົ້າໃນສະພາບເດີມ (ບໍ່ມີການດັດແປງ, ເສີມແຕ່ງ) ທີ່ນຳເຂົ້າໃນເວລາໃກ້ຄຽງກັນຫຼັງຈາກການນຳເຂົ້າສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ ແຕ່ຈະຕ້ອງບໍ່ເກີນກຳນົດ (90) ວັນ ພາຍຫຼັງທີ່ມີການນຳເຂົ້າສິນຄ້າເຄື່ອງຂອງນັ້ນ.

2. ຖ້າວ່າບໍ່ມີການຂາຍສິນຄ້າເຄື່ອງຂອງນຳເຂົ້າ ຫຼື ສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນ ຫຼື ຄ້າຍຄືກັນ ໃນປະເທດນຳເຂົ້າໃນສະພາບເດີມ (ບໍ່ມີການດັດແປງ, ເສີມແຕ່ງ) ທີ່ນຳເຂົ້າມາແລ້ວ, ຖ້າຜູ້ນຳເຂົ້າຮ້ອງຂໍກ່ຽວກັບມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງນຳເຂົ້າ ເຈົ້າໜ້າທີ່ພາສີຈະຕ້ອງເບິ່ງຄືນລາຄາຕໍ່ຫົວໜ່ວຍຂອງສິນຄ້າເຄື່ອງຂອງທີ່ນຳເຂົ້າມາແລ້ວ ຫລັງຈາກມີການປຸງແຕ່ງເພີ່ມເຕີມ, ໄດ້ຂາຍໃນປະລິມານລວມຫລາຍທີ່ສຸດໃຫ້ກັບບຸກຄົນໃນປະເທດນຳເຂົ້າ ຊຶ່ງບໍ່ມີຄວາມສຳພັນກັນກັບບຸກຄົນຜູ້ທີ່ຊື້ສິນຄ້າເຄື່ອງຂອງນັ້ນໄປ ໂດຍໃຫ້ຫັກມູນຄ່າທີ່ເພີ່ມຂຶ້ນຈາກການປຸງແຕ່ງດັ່ງກ່າວ ແລະຫັກຄ່າຕ່າງໆ ອອກ ແລະໃຫ້ປະຕິບັດຕາມຂໍ້ກຳນົດຂອງວັກທີ 1 (ກ) ດ້ວຍ.

ມາດຕາ 6

1. ມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງນຳເຂົ້າ ພາຍໃຕ້ຂໍ້ກຳນົດຂອງມາດຕານີ້ ຈະຕ້ອງເປັນມູນຄ່າຂອງການຜະລິດສິນຄ້າເຄື່ອງຂອງ. ມູນຄ່າການຜະລິດສິນຄ້າເຄື່ອງຂອງຈະຕ້ອງປະກອບດ້ວຍຜົນລວມຂອງ:

(ກ) ຕົ້ນທຶນ ຫຼື ມູນຄ່າຂອງວັດຖຸ ແລະການຜະລິດ ຫຼື ການປຸງແຕ່ງອື່ນໆ ທີ່ນຳມາໃຊ້ໃນການຜະລິດສິນຄ້າເຄື່ອງຂອງນຳເຂົ້າ;

(ຂ) ຈຳນວນຂອງກຳໄລ ແລະຄ່າໃຊ້ຈ່າຍທົ່ວໄປ ທີ່ເທົ່າກັບຈຳນວນໃນການຂາຍສິນຄ້າເຄື່ອງຂອງຊະນິດ ຫຼື ປະເພດດຽວກັນກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຊຶ່ງຜູ້ຜະລິດໃນປະເທດສົ່ງອອກໄດ້ສົ່ງອອກໄປຍັງປະເທດນຳເຂົ້າ; ແລະ

(ຄ) ຕົ້ນທຶນ ຫຼື ມູນຄ່າຂອງຄ່າໃຊ້ຈ່າຍອື່ນໆ ທັງໝົດທີ່ຈຳເປັນສະທ້ອນໃຫ້ເຫັນເຖິງທາງເລືອກຂອງການປະເມີນລາຄາ ຊຶ່ງສະມາຊິກໄດ້ເລືອກພາຍໃຕ້ຂໍ້ກຳນົດວັກທີ 2 ຂອງມາດຕາ 8

2. ຫ້າມປະເທດສະມາຊິກຮຽກຮ້ອງ ຫລືບັງຄັບໃຫ້ບຸກຄົນໃດໆ ທີ່ບໍ່ມີພູມລຳເນົາອາໃສຢູ່ໃນດິນແດນຂອງຕົນສະແດງຂໍ້ມູນເພື່ອການກວດກາ, ຫລືໃຫ້ຄວາມຍິນຍອມໃຫ້ເຂົ້າໄປກວດຄົ້ນເຄຫະສະຖານ, ປຶ້ມບັນຊີ ຫລືປຶ້ມບັນທຶກຕ່າງໆ ເພື່ອວັດຖຸປະສົງໃນການກຳນົດມູນຄ່າແຈ້ງພາສີຕາມວິທີຄິດໄລ່ການຜະລິດສິນຄ້າເຄື່ອງຂອງ. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນຕ່າງໆ ທີ່ຜູ້ຜະລິດໄດ້ຕອງສະໜອງໃຫ້ ເພື່ອວັດຖຸປະສົງໃນການກຳນົດມູນຄ່າແຈ້ງພາສີ ພາຍໃຕ້ຂໍ້ກຳນົດຂອງມາດຕານີ້ ອາດຈະໄດ້ຮັບການກວດກາ, ພິສຸດ ຫລືຢັ້ງຢືນໃນອີກປະເທດນຶ່ງມາແລ້ວ ໂດຍເຈົ້າໜ້າທີ່ກ່ຽວຂ້ອງໃນປະເທດນຳເຂົ້າ ດ້ວຍການຍິນຍອມຂອງຜູ້ຜະລິດສິນຄ້າ ຕ້ອງໄດ້ແຈ້ງລ່ວງໜ້າໃຫ້ລັດຖະບານຂອງປະເທດຜູ້ຜະລິດສິນຄ້າເຄື່ອງຂອງຮັບຮູ້ເຖິງບັນຫາ ແລະກ່ຳຈະບໍ່ຂັດຂວາງໃນການກວດກາ.

ມາດຕາ 7

1. ຖ້າວ່າມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງນຳເຂົ້າ ບໍ່ສາມາດກຳນົດໄດ້ຕາມຂໍ້ກຳນົດຂອງມາດຕາ 1 ເຖິງ 6 ແລ້ວ, ມູນຄ່າແຈ້ງພາສີຈະຕ້ອງໄດ້ກຳນົດຂຶ້ນຕາມລະບຽບຫັລກການ ແລະຂໍ້ກຳນົດທົ່ວໄປຂອງຂໍ້ຕົກລົງສະບັບນີ້ ແລະຂອງມາດຕາ VII ຂອງ (GATT) 1994 ຢ່າງສົມເຫດສົມຜົນ ແລະປະນິປະນອມ ແລະອີງຕາມພື້ນຖານຂໍ້ມູນທີ່ມີຢູ່ໃນປະເທດນຳເຂົ້າ.

2. ມູນຄ່າແຈ້ງພາສີຈະບໍ່ຖືກກຳນົດຂຶ້ນໄດ້ຕາມຂໍ້ກຳນົດຂອງມາດຕານີ້ຄື:

(ก) ລາຄາຂາຍພາຍໃນປະເທດຂອງສິນຄ້າເຄື່ອງຂອງທີ່ຜະລິດໃນປະເທດນຳເຂົ້າ;

(ຂ) ລະບົບຊຶ່ງກຳນົດໃຫ້ຮັບເອົາລາຄາທີ່ສູງກວ່າຈາກສອງລາຄາທີ່ໃຫ້ເລືອກ;

(ຄ) ລາຄາຂາຍໃນຕະຫລາດພາຍໃນຂອງປະເທດສົ່ງອອກ;

(ງ) ຕົ້ນທຶນຂອງການຜະລິດທີ່ບໍ່ແມ່ນມູນຄ່າຄິດໄລ່ຕາມວິທີແຈ້ງມູນຄ່າການຜະລິດສິນຄ້າເຄື່ອງຂອງ ຊຶ່ງໄດ້ກຳນົດຂຶ້ນສຳລັບສິນຄ້າເຄື່ອງຂອງທີ່ຄືກັນ ຫລືຄ້າຍຄືກັນຕາມຂໍ້ກຳນົດຂອງມາດຕາ 6;

(ຈ) ລາຄາສິນຄ້າເຄື່ອງຂອງສົ່ງອອກໄປຍັງປະເທດອື່ນ ທີ່ບໍ່ແມ່ນປະເທດນຳເຂົ້າ;

(ສ) ລາຄາຕ່ຳສຸດ ຫຼື;

(ຊ) ລາຄາທີ່ກຳນົດຂຶ້ນຕາມລຳພັງໃຈ ຫລືລາຄາທີ່ສົມໝຸດຂຶ້ນມາ.

3. ຖ້າວ່າຜູ້ນຳເຂົ້າຮ້ອງຂໍ, ຜູ້ນຳເຂົ້າຈະຕ້ອງໄດ້ຮັບແຈ້ງເປັນລາຍລັກອັກສອນ ກ່ຽວກັບມູນຄ່າແຈ້ງພາສີທີ່ໄດ້ກຳນົດຂຶ້ນຕາມຂໍ້ກຳນົດຂອງມາດຕານີ້ ແລະວິທີແຈ້ງທີ່ນຳໃຊ້ເພື່ອກຳນົດມູນຄ່າແຈ້ງພາສີນັ້ນ.

ມາດຕາ 8

1. ໃນການກຳນົດມູນຄ່າແຈ້ງພາສີຕາມຂໍ້ກຳນົດຂອງມາດຕາ 1 ນັ້ນ, ຈະຕ້ອງໄດ້ນຳເອົາລາຍການຕ່າງໆ ນອກເຂົ້າກັບລາຄາທີ່ໄດ້ຈ່າຍ ຫລືທີ່ຈະຕ້ອງຈ່າຍຕົວຈິງສຳລັບສິນຄ້າເຄື່ອງຂອງທີ່ນຳເຂົ້າ:

(ກ) ລາຍການດັ່ງຕໍ່ໄປນີ້ຄືຄ່າໃຊ້ຈ່າຍທີ່ຜູ້ຊື້ຈະຕ້ອງຮັບພາລະ ແຕ່ຍັງບໍ່ໄດ້ນຳໄປລວມເຂົ້າກັບລາຄາທີ່ໄດ້ຈ່າຍ ຫລືທີ່ຈະຕ້ອງຈ່າຍຕົວຈິງສຳລັບສິນຄ້າເຄື່ອງຂອງນັ້ນ:

(1) ຄ່ານາຍໜ້າ ແລະຄ່າຄົນກາງ ນອກຈາກຄ່ານາຍໜ້າຈາກການຊື້;

(2) ຄ່າພາຊະນະບັນຈຸ ຊຶ່ງຖືວ່າເປັນມູນຄ່າສ່ວນນຶ່ງຂອງສິນຄ້າເຄື່ອງຂອງທີ່ນຳເຂົ້າ;

(3) ຄ່າບັນຈຸຫີບຫໍ່, ບໍ່ວ່າຈະເປັນຄ່າແຮງງານ ຫລືຄ່າວັດຖຸກໍ່ຕາມ.

(ຂ) ມູນຄ່າທີ່ໄດ້ຮັບການແບ່ງສ່ວນຢ່າງເໝາະສົມ ສຳລັບສິນຄ້າ ແລະການບໍລິການດັ່ງຕໍ່ໄປນີ້ ຊຶ່ງຜູ້ຊື້ໄດ້ຈັດຫາມາໃຫ້ໂດຍທາງກົງ ຫລືທາງອ້ອມ ໂດຍບໍ່ໄດ້ຄິດລາຄາ ຫລືໃນລາຄາທີ່ຫລຸດຜ່ອນໃຫ້ ເພື່ອໃຊ້ເຂົ້າໃນການຜະລິດ ແລະການຂາຍເພື່ອການສົ່ງອອກສຳລັບສິນຄ້າເຄື່ອງຂອງນຳເຂົ້າ, ຖືວ່າຄ່າໃຊ້ຈ່າຍເຫລົ່ານັ້ນຍັງບໍ່ທັນໄດ້ບວກເຂົ້າໄວ້ໃນລາຄາທີ່ໄດ້ຈ່າຍ ຫຼື ທີ່ຈະຕ້ອງຈ່າຍຕົວຈິງ:

(1) ວັດຖຸ, ສ່ວນປະກອບ, ສິ້ນສ່ວນ ແລະເຄື່ອງຂອງທີ່ຄ້າຍຄືກັນທີ່ລວມຢູ່ໃນສິນຄ້າເຄື່ອງຂອງນຳເຂົ້າ;

(2) ເຄື່ອງມື, ແມ່ພິມ, ແບບພິມ ແລະເຄື່ອງຂອງທີ່ຄ້າຍຄືກັນທີ່ໃຊ້ໃນການຜະລິດສິນຄ້າເຄື່ອງຂອງນຳເຂົ້າ;

(3) ວັດຖຸທີ່ໃຊ້ສິ້ນເປືອງໃນການຜະລິດສິນຄ້າເຄື່ອງຂອງນຳເຂົ້າ;

(4) ວິສະວະກຳ, ພັດທະນາການ, ງານສິນລະປະ, ງານອອກແບບ ແລະແບບແຜນທີ່ຈຳເປັນສຳລັບການຜະລິດສິນຄ້າເຄື່ອງຂອງນຳເຂົ້າ ແລະບໍ່ໄດ້ເຮັດຂຶ້ນໃນປະເທດນຳເຂົ້າ.

(ຄ) ຄ່າລິຂະສິດ ແລະຄ່າທຳນຽມໃບອະນຸຍາດທີ່ກ່ຽວຂ້ອງກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຊຶ່ງຜູ້ຊື້ຕ້ອງໄດ້ຈ່າຍໃຫ້ໂດຍທາງກົງ ຫລືທາງອ້ອມ ໃນຖານະເປັນເງື່ອນໄຂຂອງການຊື້ຂາຍສິນຄ້າທີ່ກຳລັງກຳນົດມູນຄ່າແຈ້ງພາສີຢູ່ນັ້ນ, ຄ່າລິຂະສິດ ແລະຄ່າທຳນຽມຕ່າງໆ ເຫລົ່ານັ້ນຍັງບໍ່ໄດ້ລວມເຂົ້າໄວ້ໃນລາຄາທີ່ໄດ້ຈ່າຍ ຫລືທີ່ຈະຕ້ອງຈ່າຍຕົວຈິງ;

(ງ) ຈຳນວນເງິນທີ່ໄດ້ມາສ່ວນໃດສ່ວນນຶ່ງຈາກການຂາຍຕໍ່, ການຈຳໜ່າຍ ຫລືຈາກການແຈ້ງເພື່ອຊົມໃຊ້ສິນຄ້າເຄື່ອງຂອງນຳເຂົ້າ ທີ່ມີຜົນເພີ່ມຂຶ້ນໃຫ້ກັບຜູ້ຂາຍບໍ່ວ່າຈະໂດຍທາງກົງ ຫລືທາງອ້ອມ.

2. ຕາມການລະບຸໄວ້ໃນກົດໝາຍນັ້ນ, ແຕ່ລະປະເທດສະມາຊິກຈະຕ້ອງໄດ້ລະບຸສຳລັບຄ່າຕ່າງໆ ທີ່ຕ້ອງບວກເຂົ້າ ຫລືຫັກອອກອອກຈາກມູນຄ່າແຈ້ງພາສີ ອາດຈະເປັນທັງໝົດ ຫລືບາງສ່ວນດັ່ງຕໍ່ໄປນີ້:

(ກ) ຄ່າຂົນສົ່ງສິນຄ້າເຄື່ອງຂອງນຳເຂົ້າມາຍັງທ່າເຮືອ ຫລືຈຸດບ່ອນທີ່ມີການນຳເຂົ້າ;
(ຂ) ຄ່າຂົນສົ່ງສິນຄ້າເຄື່ອງຂອງລົງ, ຄ່າຂົນສົ່ງສິນຄ້າເຄື່ອງຂອງຂຶ້ນ, ຄ່າແບກຫາບ ແລະຄ່າບໍລິການອື່ນໆ ທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າເຄື່ອງຂອງນຳເຂົ້າມາຍັງທ່າເຮືອ ຫຼືຈຸດບ່ອນທີ່ມີການນຳເຂົ້າ; ແລະ
(ຄ) ຄ່າປະກັນໄພ.

3. ຄ່າຕ່າງໆ ທີ່ຈະຕ້ອງບວກເຂົ້າໃນລາຄາທີ່ໄດ້ຈ່າຍ ຫລືຈະຕ້ອງຈ່າຍຕົວຈິງ ໃຫ້ປະຕິບັດຕາມຂໍ້ກຳນົດຂອງມາດຕານີ້ ບົນພື້ນຖານຂອງຂໍ້ມູນທີ່ເປັນຈິງ ແລະມີປະລິມານຢ່າງພຽງພໍເທົ່ານັ້ນ.

4. ບໍ່ມີຄ່າຕ່າງໆ ທີ່ຈະບວກເຂົ້າໃນລາຄາທີ່ໄດ້ຈ່າຍ ຫລືທີ່ຈະຕ້ອງຈ່າຍຕົວຈິງໃນການກຳນົດມູນຄ່າແຈ້ງພາສີ ນອກຈາກທີ່ໄດ້ລະບຸໄວ້ໃນມາດຕານີ້ເທົ່ານັ້ນ.

ມາດຕາ 9

1. ໃນກໍລະນີທີ່ມີການປ່ຽນສະກຸນເງິນ ເປັນສິ່ງຈຳເປັນໃນການກຳນົດມູນຄ່າແຈ້ງພາສີ, ອັດຕາແລກປ່ຽນທີ່ຈະນຳໃຊ້ ຕ້ອງໃຊ້ເປັນອັດຕາທີ່ປະກາດໂດຍແມ່ນອົງການ ຫຼື ເຈົ້າໜ້າທີ່ທີ່ມີສິດອຳນາດກ່ຽວຂ້ອງ

ຂອງປະເທດນຳເຂົ້າສິນຄ້າເຄື່ອງຂອງ ແລະຈະຕ້ອງສະແດງໃຫ້ເຫັນເຖິງມູນຄ່າຕົວຈິງຂອງສະກຸນເງິນ ໃນການຊື້ຂາຍ ແລະແລກປ່ຽນເປັນສະກຸນເງິນຂອງປະເທດນຳເຂົ້າສິນຄ້າ ຕາມໄລຍະເວລາຂອງການ ປະກາດໃຊ້ນັ້ນຄວບຄຸມເຖິງ.

2. ອັດຕາແລກປ່ຽນທີ່ໃຊ້ ຈະຕ້ອງເປັນອັດຕາທີ່ມີຜົນບັງຄັບໃຊ້ ໃນເວລາທີ່ມີການສົ່ງອອກ ຫລືໃນເວ ລາທີ່ມີການນຳເຂົ້າຂອງແຕ່ລະປະເທດສະມາຊິກກຳນົດໄວ້.

ມາດຕາ 10

1. ບັນດາຂໍ້ມູນທັງຫລາຍທີ່ເປັນຂໍ້ມູນລັບ ຫຼື ຂໍ້ມູນທີ່ໄດ້ມາຈາກພື້ນຖານທີ່ເປັນຄວາມລັບ ເພື່ອຈຸດປະ ສົງໃນການກຳນົດມູນຄ່າແຈ້ງພາສີ ຈະຕ້ອງເກັບຮັກສາໄວ້ໃຫ້ເປັນຄວາມລັບຢ່າງເຂັ້ມງວດ ໂດຍອົງການ ທີ່ກ່ຽວຂ້ອງ ຊຶ່ງບໍ່ສາມາດເປີດເຜີຍໄດ້ ນອກເສຍຈາກທີ່ຈະໄດ້ຮັບອະນຸຍາດສະເພາະຈາກບຸກຄົນ ຫຼື ລັດ ຖະບານ ຊຶ່ງເປັນຜູ້ຕອບສະໜອງຂໍ້ມູນເຫລົ່ານັ້ນມາໃຫ້ ເວັ້ນເສຍແຕ່ວ່າມັນຈະຖືກຮ້ອງຂໍໃຫ້ເປີດເຜີຍຢູ່ ໃນຂະບວນການສືບສວນສອບສວນຂອງສານ.

ມາດຕາ 11

1. ໃນກົດໝາຍຂອງແຕ່ລະປະເທດສະມາຊິກ ຈະຕ້ອງໄດ້ລະບຸເຖິງການກຳນົດມູນຄ່າແຈ້ງພາສີນັ້ນ ສິດທິຮ້ອງຂໍຂອງຜູ້ນຳເຂົ້າ ຫລືບຸກຄົນອື່ນໆ ຮັບຜິດຊອບໃນການຊຳລະຄ່າພາສີອາກອນໂດຍບໍ່ມີບົດລົງ ໂທດ

2. ສິດທິຮ້ອງຂໍໃນເບື້ອງຕົ້ນໂດຍບໍ່ມີການລົງໂທດ ອາດມີຢູ່ໃນຂັ້ນຕອນຂອງອົງການພາສີ ຫລືໜ່ວຍ ງານທີ່ກ່ຽວຂ້ອງກໍ່ໄດ້ ແຕ່ວ່າກົດໝາຍຂອງແຕ່ລະປະເທດສະມາຊິກ ຈະຕ້ອງໄດ້ລະບຸສິດທິໃນການຮ້ອງ ຂໍຕໍ່ອົງການຕຸລາການໂດຍບໍ່ມີບົດລົງໂທດ

3. ຄຳຕັດສິນກ່ຽວກັບການຮ້ອງຂໍຈະຕ້ອງມອບໃຫ້ຜູ້ອຸທອນ ແລະເຫດຜົນຂອງການພິຈາລະນາການ ຕັດສິນຈະຕ້ອງໄດ້ດຳເນີນໄປແບບລາຍລັກອັກສອນ. ຜູ້ອຸທອນຈະຕ້ອງໄດ້ຮັບແຈ້ງເຖິງສິດທິໃນການ ຮ້ອງຂໍຂອງຕົນໃນຂັ້ນຕໍ່ໄປອີກ.

ມາດຕາ 12

ບັນດາກົດໝາຍ, ລະບຽບການ, ຄຳຕັດສິນຂອງສານ ແລະປະກາດແຈ້ງການທາງລັດຖະການທີ່ກ່ຽວຂ້ອງກັບການປະຕິບັດໂດຍທົ່ວໄປ ຊຶ່ງມີຜົນບັງຄັບໃຊ້ຕໍ່ຂໍ້ຕົກລົງສະບັບນີ້ ຈະຕ້ອງໄດ້ພິມເຜີຍແຜ່ໃຫ້ຊາບທົ່ວເຖິງກັນ ໃຫ້ສອດຄ່ອງກັບມາດຕາ X ຂອງຂໍ້ຕົກລົງຂອງ (GATT) 1994 ໂດຍປະເທດນຳເຂົ້າທີ່ກ່ຽວຂ້ອງ

ມາດຕາ 13

ຖ້າຫາກວ່າໃນເວລາກຳນົດມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງນຳເຂົ້າ ມີເຫດຈຳເປັນທີ່ເຮັດໃຫ້ການກຳນົດມູນຄ່າແຈ້ງພາສີຂັ້ນສຸດທ້າຍນັ້ນ ຕ້ອງຊ້າອອກໄປ ເຖິງຢ່າງໃດກໍ່ຕາມ, ຜູ້ນຳເຂົ້າຍັງສາມາດນຳເອົາສິນຄ້າເຄື່ອງຂອງຂອງຕົນອອກຈາກດ່ານພາສີໄດ້ ຖ້າຫາກວ່າມີຄວາມຈຳເປັນຜູ້ນຳເຂົ້າສິນຄ້າເຄື່ອງຂອງຕ້ອງໄດ້ວາງການຄ້ຳປະກັນຢ່າງພຽງພໍໃນຮູບແບບເງິນປະກັນ ຫລືຫລັກປະກັນອື່ນໆ ທີ່ເໝາະສົມ ໂດຍໃຫ້ກວມເອົາຄ່າພາສີອາກອນສູງສຸດ ທີ່ສິນຄ້າເຄື່ອງຂອງນັ້ນຕ້ອງໄດ້ເສຍ. ໃນກົດໝາຍຂອງແຕ່ລະປະເທດສະມາຊິກ ຈະຕ້ອງມີຂໍ້ກຳນົດສະເພາະສຳລັບເຫດການເຊັ່ນນີ້ໄວ້ດ້ວຍ.

ມາດຕາ 14

ໝາຍເຫດໃນເອກະສານຊ້ອນທ້າຍທີ I ຂອງຂໍ້ຕົກລົງຖືເປັນສ່ວນນຶ່ງຂອງຂໍ້ຕົກລົງສະບັບນີ້ ແລະມາດຕາຕ່າງໆ ຂອງຂໍ້ຕົກລົງສະບັບນີ້ ຕ້ອງໄດ້ອ່ານ ແລະໃຊ້ຮ່ວມກັບໝາຍເຫດທີ່ກ່ຽວຂ້ອງຕາມລຳດັບ. ເອກະສານຊ້ອນທ້າຍທີ II ແລະ III ຖືວ່າເປັນສ່ວນນຶ່ງຂອງຂໍ້ຕົກລົງສະບັບນີ້ດ້ວຍ.

ມາດຕາ 15

1. ໃນຂໍ້ຕົກລົງສະບັບນີ້:

   (ກ) "ມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງນຳເຂົ້າ" ໝາຍເຖິງລາຄາຂອງສິນຄ້າເຄື່ອງຂອງຕົວຈິງ ເພື່ອຈຸດປະສົງໃນການເກັບຄ່າພາສີອາກອນ ຕາມອັດຕາທຽບຖານສຳລັບສິນຄ້າເຄື່ອງຂອງນຳເຂົ້າ;

   (ຂ) "ປະເທດນຳເຂົ້າສິນຄ້າເຄື່ອງຂອງ "ໝາຍເຖິງປະເທດ ຫລືອະນາເຂດພາສີຂອງການນຳເຂົ້າສິນຄ້າເຄື່ອງຂອງ; ແລະ

(ຄ) "ຜະລິດ" ກວມເອົາການປູກ, ການຜະລິດທາງອຸດສະຫະກຳ ແລະການຂຸດຄົ້ນ.

2. ໃນຂໍ້ຕົກລົງສະບັບນີ້

(ກ) "ສິນຄ້າເຄື່ອງຂອງທີ່ຄືກັນ" ໝາຍເຖິງ ສິນຄ້າເຄື່ອງຂອງທີ່ຄືກັນໃນທຸກໆ ດ້ານ ລວມທັງລັກສະນະຮູບຮ່າງພາຍນອກ, ຄຸນນະພາບ ແລະຊື່ສຽງ. ຄວາມແຕກຕ່າງກັນພຽງເລັກນ້ອຍທາງດ້ານຮູບຊົງພາຍນອກນັ້ນ ບໍ່ໄດ້ເປັນສາເຫດເຮັດໃຫ້ສິນຄ້າເຄື່ອງຂອງ ພົ້ນອອກຈາກນິຍາມຂອງການເປັນສິນຄ້າເຄື່ອງຂອງທີ່ຄືກັນ;

(ຂ) "ສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ" ໝາຍເຖິງ ສິນຄ້າເຄື່ອງຂອງທີ່ບໍ່ຄືກັນໃນທຸກໆ ດ້ານ ແຕ່ມີລັກສະນະຢ່າງດຽວກັນ ແລະມີວັດຖຸສ່ວນປະກອບຢ່າງດຽວກັນ ຊຶ່ງສາມາດເຮັດໃຫ້ສິນຄ້າເຄື່ອງຂອງນັ້ນ ມີໜ້າທີ່ໃຊ້ງານອັນດຽວກັນ ແລະສາມາດທົດແທນກັນໄດ້ໃນທາງການຄ້າ. ຄຸນນະພາບ, ຊື່ສຽງ ແລະເຄື່ອງໝາຍທາງດ້ານການຄ້າຂອງສິນຄ້າເຄື່ອງຂອງແມ່ນປັດໃຈທີ່ຈະຕ້ອງໄດ້ພິຈາລະນາ ໃນການກຳນົດມູນຄ່າສິນຄ້າເຄື່ອງຂອງນັ້ນຄ້າຍຄືກັນ ຫລືບໍ່;

(ຄ) ຄຳວ່າ "ສິນຄ້າເຄື່ອງຂອງທີ່ຄືກັນ" ແລະ "ສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ" ບໍ່ກວມເອົາສິນຄ້າເຄື່ອງຂອງ ຊຶ່ງຈັດເຂົ້າເປັນຜົນງານດ້ານວິສະວະກຳ, ພັດທະນາການ, ງານສິລະປະ, ງານອອກແບບ ແລະແບບແຜນ ແລະພາບໂຄງຮ່າງ ຊຶ່ງບໍ່ໄດ້ມີການປັບລາຄາຕາມວັກທີ 1 (ຂ) (4) ຂອງມາດຕາ 8 ເນື່ອງຈາກສ່ວນປະກອບເຫລົ່ານັ້ນໄດ້ເຮັດຂຶ້ນໃນປະເທດນຳເຂົ້າ, ແລ້ວແຕ່ກໍລະນີ;

(ງ) ສິນຄ້າເຄື່ອງຂອງທີ່ບໍ່ຖືວ່າເປັນ "ສິນຄ້າເຄື່ອງຂອງທີ່ຄືກັນ" ຫຼື "ສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ" ເວັ້ນເສຍແຕ່ສິນຄ້າເຄື່ອງຂອງເຫລົ່ານັ້ນ ຜະລິດຂຶ້ນໃນປະເທດດຽວກັນກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີຢູ່ນັ້ນ.

(ຈ) ສິນຄ້າເຄື່ອງຂອງທີ່ຜະລິດໂດຍບຸກຄົນຕ່າງກັນ ຈະນຳມາພິຈາລະນາກໍຕໍ່ເມື່ອວ່າ ບໍ່ມີສິນຄ້າເຄື່ອງຂອງທີ່ຄືກັນ ຫຼື ສິນຄ້າເຄື່ອງຂອງທີ່ຄ້າຍຄືກັນແລ້ວແຕ່ກໍລະນີ, ຜະລິດໂດຍບຸກຄົນດຽວກັນກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີຢູ່ນັ້ນ.

3. ໃນຂໍ້ຕົກລົງສະບັບນີ້ "ສິນຄ້າເຄື່ອງຂອງປະເພດ ຫລືຊະນິດດຽວກັນ" ໝາຍເຖິງ ສິນຄ້າເຄື່ອງຂອງທີ່ຢູ່ກຸ່ມດຽວກັນ ຫລືສິນຄ້າເຄື່ອງຂອງທີ່ຜະລິດໂດຍອຸດສະຫະກຳສະເພາະ ຫລືຂະແໜງອຸດສະຫະກຳ ແລະກວມເອົາສິນຄ້າເຄື່ອງຂອງທີ່ຄືກັນ ຫລືສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ.

4. ຈຸດປະສົງຂອງຂໍ້ຕົກລົງສະບັບນີ້ ບຸກຄົນທີ່ຈະຖືວ່າມີຄວາມສຳພັນກັນກໍຕໍ່ເມື່ອວ່າ:

(ກ) ບຸກຄົນເຫລົ່ານັ້ນເປັນພະນັກງານລະດັບຫົວໜ້າ ຫລືຜູ້ບໍລິຫານໃນທຸລະກິດຂອງອີກຝ່າຍນຶ່ງ ຊຶ່ງກັນ ແລະກັນ;

(ຂ) ບຸກຄົນເຫລົ່ານັ້ນເປັນທີ່ຍອມຮັບທາງກົດໝາຍ ວ່າເປັນຫຸ້ນສ່ວນກັນໃນທາງທຸລະກິດ;

(ຄ) ບຸກຄົນເຫລົ່ານັ້ນເປັນນາຍຈ້າງ ແລະລູກຈ້າງ;

(ງ) ບຸກຄົນໃດບຸກຄົນນຶ່ງ ບໍ່ວ່າທາງກົງ ຫລືທາງອ້ອມ, ເປັນເຈົ້າຂອງຄວບຄຸມ ຫລືຄອບຄອງຈຳນວນຫຸ້ນສ່ວນທີ່ມີສິດໃນການອອກສຽງ 5% ຂຶ້ນໄປໃນກິດຈະການທັງສອງຝ່າຍ;

(ຈ) ບຸກຄົນນຶ່ງຄວບຄຸມອີກບຸກຄົນນຶ່ງ ໂດຍທາງກົງ ຫລືທາງອ້ອມ;

(ສ) ບຸກຄົນທັງສອງຖືກຄວບຄຸມໂດຍບຸກຄົນທີສາມ ໂດຍທາງກົງ ຫລືທາງອ້ອມ;

(ຊ) ບຸກຄົນທັງສອງຮ່ວມກັນຄວບຄຸມບຸກຄົນທີສາມ ໂດຍທາງກົງ ຫລືທາງອ້ອມ; ຫລື

(ຍ) ບຸກຄົນເຫລົ່ານັ້ນເປັນສະມາຊິກຂອງຄອບຄົວດຽວກັນ.

5. ບຸກຄົນຜູ້ຊຶ່ງມີສ່ວນຮ່ວມໃນທຸລະກິດກັບອີກຝ່າຍນຶ່ງ ໃນຖານະເປັນຕົວແທນຈຳໜ່າຍແຕ່ຜູ້ດຽວ, ຜູ້ຈຳໜ່າຍແຕ່ພຽງຜູ້ດຽວ ຫລືຜູ້ສຳປະທານແຕ່ພຽງຜູ້ດຽວກັບຂອງອີກຝ່າຍນຶ່ງນັ້ນ. ຈະເປັນແບບໃດກໍ່ຕາມ, ຈະຖືວ່າມີຄວາມສຳພັນກັນຕາມຂໍ້ຕົກລົງສະບັບນີ້ ຫາກບຸກຄົນເຫລົ່ານັ້ນ ຊຶ່ງຈັດເຂົ້າຢູ່ໃນມາດຖານຂອງວັກທີ 4 ຂອງມາດຕານີ້.

ມາດຕາ 16

ຖ້າການຮ້ອງຂໍເປັນລາຍລັກອັກສອນຕໍ່ລັດຖະການພາສີ. ຜູ້ນຳເຂົ້າສິນຄ້າເຄື່ອງຂອງຈະໄດ້ຮັບຄຳອະທິບາຍເປັນລາຍລັກອັກສອນຈາກອົງການພາສີຂອງປະເທດນຳເຂົ້າສິນຄ້າເຄື່ອງຂອງວ່າ ມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງ ນຳເຂົ້າຂອງຜູ້ນຳເຂົ້ານັ້ນໄດ້ກຳນົດມູນຄ່າແຈ້ງພາສີແນວໃດ.

ມາດຕາ 17

ບໍ່ມີຂໍ້ຄວາມໃດໃນຂໍ້ຕົກລົງສະບັບນີ້ ທີ່ຈະຕີຄວາມໝາຍວ່າເປັນການຈຳກັດສິດທິ ຫຼື ສິ່ງໃສ່ໃນສິດທິຂອງອົງການພາສີ. ໃນກໍລະນີທີ່ຈະເຮັດໃຫ້ອົງການພາສີມີຄວາມພໍໃຈຕໍ່ກັບຄວາມຈິງ ຫຼື ຄວາມຖືກຕ້ອງຂອງຄຳຊີ້ແຈງ, ເອກະສານ ຫຼື ການແຈ້ງໃດນຶ່ງທີ່ໄດ້ຍື່ນເພື່ອຈຸດປະສົງຂອງການກຳນົດມູນຄ່າແຈ້ງພາສີ.

ພາກທີ 2
ການບໍລິຫານ, ການປຶກສາຫາລື ແລະການແກ້ໄຂຂໍ້ຂັດແຍ້ງ

ມາດຕາ 18
ສະຖາບັນ

1. ໃຫ້ມີການຈັດຕັ້ງຄະນະກຳມະການກຳນົດມູນຄ່າແຈ້ງພາສີຂຶ້ນ (ຊຶ່ງເອີ້ນໃນຂໍ້ຕົກລົງນີ້ວ່າ "ຄະນະກຳມະການ") ຊຶ່ງປະກອບດ້ວຍຕົວແທນຈາກແຕ່ລະປະເທດສະມາຊິກ. ຄະນະກຳມະການຈະເລືອກປະທານຄະນະກຳມະການຂຶ້ນ ແລະຈະປະຊຸມກັນປົກກະຕິປີລະນຶ່ງຄັ້ງ ຫລືປະຊຸມໃນກໍລະນີອື່ນຕາມທີ່ໄດ້ລະບຸໄວ້ໃນຂໍ້ກຳນົດທີ່ກ່ຽວຂ້ອງຕາມຂໍ້ຕົກລົງສະບັບນີ້ ໂດຍມີຄວາມມຸ້ງໝາຍເພື່ອສະໜັບສະໜຸນໃຫ້ບັນດາປະເທດສະມາຊິກທັ້ງຫລາຍມີໂອກາດປຶກສາຫາລືກັນ ໃນເລື່ອງທີ່ກ່ຽວກັບການບໍລິຫານວິທີການກຳນົດມູນຄ່າແຈ້ງພາສີຂອງປະເທດສະມາຊິກໃດນຶ່ງ ເພາະວ່າອາດມີຜົນກະທົບຕໍ່ກັບການປະຕິບັດຕາມຂໍ້ຕົກລົງສະບັບນີ້ ຫລືຕໍ່ກັບຄວາມຄືບໜ້າ ແລະປະຕິບັດຕາມໜ້າທີ່ຄວາມຮັບຜິດຊອບອື່ນໆ ຕາມທີ່ຖືກມອບໝາຍຈາກປະເທດສະມາຊິກທັ້ງຫລາຍ. ເລຂາທິການຂອງອົງການການຄ້າໂລກ (WTO) ຈະທຳໜ້າທີ່ເປັນເລຂາທິການຂອງຄະນະກຳມະການຕື່ມອີກຕາມແຫລ່ງນຶ່ງ.

2. ໃຫ້ມີການຈັດຕັ້ງຄະນະກຳມະການເຕັກນິກດ້ານການກຳນົດມູນຄ່າແຈ້ງພາສີຂຶ້ນ (ຊຶ່ງໃນຂໍ້ຕົກລົງນີ້ເອີ້ນວ່າ "ຄະນະກຳມະການເຕັກນິກ"). ພາຍໃຕ້ການອຸປະຖຳຂອງສະພາຮ່ວມມືທາງພາສີ (ຊຶ່ງເອີ້ນໃນຂໍ້ຕົກລົງວ່າ "CCC") ຊຶ່ງຈະຕ້ອງໄດ້ປະຕິບັດຕາມໜ້າທີ່ຄວາມຮັບຜິດຊອບທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍທີ 2 ຂອງຂໍ້ຕົກລົງສະບັບນີ້ ແລະຈະຕ້ອງໄດ້ປະຕິບັດຕາມລະບຽບຂໍ້ກຳນົດ ຊຶ່ງມີຢູ່ໃນເອກະສານຊ້ອນທ້າຍດັ່ງກ່າວນີ້.

ມາດຕາ 19
ການປຶກສາຫາລືກັນ ແລະການແກ້ໄຂຂໍ້ຂັດແຍ້ງ

1. ເວັ້ນເສຍແຕ່ຈະໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ເປັນຢ່າງອື່ນ ໃຫ້ນຳບັນທຶກຄວາມເຂົ້າໃຈການແກ້ໄຂຂໍ້ຂັດແຍ້ງມາໃຊ້ໃນການປຶກສາຫາລືກັນ ແລະການແກ້ໄຂຂໍ້ຂັດແຍ້ງຕາມຂໍ້ຕົກລົງສະບັບນີ້.

2. ຖ້າວ່າປະເທດສະມາຊິກໃດນຶ່ງຫາກເຫັນວ່າຜົນປະໂຫຍດໃດນຶ່ງ ທີ່ເກີດຂຶ້ນກັບຕົນນັ້ນບໍ່ວ່າຈະເປັນທາງກົງ ຫລືທາງອ້ອມກໍ່ຕາມ ຕາມຂໍ້ຕົກລົງສະບັບນີ້ທີ່ກຳລັງນຳຜົນເສຍຫາຍ ຫລືອັບປະໂຫຍດມາໃຫ້ຕົນນັ້ນ ຫລືວ່າຜົນສຳເລັດຂອງຈຸດປະສົງໃດນຶ່ງຂອງຂໍ້ຕົກລົງສະບັບນີ້ ກຳລັງຖືກຂັດຂວາງ ຊຶ່ງເປັນຜົນມາຈາກການປະຕິບັດຂອງປະເທດສະມາຊິກອີກປະເທດນຶ່ງ ຫລືບັນດາປະເທດສະມາຊິກອື່ນໆ, ບາງ

ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດມາດຕາ VII ຂອງແກັດ ໜ້າ 17

ທີ່ເພື່ອບັນລຸຄວາມເຂົ້າອົກເຂົ້າໃຈຊຶ່ງກັນ ແລະກັນໃນການແກ້ໄຂບັນຫາດັ່ງກ່າວນີ້ ຮຽກຮ້ອງໃຫ້ມີການປຶກສາຫາລືກັນກັບປະເທດສະມາຊິກນັ້ນ ຫລືບັນດາປະເທດສະມາຊິກທີ່ເປັນຄູ່ກໍລະນີ. ແຕ່ລະປະເທດສະມາຊິກຈະຕ້ອງພະຍາຍາມພິຈາລະນາຢ່າງລອບຄອບ ຕໍ່ຄຳຮ້ອງຂໍໃດນຶ່ງຈາກປະເທດສະມາຊິກນຶ່ງ ເພື່ອປຶກສາຫາລືກັນ.

3. ເມື່ອໄດ້ຮັບການຮ້ອງຂໍ, ຄະນະກຳມະການເຕັກນິກຈະຕ້ອງໃຫ້ຄຳແນະນຳ ແລະຄວາມຊ່ວຍເຫຼືອໃຫ້ແກ່ປະເທດສະມາຊິກທັງຫລາຍທີ່ກ່ຽວຂ້ອງກັບການປຶກສາຫາລືກັນ.

4. ເມື່ອມີການຮ້ອງຂໍຈາກຄູ່ກໍລະນີອີກຝ່າຍນຶ່ງ ຫລືຈາກການລິເລີ່ມຂອງຄະນະພິຈາລະນາຂໍ້ຂັດແຍ້ງ. ຄະນະພິຈາລະນາຂໍ້ຂັດແຍ້ງທີ່ຈັດຕັ້ງຂຶ້ນ ເພື່ອກວດສອບຂໍ້ຂັດແຍ້ງທີ່ກ່ຽວຂ້ອງກັບຂໍ້ກຳນົດຂອງຂໍ້ຕົກລົງສະບັບນີ້ ອາດຮ້ອງຂໍໃຫ້ຄະນະກຳມະການເຕັກນິກດຳເນີນການກວດສອບບັນຫາໃດໆ ທີ່ຈຳເປັນຕ້ອງໄດ້ຮັບການພິຈາລະນາທາງດ້ານເຕັກນິກ, ຄະນະພິຈາລະນາຂໍ້ຂັດແຍ້ງຈະຕ້ອງກຳນົດຂອບເຂດການກວດສອບຂອງຄະນະກຳມະການເຕັກນິກສຳລັບຂໍ້ຂັດແຍ້ງນັ້ນ ແລະກຳນົດໄລຍະເວລາທີ່ຈະໄດ້ຮັບບົດລາຍງານຈາກຄະນະກຳມະການເຕັກນິກ. ຄະນະພິຈາລະນາຂໍ້ຂັດແຍ້ງຈະນຳເອົາບົດລາຍງານຂອງຄະນະກຳມະການເຕັກນິກ ມາພິຈາລະນາໃນກໍລະນີທີ່ຄະນະກຳມະການເຕັກນິກ ບໍ່ສາມາດບັນລຸຄວາມຕົກລົງກ່ຽວກັບບັນຫາທີ່ກ່ຽວຂ້ອງກັບວັກນີ້ໄດ້. ຄະນະພິຈາລະນາຂໍ້ຂັດແຍ້ງຄວນໃຫ້ໂອກາດຄູ່ກໍລະນີ ສະແດງຄວາມຄິດເຫັນກ່ຽວກັບບັນຫານັ້ນ ຕໍ່ຄະນະພິຈາລະນາຂໍ້ຂັດແຍ້ງ.

5. ຂໍ້ມູນລັບທີ່ສະໜອງໃຫ້ຄະນະພິຈາລະນາຂໍ້ຂັດແຍ້ງຈະເປີດເຜີຍບໍ່ໄດ້ ນອກຈາກໄດ້ຮັບອະນຸຍາດຢ່າງເປັນທາງການຈາກບຸກຄົນ, ອົງການທີ່ກ່ຽວຂ້ອງຊຶ່ງເປັນຜູ້ສະໜອງຂໍ້ມູນດັ່ງກ່າວນັ້ນໃຫ້. ໃນກໍລະນີທີ່ຂໍ້ມູນດັ່ງກ່າວຖືກຮ້ອງຂໍໄປ ຈາກຄະນະພິຈາລະນາຂໍ້ຂັດແຍ້ງ ແຕ່ການເປີດເຜີຍຂໍ້ມູນເຫລົ່ານັ້ນ ໂດຍຄະນະພິຈາລະນາຂໍ້ຂັດແຍ້ງບໍ່ໄດ້ຮັບການອະນຸຍາດ ກໍ່ໃຫ້ສະໜອງຂໍ້ມູນສະຫລຸບທີ່ບໍ່ມີຄວາມລັບ ຊຶ່ງໄດ້ຮັບອະນຸຍາດໂດຍບຸກຄົນ, ອົງການທີ່ກ່ຽວຂ້ອງຊຶ່ງເປັນຜູ້ສະໜອງຂໍ້ມູນນັ້ນໄປແທນ.

ພາກທີ 3
ການປະຕິບັດເປັນພິເສດ ແລະການປະຕິບັດທີ່ແຕກຕ່າງກັນອອກໄປ
ມາດຕາ 20

1. ສະມາຊິກປະເທດກຳລັງພັດທະນາຊຶ່ງບໍ່ໄດ້ເປັນພາຄີຂອງຂໍ້ຕົກລົງໃນການນຳເອົາມາດຕາ 7 ມາໃຊ້ຂອງຂໍ້ຕົກລົງທົ່ວໄປວ່າດ້ວຍພາສີ ແລະການຄ້າ ທີ່ໄດ້ເຊັນກັນເມື່ອວັນທີ 12 ເມສາ 1979 ອາດມີການລໍຖ້າການນຳໃຊ້ຂໍ້ກຳນົດຂອງຂໍ້ຕົກລົງສະບັບນີ້ອອກໄປໄດ້ເປັນເວລາບໍ່ເກີນ 5 ນັບແຕ່ວັນທີຂໍ້ຕົກລົງຂອງອົງການການຄ້າໂລກ (WTO) ມີຜົນບັງຄັບໃຊ້ສຳລັບບັນດາປະເທດສະມາຊິກນັ້ນ. ສະມາຊິກ

ປະເທດກຳລັງພັດທະນາ ຊຶ່ງເລືອກລໍຖ້າການນຳໃຊ້ຂໍ້ຕົກລົງສະບັບນີ້ ຈະຕ້ອງໄດ້ແຈ້ງໃຫ້ຜູ້ອຳນວຍການ ຂອງອົງການການຄ້າໂລກ (WTO) ຊາບຢ່າງເປັນທາງການຕໍ່ໄປ.

2. ນອກຈາກທີ່ໄດ້ກຳນົດໄວ້ໃນວັກທີ 1 ແລ້ວ ສະມາຊິກປະເທດກຳລັງພັດທະນາ ຊຶ່ງບໍ່ໄດ້ເປັນພາຄີ ຂອງຂໍ້ຕົກລົງໃນການນຳເອົາມາດຕາ 7 ມາໃຊ້ ຂອງຂໍ້ຕົກລົງທົ່ວໄປວ່າດ້ວຍພາສີ ແລະການຄ້າ ທີ່ໄດ້ ເຊັນກັນເມື່ອວັນທີ 12 ເມສາ 1979 ອາດຈະລໍຖ້າການນຳໃຊ້ວັກທີ 2 (ຂ) (3) ຂອງມາດຕາ 1 ແລະ ມາດຕາ 6 ອອກໄປໄດ້ເປັນເວລາບໍ່ເກີນ 3 ປີ ພາຍຫລັງທີ່ໄດ້ນຳໃຊ້ຂໍ້ກຳນົດອື່ນໆ ທັງໝົດຂອງຂໍ້ຕົກລົງ ສະບັບນີ້ແລ້ວ ສະມາຊິກປະເທດກຳລັງພັດທະນາ ຊຶ່ງເລືອກທີ່ຈະລໍຖ້າການນຳໃຊ້ຂໍ້ກຳນົດທີ່ໄດ້ລະບຸໄວ້ ໃນວັກນີ້ ຈະຕ້ອງໄດ້ແຈ້ງໃຫ້ຜູ້ອຳນວຍການໃຫຍ່ຂອງອົງການການຄ້າໂລກ (WTO) ຊາບຢ່າງເປັນທາງ ການຕໍ່ໄປ.

3. ສະມາຊິກປະເທດພັດທະນາແລ້ວ, ຈະຕ້ອງໃຫ້ຄວາມຊ່ວຍເຫລືອດ້ານເຕັກນິກແກ່ສະມາຊິກປະ ເທດກຳລັງພັດທະນາ ຊຶ່ງຮ້ອງຂໍມາໂດຍຖືຕາມຂໍ້ຕົກລົງຮ່ວມກັນ ບົນພື້ນຖານນີ້ສະມາຊິກປະເທດພັດ ທະນາແລ້ວ ຈະຕ້ອງສະແດງໂຄງການໃຫ້ຄວາມຊ່ວຍເຫລືອດ້ານເຕັກນິກ ຊຶ່ງນອກເໜືອໄປຈາກສິ່ງອື່ນ ໆ ແລ້ວ ຍັງອາດຈະລວມເຖິງການຝຶກອົບຮົມດ້ານບຸກຄະລາກອນ, ການຊ່ວຍເຫລືອໃນການກະກຽມເອົາ ມາດຕາການໃນການນຳໄປປະຕິບັດ. ການເຂົ້າເຖິງແຫລ່ງຂໍ້ມູນທີ່ກ່ຽວກັບລະບຽບວິທີການກຳນົດມູນຄ່າ ແຈ້ງພາສີ ແລະການໃຫ້ຄຳແນະນຳໃນການນຳໃຊ້ຂໍ້ກຳນົດຂອງຂໍ້ຕົກລົງສະບັບນີ້.

ພາກທີ 4
ຂໍ້ກຳນົດສຸດທ້າຍ

ມາດຕາ 21
ການສະຫງວນ

ການສະຫງວນກ່ຽວກັບຂໍ້ກຳນົດໃດໆ ຂອງຂໍ້ຕົກລົງສະບັບນີ້ບໍ່ອາດຈະເຮັດໄດ້ ຫາກບໍ່ໄດ້ຮັບ ຄວາມຍິນຍອມຈາກບັນປະເທດສະມາຊິກອື່ນໆ

ມາດຕາ 22
ລະບຽບກົດໝາຍຂອງປະເທດ

1. ແຕ່ລະປະເທດສະມາຊິກຈະຕ້ອງຮັບປະກັນ ບໍ່ໃຫ້ຊ້າກວ່າວັນທີ່ປະເທດສະມາຊິກນັ້ນນຳໃຊ້ຂໍ້ກຳນົດຂອງຂໍ້ຕົກລົງສະບັບນີ້ ວ່າບັນດາກົດໝາຍ, ລະບຽບການ ແລະວິທີການທາງດ້ານບໍລິຫານຂອງແຕ່ລະປະເທດສະມາຊິກ ມີຄວາມສອດຄ່ອງກັບຂໍ້ກຳນົດຂອງຂໍ້ຕົກລົງສະບັບນີ້.

2. ແຕ່ລະປະເທດສະມາຊິກຈະຕ້ອງແຈ້ງຕໍ່ຄະນະກຳມະການກ່ຽວກັບການປ່ຽນແປງໃດນຶ່ງ ໃນບັນດາກົດໝາຍ ແລະລະບຽບການຕ່າງໆ ຂອງຕົນທີ່ກ່ຽວຂ້ອງກັບຂໍ້ຕົກລົງສະບັບນີ້ ແລະໃນການບໍລິຫານກົດໝາຍ ແລະລະບຽບການຕ່າງໆ ເຫລົ່ານັ້ນດ້ວຍ.

ມາດຕາ 23
ການທວນຄືນ

ຄະນະກຳມະການຈະຕ້ອງທວນຄືນການນຳເອົາໄປປະຕິບັດ ແລະການປະຕິບັດຂໍ້ຕົກລົງສະບັບນີ້ ປີລະຄັ້ງ ໂດຍຄຳນຶງເຖິງຈຸດປະສົງຂອງຂໍ້ຕົກລົງສະບັບນີ້. ຄະນະກຳມະການຈະຕ້ອງແຈ້ງຕໍ່ຄະນະມົນຕີດ້ານການຄ້າປີລະຄັ້ງກ່ຽວກັບການພັດທະນາຕ່າງໆ ໃນໄລຍະເວລາທີ່ມີການທວນຄືນນັ້ນ.

ມາດຕາ 24
ກອງເລຂາ

ກອງເລຂາຂອງອົງການການຄ້າໂລກ ຈະເປັນຜູ້ໃຫ້ບໍລິການກ່ຽວກັບຂໍ້ຕົກລົງສະບັບນີ້ ເວັ້ນເສຍແຕ່ໃນສ່ວນທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຕ່າງໆ ຊຶ່ງໄດ້ມອບໝາຍສະເພາະກັບຄະນະກຳມະການເຕັກນິກ ຊຶ່ງກອງເລຂານຸການຂອງສະພາຮ່ວມມືພາສີ (CCC) ຈະເປັນຜູ້ໃຫ້ບໍລິການ.

ເອກະສານຊ້ອນທ້າຍທີ I
ໝາຍເຫດການຕີຄວາມໝາຍ

ໝາຍເຫດທົ່ວໄປ

ລຳດັບການນຳໃຊ້ວິທີການກຳນົດມູນຄ່າແຈ້ງພາສີ

1. ມາດຕາ 1 ເຖິງ 7 ນິຍາມເຖິງວິທີການກຳນົດມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງນຳເຂົ້າ ພາຍໃຕ້ຂໍ້ກຳນົດຂອງຂໍ້ຕົກລົງສະບັບນີ້. ວິທີການກຳນົດມູນຄ່າແຈ້ງພາສີໄດ້ຈັດລຽງໄວ້ຕາມລຳດັບຂອງການ

ນຳໃຊ້. ວິທີທີ່ 1 ຂອງການກຳນົດມູນຄ່າແຈ້ງພາສີນັ້ນກຳນົດໄວ້ໃນມາດຕາ 1 ແລະສິນຄ້າເຄື່ອງຂອງນຳເຂົ້າຈະໄດ້ຮັບການກຳນົດມູນຄ່າແຈ້ງພາສີຕາມຂໍ້ກຳນົດຂອງມາດຕານີ້ ໄດ້ຮັບການປະຕິບັດຢ່າງຄົບຖ້ວນແລ້ວ.

2. ໃນກໍລະນີທີ່ມູນຄ່າແຈ້ງພາສີບໍ່ສາມາດກຳນົດໄດ້ພາຍໃຕ້ຂໍ້ກຳນົດຂອງມາດຕາ 1 ແລ້ວ, ໃຫ້ໃຊ້ມາດຕາທີ່ຖັດກັນຕາມລຳດັບຈົນເຖິງມາດຕາສຸດທ້າຍ ທີ່ມູນຄ່າແຈ້ງພາສີສາມາດກຳນົດຂຶ້ນໄດ້ ເວັ້ນເສຍແຕ່ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຊຶ່ງເມື່ອມູນຄ່າແຈ້ງພາສີບໍ່ສາມາດກຳນົດໄດ້ຕາມຂໍ້ກຳນົດຂອງມາດຕານັ້ນໆ ຈຶ່ງນຳເອົາຂໍ້ກຳນົດຂອງມາດຕາຖັດໄປມານຳໃຊ້ໃນການກຳນົດມູນຄ່າແຈ້ງພາສີ.

3. ຖ້າຫາກວ່າຜູ້ນຳເຂົ້າສິນຄ້າເຄື່ອງຂອງ ບໍ່ໄດ້ຮ້ອງຂໍການນຳໃຊ້ລຳດັບໃດກ່ອນຂອງມາດຕາ 5 ແລະ 6 ກໍ່ໃຫ້ນຳໃຊ້ຕາມລຳດັບປົກກະຕິ. ຖ້າຫາກວ່າຜູ້ນຳເຂົ້າສິນຄ້າເຄື່ອງຂອງຮ້ອງຂໍເຊັ່ນນັ້ນ ແຕ່ພາຍຫລັງພິສູດໄດ້ວ່າການກຳນົດມູນຄ່າແຈ້ງພາສີພາຍໃຕ້ຂໍ້ກຳນົດຂອງມາດຕາ 6 ນັ້ນ ເປັນໄປບໍ່ໄດ້. ດັ່ງນັ້ນ ມູນຄ່າແຈ້ງພາສີຈະຕ້ອງໄດ້ກຳນົດຂຶ້ນພາຍໃຕ້ຂໍ້ກຳນົດຂອງມາດຕາ 5 ຫາກສາມາດກຳນົດຂຶ້ນໄດ້.

4. ໃນກໍລະນີທີ່ມູນຄ່າແຈ້ງພາສີບໍ່ສາມາດກຳນົດຂຶ້ນໄດ້ພາຍໃຕ້ຂໍ້ກຳນົດຂອງມາດຕາ 1 ເຖິງ 6 ແລ້ວ, ມູນຄ່າແຈ້ງພາສີຈະຕ້ອງໄດ້ກຳນົດຂຶ້ນພາຍໃຕ້ຂໍ້ກຳນົດຂອງມາດຕາ 7.

ການນຳໃຊ້ຫລັກການບັນຊີທີ່ຍອມຮັບກັນທົ່ວໄປ

1. "ຫຼັກການບັນຊີທີ່ຍອມຮັບກັນທົ່ວໄປ" ໝາຍເຖິງຄວາມເຫັນສອດຄ່ອງກັນສ່ວນໃຫ່ຍທີ່ໄດ້ຍອມຮັບແລ້ວ ຫຼື ຮັບຮູ້ໂດຍທາງວິຊາການພາຍໃນປະເທດ ໃນຊ່ວງເວລານຶ່ງຊຶ່ງຊັບພະຍາກອນທາງດ້ານເສດຖະກິດ ແລະຂໍ້ຜູກມັດຄວນໄດ້ຮັບການບັນທຶກໄວ້ໃນຖານະເປັນຊັບສິນ ແລະໜີ້ສິນ ຊຶ່ງການປ່ຽນແປງຂອງຊັບສິນ ແລະໜີ້ສິນຄວນໄດ້ຮັບການບັນທຶກໄວ້, ຊັບສິນ ແລະໜີ້ສິນ ແລະການປ່ຽນແປງຂອງຊັບສິນ ແລະໜີ້ສິນນັ້ນ ຄວນຈະມີວິທີຈັດການຢ່າງໃດ ຂໍ້ມູນຫຍັງແດ່ທີ່ຄວນເປີດເຜີຍ ແລະຄວນເປີດເຜີຍຂໍ້ມູນເຫລົ່ານັ້ນຄືແນວໃດ ແລະງົບການເງິນແນວໃດແດ່ທີ່ຄວນເຮັດຂຶ້ນ. ມາດຕະຖານຕ່າງໆ ເຫລົ່ານີ້ເປັນພຽງແນວທາງອັນກວ້າງໆ ຂອງການນຳໄປໃຊ້ໂດຍທົ່ວໄປເຊັ່ນດຽວກັນກັບວິທີການປະຕິບັດຢ່າງລະອຽດ ແລະລຳດັບຂັ້ນຕອນຕ່າງໆ.

2. ຕາມຈຸດປະສົງຂອງຂໍ້ຕົກລົງສະບັບນີ້, ອົງການພາສີຂອງແຕ່ລະປະເທດສະມາຊິກ ຈະຕ້ອງໃຊ້ປະໂຫຍດຈາກຂໍ້ມູນທີ່ໄດ້ກະກຽມມີໄວ້ນັ້ນ ໂດຍວິທີການທີ່ສອດຄ່ອງກັບຫັລກການບັນຊີທີ່ຍອມຮັບກັນທົ່ວໄປໃນປະເທດນັ້ນຕາມຄວາມເໝາະສົມຂອງຂໍ້ກຳນົດຂອງແຕ່ລະມາດຕາ ຕົວຢ່າງເຊັ່ນການກຳນົດກຳໄລຕາມປົກກະຕິ ແລະຄ່າໃຊ້ຈ່າຍສົ້ນເປືອງທົ່ວໄປພາຍໃຕ້ຂໍ້ກຳນົດຂອງມາດຕາ 5 ຄວນດຳເນີນໄປໂດຍນຳໃຊ້ຂໍ້ມູນທີ່ໄດ້ກະກຽມມີໄວ້ນັ້ນ ໂດຍວິທີການທີ່ສອດຄ່ອງກັບຫລັກການບັນຊີທີ່ຍອມຮັບກັນທົ່ວ

ໄປໃນປະເທດ ນຳເຂົ້າສິນຄ້າເຄື່ອງຂອງນັ້ນ. ໃນທາງກົງກັນຂ້າມ, ການກຳນົດກຳໄລຕາມປົກກະຕິ ແລະ ຄ່າໃຊ້ຈ່າຍສົ່ມເປືອງທົ່ວໄປພາຍໃຕ້ຂໍ້ກຳນົດຂອງມາດຕາ 6 ຄວນດຳເນີນໄປໂດຍນຳໃຊ້ຂໍ້ມູນທີ່ໄດ້ກະກຽມມາແລ້ວ ໂດຍວິທີການທີ່ສອດຄ່ອງກັນກັບຫລັກການບັນຊີທີ່ຍອມຮັບກັນທົ່ວໄປຂອງປະເທດຜູ້ຜະລິດສິນຄ້າເຄື່ອງຂອງນັ້ນ ຕົວຢ່າງຕໍ່ໄປນີ້ຄືການກຳນົດອົງປະກອບຕາມທີ່ໄດ້ກຳນົດໄວ້ໃນວັກທີ 1 (ຂ) (2) ຂອງມາດຕາ 8 ທີ່ໄດ້ເຮັດຂຶ້ນໃນປະເທດນຳເຂົ້າສິນຄ້າເຄື່ອງຂອງ ຄວນດຳເນີນການໂດຍນຳໃຊ້ຂໍ້ມູນທີ່ສອດຄ່ອງກັບຫລັກການບັນຊີທີ່ຍອມຮັບກັນທົ່ວໄປຂອງປະເທດນັ້ນໆ

ໝາຍເຫດຂອງມາດຕາ I

ລາຄາທີ່ໄດ້ຈ່າຍ ຫລືທີ່ຈະຕ້ອງໄດ້ຈ່າຍຕົວຈິງ

1. ລາຄາທີ່ໄດ້ຈ່າຍ ຫລືທີ່ຈະຕ້ອງໄດ້ຈ່າຍຕົວຈິງ ຄືການຊຳລະລາຄາທັງໝົດທີ່ໄດ້ຈ່າຍໄປແລ້ວ ຫລືທີ່ຈະຕ້ອງໄດ້ຈ່າຍໂດຍຜູ້ຊື້ໃຫ້ຜູ້ຂາຍ ຫລືເພື່ອຜົນປະໂຫຍດຂອງຜູ້ຂາຍສຳລັບສິນຄ້າເຄື່ອງຂອງນຳເຂົ້າ. ການຊຳລະລາຄານີ້ບໍ່ມີຄວາມຈຳເປັນຕ້ອງຢູ່ໃນຮູບຂອງການໂອນເງິນໃຫ້ກັນເທົ່ານັ້ນ. ການຊຳລະລາຄາອາດຈະດຳເນີນໄປໂດຍວິທີໂດຍໃຫ້ທະນາຄານອອກໜັງສືສິນເຊື່ອ ຫລືພັນທະບັດທີ່ສາມາດປ່ຽນກຳມະສິດໄດ້. ການຊຳລະ ລາຄາອາດຈະດຳເນີນໄປໂດຍທາງກົງ ຫລືທາງອ້ອມ ຕົວຢ່າງສິນຄ້າເຄື່ອງຂອງທີ່ໄດ້ຈ່າຍກັນໂດຍທາງ ອ້ອມໄດ້ແກ່ການຕົກລົງຊຳລະໜີ້ທີ່ຜູ້ຊື້ເປັນໜີ້ຜູ້ຂາຍຢູ່ ບໍ່ວ່າຈະເປັນການຊຳລະໜີ້ທັງໝົດ ຫລືບາງສ່ວນກໍ່ຕາມ.

2. ການໃຊ້ຈ່າຍຕ່າງໆ ທີ່ຜູ້ຊື້ໄດ້ຈ່າຍນັ້ນ. ນອກເໜືອຈາກການຈ່າຍຕ່າງໆ ທີ່ຈະຕ້ອງມີການປັບລາຄາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ແລ້ວ ບໍ່ຖືວ່າເປັນການຊຳລະລາຄາໂດຍທາງ ອ້ອມໃຫ້ກັບຜູ້ຂາຍ. ເຖິງແມ່ນວ່າ, ການຈ່າຍເຫຼົ່ານັ້ນອາດຖືໄດ້ວ່າເປັນການຈ່າຍ ເພື່ອຜົນປະໂຫຍດຂອງຜູ້ຂາຍກໍ່ຕາມ. ດັ່ງນັ້ນມູນຄ່າຂອງການຈ່າຍຕ່າງໆ ເຫຼົ່ານັ້ນຈະຕ້ອງບໍ່ນຳໄປລວມກັບລາຄາທີ່ໄດ້ຈ່າຍ ຫລືລາຄາທີ່ຈະຕ້ອງໄດ້ຈ່າຍຕົວຈິງ ໃນການກຳນົດມູນຄ່າແຈ້ງພາສີແຕ່ຢ່າງໃດ.

3. ມູນຄ່າແຈ້ງພາສີຈະບໍ່ໄດ້ລວມເອົາຄ່າໃຊ້ຈ່າຍສົ່ມເປືອງ ຫຼື ມູນຄ່າດັ່ງຕໍ່ໄປນີ້ ຖ້າຄ່າໃຊ້ຈ່າຍສົ່ມເປືອງ ຫຼື ມູນຄ່າເຫລົ່ານັ້ນໄດ້ແຍກອອກໃຫ້ເຫັນຢ່າງຈະແຈ້ງຈາກລາຄາທີ່ໄດ້ຈ່າຍ ຫລືທີ່ຈະຕ້ອງໄດ້ຈ່າຍຕົວຈິງສຳລັບສິນຄ້າເຄື່ອງຂອງນຳເຂົ້ານັ້ນ:

(ກ) ຄ່າໃຊ້ຈ່າຍໃນການກໍ່ສ້າງ, ການຕິດຕັ້ງ, ການປະກອບ, ການບຳລຸງຮັກສາ ຫຼື ການຊ່ວຍເຫຼືອດ້ານເຕັກນິກ ຊຶ່ງເກີດຂຶ້ນຫລັງຈາກການນຳເຂົ້າຂອງສິນຄ້າເຄື່ອງຂອງນຳເຂົ້າເຊັ່ນ: ໂຮງງານອຸດສະຫະກຳ, ເຄື່ອງຈັກ ຫລືເຄື່ອງມືເປັນຕົ້ນ;

(ຂ) ຄ່າຂົນສົ່ງຫລັງການນຳເຂົ້າ; ແລະ

(ຄ) ຄ່າພາສີ ແລະອາກອນຂອງປະເທດນຳເຂົ້າ.

4. ລາຄາທີ່ໄດ້ຈ່າຍ ຫລືທີ່ຈະຕ້ອງໄດ້ຈ່າຍຕົວຈິງນີ້ ເປັນສິ່ງທີ່ກ່ຽວຂ້ອງກັບລາຄາສຳລັບສິນຄ້າເຄື່ອງ ຂອງນຳເຂົ້າ. ດັ່ງນັ້ນການຈ່າຍເງິນ ຫລືການຊຳລະເງິນປະເພດອື່ນໆ ຈາກຜູ້ຊື້ໄປຍັງຜູ້ຂາຍ ຊຶ່ງບໍ່ມີສ່ວນ ກ່ຽວຂ້ອງກັບສິນຄ້າເຄື່ອງຂອງນຳເຂົ້າ ຈຶ່ງບໍ່ແມ່ນສ່ວນນຶ່ງຂອງມູນຄ່າແຈ້ງພາສີ.

ວັກທີ 1 (ກ) (iii)

ໃນບັນດາຂໍ້ຈຳກັດທີ່ບໍ່ເຮັດໃຫ້ລາຄາທີ່ໄດ້ຈ່າຍ ຫລືທີ່ຈະຕ້ອງໄດ້ຈ່າຍຕົວຈິງຮັບບໍ່ໄດ້ນັ້ນ ໄດ້ແກ່ຂໍ້ ຈຳກັດທີ່ບໍ່ມີຜົນກະທົບຫລາຍຕໍ່ລາຄາຂອງສິນຄ້າເຄື່ອງຂອງ ຕົວຢ່າງຂອງຂໍ້ຈຳກັດດັ່ງກ່າວໄດ້ແກ່ ກໍລະ ນີທີ່ຜູ້ຂາຍຕັ້ງຂໍ້ກຳນົດຕໍ່ຜູ້ຊື້ລິດຍົນວ່າ ຫ້າມຂາຍລິດຍົນ ຫລືນຳເອົາລິດຍົນອອກວາງສະແດງກ່ອນວັນທີ່ ກຳນົດເອົາໄວ້ ຊຶ່ງເປັນວັນທີເລີ່ມຕົ້ນຂອງລິດຍົນລຸ້ນປີນັ້ນ.

ວັກທີ 1 (ຂ)

ຫາກການຂາຍ ຫລືລາຄາຂາຍຂຶ້ນຢູ່ກັບເງື່ອນໄຂ ຫລືຜົນຕອບແທນບາງປະການ ທີ່ເຮັດໃຫ້ບໍ່ສາ ມາດກຳນົດມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າຢູ່ນັ້ນໄດ້. ລາຄາຕົກລົງຊື້ຂາຍ ນັ້ນກໍ່ຈະຮັບ ເອົາບໍ່ໄດ້ຕາມຈຸດປະສົງຂອງອົງການພາສີຕົວຢ່າງເຊັ່ນ:

(ກ) ຜູ້ຂາຍຕັ້ງລາຄາສຳລັບສິນຄ້າເຄື່ອງຂອງນຳເຂົ້າໂດຍມີເງື່ອນໄຂວ່າ ຜູ້ຊື້ຈະຕ້ອງຊື້ສິນຄ້າ ເຄື່ອງຂອງຢ່າງອື່ນຕາມຈຳນວນທີ່ໄດ້ລະບຸໄວ້ດ້ວຍ;

(ຂ) ລາຄາຂອງສິນຄ້າເຄື່ອງຂອງນຳເຂົ້າຂຶ້ນຢູ່ກັບລາຄາດຽວ ຫລືຫລາຍລາຄາ ຊຶ່ງຜູ້ຊື້ສິນຄ້າ ເຄື່ອງຂອງນຳເຂົ້ານັ້ນຂາຍສິນຄ້າເຄື່ອງຂອງຢ່າງອື່ນໃຫ້ກັບຜູ້ຂາຍສິນຄ້າເຄື່ອງຂອງນຳເຂົ້າ ນັ້ນ; ແລະ

(ຄ) ລາຄາທີ່ຕັ້ງຂຶ້ນບົນພື້ນຖານຂອງການຊຳລະລາຄາທີ່ບໍ່ກ່ຽວຂ້ອງກັບສິນຄ້າເຄື່ອງຂອງນຳເຂົ້າ ເຊັ່ນ ໃນກໍລະນີທີ່ສິນຄ້າເຄື່ອງຂອງນຳເຂົ້າເປັນສິນຄ້າເຄື່ອງຂອງເຄິ່ງສຳເລັດຮູບ ຊຶ່ງຜູ້ຂາຍ ໄດ້ຕອບສະໜອງໃຫ້ນັ້ນ ບົນເງື່ອນໄຂທີ່ວ່າຜູ້ຂາຍຈະຕ້ອງໄດ້ຊື້ຄືນສິນຄ້າເຄື່ອງຂອງສຳເລັດ ຮູບຕາມຈຳນວນທີ່ກຳນົດໄວ້ນັ້ນ.

2. ເຖິງຢ່າງໃດກໍ່ຕາມ, ເງື່ອນໄຂ ຫລືຜົນຕອບແທນທີ່ກ່ຽວຂ້ອງກັບການຜະລິດ ຫລືການຕະຫລາດ ຂອງສິນຄ້າເຄື່ອງຂອງນຳເຂົ້າ ຈະຕ້ອງບໍ່ເປັນສາເຫດໃຫ້ມີການປະຕິເສດລາຄາຕົກລົງຊື້ຂາຍ ຕົວຢ່າງ ເຊັ່ນ: ກໍລະນີທີ່ຜູ້ຊື້ໄດ້ສະໜອງງານທາງດ້ານວິສະວະກຳ ແລະແບບແຜນຊຶ່ງໄດ້ເຮັດຂຶ້ນໃນປະເທດນຳ

ເຂົ້າສິນຄ້າເຄື່ອງຂອງໃຫ້ກັບຜູ້ຂາຍເຊັ່ນນີ້ ຈະຕ້ອງບໍ່ເປັນສາເຫດໃຫ້ມີການປະຕິເສດລາຄາຕົກລົງຊື້ຂາຍຕາມຈຸດປະສົງຂອງມາດຕາ 1. ໃນຮູບແບບດຽວກັນ, ຫາກຜູ້ຊື້ດຳເນີນການຕ່າງໆ ຊຶ່ງກ່ຽວຂ້ອງກັບການຕະຫລາດຂອງສິນຄ້າເຄື່ອງຂອງນຳເຂົ້າໂດຍຄ່າໃຊ້ຈ່າຍຂອງຜູ້ຊື້ເອງ ເຖິງແມ່ນວ່າຈະເປັນຂໍ້ຕົກລົງກັບຜູ້ຂາຍກໍ່ຕາມ ມູນຄ່າຂອງການດຳເນີນການຕ່າງໆ ເຫລົ່ານີ້ບໍ່ໃຫ້ຖືວ່າເປັນສ່ວນນຶ່ງຂອງມູນຄ່າແຈ້ງພາສີ ແລະການດຳເນີນການຕ່າງໆ ດັ່ງກ່າວຍ່ອມບໍ່ເປັນສາເຫດໃຫ້ມີການປະຕິເສດລາຄາຕົກລົງຊື້ຂາຍດ້ວຍເຊັ່ນກັນ.

ວັກທີ 2

.. ວັກທີ 2 (ກ) ແລະ 2 (ຂ) ໄດ້ກຳນົດວິທີການທີ່ແຕກຕ່າງກັນໃນການວາງຫຼັກການຮັບເອົາລາຄາຕົກລົງຊື້ຂາຍກັນ.

2. ວັກທີ 2 (ກ) ກຳນົດໄວ້ວ່າໃນກໍລະນີທີ່ຜູ້ຊື້ ແລະຜູ້ຂາຍມີຄວາມສຳພັນກັນ ຈະຕ້ອງກວດກາຄືນການຂາຍສິນຄ້າເຄື່ອງຂອງນັ້ນ ແລະລາຄາຕົກລົງຊື້ຂາຍກັນຈະກຳນົດເປັນມູນຄ່າແຈ້ງພາສີໄດ້ ຖ້າຫາກວ່າຄວາມສຳພັນນັ້ນບໍ່ຜົນກະທົບຕໍ່ລາຄາ. ແຕ່ທັງນີ້ກໍ່ບໍ່ໄດ້ໝາຍຄວາມວ່າຈະຕ້ອງມີການກວດກາຄືນໃນທຸກໆ ກໍລະນີທີ່ຜູ້ຊື້ ແລະຜູ້ຂາຍມີຄວາມສຳພັນກັນ. ການກວດກາເຊັ່ນນີ້ຈະຕ້ອງດຳເນີນໃນກໍລະນີທີ່ມີຂໍ້ສົງໃສກ່ຽວກັບການຮັບເອົາລາຄາຕົກລົງຊື້ຂາຍ. ໃນກໍລະນີທີ່ອົງການພາສີບໍ່ມີຂໍ້ສົງໃສໃດໆ ກ່ຽວກັບການຮັບເອົາລາຄາຕົກລົງຊື້ຂາຍ ອົງການພາສີຈະຮັບເອົາລາຄາໂດຍບໍ່ຕ້ອງຮຽກຮ້ອງຂໍ້ມູນຈາກຜູ້ນຳເຂົ້າເພີ່ມເຕີມອີກ. ຕົວຢ່າງເຊັ່ນ ອົງການພາສີອາດຈະເຄີຍກວດກາຄວາມສຳພັນນັ້ນມາກ່ອນແລ້ວ ຫລືອົງການພາສີອາດຈະມີຂໍ້ມູນທີ່ລະອຽດຢູ່ແລ້ວກ່ຽວກັບຜູ້ຊື້ ແລະຜູ້ຂາຍ ແລະອາດຈະພໍໃຈຈາກການກວດກາ ຫຼື ຈາກຂໍ້ມູນເຫຼົ່ານັ້ນແລ້ວວ່າຄວາມສຳພັນກັນນັ້ນບໍ່ມີຜົນກະທົບຕໍ່ລາຄາ.

3. ໃນກໍລະນີທີ່ອົງການພາສີບໍ່ສາມາດຮັບເອົາລາຄາຕົກລົງຊື້ຂາຍໄດ້ໂດຍບໍ່ມີການສອບຖາມເພີ່ມເຕີມແລ້ວ ອົງການພາສີຄວນໃຫ້ໂອກາດຜູ້ນຳເຂົ້າໃນການຊອກຫາຂໍ້ມູນທີ່ລະອຽດເທົ່າທີ່ຈຳເປັນເພີ່ມເຕີມ ເພື່ອໃຫ້ອົງການພາສີສາມາດກວດກາຄືນການຂາຍນັ້ນໄດ້ ໃນເລື່ອງເຊັ່ນນີ້ອົງການພາສີຄວນກະກຽມໃນການກວດກາແງ່ມຸມຕ່າງໆ ທີ່ກ່ຽວຂ້ອງກັບການຊື້ຂາຍ ລວມເຖິງວິທີການທີ່ຜູ້ຊື້ ແລະຜູ້ຂາຍກໍ່ຕັ້ງຄວາມສຳພັນທາງການຄ້າຂອງທັງສອງຝ່າຍຂຶ້ນມາ ແລະວິທີການທີ່ໄດ້ມາຊຶ່ງລາຄາທີ່ເປັນບັນຫານັ້ນ ທັງນີ້ເພື່ອກຳນົດວ່າຄວາມສຳພັນກັນນັ້ນມີຜົນກະທົບຕໍ່ລາຄາຫຼືບໍ່ ໃນກໍລະນີທີ່ສາມາດສະແດງໃຫ້ເຫັນໄດ້ວ່າຜູ້ຊື້ ແລະຜູ້ຂາຍ ຊຶ່ງເຖິງວ່າຈະມີຄວາມສຳພັນກັນພາຍໃຕ້ຂໍ້ກຳນົດຂອງມາດຕາ 15 ກໍ່ຕາມ ມີການຊື້ມາ ແລະຂາຍໄປລະຫວ່າງກັນ ໂດຍທີ່ວ່າທັງສອງຝ່າຍບໍ່ມີຄວາມສຳພັນກັນເລີຍ ເຊັ່ນນີ້ຍ່ອມສະແດງໃຫ້ເຫັນໄດ້ວ່າລາຄານັ້ນບໍ່ໄດ້ຮັບຜົນກະທົບຈາກຄວາມສຳພັນກັນ ຕົວຢ່າງຂອງເລື່ອງນີ້ຄືຫາກລາຄານັ້ນໄດ້ຕົກລົງກັນໃນລັກສະນະທີ່ສອດຄ່ອງກັບການປະຕິບັດຕາມປົກກະຕິໃນການກຳນົດລາຄາຂອງອຸດສາຫະກຳປະເພດນັ້ນ ຫຼືໂດຍວິທີການທີ່ຜູ້ຂາຍຕົກລົງລາຄາເພື່ອຂາຍໃຫ້ກັບຜູ້ຊື້ຫຼາຍໆ ຄົນ ຊຶ່ງບໍ່ມີຄວາມສຳພັນກັບຜູ້ຂາຍ ເມື່ອເປັນເຊັ່ນນີ້ຍ່ອມສະແດງໃຫ້ເຫັນໄດ້ວ່າ ລາຄາບໍ່ໄດ້ຮັບຜົນກະທົບຈາກຄວາມສຳພັນ

ກັນ. ຕົວຢ່າງໃນກໍລະນີທີ່ສາມາດສະແດງໃຫ້ເຫັນໄດ້ວ່າລາຄານັ້ນເທົ່າກັບມູນຄ່າຕ່າງໆ ທັງໝົດບວກກັບ ກຳໄລຊຶ່ງເປັນຕົວແທນຂອງກຳໄລທັງໝົດຂອງກິດຈະການນັ້ນໃນຊ່ວງໄລຍະເວລານຶ່ງ (ຕົວຢ່າງເຊັ່ນ: ເປັນປະຈຳປີ) ໃນການຂາຍສິນຄ້າປະເພດ ຫຼືຊະນິດດຽວກັນນັ້ນ, ເຊັ່ນນີ້ຍ່ອມສະແດງໃຫ້ເຫັນວ່າ ລາຄາ ນັ້ນບໍ່ໄດ້ຮັບຜົນກະທົບຈາກຄວາມສຳພັນກັນ.

4. ວັກ 2 (ຂ) ໃຫ້ໂອກາດແກ່ຜູ້ນຳເຂົ້າທີ່ຈະສະແດງໃຫ້ເຫັນວ່າລາຄາຕົກລົງຊື້ຂາຍນັ້ນມີຄວາມໃກ້ ຄຽງກັນຫຼາຍກັບລາຄາທີ່ໃຊ້ໃນ "ການກວດກາຄືນ" ຊຶ່ງອົງການພາສີໄດ້ເຄີຍຮັບມາກ່ອນແລ້ວ ແລະດັ່ງ ນັ້ນລາຄາຕົກລົງຊື້ຂາຍນັ້ນຈຶ່ງຮັບເອົາໄດ້ ພາຍໃຕ້ຂໍ້ກຳນົດຂອງມາດຕາ 1 ໃນກໍລະນີທີ່ການກວດກາຄືນ ລາຄາຕາມວັກທີ 2 (ຂ) ຫາກບໍ່ມີຜົນກະທົບຕໍ່ລາຄາຕາມວັກທີ 2 (ກ) ກໍ່ບໍ່ຈຳເປັນແລ້ວ ຫາກອົງການພາ ສີມີຂໍ້ມູນຂອງຕົນຢ່າງພຽງພໍຢູ່ແລ້ວ. ໂດຍບໍ່ຕ້ອງສອບຖາມລາຍລະອຽດເພີ່ມເຕີມອີກວ່າລາຄາຕົກລົງຊື້ ຂາຍນັ້ນໃກ້ຄຽງກັນຫຼາຍກັບລາຄາທີ່ໃຊ້ໃນການກວດກາຄືນລາຄາໃດລາຄານຶ່ງຕາມທີ່ໄດ້ລະບຸໄວ້ໃນວັກ ທີ 2 (ຂ) ແລ້ວ ເມື່ອເປັນດັ່ງນີ້ຈຶ່ງບໍ່ຈຳເປັນທີ່ຈະຮຽກຮ້ອງໃຫ້ຜູ້ນຳເຂົ້າສະແດງໃຫ້ເຫັນອີກວ່າ ການກວດ ກາຄືນນັ້ນສາມາດເຮັດໃຫ້ບັນລຸຜົນໄດ້ ໃນວັກທີ 2 (ຂ) ຄຳວ່າ "ຜູ້ຊື້ທີ່ບໍ່ມີຄວາມສຳພັນກັນ" ໝາຍເຖິງ ຜູ້ ຊື້ຊຶ່ງບໍ່ມີຄວາມສຳພັນກັບຜູ້ຂາຍບໍ່ວ່າໃນກໍລະນີໃດໆ ທັງສິ້ນ.

ວັກທີ 2 (ຂ)

ມີປັດໃຈຫຼາຍຢ່າງທີ່ຈະຕ້ອງນຳມາພິຈາລະນາໃນການກຳນົດວ່າລາຄາໃດນຶ່ງຈະ "ໃກ້ຄຽງຫຼາຍ" ກັບອີກລາຄານຶ່ງ ຫຼືບໍ່ ປັດໃຈເຫຼົ່ານັ້ນລວມເຖິງເງື່ອນໄຂຂອງສິນຄ້າເຄື່ອງຂອງນຳເຂົ້າ ເງື່ອນໄຂຂອງອຸດ ສາຫະກຳນັ້ນເອງ ລະດູການທີ່ສິນຄ້າເຄື່ອງຂອງນັ້ນນຳເຂົ້າມາ ແລະ ຄວາມແຕກຕ່າງໃນດ້ານລາຄານັ້ນ ສຳຄັນໃນທາງການຄ້າຫຼືບໍ່. ປັດໃຈເຫຼົ່ານີ້ອາດແຕກຕ່າງກັນໄດ້ເປັນແຕ່ລະກໍລະນີໄປ ຈຶ່ງເປັນໄປບໍ່ໄດ້ທີ່ ຈະໃຊ້ມາດຕະຖານດຽວກັນເຊັ່ນ ອັດຕາທຽບຖານຕາຍຕົວໃນແຕ່ລະກໍລະນີ. ຕົວຢ່າງໄດ້ແກ່ຄວາມແຕກ ຕ່າງກັນເລັກນ້ອຍຂອງລາຄາ ໃນກໍລະນີທີ່ກ່ຽວຂ້ອງກັບສິນຄ້າເຄື່ອງຂອງປະເພດນຶ່ງອາດຈະຮັບເອົາບໍ່ ໄດ້. ໃນຂະນະທີ່ຄວາມແຕກຕ່າງກັນຫຼາຍຂອງລາຄາ ໃນກໍລະນີທີ່ກ່ຽວຂ້ອງກັບສິນຄ້າເຄື່ອງຂອງອີກປະ ເພດນຶ່ງ ອາດຈະຮັບເອົາໄດ້ໃນການກຳນົດວ່າ ລາຄາຕົກລົງຊື້ຂາຍນັ້ນໃກ້ຄຽງກັນຫລາຍກັບລາຄາທີ່ໃຊ້ ໃນ " ການກວດກາຄືນ " ຕາມທີ່ໄດ້ກຳນົດໄວ້ໃນວັກທີ 2 (ຂ) ຂອງມາດຕາ 1 ຫຼືບໍ່.

ໝາຍເຫດຂອງມາດຕາ II

1. ໃນການນຳໃຊ້ມາດຕາ 2 ຖ້າຫາກເປັນໄປໄດ້ອົງການພາສີ ຈະຕ້ອງໃຊ້ການຂາຍຂອງສິນຄ້າເຄື່ອງ ຂອງ ທີ່ຄືກັນໃນລະດັບການຄ້າດຽວກັນ ແລະໃນປະລິມານດຽວກັນຢ່າງເຫັນໄດ້ຈະແຈ້ງກັບສິນຄ້າເຄື່ອງ

ຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ. ໃນກໍລະນີທີ່ບໍ່ມີການຂາຍສິນຄ້າເຄື່ອງຂອງດັ່ງກ່າວ ອາດໃຊ້ການຂາຍສິນຄ້າເຄື່ອງຂອງທີ່ຄືກັນ ຊຶ່ງເກີດຂຶ້ນພາຍໃຕ້ເງື່ອນໄຂຂໍ້ໃດຂໍ້ນຶ່ງໃນສາມຂໍ້ດັ່ງຕໍ່ໄປນີ້:

(ກ) ການຂາຍໃນລະດັບການຄ້າດຽວກັນ ແຕ່ໃນປະລິມານຕ່າງກັນ;

(ຂ) ການຂາຍໃນລະດັບການຄ້າຕ່າງກັນ ແຕ່ໃນປະລິມານດຽວກັນຢ່າງເຫັນໄດ້ຈະແຈ້ງ ຫຼື

(ຄ) ການຂາຍໃນລະດັບການຄ້າຕ່າງກັນ ແລະໃນປະລິມານຕ່າງກັນ.

2. ຖ້າຫາກພົບວ່າມີການຂາຍຕາມເງື່ອນໄຂຂໍ້ໃດຂໍ້ນຶ່ງໃນສາມຂໍ້ນັ້ນ ການປັບລາຄາຈະຕ້ອງໄດ້ເຮັດຂຶ້ນຕາມແຕ່ລະກໍລະນີສຳລັບ:

(ກ) ດ້ານປະລິມານເທົ່ານັ້ນ;

(ຂ) ດ້ານລະດັບການຄ້າເທົ່ານັ້ນ ຫຼື;

(ຄ) ທັງປັດໃຈດ້ານລະດັບການຄ້າ ແລະປະລິມານ.

3. ຄຳວ່າ "ແລະ/ຫຼື" ເປັນການປະນິປະນອມກັນໃນການຂາຍ ແລະການປັບລາຄາທີ່ຈຳເປັນຕາມເງື່ອນໄຂຂໍ້ໃດຂໍ້ນຶ່ງໃນສາມຂໍ້ຂ້າງເທິງນັ້ນ.

4. ຕາມຈຸດປະສົງຂອງມາດຕາ 2 ລາຄາຕົກລົງຊື້ຂາຍຂອງສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນ ໝາຍເຖິງມູນຄ່າແຈ້ງພາສີທີ່ໄດ້ມີການປັບລາຄາຕາມທີ່ໄດ້ກຳນົດໄວ້ໃນວັກທີ 1 (ຂ) ແລະວັກທີ 2 ຊຶ່ງເຄີຍຮັບເອົາມາແລ້ວ ພາຍໃຕ້ມາດຕາ 1

5. ເງື່ອນໄຂຂອງການປັບລາຄາອັນເນື່ອງມາຈາກລະດັບການຄ້າທີ່ແຕກຕ່າງກັນ ຫຼືປະລິມານທີ່ແຕກຕ່າງກັນຄືການປັບລາຄານັ້ນ ບໍ່ວ່າຈະເພີ່ມຂຶ້ນ ຫລືຫລຸດລົງກໍ່ຕາມ. ໃຫ້ເຮັດບົນພື້ນຖານຂອງຫລັກຖານທີ່ສະແດງໃຫ້ເຫັນຢ່າງຈະແຈ້ງ ແລະສົມເຫດສົມຜົນ ແລະມີຄວາມຖືກຕ້ອງໃນການປັບລາຄາ ຕົວຢ່າງ ເຊັ່ນ ບັນຊີແຈ້ງລາຄາສິນຄ້າເຄື່ອງຂອງທີ່ມີຜົນບັງຄັບໃຊ້ ຊຶ່ງປະກອບດ້ວຍລາຄາຕ່າງໆ ທີ່ອ້າງອີງເຖິງລະດັບການຄ້າທີ່ແຕກຕ່າງກັນ ຫລືປະລິມານທີ່ແຕກຕ່າງກັນ ຕົວຢ່າງໃນເລື່ອງນີ້ຄືຫາກສິນຄ້າເຄື່ອງຂອງນຳເຂົ້າທີ່ກຳລັງກຳນົດມູນຄ່າແຈ້ງພາສີເປັນເຄື່ອງຂອງຈຳນວນ 10 ໜ່ວຍ ແລະສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນນັ້ນ ຊຶ່ງມີລາຄາຕົກລົງຊື້ຂາຍກັນຢູ່ແລ້ວ ເປັນການຂາຍໃນຈຳນວນ 500 ໜ່ວຍ ແລະເປັນທີ່ຍອມຮັບວ່າຜູ້ຂາຍໃຫ້ສ່ວນຫລຸດດ້ານປະລິມານ. ດັ່ງນັ້ນການປັບລາຄາທີ່ຈະຕ້ອງປະຕິບັດອາດເຮັດໃຫ້ສຳເລັດໄດ້ ໂດຍອີງໃສ່ບັນຊີແຈ້ງລາຄາສິນຄ້າເຄື່ອງຂອງຂອງຜູ້ຂາຍ ແລະໃຊ້ລາຄານັ້ນສຳລັບການຂາຍໃນຈຳນວນ 10 ໜ່ວຍ ແຕ່ທັງນີ້ບໍ່ໄດ້ໝາຍຄວາມວ່າຈະຕ້ອງເຄີຍມີການຂາຍໃນຈຳນວນ 10 ໜ່ວຍ ຕາມທີ່ບັນຊີແຈ້ງລາຄາສິນຄ້າເຄື່ອງຂອງນັ້ນ ໄດ້ເຮັດຂຶ້ນມາໂດຍຄວາມຖືກຕ້ອງ. ໃນການຂາຍໃນປະລິມານອື່ນໆ. ເຖິງຢ່າງໃດກໍ່ຕາມ, ໃນກໍລະນີທີ່ບໍ່ມີມາດຕະການທີ່ຍຶດຖືຂໍ້ມູນຄວາມຈິງເຊັ່ນນີ້ແລ້ວ ການກຳນົດມູນຄ່າແຈ້ງພາສີພາຍໃຕ້ຂໍ້ກຳນົດຂອງມາດຕາ 2 ກໍ່ເປັນສິ່ງທີ່ບໍ່ເໝາະສົມ.

ໝາຍເຫດຂອງມາດຕາ III

1. ໃນການນຳໃຊ້ມາດຕາ 3, ຖ້າຫາກເປັນໄປໄດ້ ອົງການພາສີຈະຕ້ອງໃຊ້ການຂາຍສິນຄ້າເຄື່ອງຂອງທີ່ຄ້າຍຄືກັນໃນລະດັບການຄ້າດຽວກັນ ແລະໃນປະລິມານດຽວກັນຢ່າງເຫັນໄດ້ຈະແຈ້ງກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ. ໃນກໍລະນີທີ່ບໍ່ມີການຂາຍສິນຄ້າເຄື່ອງຂອງດັ່ງກ່າວ ອາດໃຊ້ການຂາຍສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ ຊຶ່ງເກີດຂຶ້ນພາຍໃຕ້ເງື່ອນໄຂຂໍ້ໃດຂໍ້ນຶ່ງ ໃນສາມຂໍ້ດັ່ງຕໍ່ໄປນີ້:

(ກ) ການຂາຍໃນລະດັບການຄ້າດຽວກັນ ແຕ່ໃນປະລິມານຕ່າງກັນ

(ຂ) ການຂາຍໃນລະດັບການຄ້າຕ່າງກັນ ແຕ່ໃນປະລິມານດຽວກັນຢ່າງເຫັນໄດ້ຈະແຈ້ງ ຫລື

(ຄ) ການຂາຍໃນລະດັບການຄ້າຕ່າງກັນ ແລະໃນປະລິມານຕ່າງກັນ

2. ຖ້າພົບວ່າມີການຂາຍຕາມເງື່ອນໄຂຂໍ້ໃດຂໍ້ນຶ່ງໃນສາມຂໍ້ນັ້ນ ການປັບລາຄາຈະຕ້ອງໄດ້ເຮັດຂຶ້ນຕາມແຕ່ລະກໍລະນີສຳລັບ:

(ກ) ດ້ານປະລິມານເທົ່ານັ້ນ

(ຂ) ດ້ານລະດັບການຄ້າເທົ່ານັ້ນ ຫລື

(ຄ) ທັງປັດໃຈດ້ານລະດັບການຄ້າ ແລະປະລິມານ

3. ຄຳວ່າ "ແລະ/ຫຼື" ເປັນການປະນີປະນອມໃນການໃຊ້ການຂາຍ ແລະການປັບລາຄາທີ່ຈຳເປັນຕາມເງື່ອນໄຂຂໍ້ໃດຂໍ້ນຶ່ງໃນສາມຂໍ້ຂ້າງເທິງນັ້ນ.

4. ຕາມຈຸດປະສົງຂອງມາດຕາ 3 ລາຄາຕົກລົງຊື້ຂາຍຂອງສິນຄ້າເຄື່ອງຂອງນຳເຂົ້າທີ່ຄ້າຍຄືກັນໝາຍເຖິງມູນຄ່າແຈ້ງພາສີທີ່ໄດ້ມີການປັບລາຄາຕາມທີ່ໄດ້ກຳນົດໄວ້ໃນວັກທີ 1 (ຂ) ແລະວັກທີ 2 ຊຶ່ງເຄີຍເຮັດມາແລ້ວ ພາຍໃຕ້ມາດຕາ 1.

5. ເງື່ອນໄຂຂອງການປັບລາຄາໃດນຶ່ງອັນເນື່ອງມາຈາກລະດັບການຄ້າທີ່ແຕກຕ່າງກັນ ຫຼື ປະລິມານທີ່ແຕກຕ່າງກັນຄືການປັບລາຄານັ້ນ ບໍ່ວ່າຈະເພີ່ມຂຶ້ນ ຫລືຫລຸດລົງກໍ່ຕາມ. ໃຫ້ເຮັດບົນພື້ນຖານຂອງຫຼັກຖານທີ່ສະແດງໃຫ້ເຫັນຢ່າງຈະແຈ້ງ ແລະສົມເຫດສົມຜົນ ແລະມີຄວາມຖືກຕ້ອງໃນການປັບລາຄາເທົ່ານັ້ນ ຕົວຢ່າງເຊັ່ນ ບັນຊີແຈ້ງລາຄາສິນຄ້າເຄື່ອງຂອງທີ່ມີຜົນບັງຄັບໃຊ້ ຊຶ່ງປະກອບດ້ວຍລາຄາຕ່າງໆ ທີ່ອ້າງອີງເຖິງລະດັບການຄ້າທີ່ແຕກຕ່າງກັນ ຫລືປະລິມານທີ່ແຕກຕ່າງກັນ ຕົວຢ່າງໃນເລື່ອງນີ້ຫາກສິນຄ້າເຄື່ອງຂອງນຳເຂົ້າທີ່ກຳລັງກຳນົດມູນຄ່າແຈ້ງພາສີເປັນເຄື່ອງຂອງຈຳນວນ 10 ໜ່ວຍ ແລະສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນນັ້ນ ຊຶ່ງມີລາຄາຕົກລົງຊື້ຂາຍກັນຢູ່ແລ້ວ ເປັນການຂາຍໃນຈຳນວນ 500 ໜ່ວຍ ແລະເປັນທີ່ຍອມຮັບວ່າຜູ້ຂາຍໃຫ້ສ່ວນຫລຸດດ້ານປະລິມານ. ດັ່ງນັ້ນການປັບລາຄາທີ່ຈະຕ້ອງປະຕິບັດອາດເຮັດໃຫ້ສຳເລັດໄດ້ ໂດຍອີງໃສ່ບັນຊີແຈ້ງລາຄາສິນຄ້າເຄື່ອງຂອງຂອງຜູ້ຂາຍ ແລະໃຊ້ລາຄານັ້ນສຳລັບການຂາຍໃນຈຳນວນ 10 ໜ່ວຍ ແຕ່ທັງນີ້ບໍ່ໄດ້ໝາຍຄວາມວ່າຈະຕ້ອງເຄີຍມີການຂາຍໃນຈຳນວນ 10

ໜ່ວຍ ຕາມທີ່ບັນຊີແຈ້ງລາຄາສິນຄ້າເຄື່ອງຂອງນັ້ນ ໄດ້ເຮັດຂຶ້ນມາໂດຍຄວາມຖືກຕ້ອງ. ໃນການຂາຍໃນປະລິມານອື່ນໆ. ເຖິງຢ່າງໃດກໍ່ຕາມ, ໃນກໍລະນີທີ່ບໍ່ມີມາດຕະການທີ່ຢືດຖືຂໍ້ມູນຄວາມຈິງເຊັ່ນນີ້ແລ້ວ ການກຳນົດມູນຄ່າແຈ້ງພາສີພາຍໃຕ້ຂໍ້ກຳນົດຂອງມາດຕາ 3 ກໍ່ເປັນສິ່ງທີ່ບໍ່ເໝາະສົມ.

ໝາຍເຫດຂອງມາດຕາ V

1. ຄຳວ່າ "ລາຄາຕໍ່ຫົວໜ່ວຍ ຊຶ່ງ... ສິນຄ້າເຄື່ອງຂອງໄດ້ຂາຍໄປໃນປະລິມານລວມທີ່ຫລາຍທີ່ສຸດ" ນັ້ນໝາຍເຖິງລາຄາທີ່ຈຳນວນຫົວໜ່ວຍຫລາຍທີ່ສຸດໄດ້ຂາຍໄປໃຫ້ກັບບຸກຄົນທີ່ບໍ່ມີຄວາມສຳພັນກັນກັບ ບຸກຄົນ ທີ່ຜູ້ນັ້ນໄດ້ຊື້ສິນຄ້າເຄື່ອງຂອງນັ້ນມາໃນລະດັບການຄ້າຄັ້ງທຳອິດຫລັງຈາກການນຳເຂົ້າສິນຄ້າ ເຄື່ອງຂອງ ຊຶ່ງການຂາຍນັ້ນເກີດຂຶ້ນ.

2. ຕົວຢ່າງຂອງເລື່ອງນີ້ ໄດ້ແກ່ສິນຄ້າເຄື່ອງຂອງຊຶ່ງຂາຍຕາມບັນຊີແຈ້ງລາຄາສິນຄ້າ ທີ່ມີລາຄາຕໍ່ຫົວໜ່ວຍທີ່ໜ້າພໍໃຈ ສຳລັບການຊື້ສິນຄ້າເຄື່ອງຂອງໃນປະລິມານຫລາຍທີ່ສຸດ.

ປະລິມານຂາຍ	*ລາຄາຕໍ່ຫົວໜ່ວຍ*	*ຈຳນວນການຂາຍ*	*ປະລິມານຂາຍລວມທັງໝົດຂອງແຕ່ລະລະດັບລາຄາ*
1 - 10 ໜ່ວຍ	100	10 ຄັ້ງລະ 5 ໜ່ວຍ 5 ຄັ້ງລະ 3 ໜ່ວຍ	65
11 - 25 ໜ່ວຍ	95	5 ຄັ້ງລະ 11 ໜ່ວຍ	55
ຫລາຍກວ່າ 25 ໜ່ວຍ	90	1 ຄັ້ງຈຳນວນ 30 ໜ່ວຍ 1 ຄັ້ງຈຳນວນ 50 ໜ່ວຍ	80

ຈຳນວນຫົວໜ່ວຍທີ່ຫລາຍທີ່ສຸດທີ່ໄດ້ຂາຍໄປໃນລາຄານຶ່ງຄື 80 ດັ່ງນັ້ນລາຄາຕໍ່ຫົວໜ່ວຍຂອງສິນຄ້າເຄື່ອງຂອງປະລິມານລວມທີ່ຫລາຍທີ່ສຸດຄື 90.

3. ອີກຕົວຢ່າງນຶ່ງຂອງບັນຫານີ້ໄດ້ແກ່: ມີການຂາຍເກີດຂຶ້ນ 2 ຄັ້ງ. ໃນການຂາຍໃນຄັ້ງທຳອິດເປັນ ການຂາຍໃນຈຳນວນ 500 ໜ່ວຍໃນລາຄາໜ່ວຍລະ 95 ໜ່ວນສະກຸນເງິນ. ໃນການຂາຍຄັ້ງທີສອງເປັນ ການຂາຍຈຳນວນ 400 ໜ່ວຍ ໃນລາຄາໜ່ວຍລະ 90 ໜ່ວຍສະກຸນເງິນ. ໃນຕົວຢ່າງນີ້ຈຳນວນຫົວ

ໜ່ວຍທີ່ຫລາຍທີ່ສຸດ ທີ່ໄດ້ຂາຍໄປໃນລາຄານຶ່ງຄື 500. ດັ່ງນັ້ນລາຄາຕໍ່ຫົວໜ່ວຍຂອງສິນຄ້າເຄື່ອງຂອງ ປະລິມານລວມທີ່ຫຼາຍທີ່ສຸດຄື 95

4. ຕົວຢ່າງລຳດັບທີ່ສາມເປັນສະພາບການຂາຍໃນປະລິມານແຕກຕ່າງກັນ ແລະໃນລາຄາກໍ່ແຕກຕ່າງກັນດັ່ງຕໍ່ໄປນີ້:

(ກ) ການຂາຍ

ປະລິມານຂາຍ	*ລາຄາຕໍ່ຫົວໜ່ວຍ*
40 ໜ່ວຍ	100
30 ໜ່ວຍ	90
15 ໜ່ວຍ	100
50 ໜ່ວຍ	95
25 ໜ່ວຍ	105
35 ໜ່ວຍ	90
5 ໜ່ວຍ	100

(ຂ) ລວມຍອດການຂາຍ

ປະລິມານຂາຍລວມທັ້ງໝົດ	*ລາຄາຕໍ່ຫົວໜ່ວຍ*
65	90
50	95
60	100
25	105

ໃນຕົວຢ່າງນີ້ຈຳນວນຫົວໜ່ວຍທີ່ຫລາຍທີ່ສຸດໄດ້ຂາຍໄປ ໃນລາຄານຶ່ງຄື 65. ດັ່ງນັ້ນລາຄາຕໍ່ຫົວໜ່ວຍຂອງສິນຄ້າເຄື່ອງຂອງປະລິມານລວມທີ່ຫລາຍທີ່ສຸດຄື 90.

5. ການຂາຍໃດໆ ໃນປະເທດນຳເຂົ້າສິນຄ້າເຄື່ອງຂອງ ຕາມທີ່ໄດ້ອະທິບາຍໃນວັກທີ 1 ຂ້າງເທິງນັ້ນ ທີ່ເປັນການຂາຍໃຫ້ກັບບຸກຄົນ ຊຶ່ງເປັນຜູ້ສະໜອງອົງປະກອບໃດໆ ຕາມວັກທີ 1 (ຂ) ຂອງມາດຕາ 8 ບໍ່ວ່າໂດຍທາງກົງ ຫລືທາງອ້ອມ ໂດຍບໍ່ໄດ້ຄິດລາຄາ ຫລືໃນລາຄາທີ່ຫລຸດໃຫ້ແລ້ວ ເພື່ອໃຊ້ປະກອບເຂົ້າກັບການຜະລິດ ແລະການຂາຍເພື່ອສົ່ງອອກ ສຳລັບສິນຄ້າເຄື່ອງຂອງນຳເຂົ້ານັ້ນ ບໍ່ຄວນນຳມາໃຊ້ພິຈາລະນາໃນການກຳນົດລາຄາຕໍ່ຫົວໜ່ວຍຕາມຈຸດປະສົງຂອງມາດຕາ 5.

6. ເມື່ອສັງເກດວ່າ "ກຳໄລ ແລະຄ່າໃຊ້ຈ່າຍສິ້ນເປືອງທົ່ວໄປ" ຕາມທີ່ກ່າວໄວ້ໃນວັກທີ 1 ຂອງມາດຕາ 5 ຄວນຈະນຳມາລວມກັນທັງໝົດ. ຕົວເລກທີ່ນຳມາໃຊ້ເພື່ອການຫັກອອກນີ້ ຄວນພິຈາລະນາບົນພື້ນຖານຂອງຂໍ້ມູນ ທີ່ສະໜອງໃຫ້ໂດຍຜູ້ນຳເຂົ້າ ຫຼືໃນນາມຂອງຜູ້ນຳເຂົ້າສິນຄ້າເຄື່ອງຂອງ. ເວັ້ນເສຍແຕ່ຕົວເລກເຫຼົ່ານັ້ນຂອງຜູ້ນຳເຂົ້າສິນຄ້າເຄື່ອງຂອງບໍ່ສອດຄ່ອງກັບຕົວເລກ ທີ່ໄດ້ຮັບຈາກການຂາຍໃນປະເທດນຳເຂົ້າຂອງສິນຄ້າເຄື່ອງຂອງນຳເຂົ້າປະເພດ ຫລືຊະນິດດຽວກັນ. ໃນກໍລະນີທີ່ຕົວເລກຂອງຜູ້ນຳເຂົ້າສິນຄ້າເຄື່ອງຂອງບໍ່ສອດຄ່ອງກັບຕົວເລກດັ່ງກ່າວແລ້ວ ກໍ່ອາດໃຊ້ຈຳນວນກຳໄລ ແລະຄ່າສິ້ນເປືອງທົ່ວໄປ ຊຶ່ງໄດ້ຈາກຂໍ້ມູນທີ່ກ່ຽວຂ້ອງທີ່ນອກເໜືອໄປຈາກຂໍ້ມູນທີ່ສະໜອງໃຫ້ໂດຍຜູ້ນຳເຂົ້າ ຫຼືໃນນາມຂອງຜູ້ນຳເຂົ້າສິນຄ້າເຄື່ອງຂອງໄດ້.

7. ຄຳວ່າ "ຄ່າສິ້ນເປືອງທົ່ວໄປ "ໝາຍເຖິງມູນຄ່າທາງກົງ ແລະທາງອ້ອມຂອງມູນຄ່າການຕະຫລາດຂອງສິນຄ້າເຄື່ອງຂອງນັ້ນ.

8. ຄ່າພາສີອາກອນພາຍໃນປະເທດທີ່ຈະຕ້ອງຊຳລະ ເນື່ອງຈາກການຂາຍສິນຄ້າເຄື່ອງຂອງນັ້ນ ທີ່ບໍ່ອາດຫັກອອກໄດ້ພາຍໃຕ້ຂໍ້ກຳນົດຂອງວັກທີ 1 (ກ) (4) ຂອງມາດຕາ 5 ນັ້ນ ໃຫ້ນຳມາຫັກອອກໄດ້ພາຍໃຕ້ຂໍ້ກຳນົດຂອງວັກທີ 1 (ກ) (1) ຂອງມາດຕາ 5.

9. ໃນການກຳນົດຄ່ານາຍໜ້າ ຫລືກຳໄລຕາມປົກກະຕິ ແລະຄ່າໃຊ້ຈ່າຍສິ້ນເປືອງທົ່ວໄປຢ່າງໃດຢ່າງນຶ່ງ ພາຍໃຕ້ຂໍ້ກຳນົດຂອງວັກທີ 1 ຂອງມາດຕາ 5 ນັ້ນ ບັນຫາທີ່ວ່າສິນຄ້າເຄື່ອງຂອງຢ່າງນຶ່ງຈະເປັນ "ສິນຄ້າເຄື່ອງຂອງປະເພດ ຫລືຊະນິດດຽວກັນ" ກັບສິນຄ້າເຄື່ອງຂອງອື່ນ ຫລືບໍ່ນັ້ນ ຈະຕ້ອງກຳນົດເປັນແຕ່ລະກໍລະນີໄປໂດຍຄຳນຶງເຖິງສະພາບການຕ່າງໆ ທີ່ກ່ຽວຂ້ອງດ້ວຍ. ການຂາຍສິນຄ້າເຄື່ອງຂອງໃນກຸ່ມ ຫລືໝວດໝູ່ທີ່ໃກ້ຄຽງກັນຫລາຍທີ່ສຸດຂອງສິນຄ້າເຄື່ອງຂອງນຳເຂົ້າໃນປະເພດ ຫລືຊະນິດດຽວກັນໃນປະເທດນຳເຂົ້າ ຊຶ່ງລວມເຖິງສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຊຶ່ງສາມາດຈັດຫາຂໍ້ມູນທີ່ຈຳເປັນມາໃຫ້ໄດ້ ຄວນນຳມາກວດສອບດ້ວຍ ຕາມຈຸດປະສົງຂອງມາດຕາ 5. ຄຳວ່າ "ສິນຄ້າເຄື່ອງຂອງປະເພດ ຫຼື ຊະນິດດຽວກັນ" ລວມເຖິງສິນຄ້າເຄື່ອງຂອງນຳເຂົ້າຈາກປະເທດດຽວກັນກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ ແລະສິນຄ້າເຄື່ອງຂອງທີ່ນຳເຂົ້າຈາກປະເທດອື່ນໆ ດ້ວຍ.

10. ຕາມຈຸດປະສົງຂອງວັກທີ 1 (ຂ) ຂອງມາດຕາ 5 ຄຳວ່າ "ວັນທຳອິດ" ຈະຕ້ອງເປັນວັນທີ່ມີການຂາຍສິນຄ້າເຄື່ອງຂອງນຳເຂົ້າ ຫລືສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນ ຫລືສິນຄ້າເຄື່ອງຂອງນຳເຂົ້າທີ່ຄ້າຍຄືກັນໃນປະລິມານພຽງພໍ ທີ່ຈະກຳນົດລາຄາຕໍ່ຫົວໜ່ວຍໄດ້.

11. ໃນກໍລະນີທີ່ໃຊ້ວິທີການໃນວັກທີ 2 ຂອງມາດຕາ 5 ການຫັກອອກສຳລັບມູນຄ່າທີ່ເພີ່ມຂຶ້ນເນື່ອງຈາກການຜ່ານກຳມະວິທີເພີ່ມເຕີມມາແລ້ວນັ້ນ ຈະຕ້ອງຢູ່ບົນພື້ນຖານຂອງຂໍ້ມູນທີ່ເປັນຈິງ ແລະທີ່ວັດປະລິມານໄດ້ ຊຶ່ງກ່ຽວຂ້ອງກັບມູນຄ່າຂອງວຸດນັ້ນ. ສູດການຜະລິດທາງອຸດສະຫະກຳອັນເປັນທີ່ຮັບຮູ້ແລ້ວ,

ສ່ວນປະສົມ, ວິທີການກໍ່ສ້າງ ແລະວິທີປະຕິບັດທາງອຸດສະຫະກຳອື່ນໆ ອາດຈະນຳມາໃຊ້ເປັນພື້ນຖານ ໃນການຄິດໄລ່ໄດ້.

12. ເປັນທີ່ຍອມຮັບວ່າວິທີການກຳນົດມູນຄ່າຕາມທີ່ກຳນົດໄວ້ໃນວັກທີ 2 ຂອງມາດຕາ 5 ນັ້ນຍ່ອມບໍ່ອາດນຳມາໃຊ້ຕາມປົກກະຕິໄດ້. ຖ້າຫາກວ່າສິນຄ້າເຄື່ອງຂອງນຳເຂົ້ານັ້ນໄດ້ສູນເສຍອັກກະລັກຂອງມັນນັ້ນໄປ ອັນເປັນຜົນມາຈາກກຳມະວິທີເພີ່ມເຕີມ. ເຖິງຢ່າງໃດກໍຕາມ, ອາດມີບາງກໍລະນີທີ່ວ່າເອກະລັກຂອງສິນຄ້າເຄື່ອງຂອງນຳເຂົ້າໄດ້ສູນເສຍໄປແລ້ວ, ແຕ່ມູນຄ່າທີ່ເພີ່ມຂຶ້ນຈາກຂະບວນການນັ້ນຍັງສາມາດກຳນົດໄດ້ຢ່າງແນ່ ນອນໂດຍບໍ່ມີຄວາມຫຍຸ້ງຍາກຈົນເກີນໄປ. ໃນທາງກົງກັນຂ້າມ, ອາດມີບາງກໍລະນີເຊັ່ນກັນຂອງສິນຄ້າເຄື່ອງຂອງນຳເຂົ້າຍັງຄົງຮັກສາເອກະລັກຂອງມັນເອົາໄວ້. ແຕ່ສິນຄ້າເຄື່ອງຂອງນັ້ນກໍ່ຮູບຂຶ້ນເປັນພຽງແຕ່ອົງປະກອບສ່ວນນ້ອຍໃນຕົວຂອງສິນຄ້າເຄື່ອງຂອງ ທີ່ຂາຍໃນປະເທດນຳເຂົ້າ ຈົນເຮັດໃຫ້ການໃຊ້ວິທີການກຳນົດມູນຄ່ານີ້ ເປັນເລື່ອງທີ່ບໍ່ມີເຫດຜົນພຽງພໍ. ດ້ວຍເຫດດັ່ງກ່າວມາຂ້າງເທິງແຕ່ລະສະຖານະການ ໃນລັກສະນະນີ້ຈະຕ້ອງໄດ້ຮັບການພິຈາລະນາເປັນແຕ່ລະກໍລະນີໄປ.

ໝາຍເຫດຂອງມາດຕາ VI

1. ໂດຍປົກກະຕິແລ້ວພາຍໃຕ້ຂໍ້ຕົກລົງສະບັບນີ້, ມູນຄ່າແຈ້ງພາສີຈະຖືກກຳນົດຂຶ້ນບົນພື້ນຖານຂອງຂໍ້ມູນ ທີ່ມີຢູ່ແລ້ວໃນປະເທດນຳເຂົ້າ. ເຖິງຢ່າງໃດກໍ່ຕາມ, ໃນການກຳນົດມູນຄ່າການຜະລິດສິນຄ້າເຄື່ອງຂອງນັ້ນ ອາດມີຄວາມຈຳເປັນຕ້ອງກວດສອບຕົ້ນທຶນຂອງການຜະລິດສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີຢູ່ ແລະຂໍ້ມູນອື່ນໆ ຊຶ່ງຈະໄດ້ຮັບມາຈາກພາຍນອກປະເທດນຳເຂົ້າ ຍິ່ງໄປກວ່ານັ້ນສ່ວນໃຫຍ່ຜູ້ຜະລິດສິນຄ້າເຄື່ອງຂອງມັກຈະເປັນຜູ້ທີ່ຢູ່ນອກເຂດອຳນາດຂອງເຈົ້າໜ້າທີ່ຂອງປະເທດນຳເຂົ້າ ສິນຄ້າເຄື່ອງຂອງ. ການກຳນົດວິທີແຈ້ງມູນຄ່າການຜະລິດສິນຄ້າເຄື່ອງຂອງ ໂດຍທົ່ວໄປແລ້ວຈຶ່ງຖືກຈຳກັດຢູ່ໃນກໍລະນີທີ່ຜູ້ຊື້ ແລະຜູ້ຂາຍມີຄວາມສຳພັນນຳກັນ ແລະຜູ້ຜະລິດພ້ອມທີ່ຈະສະໜອງໃຫ້ເຈົ້າໜ້າທີ່ຂອງປະເທດນຳເຂົ້າ ໄດ້ຮັບຊາບເຖິງຕົ້ນທຶນຕ່າງໆ ທີ່ຈຳເປັນ ແລະອຳນວຍຄວາມສະດວກຕ່າງໆ ໃຫ້ໃນການກວດສອບພິສູດຢັ້ງຢືນ ໃນພາຍຫລັງຊຶ່ງອາດເປັນສິ່ງຈຳເປັນ.

2. ຄຳວ່າ "ຕົ້ນທຶນ ຫຼື ມູນຄ່າ" ຕາມທີ່ໄດ້ລະບຸໄວ້ໃນວັກທີ 1 (ກ) ຂອງມາດຕາ 6 ຈະຕ້ອງຖືກກຳນົດຂຶ້ນບົນພື້ນຖານຂອງຂໍ້ມູນທີ່ກ່ຽວຂ້ອງກັບການຜະລິດຂອງສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຊຶ່ງໄດ້ສະໜອງໃຫ້ໂດຍຜູ້ຜະລິດ ຫລືໃນນາມຂອງຜູ້ຜະລິດ ໂດຍມີຖານຂໍ້ມູນຈາກບັນຊີທາງການຄ້າຂອງຜູ້ຜະລິດ ຊຶ່ງມີເງື່ອນໄຂວ່າບັນຊີນັ້ນ ຕ້ອງໃຫ້ສອດຄ່ອງກັບຫລັກການບັນຊີ ທີ່ຍອມຮັບກັນໂດຍທົ່ວໄປ ຊຶ່ງໃຊ້ກັບປະເທດຜະລິດສິນຄ້າເຄື່ອງຂອງນັ້ນ.

3. ຄຳວ່າ "ຕົ້ນທຶນ ຫຼື ມູນຄ່າ" ຈະຕ້ອງລວມເຖິງຕົ້ນທຶນຂອງອົງປະກອບຕ່າງໆ ຕາມທີ່ກຳນົດໄວ້ໃນວັກທີ 1 (ກ) (2) ແລະ (3) ຂອງມາດຕາ 8 ແລະຍັງລວມເຖິງມູນຄ່າ ຊຶ່ງໄດ້ຮັບການແບ່ງສ່ວນຢ່າງ

ເໝາະສົມແລ້ວ ພາຍໃຕ້ຂໍ້ກຳນົດຂອງໝາຍເຫດທີ່ກ່ຽວຂ້ອງຂອງມາດຕາ 8 ຂອງອົງປະກອບໃດໆ ຕາມທີ່ກຳນົດໄວ້ໃນວັກທີ 1 (ຂ) ຂອງມາດຕາ 8 ຊຶ່ງຜູ້ຊື້ສະໜອງໃຫ້ໂດຍທາງກົງ ຫລືທາງອ້ອມ ເພື່ອໃຊ້ໃນການຜະລິດຂອງສິນຄ້າເຄື່ອງຂອງນຳເຂົ້າ. ມູນຄ່າຂອງອົງປະກອບຕາມທີ່ກຳນົດໄວ້ໃນວັກທີ 1 (ຂ) (4) ຂອງມາດຕາ 8 ຊຶ່ງໄດ້ເຮັດແລະສະໜອງໃຫ້ປະເທດນຳເຂົ້າ ຈະນຳມາລວມໄດ້ພາຍໃນຂອບເຂດ ຊຶ່ງອົງປະກອບເຫລົ່ານັ້ນໄດ້ຄິດມູນຄ່າຈາກຜູ້ຜະລິດ. ຍ່ອມເປັນທີ່ເຂົ້າໃຈວ່າຕົ້ນທຶນ ຫຼື ມູນຄ່າຂອງອົງປະກອບຕ່າງໆ ຕາມທີ່ກ່າວໄວ້ໃນວັກນີ້ນັ້ນຈະຕ້ອງບໍ່ນຳມາຄິດໄລ່ຊ້ຳກັນສອງຄັ້ງໃນການກຳນົດວິທີແຈ້ງມູນຄ່າການຜະລິດສິນຄ້າເຄື່ອງຂອງ.

4. ຄຳວ່າ "ຈຳນວນຂອງກຳໄລ ແລະຄ່າສິ້ນເປືອງທົ່ວໄປ" ຕາມທີ່ກ່າວໄວ້ໃນວັກທີ 1 (ຂ) ຂອງມາດຕາ 6 ຈະຕ້ອງກຳນົດຂຶ້ນບົນພື້ນຖານຂອງຂໍ້ມູນທີ່ສະໜອງໃຫ້ໂດຍຜູ້ຜະລິດ ຫຼື ໃນນາມຂອງຜູ້ຜະລິດ. ເວັ້ນເສຍແຕ່ຕົວເລກຂອງຜູ້ຜະລິດນັ້ນບໍ່ສອດຄ່ອງກັບຕົວເລກທີ່ຄິດໄລ່ລວມຢູ່ ຕາມປົກກະຕິໃນການຂາຍສິນຄ້າເຄື່ອງຂອງປະເພດ ຫລືຊະນິດດຽວກັນກັບສິນຄ້າເຄື່ອງຂອງ ທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຊຶ່ງເຮັດຂຶ້ນໂດຍຜູ້ຜະລິດຄົນອື່ນໆ ໃນປະເທດສົ່ງອອກ ເພື່ອສົ່ງອອກໄປຍັງປະເທດນຳເຂົ້າ.

5. ສັງເກດໃນທີ່ນີ້ຄຳວ່າ "ຈຳນວນຂອງກຳໄລ ແລະຄ່າສິ້ນເປືອງທົ່ວໄປ" ຈະຕ້ອງໄດ້ນຳມາລວມກັນທັງໝົດ ຈຶ່ງເປັນທີ່ເຂົ້າໃຈວ່າ ໃນກໍລະນີສະເພາະໃດນຶ່ງ ຖ້າຕົວເລກສະແດງຜົນກຳໄລຂອງຜູ້ຜະລິດຕ່ຳ ແລະຕົວເລກສະແດງຄ່າໃຊ້ຈ່າຍສິ້ນເປືອງທົ່ວໄປຂອງຜູ້ຜະລິດສູງ. ແຕ່ເມື່ອນຳເອົາກຳໄລ ແລະຄ່າໃຊ້ຈ່າຍສິ້ນເປືອງ ທົ່ວໄປມາລວມກັນແລ້ວ ຕົວເລກນັ້ນອາດຈະສອດຄ່ອງກັບຕົວເລກທີ່ຫາກໍ່ຄິດໄລ່ລວມຢູ່ ຕາມປົກກະຕິໃນການຂາຍສິນຄ້າເຄື່ອງຂອງປະເພດ ຫລືຊະນິດດຽວກັນນັ້ນ. ສະຖານະການດັ່ງກ່າວ ອາດຈະເກີດຂຶ້ນໄດ້ ຍົກຕົວຢ່າງເຊັ່ນ ຖ້າມີຜະລິດຕະພັນຊະນິດນຶ່ງກຳລັງຈະເປີດຕະຫລາດໃນປະເທດນຳເຂົ້າ ແລະຜູ້ຜະລິດຮັບທີ່ຈະບໍ່ຄິດກຳໄລ ຫຼື ຄິດກຳໄລຕ່ຳ ເພື່ອເປັນການຊຸກເຊີຍຄ່າໃຊ້ຈ່າຍສິ້ນເປືອງທົ່ວໄປ ທີ່ກ່ຽວຂ້ອງກັບການເປີດຕະຫລາດຊຶ່ງສູງຫລາຍ. ໃນກໍລະນີທີ່ຜູ້ຜະລິດສາມາດສະແດງຜົນກຳໄລຕ່ຳໃນການຂາຍສິນຄ້າເຄື່ອງຂອງນຳເຂົ້າ ເນື່ອງຈາກສະພາບການແວດລ້ອມທາງການຄ້າສະເພາະກໍລະນີ ເຊັ່ນນີ້ແລ້ວຈະຕ້ອງໄດ້ນຳເອົາຕົວເລກທີ່ສະແດງເຖິງຜົນກຳໄລອັນແທ້ຈິງຂອງຜູ້ຜະລິດ ມາພິຈາລະນາພາຍໃຕ້ເງື່ອນໄຂທີ່ວ່າ ຜູ້ຜະລິດມີເຫດຜົນທາງການຄ້າ ທີ່ສາມາດຮັບຟັງໄດ້ໃນການພິຈາລະນາຕົວເລກເຫລົ່ານັ້ນ ແລະນະໂຍບາຍໃນການກຳນົດລາຄາຂອງຜູ້ຜະລິດ ສ່ອງແສງໃຫ້ເຫັນເຖິງນະໂຍບາຍການກຳນົດລາຄາຕາມປົກກະຕິຂອງກຸ່ມອຸດສະຫະກຳທີ່ກ່ຽວຂ້ອງ. ສະຖານະການດັ່ງກ່າວ ອາດເກີດຂຶ້ນໄດ້ຍົກຕົວຢ່າງເຊັ່ນ ໃນກໍລະນີທີ່ຜູ້ຜະລິດຖືກບັງຄັບໃຫ້ຫລຸດລາຄາລົງມາເປັນການຊົ່ວຄາວ ເນື່ອງຈາກຄວາມຕ້ອງການຂອງຕະຫລາດຫລຸດລົງ ໂດຍທີ່ບໍ່ສາມາດຄາດການລ່ວງໜ້າໄດ້ ຫລືໃນກໍລະນີທີ່ຜູ້ຜະລິດໄດ້ຂາຍສິນຄ້າເຄື່ອງຂອງ ເພື່ອໄປເສີມກັບສິນຄ້າເຄື່ອງຂອງໃນໝວດໝູ່ດຽວກັນກັບສິນຄ້າເຄື່ອງຂອງທີ່ຜະລິດໃນປະເທດນຳເຂົ້າ ແລະຜູ້ຜະລິດຍອມຮັບຜົນກຳໄລຕ່ຳ ເພື່ອຮັກສາການແຂ່ງຂັນທາງການຄ້າເອົາໄວ້. ໃນກໍລະນີທີ່ຕົວເລກສະແດງຜົນກຳໄລ ແລະຄ່າໃຊ້ຈ່າຍສິ້ນເປືອງທົ່ວໄປຂອງຜູ້ຜະລິດບໍ່ສອດຄ່ອງກັບຕົວເລກ ທີ່ຫາກໍ່ຄິດໄລ່ລວມຢູ່ ຕາມປົກກະຕິໃນການຂາຍສິນຄ້າເຄື່ອງຂອງປະເພດ ຫລືຊະ

ນິດຕ່ງວກັນ ກັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າແຈ້ງພາສີ ຊຶ່ງເຮັດຂຶ້ນໂດຍຜູ້ຜະລິດຄົນອື່ນໆ ໃນ ປະເທດຜູ້ສົ່ງອອກ ເພື່ອສົ່ງອອກໄປຍັງປະເທດນຳເຂົ້າ ເຊັ່ນນີ້ແລ້ວຈຳນວນກຳໄລ ແລະຄ່າໃຊ້ຈ່າຍສົ້ນ ເປືອງທົ່ວໄປ ກໍ່ອາດຫາໄດ້ຈາກຂໍ້ມູນທີ່ກ່ຽວຂ້ອງ ທີ່ນອກເໜືອໄປຈາກຂໍ້ມູນທີ່ສະໜອງໃຫ້ໂດຍຜູ້ຜະລິດ ສິນຄ້າເຄື່ອງຂອງນັ້ນ ຫລືໃນນາມຂອງຜູ້ຜະລິດສິນຄ້າເຄື່ອງຂອງນັ້ນ.

6. ໃນກໍລະນີທີ່ໃຊ້ຂໍ້ມູນນອກເໜືອໄປຈາກຂໍ້ມູນທີ່ສະໜອງໃຫ້ໂດຍຜູ້ຜະລິດ ຫຼື ໃນນາມຂອງຜູ້ຜະ ລິດ ເພື່ອຈຸດປະສົງໃນການກຳນົດມູນຄ່າແຈ້ງພາສີຕາມວິທີຄິດໄລ່ມູນຄ່າການຜະລິດສິນຄ້າເຄື່ອງຂອງ, ຫາກວ່າຜູ້ນຳເຂົ້າຮ້ອງຂໍຕໍ່ເຈົ້າໜ້າທີ່ຂອງປະເທດນຳເຂົ້າ ຈະຕ້ອງແຈ້ງໃຫ້ຜູ້ນຳເຂົ້າຊາບເຖິງແຫລ່ງທີ່ມາ ຂອງຂໍ້ມູນເຫຼົ່ານັ້ນ ຂໍ້ມູນດິບທີ່ໃຊ້ ແລະການຄິດໄລ່ບົນພື້ນຖານຂອງຂໍ້ມູນດິບນັ້ນ ພາຍໃຕ້ຂໍ້ກຳນົດຂອງ ມາດຕາ 10.

7. "ຄ່າໃຊ້ຈ່າຍສົ້ນເປືອງທົ່ວໄປ" ຕາມທີ່ລະບຸໄວ້ໃນວັກທີ 1 (ຂ) ຂອງມາດຕາ 6 ໃຫ້ກວມລວມເອົາຕົ້ ນທຶນທັງທາງກົງ ແລະທາງອ້ອມຂອງການຜະລິດ ແລະການຂາຍສິນຄ້າເຄື່ອງຂອງເພື່ອສົ່ງອອກ ຊຶ່ງບໍ່ໄດ້ ລວມເອົາໄວ້ໃນວັກທີ 1 (ກ) ຂອງມາດຕາ 6.

8. ສິນຄ້າເຄື່ອງຂອງຢ່າງນຶ່ງຈະເປັນ "ສິນຄ້າເຄື່ອງຂອງປະເພດ ຫຼື ຊະນິດດ່ງວກັນ" ກັບສິນຄ້າເຄື່ອງ ຂອງຢ່າງອື່ນ ຫຼືບໍ່ນັ້ນຈະຕ້ອງກຳນົດເປັນແຕ່ລະກໍລະນີໄປ ໂດຍຄຳນຶງເຖິງສະພາບການຕ່າງໆ ທີ່ກ່ຽວ ຂ້ອງດ້ວຍ. ໃນການກຳນົດກຳໄລຕາມປົກກະຕິ ແລະຄ່າໃຊ້ຈ່າຍສົ້ນເປືອງທົ່ວໄປພາຍໃຕ້ຂໍ້ກຳນົດຂອງ ມາດຕາ 6 ນັ້ນ ຄວນກວດສອບເຖິງການຂາຍ ເພື່ອສົ່ງອອກໄປຍັງປະເທດນຳເຂົ້າສິນຄ້າເຄື່ອງຂອງ ຂອງ ສິນຄ້າເຄື່ອງຂອງໃນກຸ່ມ ຫຼື ໝວດໝູ່ທີ່ໃກ້ຄຽງກັນຫລາຍທີ່ສຸດ ຊຶ່ງລວມເຖິງສິນຄ້າເຄື່ອງຂອງທີ່ກຳລັງກຳ ນົດມູນຄ່າແຈ້ງພາສີດ້ວຍ ຊຶ່ງສາມາດສະໜອງຂໍ້ມູນທີ່ຈຳເປັນມາໃຫ້ໄດ້. ຕາມຈຸດປະສົງຂອງມາດຕາ 6 ຄຳວ່າ " ສິນຄ້າເຄື່ອງຂອງໃນປະເພດ ຫລືຊະນິດດ່ງວກັນ " ຈະຕ້ອງເປັນສິນຄ້າເຄື່ອງຂອງທີ່ມາຈາກປະ ເທດດ່ງວກັນກັບສິນຄ້າເຄື່ອງຂອງ ທີ່ກຳລັງກຳນົດມູນຄ່າແຈ້ງພາສີ.

ໝາຍເຫດຂອງມາດຕາ VII

1. ມູນຄ່າແຈ້ງພາສີທີ່ກຳນົດຂຶ້ນພາຍໃຕ້ຂໍ້ກຳນົດຂອງມາດຕາ 7 ຄວນຢູ່ບົນພື້ນຖານຂອງມູນຄ່າແຈ້ງ ພາສີ ທີ່ເຄີຍໄດ້ກຳນົດໄວ້ກ່ອນໜ້າແລ້ວ ໃຫ້ຫລາຍທີ່ສຸດເທົ່າທີ່ຈະເປັນໄປໄດ້.

2. ວິທີການກຳນົດມູນຄ່າແຈ້ງ ທີ່ຈະນຳມາໃຊ້ພາຍໃຕ້ຂໍ້ກຳນົດຂອງມາດຕາ 7 ຄວນເປັນວິທີການ ຕ່າງໆ ທີ່ໄດ້ກຳນົດໄວ້ແລ້ວໃນມາດຕາ 1 ເຖິງ 6 ແຕ່ໃຫ້ໃຊ້ວິທີການເຫລ່ານັ້ນດວ້ຍຄວາມປະນີປະນອມ, ມີເຫດຜົນ ຈຶ່ງຈະເປັນການສອດຄ່ອງກັບຈຸດປະສົງ ແລະຂໍ້ກຳນົດຂອງມາດຕາ 7.

3. ຕົວຢ່າງຂອງຄວາມປະນີປະນອມຢ່າງມີເຫດຜົນມີດັ່ງຕໍ່ໄປນີ້:

(ກ) ***ສິນຄ້າເຄື່ອງຂອງທີ່ຄືກັນ:*** ຂໍ້ກຳນົດທີ່ວ່າ ສິນຄ້າເຄື່ອງຂອງທີ່ຄືກັນຄວນສົ່ງອອກໃນເວລາດຽວກັນ ຫຼື ໃນເວລາທີ່ໃກ້ຄຽງກັນກັບສິນຄ້າເຄື່ອງຂອງ ທີ່ກຳລັງກຳນົດມູນຄ່າແຈ້ງພາສີຢູ່ນັ້ນ ສາມາດຕີຄວາມໝາຍຢ່າງປະນີປະນອມໄດ້. ສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນທີ່ຜະລິດຂຶ້ນໃນປະເທດອື່ນ ທີ່ບໍ່ແມ່ນປະເທດສົ່ງອອກຂອງສິນຄ້າເຄື່ອງຂອງ ທີ່ກຳລັງກຳນົດມູນຄ່າແຈ້ງພາສີສາມາດນຳມາໃຊ້ເປັນຖານຂໍ້ມູນໃນການກຳນົດມູນຄ່າແຈ້ງພາສີໄດ້. ມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງນຳເຂົ້າທີ່ຄືກັນ ທີ່ໄດ້ກຳນົດຂຶ້ນໄວ້ແລ້ວ ພາຍໃຕ້ຂໍ້ກຳນົດຂອງມາດຕາ 5 ແລະ 6 ສາມາດນຳມາໃຊ້ໄດ້.

(ຂ) ***ສິນຄ້າເຄື່ອງຂອງທີ່ຄ້າຍຄືກັນ:*** ຂໍ້ກຳນົດທີ່ວ່າ ສິນຄ້າເຄື່ອງຂອງທີ່ຄ້າຍຄືກັນຄວນສົ່ງອອກໃນເວລາດຽວກັນ ຫລືໃນເວລາທີ່ໃກ້ຄຽງກັນກັບສິນຄ້າເຄື່ອງຂອງ ທີ່ກຳລັງກຳນົດມູນຄ່າແຈ້ງພາສີຢູ່ນັ້ນ ສາມາດຕີຄວາມໝາຍຢ່າງປະນີປະນອມໄດ້. ສິນຄ້າເຄື່ອງຂອງນຳເຂົ້າທີ່ຄ້າຍຄືກັນ ທີ່ຜະລິດຂຶ້ນໃນປະເທດອື່ນ ທີ່ບໍ່ແມ່ນປະເທດສົ່ງອອກສິນຄ້າເຄື່ອງຂອງ ທີ່ກຳລັງກຳນົດມູນຄ່າແຈ້ງພາສີສາມາດນຳມາໃຊ້ເປັນຖານຂໍ້ມູນ ໃນການກຳນົດມູນຄ່າແຈ້ງພາສີໄດ້. ມູນຄ່າແຈ້ງພາສີຂອງສິນຄ້າເຄື່ອງຂອງນຳເຂົ້າທີ່ຄ້າຍຄືກັນ ທີ່ໄດ້ກຳນົດຂຶ້ນໄວ້ແລ້ວ ພາຍໃຕ້ຂໍ້ກຳນົດຂອງມາດຕາ 5 ແລະ 6 ສາມາດນຳມາໃຊ້ໄດ້.

(ຄ) ***ແຈ້ງມູນຄ່າແບບຫັກອອກ:*** ຂໍ້ກຳນົດທີ່ວ່າ ສິນຄ້າເຄື່ອງຂອງຈະຕ້ອງຂາຍໄປໃນ " ສະພາບເດີມທີ່ນຳເຂົ້າ " ໃນວັກທີ 1 (ກ) ຂອງມາດຕາ 5 ສາມາດຕີຄວາມໝາຍຢ່າງປະນີປະນອມໄດ້. ຂໍ້ກຳນົດເວລາ " 90 ວັນ" ສາມາດນຳໄປໃຊ້ຢ່າງປະນີປະນອມໄດ້.

ໝາຍເຫດຂອງມາດຕາ VIII

ວັກທີ 1 (ກ) (i)

ຄຳວ່າ "ຄ່ານາຍໜ້າຈາກການຊື້" ໝາຍເຖິງ ຄ່າທຳນຽມທີ່ຜູ້ນຳເຂົ້າສິນຄ້າເຄື່ອງຂອງຈ່າຍໃຫ້ກັບຕົວແທນຂອງຕົນ ເພື່ອເປັນຄ່າບໍລິການສຳລັບການເປັນຜູ້ແທນຂອງຜູ້ນຳເຂົ້າໃນຕ່າງປະເທດ ໃນການຊື້ສິນຄ້າເຄື່ອງຂອງ ທີ່ກຳລັງກຳນົດມູນຄ່າແຈ້ງພາສີ.

ວັກທີ 1 (ຂ) (ii)

1. ໃນການແບ່ງສ່ວນຂອງອົງປະກອບຕ່າງໆ ຕາມທີ່ລະບຸໄວ້ໃນວັກທີ 1 (ຂ) (2) ຂອງມາດຕາ 8 ນັ້ນ ມີປັດໃຈສອງປະການທີ່ກ່ຽວຂ້ອງຄື: ມູນຄ່າຂອງອົງປະກອບນັ້ນເອງ ແລະວິທີການທີ່ມູນຄ່າຂອງອົງປະກອບນັ້ນ ຈະແບ່ງສ່ວນໄປລວມກັນກັບສິນຄ້າເຄື່ອງຂອງນຳເຂົ້າ. ການແບ່ງສ່ວນຂອງອົງປະກອບເຫລົ່ານີ້ ຄວນເຮັດຂຶ້ນໂດຍວິທີທີ່ມີເຫດຜົນເໝາະສົມກັບສະພາບການ ແລະເປັນໄປຕາມຫລັກການບັນຊີທີ່ຍອມຮັບກັນໂດຍທົ່ວໄປ.

2. ໃນກໍລະນີຂອງມູນຄ່າຂອງອົງປະກອບ, ຫາກຜູ້ນຳເຂົ້າສິນຄ້າເຄື່ອງຂອງໄດ້ອົງປະກອບນັ້ນມາຈາກຜູ້ຂາຍ ຊຶ່ງບໍ່ມີຄວາມສຳພັນກັນກັບຜູ້ນຳເຂົ້າສິນຄ້າເຄື່ອງຂອງ ໃນຕົ້ນທຶນນຶ່ງຈຳນວນນຶ່ງ. ມູນຄ່າຂອງອົງປະກອບນັ້ນກໍ່ຄືຕົ້ນທຶນ ຫາກອົງປະກອບນັ້ນຜະລິດຂຶ້ນໂດຍຜູ້ນຳເຂົ້າ ຫຼື ໂດຍບຸກຄົນຊຶ່ງມີຄວາມສຳພັນກັນກັບຜູ້ນຳເຂົ້າ. ມູນຄ່າຂອງອົງປະກອບນັ້ນກໍ່ຄືຕົ້ນທຶນຂອງການຜະລິດອົງປະກອບນັ້ນເອງ. ຫາກອົງປະກອບນັ້ນເປັນສິນຄ້າເຄື່ອງຂອງທີ່ຜູ້ນຳເຂົ້າເຄີຍໃຊ້ມາແລ້ວ ໂດຍບໍ່ໄດ້ຄຳນຶງວ່າອົງປະກອບນັ້ນ ໄດ້ມາ ຫລືຜະລິດຂຶ້ນໂດຍຜູ້ນຳເຂົ້າສິນຄ້າເຄື່ອງຂອງ. ຕົ້ນທຶນເດີມຂອງການໄດ້ມາ ຫລືການຜະລິດຄວນຈະຕ້ອງປັບລາຄາຫລຸດລົງມາ ເພື່ອສ່ອງແສງໃຫ້ເຫັນເຖິງການໃຊ້ອົງປະກອບນັ້ນ ເພື່ອໃຫ້ໄດ້ມູນຄ່າຂອງອົງປະກອບດັ່ງກ່າວ.

3. ເມື່ອມູນຄ່າຂອງອົງປະກອບໄດ້ຖືກກຳນົດຂຶ້ນແລ້ວ ກໍ່ເປັນສິ່ງຈຳເປັນທີ່ຈະຕ້ອງແບ່ງສ່ວນມູນຄ່ານັ້ນໄປລວມກັບສິນຄ້າເຄື່ອງຂອງນຳເຂົ້າ ມີຄວາມເປັນໄປໄດ້ຫຼາຍປະການ ຍົກຕົວຢ່າງເຊັ່ນ: ມູນຄ່ານັ້ນອາດແບ່ງສ່ວນໄປລວມກັບການນຳເຂົ້າຄັ້ງທຳອິດ ຫາກຜູ້ນຳເຂົ້າສິນຄ້າເຄື່ອງຂອງຕ້ອງການທີ່ຈະຊຳລະຄ່າພາສີອາກອນ ຂອງມູນຄ່າທັງໝົດໃນຄັ້ງດຽວເລີຍ. ອີກຕົວຢ່າງນຶ່ງຄືຜູ້ນຳເຂົ້າສິນຄ້າເຄື່ອງຂອງອາດຮ້ອງຂໍໃຫ້ແບ່ງສ່ວນມູນຄ່ານັ້ນ ຕາມຈຳນວນຫົວໜ່ວຍຂອງສິນຄ້າເຄື່ອງຂອງ ທີ່ຜະລິດຂຶ້ນຈົນເຖິງເວລາທີ່ນຳເຂົ້າຖ້ຽວທຳອິດ. ຕົວຢ່າງຕໍ່ໄປອີກຄື: ຜູ້ນຳເຂົ້າສິນຄ້າເຄື່ອງຂອງອາດຈະຮ້ອງຂໍໃຫ້ແບ່ງສ່ວນມູນຄ່ານັ້ນ ຕາມຈຳນວນການຜະລິດທັງໝົດ ທີ່ມີການຄາດການໄວ້ລ່ວງໜ້າ ຊຶ່ງມີສັນຍາ ຫລືຂໍ້ຜູກມັດທີ່ແນ່ນອນປະກົດຢູ່ສຳລັບການຜະລິດນັ້ນ. ວິທີການແບ່ງສ່ວນທີ່ໃຊ້ຈະຂຶ້ນຢູ່ກັບເອກະສານ ທີ່ຜູ້ນຳເຂົ້າສິນຄ້າເຄື່ອງຂອງຈັດຫາມາໃຫ້.

4. ເພື່ອເປັນການຂະຫຍາຍເນື້ອໃນຂ້າງເທິງ, ຜູ້ນຳເຂົ້າສິນຄ້າເຄື່ອງຂອງຈັດຫາແບບພິມ ທີ່ໃຊ້ໃນການຜະລິດຂອງສິນຄ້າເຄື່ອງຂອງນຳເຂົ້າໃຫ້ກັບຜູ້ຜະລິດ ແລະເຮັດສັນຍາກັບຜູ້ຜະລິດວ່າຈະຊື້ສິນຄ້າເຄື່ອງຂອງເປັນຈຳນວນ 10.000 ໜ່ວຍ. ໃນເວລາທີ່ສິນຄ້າເຄື່ອງຂອງຖ້ຽວທຳອິດຈຳນວນ 1.000 ໜ່ວຍ ມາເຖິງຜູ້ຜະລິດໄດ້ຜະລິດສຳເລັດໄປແລ້ວ 4.000 ໜ່ວຍ. ຜູ້ນຳເຂົ້າສິນຄ້າເຄື່ອງຂອງອາດຮ້ອງຂໍໃຫ້ອົງການພາສີ. ແບ່ງສ່ວນມູນຄ່າຂອງແບບພິມຕາມຈຳນວນ 1.000 ໜ່ວຍ, 4.000 ໜ່ວຍ ຫລື 10.000 ໜ່ວຍ.

5.

ວັກທີ 1 (ຂ) (iv)

1. ການບວກເພີ່ມຄ່າໃຊ້ຈ່າຍຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນວັກທີ 1 (ຂ) (4) ຂອງມາດຕາ 8 ນັ້ນ ຄວນກຳນົດຂຶ້ນບົນພື້ນຖານຂອງຂໍ້ມູນທີ່ເປັນຈິງ ແລະສາມາດວັດປະລິມານໄດ້. ເພື່ອເປັນການຫລຸດສິນຄ້າເຄື່ອງຂອງ ທັງພາລະຂອງຜູ້ນຳເຂົ້າສິນຄ້າເຄື່ອງຂອງ ແລະອົງການພາສີ ໃນການກຳນົດມູນຄ່າທີ່ຈະເພີ່ມເຂົ້າ. ຂໍ້ມູນທີ່ມີຢູ່ແລ້ວ ໃນລະບົບການບັນທຶກເລື່ອງຕ່າງໆ ທາງການຄ້າຂອງຜູ້ຊື້ ຄວນນຳມາໃຊ້ເທົ່າທີ່ຈະເປັນໄປໄດ້.

2. ສຳລັບອົງປະກອບຕ່າງໆ ທັງຫລາຍທີ່ຈັດຫາມາໃຫ້ໂດຍຜູ້ຊື້ ຊຶ່ງອົງປະກອບເຫລົ່ານັ້ນໄດ້ຊື້ ຫລື ເຊົ່າມາໂດຍຜູ້ຊື້. ການບວກເຂົ້າໄປຄວນເປັນຕົ້ນທຶນຂອງການຊື້ ຫລືການເຊົ່ານັ້ນ. ອົງປະກອບຕ່າງໆ ທັງຫລາຍທີ່ສາມາດຈັດຫາມາໄດ້ຈາກສາທາລະນະ ຈະຕ້ອງບໍ່ນຳມາບວກເພີ່ມ. ເວັ້ນເສຍແຕ່ຕົ້ນທຶນໃນການປະກອບ ຫຼືເສີມແຕ່ງເຮັດຂຶ້ນແບບສຳເນົາ.

3. ຄວາມຕ້ອງການໃຫ້ມີຄວາມງ່າຍດາຍໃນການຄິດໄລ່ມູນຄ່າ ທີ່ບວກເພີ່ມຈະຂຶ້ນຢູ່ກັບໂຄງສ້າງ ແລະ ວິທີການຈັດການຂອງແຕ່ລະກິດຈະການຂຶ້ນກັບກັບວິທີການທາງບັນຊີຂອງກິດຈະການນັ້ນ.

4. ຕົວຢ່າງ: ເປັນໄປໄດ້ວ່າກິດຈະການນຶ່ງ ຊຶ່ງສັ່ງຜະລິດຕະພັນຫລາຍຊະນິດຈາກຫລາຍໆ ປະເທດ ຈົດລົງໃນປຶ້ມບັນທຶກລວມຂອງສູນອອກແບບຕົນ ຜູ້ທີ່ຢູ່ນອກປະເທດນຳເຂົ້າສິນຄ້າເຄື່ອງຂອງ. ໃນລັກສະນະທີ່ສະແດງໃຫ້ເຫັນຢ່າງຖືກຕ້ອງ ວ່າເປັນຕົ້ນທຶນຂ່ອງແຕ່ລະຜະລິດຕະພັນ. ໃນກໍລະນີເຊັ່ນນີ້ການປັບລາຄາໂດຍກົງອາດຈະເຮັດໄດ້ຢ່າງເໝາະສົມ ພາຍໃຕ້ຂໍ້ກຳນົດຂອງມາດຕາ 8.

5. ໃນອີກກໍລະນີນຶ່ງ, ກິດຈະການນຶ່ງອາດຮັບເອົາຕົ້ນທຶນຂອງສູນອອກແບບ ທີ່ຢູ່ນອກປະເທດນຳເຂົ້າສິນຄ້າເຄື່ອງຂອງ ເປັນຄ່າໃຊ້ຈ່າຍທົ່ວໄປ ໂດຍບໍ່ໄດ້ຈັດສັນໄວ້ໃນຜະລິດຕະພັນນັ້ນໆ ໃນກໍລະນີເຊັ່ນນີ້ ການປັບລາຄາຢ່າງເໝາະສົມຂອງສິນຄ້າເຄື່ອງຂອງນຳເຂົ້າ ສາມາດເຮັດໄດ້ພາຍໃຕ້ຂໍ້ກຳນົດຂອງມາດຕາ 8 ໂດຍການແບ່ງສ່ວນຕົ້ນທຶນທັງໝົດຂອງສູນອອກແບບ ຕາມຈຳນວນຜະລິດທັງໝົດທີ່ໄດ້ຮັບຜົນປະໂຫຍດຈາກສູນອອກແບບນີ້ ແລະນຳຕົ້ນທຶນທີ່ໄດ້ຮັບສ່ວນແບ່ງແລ້ວ ຕໍ່ນຶ່ງຫົວໜ່ວຍບວກເພີ່ມເຂົ້າໄປໃນສິນຄ້າເຄື່ອງຂອງນຳເຂົ້າ.

6. ເປັນທີ່ແນ່ນອນແລ້ວວ່າ, ການປ່ຽນແປງໄປຂອງສະພາບການທີ່ກ່າວມາຂ້າງເທິງ ຈຳເປັນຕ້ອງໄດ້ພິຈາລະນາເຖິງປັດໃຈຕ່າງໆ ທີ່ແຕກຕ່າງກັນໃນການກຳນົດວິທີການຈັດສັນທີ່ເໝາະສົມ.

7. ໃນກໍລະນີທີ່ການຜະລິດອົງປະກອບດັ່ງກ່າວກ່ຽວຂ້ອງກັບຫລາຍປະເທດ ແລະກ່ຽວຂ້ອງກັບຊ່ວງເວລາການປັບລາຄາ ຄວນຈະຈຳກັດຢູ່ສະເພາະມູນຄ່າທີ່ໄດ້ບວກເພີ່ມເຂົ້າໄປຈິງໆ ໃນສ່ວນປະກອບນັ້ນ ພາຍນອກປະເທດນຳເຂົ້າສິນຄ້າເຄື່ອງຂອງ.

ວັກທີ 1 (ຄ)

1. ຄ່າລິຂະສິດ ແລະຄ່າທຳນຽມໃບອະນຸຍາດຕາມທີ່ໄດ້ກ່າວໄວ້ໃນວັກທີ 1 (ຄ) ຂອງມາດຕາ 8 ຊຶ່ງ ນອກເໜືອໄປຈາກສິ່ງອື່ນໆ ແລ້ວຍັງອາດໝາຍລວມເຖິງການຊຳລະຄ່າລິຂະສິດ, ຄ່າເຄື່ອງໝາຍການ ຄ້າ ແລະຄ່າທຳນຽມອື່ນໆ. ເຖິງຢ່າງໃດກໍຕາມ, ຄ່າໃຊ້ຈ່າຍສຳລັບລິຂະສິດໃນການຜະລິດຊ້ຳຂອງສິນຄ້າ ເຄື່ອງຂອງນຳເຂົ້າ ໃນປະເທດນຳເຂົ້າສິນຄ້າເຄື່ອງຂອງ ຈະຕ້ອງບໍ່ໄດ້ນຳມາບວກເພີ່ມກັບລາຄາທີ່ໄດ້ ຈ່າຍ ຫຼື ທີ່ຈະຕ້ອງໄດ້ຈ່າຍຕົວຈິງ ສຳລັບສິນຄ້າເຄື່ອງຂອງນຳເຂົ້າໃນການກຳນົດມູນຄ່າແຈ້ງພາສີ.

2. ການຊຳລະຄ່າລິຂະສິດໃນການຈຳໜ່າຍ ຫຼື ການຂາຍຕໍ່ຂອງສິນຄ້າເຄື່ອງຂອງນຳເຂົ້າໂດຍຜູ້ຊື້ ຈະ ຕ້ອງບໍ່ນຳໄປບວກເພີ່ມກັບລາຄາທີ່ໄດ້ຈ່າຍ ຫຼືທີ່ຈະຕ້ອງໄດ້ຈ່າຍຕົວຈິງສຳລັບສິນຄ້າເຄື່ອງຂອງນຳເຂົ້າ ນັ້ນ. ຫາກວ່າການຊຳລະນັ້ນບໍ່ແມ່ນເງື່ອນໄຂຂອງການຂາຍ ເພື່ອສົ່ງອອກໄປຍັງປະເທດນຳເຂົ້າສິນຄ້າ ເຄື່ອງຂອງ.

ວັກທີ 3

ໃນກໍລະນີບໍ່ມີຂໍ້ມູນດິບທີ່ເປັນຈິງ ແລະທີ່ວັດປະລິມານໄດ້ທີ່ຈະບວກເພີ່ມກັບລາຄາ ຊຶ່ງຈະຕ້ອງກຳ ນົດຂຶ້ນພາຍໃຕ້ຂໍ້ກຳນົດຂອງມາດຕາ 8 ແລ້ວ ລາຄາຕົກລົງຊື້ຂາຍຍ່ອມບໍ່ອາດກຳນົດຂຶ້ນໄດ້ ພາຍໃຕ້ຂໍ້ ກຳນົດຂອງມາດຕາ 1 ເພື່ອເປັນການຂະຫຍາຍເນື້ອຄວາມຂ້າງເທິງ, ຄ່າລິຂະສິດທີ່ໄດ້ຊຳລະບົນພື້ນ ຖານຂອງລາຄາຂາຍຕໍ່ລິດ ໃນປະເທດນຳເຂົ້າຂອງຜະລິດຕະພັນຊະນິດນຶ່ງ ຊຶ່ງນຳເຂົ້າເປັນຫົວໜ່ວຍກິ ໂລກຣາມ ແລະຖືກເຮັດໃຫ້ເປັນສານລະລາຍພາຍຫຼັງຈາກການນຳເຂົ້າ. ຫາກຄ່າລິຂະສິດບາງສ່ວນຂຶ້ນຢູ່ ກັບສິນຄ້າເຄື່ອງຂອງນຳເຂົ້າ ແລະບາງສ່ວນຂຶ້ນກັບປັດໃຈຢ່າງອື່ນ ຊຶ່ງບໍ່ມີສ່ວນກ່ຽວຂ້ອງກັບສິນຄ້າເຄື່ອງ ຂອງນຳເຂົ້າ (ເຊັ່ນ: ໃນກໍລະນີທີ່ສິນຄ້າເຄື່ອງຂອງນຳເຂົ້າຖືກນຳມາປະສົມກັນກັບສ່ວນປະສົມພາຍໃນ ປະເທດ ຈົນບໍ່ສາມາດແຍກອອກຈາກກັນໄດ້ອີກຕໍ່ໄປແລ້ວ ຫຼື ໃນກໍລະນີທີ່ຄ່າລິຂະສິດບໍ່ອາດແຍກໃຫ້ ເຫັນໄດ້ຢ່າງຊັດເຈນ ຈາກຂໍ້ຕົກລົງທາງການເງິນແບບພິເສດລະຫວ່າງຜູ້ຊື້ ແລະຜູ້ຂາຍ) ຈຶ່ງເປັນການບໍ່ ເໝາະສົມທີ່ຈະພະຍາຍາມບວກເພີ່ມຄ່າລິຂະສິດເຂົ້າໄປ. ເຖິງຢ່າງໃດກໍ່ຕາມ, ຫາກຈຳນວນຄ່າລິຂະສິດ ນີ້ຂຶ້ນຢູ່ກັບສິນຄ້າເຄື່ອງຂອງນຳເຂົ້າພຽງຢ່າງດຽວ ແລະສາມາດນັບຈຳນວນໄດ້ທັນທີ. ການບວກເພີ່ມ ເຂົ້າໄປໃນລາຄາທີ່ໄດ້ຈ່າຍ ຫລືລາຄາທີ່ຈະຕ້ອງໄດ້ຈ່າຍກໍ່ສາມາດເຮັດໄດ້.

ໝາຍເຫດຂອງມາດຕາ IX

ຕາມຄວາມໝາຍຂອງມາດຕາ 9 "ເວລານຳສິນຄ້າເຄື່ອງຂອງເຂົ້າ" ອາດໝາຍເຖິງເວລາທີ່ນຳເຂົ້າສິນຄ້າເຄື່ອງຂອງຕາມການສະເໜີແນະຂອງອົງການພາສີ.

ໝາຍເຫດຂອງມາດຕາ XI

1. ມາດຕາ 11 ໄດ້ລະບຸໃຫ້ຜູ້ນຳເຂົ້າສິນຄ້າເຄື່ອງຂອງ ມີສິດໃນການຮ້ອງຂໍການກຳນົດມູນຄ່າແຈ້ງພາສີຂອງອົງການພາສີ ສຳລັບສິນຄ້າເຄື່ອງຂອງທີ່ກຳລັງກຳນົດມູນຄ່າຢູ່. ຄັ້ງທຳອິດຄຳຮ້ອງຂໍນີ້ອາດຍື່ນຕໍ່ເຈົ້າໜ້າທີ່ລະດັບສູງຂອງອົງການພາສີກໍ່ໄດ້ ແຕ່ຜູ້ນຳເຂົ້າສິນຄ້າເຄື່ອງຂອງຈະຕ້ອງໄດ້ຮັບສິດໃນການຮ້ອງຂໍຕໍ່ສານຈົນເຖິງທີ່ສຸດ.

2. "ບໍ່ມີບົດລົງໂທດ" ໝາຍຄວາມວ່າຜູ້ນຳເຂົ້າສິນຄ້າເຄື່ອງຂອງບໍ່ຖືກປັບໃໝ ຫຼື ຖືກຊູ່ວ່າຈະຕ້ອງຖືກປັບດ້ວຍເຫດຜົງວ່າຜູ້ນຳເຂົ້າໄດ້ເລືອກໃຊ້ສິດໃນການຮ້ອງຂໍ. ການຊຳລະຄ່າໃຊ້ຈ່າຍຕາມປົກກະຕິໃນທາງສານ ແລະຄ່າທະນາຍຄວາມຈະຕ້ອງບໍ່ຖືວ່າເປັນຄ່າປັບໃໝ.

3. ຢ່າງໃດກໍ່ຕາມ, ບໍ່ມີຂໍ້ກຳນົດໃດໃນມາດຕາ 11 ທີ່ຈະຫ້າມບັນດາປະເທດສະມາຊິກໃນການຮຽກເກັບຄ່າພາສີອາກອນ ເຕັມຕາມຈຳນວນທີ່ມີການກຳນົດກ່ອນການຮ້ອງຂໍ.

ໝາຍເຫດຂອງມາດຕາ XV

ວັກທີ 4

ຕາມຄວາມໝາຍຂອງມາດຕາ 15 ຄຳວ່າ " ບຸກຄົນ " ໝາຍຄວາມເຖິງນິຕິບຸກຄົນແລ້ວແຕ່ກໍລະນີ.

ວັກທີ 4 (ຈ)

ຕາມຄວາມໝາຍຂອງຂໍ້ຕົກລົງສະບັບນີ້ ບຸກຄົນນຶ່ງຈະຖືວ່າຄວບຄຸມອີກບຸກຄົນນຶ່ງໄດ້ ກໍ່ຕໍ່ເມື່ອບຸກຄົນທຳອິດຢູ່ໃນຖານະໂດຍທາງນິຕິໄນ ຫລືພຶດຕິໄນ ທີ່ຈະຢຸດຢັ້ງ ຫລືສັ່ງການຕໍ່ບຸກຄົນຫລັງໄດ້.

ເອກະສານຊ້ອນທ້າຍທີ II

ຄະນະກຳມະການເຕັກນິກການກຳນົດມູນຄ່າແຈ້ງພາສີ

1. ເພື່ອໃຫ້ເປັນໄປຕາມມາດຕາ 18 ຂອງຂໍ້ຕົກລົງສະບັບນີ້ ຄະນະກຳມະການເຕັກນິກຈະຕ້ອງຈັດຕັ້ງຂຶ້ນພາຍໃຕ້ການອຸປະຖຳຂອງ (CCC) ໂດຍເລັ່ງໃສ່ການຕີຄວາມໝາຍ ແລະການໃຊ້ເນື້ອໃນຂໍ້ຕົກລົງສະບັບນີ້ໃນທາງວິຊາການຈະມີຮູບແບບດຽວກັນ.

2. ຄວາມຮັບຜິດຊອບຂອງຄະນະກຳມະການເຕັກນິກ ຈະຕ້ອງໄດ້ລວມເຖິງເລື່ອງຕ່າງໆ ຕໍ່ໄປນີ້:
   (ກ) ກວດສອບບັນຫາດ້ານວິຊາສະເພາະ ເລື່ອງທີ່ເກີດຂຶ້ນຈາກການບໍລິຫານງານປະຈຳວັນຂອງລະບົບການກຳນົດມູນຄ່າແຈ້ງພາສີຂອງບັນດາປະເທດສະມາຊິກທັງຫລາຍ ແລະໃຫ້ຄວາມເຫັນແນະນຳໃນຂໍ້ແກ້ໄຂບັນຫາທີ່ເໝາະສົມ ບົນພື້ນຖານຂອງຂໍ້ມູນຄວາມຈິງທີ່ໄດ້ນຳສະເໜີ;
   (ຂ) ສຶກສາຕາມທີ່ໄດ້ຮັບການຮ້ອງຂໍໃນແງ່ກົດໝາຍການກຳນົດລາຄາ ລຳດັບຂັ້ນຕອນ ແລະວິທີການປະຕິບັດຕ່າງໆ ທີ່ກ່ຽວຂ້ອງກັບຂໍ້ຕົກລົງສະບັບນີ້ ແລະເຮັດບົດລາຍງານຜົນຂອງການສຶກສາເຫຼົ່ານັ້ນ;
   (ຄ) ຈັດທຳ ແລະເຜີຍແຜ່ລາຍງານປະຈຳປີໃນທາງວິຊາການ ກ່ຽວກັບການປະຕິບັດງານ ແລະສະຖານະພາບຂອງຂໍ້ຕົກລົງສະບັບນີ້;
   (ງ) ຈັດໃຫ້ມີຂໍ້ມູນ ແລະຂໍ້ແນະນຳເລື່ອງຕ່າງໆ ທີ່ກ່ຽວຂ້ອງກັບການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້າເຄື່ອງຂອງນຳເຂົ້າ ຕາມຈຸດປະສົງຂອງອົງການພາສີ ຫຼືຕາມທີ່ຄຳຮ້ອງຂໍຈາກບັນດາສະມາຊິກໃດໆ ຫລືຈາກຄະນະກຳມະການ. ຂໍ້ມູນ ແລະຂໍ້ແນະນຳດັ່ງກ່າວນັ້ນອາດຈະຢູ່ໃນຮູບການຂອງຄວາມເຫັນ, ບົດວິຈານ ຫລືໝາຍເຫດຄຳອະທິບາຍ;
   (ຈ) ອຳນວຍຄວາມຊ່ວຍເຫລືອທາງວິຊາການ ຕາມທີ່ໄດ້ຮັບການຮ້ອງຂໍໃຫ້ແກ່ບັນດາສະມາຊິກທັງຫຼາຍ ໂດຍເຮັດໃຫ້ມີຄວາມຄືບໜ້າໃນການຍອມຮັບເອົາເນື້ອໃນຂໍ້ຕົກລົງສະບັບນີ້ໃນລະດັບສາກົນ;
   (ສ) ດຳເນີນການກວດສອບເລື່ອງທີ່ສົ່ງມາໃຫ້ ໂດຍຄະນະພິຈາລະນາຂໍ້ຂັດແຍ້ງພາຍໃຕ້ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້; ແລະ
   (ຊ) ປະຕິບັດຕາມຄວາມຮັບຜິດຊອບອື່ນໆ ຕາມທີ່ຄະນະກຳມະການມອບໝາຍ.

*ພາກ*ກ*່ າ*ວ*ທ*ີ*ື*ວ*ໄ*ປ

3. ຄະນະກຳມະການເຕັກນິກຈະຕ້ອງສະຫລຸບການເຮັດວຽກສະເພາະໃນແຕ່ລະເລື່ອງ ໂດຍສະເພາະເລື່ອງເຫຼົ່ານັ້ນທີ່ສົ່ງມາຈາກບັນດາສະມາຊິກທັງຫຼາຍ. ຄະນະກຳມະການ ຫຼື ຄະນະພິຈາລະນາຂໍ້ຂັດແຍ້ງ ພາຍໃນໄລຍະເວລາອັນສັ້ນຕາມສົມຄວນ. ດັ່ງທີ່ໄດ້ລະບຸໄວ້ໃນວັກທີ 4 ຂອງມາດຕາ 19 ຄະນະພິຈາລະນາຂໍ້ຂັດແຍ້ງຈະຕ້ອງກຳນົດໄລຍະເວລາທີ່ແນ່ນອນໄວ້ ສຳລັບການຮັບລາຍງານຈາກຄະນະກຳມະການເຕັກນິກ ແລະຄະນະກຳມະການເຕັກນິກຈະຕ້ອງຈັດສົ່ງລາຍງານພາຍໃນໄລຍະເວລານັ້ນ.

4. ຄະນະກຳມະການເຕັກນິກຈະຕ້ອງໄດ້ຮັບການຊ່ວຍເຫລືອໃນດ້ານວຽກງານຕ່າງໆ ຕາມຄວາມເໝາະສົມຈາກກອງເລຂາຂອງ (CCC).

*ການ*ເ*ປ*ັ*ນ*ຜ*ູ*ັ*ຕ*ໍ*າ*ງ*ໜ*ົ*າ*

5. ແຕ່ລະສະມາຊິກຈະຕ້ອງມີສິດໃນແຕ່ງຕັ້ງຜູ້ຕ່າງໜ້າໃນຄະນະກຳມະການເຕັກນິກ. ແຕ່ລະສະມາຊິກອາດຈະແຕ່ງຕັ້ງຜູ້ຕ່າງໜ້ານຶ່ງຄົນ ແລະຜູ້ຕ່າງໜ້າສຳຮອງອີກນຶ່ງຄົນ ຫລືຫລາຍກວ່າ ເພື່ອເປັນຜູ້ຕ່າງໜ້າໃນຄະນະກຳມະການເຕັກນິກ. ສະມາຊິກທີ່ເປັນຜູ້ຕ່າງໜ້າໃນຄະນະກຳມະການເຕັກນິກໃນເອກະສານຊ້ອນທ້າຍນີ້ຈະເອີ້ນວ່າ "ສະມາຊິກຄະນະກຳມະການເຕັກນິກ" ຜູ້ຕ່າງໜ້າຂອງສະມາຊິກທັງຫລາຍຂອງຄະນະກຳມະການເຕັກນິກອາດໄດ້ຮັບການຊ່ວຍເຫຼືອຈາກເລຂາຂອງອົງການການຄ້າໂລກ ແລະອາດຈະເຂົ້າຮ່ວມການປະຊຸມດັ່ງກ່າວໄດ້ໃນຖານະເປັນຜູ້ສັງເກດການ.

6. ສະມາຊິກທັງຫຼາຍຂອງ (CCC) ທີ່ບໍ່ທັນໄດ້ເປັນສະມາຊິກຂອງອົງການການຄ້າໂລກ ອາດແຕ່ງຕັ້ງຜູ້ຕ່າງໜ້າເຂົ້າຮ່ວມການປະຊຸມຂອງຄະນະກຳມະການເຕັກນິກໄດ້ ໂດຍມີຜູ້ຕ່າງໜ້ານຶ່ງຄົນ ແລະຜູ້ຕ່າງໜ້າສຳຮອງນຶ່ງຄົນ ຫຼື ຫຼາຍກວ່ານັ້ນ. ຜູ້ຕ່າງໜ້າດັ່ງກ່າວຈະເຂົ້າຮ່ວມການປະຊຸມຂອງຄະນະກຳມະການເຕັກນິກໃນຖານະເປັນຜູ້ສັງເກດການ.

7. ໂດຍຄວາມເຫັນຂອງປະທານຄະນະກຳມະການເຕັກນິກ, ເລຂາຂອງ (CCC) (ໃນເອກະສານຊ້ອນທ້າຍນີ້ ຈະເອີ້ນວ່າ "ເລຂາທິການ") ອາດເຊີນຜູ້ຕ່າງໜ້າໃຫ້ລັດຖະບານ ທີ່ບໍ່ທັນເປັນສະມາຊິກຂອງອົງການການຄ້າໂລກ ຫຼື ສະມາຊິກຂອງ (CCC) ແລະຜູ້ຕ່າງໜ້າຂອງອົງການລະຫວ່າງປະເທດຂອງລັດຖະບານ ແລະອົງການການຄ້າລະຫວ່າງປະເທດ ໃຫ້ເຂົ້າຮ່ວມການປະຊຸມຂອງຄະນະກຳມະການເຕັກນິກ ໃນຖານະເປັນຜູ້ສັງເກດການເທົ່ານັ້ນ.

8. ການແຕ່ງຕັ້ງຜູ້ຕ່າງໜ້າ, ຜູ້ຕ່າງໜ້າສຳຮອງ ແລະທີ່ປຶກສາເຂົ້າຮ່ວມການປະຊຸມຂອງຄະນະກຳມະການເຕັກນິກໃຫ້ແຈ້ງຕໍ່ເລຂາທິການ.

ການປະຊຸມຂອງຄະນະກຳມະການເຕັກນິກ

9. ຄະນະກຳມະການເຕັກນິກຈະຕ້ອງປະຊຸມກັນຕາມຄວາມຈຳເປັນ ແຕ່ຢ່າງນ້ອຍປີລະສອງຄັ້ງ. ວັນປະຊຸມແຕ່ລະຄັ້ງຈະຕ້ອງໄດ້ກຳນົດໄວ້ໂດຍຄະນະກຳມະການເຕັກນິກໃນສະໝັຍປະຊຸມຄັ້ງກ່ອນ. ວັນປະຊຸມອາດມີການປ່ຽນແປງໄດ້ ບໍ່ວ່າຈະເປັນຄຳຮ້ອງຂອງບັນດາປະເທດສະມາຊິກໃດໆ ຂອງຄະນະກຳມະການເຕັກນິກທີ່ມີຄວາມເຫັນພ້ອມກັນດ້ວຍສ່ວນໃຫ່ຍ ຂອງສະມາຊິກຂອງຄະນະກຳມະການເຕັກນິກ ຫຼືໂດຍຄຳຮ້ອງຂໍຂອງປະທານ ໃນກໍລະນີທີ່ຕ້ອງໄດ້ຮັບການພິຈາລະນາຢ່າງຮີບດ່ວນ. ເຖິງແມ່ນວ່າຈະໄດ້ລະບຸໄວ້ໃນປະໂຫຍກທຳອິດຂອງວັກນີ້ກໍ່ຕາມ. ຄະນະກຳມະການເຕັກນິກຈະຕ້ອງປະຊຸມກັນຕາມຄວາມຈຳເປັນ ເພື່ອພິຈາລະນາເລື່ອງຕ່າງໆ ທີ່ສົ່ງມາໃຫ້ໂດຍຄະນະພິຈາລະນາຂໍ້ຂັດແຍ້ງພາຍໃຕ້ຂໍ້ກຳນົດຂອງມາດຕາ 19 ຂອງຂໍ້ຕົກລົງສະບັບນີ້.

10. ການປະຊຸມຂອງຄະນະກຳມະການເຕັກນິກ ຈະຕ້ອງຈັດຂຶ້ນຢູ່ທີ່ສຳນັກງານໃຫ່ຍຂອງ (CCC) ເວັ້ນເສຍແຕ່ຈະໄດ້ມີການຕັດສິນໃຈເປັນຢ່າງອື່ນ.

11. ເລຂາທິການຈະຕ້ອງໄດ້ແຈ້ງໃຫ້ບັນດາສະມາຊິກຂອງຄະນະກຳມະການເຕັກນິກ ແລະບັນດາຜູ້ຕ່າງໜ້າທີ່ໄດ້ລະບຸໄວ້ຢູ່ໃນວັກທີ 6 ແລະ 7 ຊາບລ່ວງໜ້າຢ່າງນ້ອຍ 30 ວັນ ກ່ອນວັນເປີດຂອງແຕ່ລະສະໝັຍປະຊຸມຂອງຄະນະກຳມະການເຕັກນິກ ເວັ້ນເສຍແຕ່ຈະມີກໍລະນີອັນຮີບດ່ວນເທົ່ານັ້ນ.

ລະບຽບວາລະການປະຊຸມ

12. ລະບຽບວາລະການປະຊຸມຊົ່ວຄາວຂອງແຕ່ລະສະໝັຍປະຊຸມ ຈະຕ້ອງຈັດຂຶ້ນໂດຍເລຂາທິການ ແລະແຈ້ງໃຫ້ບັນດາປະເທດສະມາຊິກທັງຫລາຍຂອງຄະນະກຳມະການເຕັກນິກ ແລະບັນດາຜູ້ຕ່າງໜ້າທີ່ໄດ້ລະບຸໄວ້ໃນວັກທີ 6 ແລະ 7 ຊາບລ່ວງໜ້າຢ່າງນ້ອຍ 30 ວັນ ກ່ອນຈະມີການເປີດກອງປະຊຸມ. ເວັ້ນເສຍແຕ່ໃນກໍລະນີອັນຮີບດ່ວນເທົ່ານັ້ນ. ລະບຽບວາລະການປະຊຸມນີ້ ຈະຕ້ອງປະກອບດ້ວຍຫົວຂໍ້ທັງໝົດທີ່ບັນຈຸໂດຍໄດ້ຮັບຄວາມເຫັນດີຈາກຄະນະກຳມະການເຕັກນິກໃນລະຫວ່າງສະໝັຍປະຊຸມໃນຄັ້ງກ່ອນ. ຫົວຂໍ້ທັງໝົດທີ່ບັນຈຸໂດຍການລິເລີ່ມຂອງປະທານ ແລະຫົວຂໍ້ທັງໝົດທີ່ບັນຈຸໂດຍການຮ້ອງຂໍຂອງເລຂາທິການ ຫລືໂດຍສະມາຊິກໃດໆ ຂອງຄະນະກຳມະການເຕັກນິກ.

13. ຄະນະກຳມະການເຕັກນິກຈະຕ້ອງກຳນົດລະບຽບວາລະການປະຊຸມ ເມື່ອມີການເປີດສະໝັຍປະຊຸມ ແຕ່ລະສະໝັຍ ໃນລະຫວ່າງສະໝັຍປະຊຸມລະບຽບການວາລະປະຊຸມ ອາດຈະມີການປ່ຽນແປງໃນເວລາໃດກໍ່ໄດ້ໂດຍຄະນະກຳມະການເຕັກນິກ.

ເຈົ້າໜ້າທີ່ ແລະການດຳເນີນການປະຊຸມ

14. ຄະນະກຳມະການເຕັກນິກຈະຕ້ອງເລືອກປະທານນຶ່ງຄົນ ແລະຮອງປະທານນຶ່ງຄົນ ຫລືຫລາຍກວ່າ ຈາກບັນດາຜູ້ຕ່າງໜ້າຂອງປະເທດສະມາຊິກທັ່ງໝາຍ. ປະທານ ແລະຮອງປະທານຈະຕ້ອງດຳລົງຕຳແໜ່ງຄັ້ງລະນຶ່ງປີ. ປະທານ ແລະຮອງປະທານທີ່ພົ້ນຈາກຕຳແໜ່ງແລ້ວ ມີສິດທີ່ຈະໄດ້ຮັບການຄັດເລືອກອີກ. ອຳນາດທີ່ໄດ້ມອບໃຫ້ປະທານ ຫຼື ຮອງປະທານຜູ້ທີ່ບໍ່ເປັນສະມາຊິກຂອງຄະນະກຳມະການເຕັກນິກອີກຕໍ່ໄປ ຈະຕ້ອງສິ້ນສຸດລົງໂດຍອັດຕະໂນມັດ.

15. ຫາກປະທານບໍ່ຢູ່ໃນການປະຊຸມຄັ້ງໃດໆ ຫຼື ຊ່ວງໃດໆ ຂອງການປະຊຸມ, ຮອງປະທານຈະຕ້ອງທຳໜ້າທີ່ເປັນປະທານແທນ. ໃນກໍລະນີເຊັ່ນນີ້, ຮອງປະທານຈະຕ້ອງມີອຳນາດ ແລະທຳໜ້າທີ່ເຊັ່ນດຽວກັນກັບປະທານ.

16. ປະທານຂອງການປະຊຸມຈະຕ້ອງມີສ່ວນຮ່ວມໃນການດຳເນີນກອງປະຊຸມຂອງຄະນະກຳມະການເຕັກນິກ ໃນຖານະປະທານ ແລະບໍ່ແມ່ນໃນຖານະເປັນຜູ້ຕ່າງໜ້າຂອງສະມາຊິກຂອງຄະນະກຳມະການເຕັກນິກ.

17. ນອກເໜືອໄປຈາກການໃຫ້ອຳນາດອື່ນໆ, ຕາມທີ່ໄດ້ມອບໃຫ້ແກ່ປະທານໂດຍຂໍ້ບັງຄັບຕ່າງໆ ເຫຼົ່ານີ້ແລ້ວ. ປະທານຈະຕ້ອງກ່າວເປີດ ແລະປິດການປະຊຸມແຕ່ລະຄັ້ງນຳການອະທິບາຍ, ໃຫ້ສິດໃນການເວົ້າ ແລະຄວບຄຸມການດຳເນີນການປະຊຸມໃຫ້ເປັນໄປຕາມຂໍ້ບັງຄັບຕ່າງໆ ເຫລົ່ານີ້. ປະທານອາດຈະສັ່ງຜູ້ອະທິບາຍໃຫ້ເຂົ້າສູ່ລະບຽບ ຫາກວ່າຂໍ້ຄິດເຫັນຂອງຜູ້ອະທິບາຍບໍ່ຢູ່ໃນຂອບເຂດຂອງປະເດັນ.

18. ໃນລະຫວ່າງການອະທິບາຍໃນເລື່ອງໃດໆ ກໍ່ຕາມ ຜູ້ຕ່າງໜ້າອາດຍົກບາງປະເດັນແຫ່ງຂໍ້ບັງຄັບຂຶ້ນ. ໃນກໍລະນີເຊັ່ນນີ້ປະທານຈະຕ້ອງມີຄຳພິຈາລະນາທັນທີ ຫາກຄຳພິຈາລະນານີ້ໄດ້ຮັບການໂຕ້ແຍ້ງ ປະທານຈະຕ້ອງຂໍໃຫ້ທີ່ປະຊຸມຊີ້ຂາດ ແລະຈະຕ້ອງຢືນຄຳພິຈາລະນານັ້ນ ເວັ້ນແຕ່ຈະຖືກປ່ຽນແປງ.

19. ເລຂາທິການ ຫລືເຈົ້າໜ້າທີ່ຂອງສຳນັກງານເລຂາທິການຂອງ (CCC) ໄດ້ຮັບການກຳນົດໂດຍເລຂາທິການ ຈະຕ້ອງປະຕິບັດງານເລຂາທິການຂອງການປະຊຸມຂອງຄະນະກຳມະການເຕັກນິກ.

ອົງປະຊຸມ ແລະການລົງມະຕິ

20. ຜູ້ຕ່າງໜ້າຈຳນວນສ່ວນໃຫ່ຍຂອງສະມາຊິກທັງຫລາຍ ຂອງຄະນະກຳມະການເຕັກນິກໃຫ້ຖືເປັນອົງປະຊຸມ.

21. ແຕ່ລະສະມາຊິກຂອງຄະນະກຳມະການເຕັກນິກຕ້ອງມີນ້ຳໜັກ. ຄຳຊີ້ຂາດຂອງຄະນະກຳມະການເຕັກນິກ ຈະຕ້ອງໃຫ້ຖືເອົາສ່ຽງສ່ວນຫລາຍທີ່ປະກອບດ້ວຍຢ່າງນ້ອຍສອງໃນສາມຂອງສະມາຊິກທີ່ເຂົ້າປະຊຸມ ບໍ່ວ່າຜົນຂອງການອອກສ່ຽງໃນເລື່ອງສະເພາະໃດໆ ຈະອອກມາເປັນແນວໃດກໍ່ຕາມ ຄະນະກຳມະການເຕັກນິກຈະຕ້ອງມີອິດສະຫລະໃນການເຮັດບົດລາຍງານຢ່າງສົມບູນ ແລະຍື່ນຕໍ່ຄະນະກຳມະການ ແລະຍື່ນຕໍ່ (CCC) ໃນເລື່ອງທີ່ປະຊຸມນັ້ນ ໂດຍຊີ້ໃຫ້ເຫັນເຖິງທັດສະນະທີ່ແຕກຕ່າງກັນ ຊຶ່ງໄດ້ສະແດງອອກໃນການອະທິບາຍປະເດັນນັ້ນ. ເຖິງແມ່ນວ່າຈະມີຂໍ້ກຳນົດທີ່ໄດ້ລະບຸໄວ້ໃນຂ້າງຕົ້ນແລ້ວກໍ່ຕາມ, ເລື່ອງຕ່າງໆ ທີ່ສົ່ງມາໃຫ້ໂດຍຄະນະພິຈາລະນາຂໍ້ຂັດແຍ້ງນັ້ນ ຄະນະກຳມະການເຕັກນິກຈະຕ້ອງຊີ້ຂາດໂດຍຄວາມຄິດເຫັນສອດຄ່ອງກັນເປັນສ່ວນຫລາຍ. ໃນກໍລະນີທີ່ບໍ່ອາດບັນລຸຄວາມຕົກລົງໃນຄະນະກຳມະການເຕັກນິກຕໍ່ບັນຫາທີ່ສົ່ງມາໃຫ້ ໂດຍຄະນະພິຈາລະນາຂໍ້ຂັດແຍ້ງແລ້ວ ຄະນະກຳມະການເຕັກນິກຈະຕ້ອງເຮັດບົດລາຍງານຊີ້ແຈ້ງລາຍລະອຽດເຖິງຂໍ້ມູນຄວາມຈິງຂອງເລື່ອງ ແລະຊີ້ໃຫ້ເຫັນເຖິງທັດສະນະຕ່າງໆ ຂອງສະມາຊິກທັງຫລາຍ.

ພາສາ ແລະການບັນທຶກ

22. ພາສາທາງການຂອງຄະນະກຳມະການເຕັກນິກ ຈະຕ້ອງເປັນພາສາອັງກິດ, ພາສາຝຣັ່ງເສດ ແລະພາສາສະເປນ. ບົດສຸນທອນພິດ ຫລືບົດກ່າວປາໃສທີ່ເປັນພາສາໃດພາສານຶ່ງຂອງທັງສາມພາສານີ້ ຈະຕ້ອງໄດ້ຮັບການແປທັນທີເປັນພາສາທາງການອື່ນໆ ເວັ້ນແຕ່ຜູ້ຕ່າງໜ້າທັງຫລາຍຕົກລົງກັນວ່າໃຫ້ງົດເວັ້ນການແປບົດສຸນທອນພິດ ຫລືບົດກ່າວຄຳປາໃສທີ່ເປັນພາສາອື່ນໆ ຈະຕ້ອງໄດ້ຮັບການແປເປັນພາສາອັງກິດ, ພາສາຝຣັ່ງເສດ ແລະພາສາສະເປນພາຍໃຕ້ເງື່ອນໄຂດຽວກັນ. ແຕ່ໃນກໍລະນີຜູ້ຕ່າງໜ້າທີ່ກ່ຽວຂ້ອງຈະຕ້ອງຈັດໃຫ້ຄຳແປເປັນພາສາອັງກິດ, ພາສາຝຣັ່ງເສດ ຫລືພາສາສະເປນ. ເອກະສານທາງການຂອງຄະນະກຳມະການເຕັກນິກຈະຕ້ອງໃຊ້ເປັນພາສາອັງກິດ, ພາສາຝຣັ່ງເສດ ແລະພາສາສະເປນເທົ່ານັ້ນ. ບັນທຶກ ແລະຈົດໝາຍໂຕ້ຕອບເພື່ອການພິຈາລະນາຂອງຄະນະກຳມະການເຕັກນິກ ຕ້ອງສະເໜີເປັນພາສາທາງການພາສາໃດພາສານຶ່ງ.

23. ຄະນະກຳມະການເຕັກນິກຈະຕ້ອງເຮັດບົດລາຍງານທຸກຄັ້ງທີ່ມີການປະຊຸມຂອງຕົນ ແລະຫາກປະທານເຫັນວ່າເປັນສິ່ງຈຳເປັນກໍ່ໃຫ້ເຮັດບົດລາຍງານການປະຊຸມ ຫຼື ບົດບັນທຶກການປະຊຸມໂດຍຫຍໍ້ຂອງການປະຊຸມຂອງຕົນດ້ວຍ. ປະທານ ຫຼື ຜູ້ທີ່ປະທານມອບໝາຍຈະຕ້ອງລາຍງານຜົນຂອງການດຳເນີນງານຂອງຄະນະກຳມະການເຕັກນິກ ຕໍ່ທີ່ປະຊຸມຄະນະກຳມະການທຸກໆ ຄັ້ງ ແລະຕໍ່ທີ່ປະຊຸມ (CCC) ທຸກຄັ້ງເຊັ່ນກັນ.

ເອກະສານຊ້ອນທ້າຍທີ III

1. ການລ້າຊ້າເປັນເວລາ 5 ປີໃນການນຳໃຊ້ຂໍ້ກຳນົດຂອງຂໍ້ຕົກລົງສະບັບນີ້ ໂດຍສະມາຊິກປະເທດກຳລັງພັດທະນາທັງຫລາຍ ຕາມທີ່ໄດ້ລະບຸໄວ້ໃນວັກທີ 1 ຂອງມາດຕາ 20 ນັ້ນ. ໃນທາງປະຕິບັດອາດຍັງບໍ່ພຽງພໍສຳລັບສະມາຊິກປະເທດກຳລັງພັດທະນາທັງຫລາຍບາງປະເທດ. ໃນກໍລະນີເຊັ່ນນີ້ສະມາຊິກປະເທດກຳລັງພັດທະນາອາດຮ້ອງຂໍຂະຫຍາຍເວລາດັ່ງກ່າວນັ້ນ ກ່ອນສິ້ນສຸດໄລຍະເວລາຕາມທີ່ໄດ້ລະບຸໄວ້ໃນວັກທີ 1 ຂອງມາດຕາ 20 ເປັນທີ່ເຂົ້າໃຈວ່າສະມາຊິກທັງຫລາຍຈະໃຫ້ການພິຈາລະນາຕາມຕໍ່ຄຳຮ້ອງຂໍນັ້ນ ໃນກໍລະນີທີ່ສະມາຊິກປະເທດກຳລັງພັດທະນາທີ່ຮ້ອງຂໍ ສາມາດສະແດງຜົນທີ່ດີໄດ້.

2. ປະເທດກຳລັງພັດທະນາທັງຫຼາຍ ຊຶ່ງໃນປັດຈຸບັນນີ້ກຳນົດລາຄາບົນພື້ນຖານຂອງລາຄາຕ່ຳສຸດ ທີ່ກຳນົດຂຶ້ນເປັນທາງການ ອາດມີຈຸດປະສົງທີ່ຈະຕ້ອງເປັນຂໍ້ສະໜອງ ເພື່ອໃຫ້ຕົນຍັງຄົງໃຊ້ລາຄາດັ່ງກ່າວຕໍ່ໄປໄດ້ບົນພື້ນຖານທີ່ຈຳກັດ ແລະເປັນມາດຕະການສະເພາະພາຍໃຕ້ຂໍ້ກຳນົດ ແລະເງື່ອນໄຂຕ່າງໆ ຕາມທີ່ສະມາຊິກທັງຫລາຍຈະຕົກລົງກັນ.

3. ປະເທດກຳລັງພັດທະນາທັງຫຼາຍ ຊຶ່ງໄດ້ເຮັດຕາມລຳດັບຄຳຮ້ອງຂໍຂອງຜູ້ນຳເຂົ້າສິນຄ້າເຄື່ອງຂອງທີ່ໄດ້ລະບຸໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ອາດເຮັດໃຫ້ມີຂໍ້ຫຍຸ້ງຍາກຢ່າງແທ້ຈິງຕໍ່ຕົນ ອາດຈະຕ້ອງເປັນຂໍ້ສະໜອງຕາມມາດຕາ 4 ດັ່ງຂໍ້ຄວາມຕໍ່ໄປນີ້:

> "ລັດຖະບານແຫ່ງ.....ສະໜອງສິດທິທີ່ຈະກຳນົດວ່າຂໍ້ກຳນົດທີ່ກ່ຽວຂ້ອງກັບມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ຈະນຳມາໃຊ້ກໍ່ຕໍ່ເມື່ອເຈົ້າໜ້າທີ່ຂອງອົງການພາສີ ເຫັນດ້ວຍກັບຄຳຮ້ອງຂໍຕາມລຳດັບຂອງມາດຕາ 5 ແລະ 6 ເທົ່ານັ້ນ".
>
> ຫາກປະເທດກຳລັງພັດທະນາທັງຫລາຍຕັ້ງຂໍ້ສະໜອງເຊັ່ນວ່ານີ້ໄວ້ ສະມາຊິກທັງຫລາຍຈະຕ້ອງໃຫ້ຄວາມຍິນຍອມຕໍ່ຂໍ້ສະໜອງດັ່ງກ່າວພາຍໃຕ້ມາດຕາ 21 ຂອງຂໍ້ຕົກລົງສະບັບນີ້.

4. ປະເທດກຳລັງພັດນທະນາທັງຫລາຍອາດມີຈຸດປະສົງທີ່ຈະຕ້ອງຕັ້ງຂໍ້ສະໜອງຕາມວັກທີ 2 ຂອງມາດຕາ 5 ຂອງຂໍ້ຕົກລົງນີ້ດັ່ງຂໍ້ຄວາມຕໍ່ໄປນີ້:

> "ລັດຖະບານແຫ່ງ.....ສະໜອງສິດທິທີ່ຈະກຳນົດວ່າວັກທີ 2 ຂອງມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຈະຕ້ອງໃຊ້ໃຫ້ສອດຄ່ອງກັບຂໍ້ກຳນົດຂອງໝາຍເຫດທີ່ກ່ຽວຂ້ອງ ທັງນີ້ບໍ່ວ່າຜູ້ນຳເຂົ້າສິນຄ້າເຄື່ອງຂອງຈະຮ້ອງຂໍ ຫຼື ບໍ່".

ຫາກປະເທດກຳລັງພັດທະນາທັງຫລາຍຕັ້ງຂໍ້ສະຫງວນເຊັ່ນວ່ານີ້ໄວ້ ສະມາຊິກທັງຫລາຍຈະຕ້ອງ ໃຫ້ຄວາມຍິນຍອມຕໍ່ຂໍ້ສະຫງວນດັ່ງກ່າວພາຍໃຕ້ມາດຕາ 21 ຂອງຂໍ້ຕົກລົງສະບັບນີ້.

5. ປະເທດກຳລັງພັດທະນາທັງຫລາຍບາງປະເທດ ອາດຈະມີບັນຫາໃນການນຳເອົາມາດຕາ 1 ຂອງ ຂໍ້ຕົກລົງສະບັບນີ້ມາໃຊ້ ໃນສ່ວນທີ່ກ່ຽວຂ້ອງກັບການນຳເຂົ້າມາໃນປະເທດຂອງຕົນ ໂດຍຕົວແທນແຕ່ຜູ້ ດຽວ, ຕົວແທນຈຳໜ່າຍແຕ່ຜູ້ດຽວ ແລະຜູ້ຮັບສຳປະທານແຕ່ຜູ້ດຽວ. ຫາກບັນຫາດັ່ງກ່າວເກີດຂຶ້ນໃນການ ປະຕິບັດໃນບັນດາປະເທດກຳລັງພັດທະນາທັງຫລາຍ ທີ່ນຳເອົາຂໍ້ຕົກລົງສະບັບນີ້ມາໃຊ້ ໂດຍການຮ້ອງ ຂໍຂອງສະມາຊິກເຊັ່ນວ່ານັ້ນ ໃຫ້ມີການສຶກສາເຖິງບັນຫານີ້ໂດຍມີຈຸດມຸ້ງໝາຍ ເພື່ອຫາທາງແກ້ໄຂຢ່າງ ເໝາະສົມ.

6. ມາດຕາ 17 ຍ່ອມຮັບວ່າໃນການນຳໃຊ້ຂໍ້ຕົກລົງສະບັບນີ້ ອົງການພາສີອາດຈຳເປັນຕ້ອງສອບ ຖາມເຖິງຂໍ້ມູນຄວາມຈິງ ຫລືຄວາມຖືກຕ້ອງຂອງເນື້ອໃນ, ເອກະສານ ຫຼື ການແຈ້ງອື່ນໆ ທີ່ຍື່ນຕໍ່ຕົນ ເພື່ອກຳນົດມູນຄ່າແຈ້ງພາສີ. ຍົກຕົວຢ່າງເຊັ່ນ: ການສອບຖາມໂດຍການເນັ້ນໃສ່ການພິສູດຢືນຢັນເຖິງ ອົງປະກອບຕ່າງໆ ຂອງລາຄາຕາມທີ່ໄດ້ມາແຈ້ງ ຫຼື ທີ່ຍື່ນຕໍ່ອົງການພາສີ ຊຶ່ງກ່ຽວເນື່ອງກັບການກຳນົດ ມູນຄ່າແຈ້ງພາສີ ວ່າມີຄວາມຄົບຖ້ວນສົມບູນ ແລະຖືກຕ້ອງ. ສະມາຊິກທັງຫຼາຍພາຍໃຕ້ຂໍ້ກຳນົດກົດ ໝາຍ ແລະລະບຽບໃນການປະຕິບັດ ພາຍໃນປະເທດຂອງຕົນ ແລະຄາດຫວັງວ່າ ຈະໄດ້ຮັບຄວາມຮ່ວມ ໄມ້ຮ່ວມມືຢ່າງເຕັມເມັດເຕັມໜ່ວຍຈາກຜູ້ນຳເຂົ້າໃນການສອບຖາມເຫລົ່ານີ້.

7. ລາຄາທີ່ໄດ້ຈ່າຍ ຫຼື ທີ່ຈະຕ້ອງໄດ້ຈ່າຍຕົວຈິງ ໃຫ້ລວມເຖິງການຊຳລະລາຄາທັງໝົດທີ່ໄດ້ດຳເນີນ ໄປ ຫລືທີ່ຈະຕ້ອງດຳເນີນໄປຈິງແລ້ວ ຫຼື ບໍ່, ອັນເປັນເງື່ອນໄຂຂອງການຂາຍສິນຄ້າເຄື່ອງຂອງນຳເຂົ້າ ໂດຍຜູ້ຊື້ຕໍ່ຜູ້ຂາຍ ຫຼື ໂດຍຜູ້ຊື້ຕໍ່ບຸກຄົນທີສາມ ເພື່ອໃຫ້ເປັນຕາມຂໍ້ຜູກມັດຂອງຜູ້ຂາຍ.

AGREEMENT ON IMPLEMENTATION OF ARTICLE VII OF THE GENERAL AGREEMENT ON TARIFFS AND TRADE 1994

AGREEMENT ON IMPLEMENTATION OF ARTICLE VII OF THE GENERAL AGREEMENT ON TARIFFS AND TRADE 1994

GENERAL INTRODUCTORY COMMENTARY

